THE WORD OF THE BUDDHA

“ພິກຂຸທັງຫລາຍ ເຮົາມອງບໍ່ເຫັນ
ທັມອື່ນແມ່ນແຕ່ຢ່າງດຽວທີ່ເປັນເຫຕ
ໃຫ້ກຸສົລທັມທີ່ຍັງບໍ່ເກີດ ເກີດຂຶ້ນ
ຫລືອະກຸສົລທັມທີ່ເກີດຂຶ້ນແລ້ວ
ຍ່ອມເສື່ອມໄປ ເໝືອນຄວາມເປັນຜູ້
ສັນໂດດ.”

# ຄວາມ ສັນ ໂດດ

# CONTENTMENT

“ພິກຂຸທັງຫລາຍ ເຮົາມອງບໍ່ເຫັນທັມອື່ນແມ່ນແຕ່ຢ່າງດຽວທີ່ເປັນເຫດໃຫ້ກຸສົລທັມທີ່ຍັງບໍ່ເກີດ ເກີດຂຶ້ນ ຫລືອະກຸສົລທັມທີ່ເກີດຂຶ້ນແລ້ວ ຍ່ອມເສື່ອມໄປ ເໝືອນຄວາມເປັນຜູ້ສັນໂດດ.”

ພິກຂຸທັງຫລາຍ ເມື່ອບຸຄຄົລເປັນຜູ້ສັນໂດດ ກຸສົລທັມທີ່ຍັງບໍ່ເກີດ ຍ່ອມເກີດຂຶ້ນ ແລະອະກຸສົລທັມທີ່ເກີດຂຶ້ນແລ້ວ ຍ່ອມເສື່ອມໄປ.

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໑໐/໖໕



# ບົທນຳ

ພິກຂຸທັງຫລາຍ! ປັຈຈັຍ ໔ ຢ່າງນີ້ ທັງນ້ອຍ ຫາໄດ້ງ່າຍ ແລະບໍ່ມີໂທສ *(ຈັຕຕາຣິມານິ ພິກຂະເວ ອັປປານິ ຈະ ສຸລະພານິ ຈະ ຕານິ ຈະ ອະນະວັຊຊານິ)*, ປັຈຈັຍ ໔ ຢ່າງເປັນຢ່າງໃດ?

ພິກຂຸທັງຫລາຍ! ບັນດາຈີວອຣ **ບັງສຸກຸລຈີວອຣ** *(ປັງສຸກູລັງ)* ທັງນ້ອຍ ຫາໄດ້ງ່າຍ ແລະບໍ່ມີໂທສ.

ພິກຂຸທັງຫລາຍ! ບັນດາໂພຊະນະ **ຄຳເຂົ້າທີ່ຫາໄດ້ດ້ວຍປີແຂ້ງ** *(ປິນດິຍາໂລໂປ)* ທັງນ້ອຍ ຫາໄດ້ງ່າຍ ແລະບໍ່ມີໂທສ.

ພິກຂຸທັງຫລາຍ! ບັນດາເສນາສະນະ **ເຫງົ້າໄມ້** *(ຣຸກຂະມູລັງ)* ທັງນ້ອຍ ຫາໄດ້ງ່າຍ ແລະບໍ່ມີໂທສ.

ພິກຂຸທັງຫລາຍ! ບັນດາເພສັຊ **ມູຕເນົ່າ***(ປູຕິມຸຕຕັງ)* ທັງນ້ອຍ ຫາໄດ້ງ່າຍ ແລະບໍ່ມີໂທສ. ພິກຂຸທັງຫລາຍ ປັຈຈັຍ ໔ ຢ່າງນີ້ ແລ ທັງນ້ອຍ ຫາໄດ້ງ່າຍ ແລະບໍ່ມີໂທສ.

ພິກຂຸທັງຫລາຍ! ເພາະເຫຕທີ່ພິກຂຸເປັນຜູ້ສັນໂດດດ້ວຍປັຈຈັຍອັນນ້ອຍແລະຫາໄດ້ງ່າຍ ເຮົາຈຶ່ງກ່າວຂໍ້ນີ້ວ່າ ເປັນອົງຄ໌ແຫ່ງຄວາມເປັນສະມະນະຢ່າງໜຶ່ງຂອງເຂົາ.

ເມື່ອພິກຂຸສັນໂດດດ້ວຍປັຈຈັຍອັນຫາໂທສບໍ່ໄດ້ ທັງນ້ອຍ ແລະຫາໄດ້ງ່າຍ ປຣາຣົພເສນາສະນະ ຈີວອຣ ປານະ ແລະ ໂພຊະນະ ຈິຕຂອງເຂົາກໍບໍ່ຄັບແຄ້ນ ບໍ່ກະທົບກະເທືອນທຸກທິສ ແລະທັມເຫລົ່າໃດອັນພິກຂຸນັ້ນກ່າວແລ້ວ ອະນຸໂລມແກ່ສະມະນະທັມ ທັມເຫລົ່ານັ້ນອັນພິກຂຸຜູ້ບໍ່ປະມາທ ມີຄວາມສັນໂດດຖືເອົາໂດຍຍິ່ງ.

ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໗/໒໗





"When one is content with what is
blameless,
trifling and easily gained;
when one's mind is not distressed
because of a lodging,
robe, drink, and food,
one is not hindered anywhere."

These qualities, rightly said
to conform to the ascetic life,
are acquired by a bhikkhu
who is content and heedful.

Santuṭṭhisutta AN 4.27 AN ii 26
https://suttacentral.net/an4.27

# ສາລະບານ

4. ບົດນຳ

8. ສາລະບານ

15. ບົດທັມທີ່ຄວນຊາບກ່ອນ

39. ພຣະຜູ້ມີພຣະພາຄຊົງປຣາຣົພເຖິງທ່ານພຣະມະຫາ
ກັສສະປະທີ່ທ່ານເປັນຜູ້ສັນໂດດ

46. ອະຣິຍະວົງສ໌ ໔ ທີ່ວິນຍູຊົນສັນລະເສີນ
ວ່າເປັນເລີດ

53. ພຣະຜູ້ມີພຣະພາຄຊົງແນະນຳໃຫ້ທ່ານພຣະມະຫາ
ກັສສະປະຊົງຄະຫະບໍດີຈີວອຣ

| | |
|---|---|
| 64. | ພິກຂຸປະກອບດ້ວຍທັມ ໕ ປະການ ບໍ່ຄວນຫລີກອອກຈາກໝູ່ຢູ່ຜູ້ດຽວ |
| 67. | ຄວາມທຸກຂ໌ ຄວາມສຸຂຂອງສະມະນະ ໕ ປະການ |
| 70. | ອາສະວະທີ່ຈະລະໄດ້ເພາະການພິຈາຣະນາເສພ |
| 74. | ພິກຂຸຜູ້ເປັນເຖຣະປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ປະຕິບັຕເພື່ອສິ່ງບໍ່ເປັນປະໂຍຊນ໌ແກ່ພະຫຸຊົນ |
| 82. | ເຣື່ອງພິກຂຸຊາວຣັຖອາລະວີ |
| 101. | ພິກຂຸປະກອບດ້ວຍທັມ ໖ ປະການ ຍ່ອມຫວັງໄດ້ຄວາມເສື່ອມໃນກຸສົລທັມທັງຫລາຍຢ່າງດຽວ ບໍ່ຫວັງໄດ້ຄວາມຈະເຣີນເລີຍ ຕລອດຄືນຫລືວັນທີ່ຜ່ານໄປ |
| 105. | ພຣະຜູ້ມີພຣະພາຄຊົງສັນລະເສີນການຍິນດີດ້ວຍປັຈຈັຍຕາມມີຕາມໄດ້ |
| 115. | ພິກຂຸປະກອບດ້ວຍທັມ ໕ ປະການ ເສພອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ການບໍ່ນານ |
| 118. | ພິກຂຸປະກອບດ້ວຍທັມ ໕ ປະການ ຈະເຣີນອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ການບໍ່ນານ |

121. ພິກຂຸປະກອບດ້ວຍທັມ ໕ ປະການ ກະທຳໃຫ້ຫລາຍເຊິ່ງອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ກາລບໍ່ນານ

124. ພິກຂຸເປັນຜູ້ມີມິຕດີ ມີສະຫາຍດີ ມີເພື່ອນດີ ຍ່ອມຫວັງໄດ້ເຊິ່ງຄວາມສັນໂດດ

135. ພິກຂຸຊາວຊາຕິພູມຍົກຍ້ອງທ່ານພຣະປຸນນະມັນຕານີບຸຕວ່າ ເປັນຜູ້ມັກນ້ອຍ ສັນໂດດ...

155. ຄວາມສັນໂດດເປັນໜຶ່ງໃນທັມທີ່ກະທຳທີ່ເພິ່ງ

161. ຄວາມສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະແລະຄິລານະປັຈຈັຍເພສັຊບໍຣິຂານ ເປັນໜຶ່ງໃນທັມອັນເປັນທີ່ຕັ້ງແຫ່ງຄວາມເຫລື້ອມໃສ

185. ພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເສພ ອາສັຍຢູ່ເຊິ່ງເສນາສະນະທີ່ປະກອບດ້ວຍອົງຄ໌ ໕ ບໍ່ນານຍ່ອມກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປ

190. ພິກຂຸທັງຫລາຍບໍ່ຄວນກີດກັ້ນເສນາສະນະຂອງສົງຄ໌ຕາມລຳດັບພັນສາ ອົງຄ໌ໃດກີດກັ້ນຕ້ອງອາບັຕທຸກກົຕ

202. ພັຍໃນອະນາຄົຕ ໕ ປະການ

207. ເຫຕທີ່ເຮັດໃຫ້ຕັນຫາເກີດຂຶ້ນແກ່ພິກຂຸ

212. ທັມ ៦ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ

216. ທັມ ໕ ປະການທີ່ເປັນໄປເພື່ອຄວາມເສື່ອມ
ແກ່ພິກຂຸຜູ້ເປັນເສຂະ (1)
219. ທັມ ໕ ປະການທີ່ເປັນໄປເພື່ອຄວາມເສື່ອມ
ແກ່ພິກຂຸຜູ້ເປັນເສຂະ (2)
225. ທັມ ໖ ປະການທີ່ເປັນໄປເພື່ອຄວາມເສື່ອມ
ແກ່ພິກຂຸຜູ້ເປັນເສຂະ
228. ທັມ ໗ ປະການທີ່ເປັນໄປເພື່ອຄວາມເສື່ອມ
ແກ່ພິກຂຸຜູ້ເປັນເສຂະ
232. ທັມ ໘ ປະການທີ່ເປັນໄປເພື່ອຄວາມເສື່ອມ
ແກ່ພິກຂຸຜູ້ເປັນເສຂະ
235. ທັມ ໘ ປະການທີ່ເປັນໄປເພື່ອຄວາມບໍ່ເສື່ອມ
ແກ່ພິກຂຸຜູ້ເປັນເສຂະ
238. ກຸສິຕະວັຕຖຸ ໘ ປະການ
243. ອາຣັພພະວັຕຖຸ ໘ ປະການ
250. ທຸດົງຄະວັຕ
(ຂໍ້ປະຕິບັຕເພື່ອການຂັດເກົາກິເລສ)
257. ວ່າດ້ວຍສິ່ງທີ່ເປັນພັຍແລະໜ້າຢ້ານກົວ
280. ຂໍ້ທີ່ຄວນຫວັງໄດ້ ໑໗ ປະການ
293. ມະຫາປຸຣິສະວິຕົກ ໘
311. ທີ່ນັ່ງທີ່ນອນອັນສູງໃຫຍ່ ໖ ຊະນິດ
324. ກິຈທີ່ຮີບດ່ວນຂອງພິກຂຸ





**“Taking into account interior factors, bhikkhus, I do not see a single one that is so very beneficial as diligence. Diligence is very beneficial.”**

Dutiyapamādādivagga AN 1.98–139
https://suttacentral.net/an1.98-139



# ບົດທັມທີ່ຄວນຊາບກ່ອນ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣນິໂຄທາຣາມ ເຂຕພຣະນະຄອຣກະບິລພັສ ໃນສັກກະຊົນບົທ. ຄັ້ງນັ້ນແລ ພຣະຜູ້ມີພຣະພາຄຊົງນຸ່ງແລ້ວ ຖືບາຕແລະຈີວອຣສະເດັຈເຂົ້າໄປບິນທະບາຕຍັງພຣະນະຄອຣກະບິລພັສໃນເວລາເຊົ້າ ຄັນສະເດັຈກັບຈາກບິນທະບາຕໃນເວລາປັຈສາພັຕໄດ້ສະເດັຈເຂົ້າໄປຍັງວິຫາຣຂອງເຈົ້າກາລະເຂມະກະສາກະຍະເພື່ອພັກຜ່ອນໃນເວລາທ່ຽງວັນ.

ສມັຍນັ້ນແລ ໃນວິຫາຣຂອງເຈົ້າກາລະເຂມະກະສາກະຍະມີເສນາສະນະທີ່ແຕ່ງຕັ້ງໄວ້ມາກມາຍ ພຣະຜູ້ມີພຣະພາຄ

ທອດພຣະເນຕເຫັນເສນາສະນະທີ່ແຕ່ງຕັ້ງໄວ້ມາກມາຍ ນັ້ນແລ້ວ ຈຶ່ງມີພຣະດຳຣິດັ່ງນີ້ວ່າ ໃນວິຫາຣຂອງເຈົ້າກາລະເຂມະກະສາກະຍະມີເສນາສະນະທີ່ແຕ່ງຕັ້ງໄວ້ມາກມາຍ ທີ່ນີ້ມີພິກຂຸມາກມາຍຫລືໜໍ?

ສມັຍນັ້ນແລ ທ່ານພຣະອານົນທ໌ກັບພິກຂຸຫລາຍອົງຄ໌ ກະທຳຈີວອຣກັມຢູ່ໃນວິຫາຣຂອງເຈົ້າກາລະເຂມະກະສາກະຍະ. ຄັນໃນເວລາແລງ ພຣະຜູ້ມີພຣະພາຄຊົງສະເດັຈອອກຈາກທີ່ຫລີກເຮັ້ນແລ້ວ ໄດ້ສະເດັຈເຂົ້າໄປໃນວິຫາຣຂອງເຈົ້າກາລະເຂມະກະສາກະຍະ ແລ້ວປະທັບນັ່ງເທິງອາສະນະທີ່ເຂົາແຕ່ງຕັ້ງໄວ້ພໍປະທັບນັ່ງຮຽບຮ້ອຍແລ້ວ ຈຶ່ງຕຣັສຖາມທ່ານພຣະອານົນທ໌ວ່າ:

ອານົນທ໌! ໃນວິຫາຣຂອງເຈົ້າກາລະເຂມະກະສາກະຍະມີເສນາສະນະທີ່ແຕ່ງຕັ້ງໄວ້ມາກມາຍ ທີ່ນັ້ນມີພິກຂຸຢູ່ມາກມາຍຫລື?

ທ່ານພຣະອານົນທ໌ກຣາບທູລວ່າ:

ມາກມາຍ ພຣະອົງຄ໌ຜູ້ຈະເຣີນ!

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຈີວອຣກາລຂອງພວກຂ້ານ້ອຍກຳລັງດຳເນີນຢູ່.

ອານົນທ໌! ພິກຂຸຜູ້ຊອບຄຸກຄີກັນ ຍິນດີໃນການຄຸກຄີກັນ ປະກອບເນື່ອງໆເຊິ່ງຄວາມຊອບຄຸກຄີກັນ ຊອບເປັນໝູ່ ຍິນດີໃນໝູ່ ບັນເທີງຮ່ວມໝູ່ ຍ່ອມບໍ່ງາມເລີຍ.

ອານົນທ໌! ຂໍ້ທີ່ພິກຂຸຊອບຄຸກຄີກັນ ຍິນດີໃນການຄຸກຄີກັນ ປະກອບເນື່ອງໆເຊິ່ງຄວາມຊອບຄຸກຄີກັນ ຊອບເປັນໝູ່ ຍິນດີໃນໝູ່ ບັນເທີງຮ່ວມໝູ່ນັ້ນຫລືໜໍ ຈັກເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງສຸຂອັນເກີດແຕ່ເນກຂັມມະ ສຸຂອັນເກີດແຕ່ຄວາມສງັດ ສຸຂອັນເກີດແຕ່ຄວາມເຂົ້າໄປສງົບ ສຸຂອັນເກີດແຕ່ຄວາມຕຣັສຣູ້ ນັ້ນບໍ່ເປັນຖານະທີ່ມີໄດ້.

ອານົນທ໌! ສ່ວນຂໍ້ທີ່ພິກຂຸເປັນຜູ້ຫລີກອອກຈາກໝູ່ ຢູ່ຜູ້ດຽວຍ່ອມຫວັງໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງສຸຂອັນເກີດແຕ່ເນກຂັມມະ ສຸຂອັນເກີດແຕ່ຄວາມສງັດ ສຸຂອັນເກີດແຕ່ຄວາມເຂົ້າໄປສງົບ ສຸຂອັນເກີດແຕ່ຄວາມຕຣັສຣູ້ ນັ້ນເປັນຖານະທີ່ມີໄດ້.

ອານົນທ໌! ຂໍ້ທີ່ພິກຂຸຊອບຄຸກຄີກັນ ຍິນດີໃນການຄຸກຄີກັນ ປະກອບເນື່ອງໆເຊິ່ງຄວາມຊອບຄຸກຄີກັນ ຊອບເປັນໝູ່ ຍິນດີໃນໝູ່ ບັນເທີງຮ່ວມໝູ່ນັ້ນຫລືໜໍ ຈັກບັນລຸເຈໂຕວິມຸຕອັນປາຖນາພຽງຊົ່ວສມັຍ ຫລືເຈໂຕວິມຸຕອັນບໍ່ກຳເຮິບທີ່ບໍ່ແມ່ນພຽງຊົ່ວສມັຍຢູ່ ນັ້ນບໍ່ເປັນຖານະທີ່ມີໄດ້.

ອານົນທ໌! ສ່ວນຂໍ້ທີ່ພິກຂຸເປັນຜູ້ຫລີກອອກຈາກໝູ່ ຢູ່ຜູ້ດຽວຍ່ອມຫວັງຄວາມບັນລຸເຈໂຕວິມຸຕອັນປາຖນາພຽງຊົ່ວສມັຍ ຫລືເຈໂຕວິມຸຕອັນບໍ່ກຳເຮິບທີ່ບໍ່ແມ່ນພຽງຊົ່ວສມັຍຢູ່ ນັ້ນເປັນຖານະທີ່ມີໄດ້.

ອານົນທ໌! ເຮົາຍ່ອມບໍ່ພິຈາຣະນາເຫັນຮູບແມ່ນແຕ່ຢ່າງດຽວເຊິ່ງເປັນທີ່ບໍ່ເກີດໂສກະ ປະຣິເທວະ ທຸກຂ໌ ໂທມະນັສ ອຸປາຍາສະ ເພາະຄວາມປ່ຽນແປງແລະຄວາມເປັນຢ່າງອື່ນຂອງຮູບຕາມທີ່ເຂົາກຳນັດກັນຢ່າງຍິ່ງເຊິ່ງບຸຄຄົລກຳນັດແລ້ວ.

ອານົນທ໌! ວິຫາຣະທັມອັນຕະຖາຄົຕຕຣັສຮູ້ໃນທີ່ນັ້ນໆ ນີ້ແລຄືຕະຖາຄົຕບັນລຸສຸນຍະຕະສະມາບັຕພາຍໃນ ເພາະບໍ່ໃສ່ໃຈໃນນິມິຕທັງປວງຢູ່.

ອານົນທ໌! ຖ້າພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ພຣະຣາຊາ ມະຫາອະມາຕຂອງພຣະຣາຊາ ເດຍຣະຖີຍ໌ ສາວົກຂອງເດຍຣະຖີຍ໌ເຂົ້າໄປຫາຕະຖາຄົຕຜູ້ຢູ່ດ້ວຍວິຫາຣະທັມນີ້ໃນທີ່ນັ້ນໆ ຕະຖາຄົຕຍ່ອມມີຈິຕນ້ອມໄປໃນວິເວກ ໂນ້ມໄປໃນວິເວກ ໂອນໄປໃນວິເວກ ຫລີຫລີກອອກແລ້ວ ຍິນດີຍິ່ງໃນເນກຂັມມະ ມີພາຍໃນປາສະຈາກທັມອັນເປັນທີ່ຕັ້ງແຫ່ງອາສະວະໂດຍປະການທັງປວງ ຈະເປັນຜູ້ທຳການເຈຣະຈາສະເພາະແຕ່ທີ່ຊັກຊວນໃຫ້ອອກເທົ່ານັ້ນ ໃນບໍຣິສັທນັ້ນໆໂດຍແທ້. ອານົນທ໌ ເພາະສະນັ້ນແລ ຖ້າພິກຂຸມີຄວາມຫວັງວ່າ ຈະບັນລຸສຸນຍະຕະສະມາບັຕພາຍໃນຢູ່ ເຂົາຄວນດຳຣົງຈິຕໄວ້ໃນພາຍໃນ ໃຫ້ຈິຕພາຍໃນສງົບ ກະທຳຈິຕພາຍໃນໃຫ້ເປັນທັມອັນເອກຜຸດຂຶ້ນ ຕັ້ງຈິຕພາຍໃນໃຫ້ໝັ້ນເຖີດ.

ອານົນທ໌! ກໍພິກຂຸຈະດຳຣົງຈິຕໄວ້ໃນພາຍໃນ ໃຫ້ຈິຕພາຍໃນສງົບ ກະທຳຈິຕພາຍໃນໃຫ້ເປັນທັມອັນເອກຜຸດຂຶ້ນ ຕັ້ງຈິຕພາຍໃນໃຫ້ໝັ້ນເປັນຢ່າງໃດ?

ອານົນທ໌! ພິກຂຸໃນທັມວິນັຍນີ້ ສງັດຈາກການທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່;

ເພາະວິຕົກວິຈາຣສງົບຣະງັບໄປ ຍ່ອມບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິຢູ່;

ເພາະປີຕິສິ້ນໄປ ເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະ ສະເຫວີຍສຸຂດ້ວຍກາຍ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາ ມີສະຕິຢູ່ເປັນສຸຂ.

ເພາະລະສຸຂແລະທຸກຂ໌ເສຍໄດ້ ແລະເພາະຄວາມດັບຫາຍໄປແຫ່ງໂສມະນັສແລະໂທມະນັສໃນກາລກ່ອນ ຍ່ອມບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່.

ອານົນທ໌! ຢ່າງນີ້ແລ ພິກຂຸຊື່ວ່າຍ່ອມດຳຣົງຈິຕໄວ້ໃນພາຍໃນໃຫ້ຈິຕພາຍໃນສງົບ ກະທຳຈິຕພາຍໃນໃຫ້ເປັນທັມອັນເອກຜຸດຂຶ້ນ ຕັ້ງຈິຕພາຍໃນໃຫ້ໝັ້ນ.

ອານົນທ໌! ພິກຂຸນັ້ນຍ່ອມໃສ່ໃຈໃນຄວາມວ່າງພາຍໃນ ເມື່ອເຂົາໃສ່ໃຈໃນຄວາມວ່າງພາຍໃນ ຈິຕຍັງບໍ່ແລ່ນໄປ ຍັງບໍ່ເຫລື້ອມໃສ ຍັງບໍ່ຕັ້ງໝັ້ນ ຍັງບໍ່ນ້ອມໄປໃນຄວາມວ່າງພາຍ

ໃນ ເມື່ອເປັນເຊັ່ນນັ້ນ ພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າ ເມື່ອເຮົາກຳລັງໃສ່ໃຈໃນຄວາມວ່າງພາຍໃນ ຈິຕຍັງບໍ່ແລ່ນໄປ ຍັງບໍ່ເຫລື້ອມໃສ ຍັງບໍ່ຕັ້ງໝັ້ນ ຍັງບໍ່ນ້ອມໄປໃນຄວາມວ່າງພາຍໃນ ດ້ວຍອາການນີ້ແລ ຍ່ອມເປັນອັນເຂົາຮູ້ສຶກໂຕໃນເຣື່ອງຄວາມວ່າງພາຍໃນນັ້ນໄດ້.

ພິກຂຸນັ້ນຍ່ອມໃສ່ໃຈໃນຄວາມວ່າງພາຍນອກ...ຯລຯ

ພິກຂຸນັ້ນຍ່ອມໃສ່ໃຈໃນຄວາມວ່າງທັງພາຍໃນແລະພາຍນອກ...ຯລຯ

ພິກຂຸນັ້ນຍ່ອມໃສ່ໃຈໃນອາເນນຊະສະມາບັຕ ຈິຕຍັງບໍ່ແລ່ນໄປ ຍັງບໍ່ເຫລື້ອມໃສ ຍັງບໍ່ຕັ້ງໝັ້ນ ຍັງບໍ່ນ້ອມໄປໃນອາເນນຊະສະມາບັຕ ເມື່ອເປັນເຊັ່ນນັ້ນ ພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າ ເມື່ອເຮົາກຳລັງໃສ່ໃຈໃນອາເນນຊະສະມາບັຕ ຈິຕຍັງບໍ່ແລ່ນໄປ ຍັງບໍ່ເຫລື້ອມໃສ ຍັງບໍ່ຕັ້ງໝັ້ນ ຍັງບໍ່ນ້ອມໄປໃນອາເນນຊະສະມາບັຕ ດ້ວຍອາການນີ້ແລ ຍ່ອມເປັນອັນເຂົາຮູ້ສຶກໂຕໃນເຣື່ອງອາເນນຊະສະມາບັຕນັ້ນໄດ້.

ອານົນທ໌! ພິກຂຸຄວນດຳຣົງຈິຕໄວ້ໃນພາຍໃນ ໃຫ້ຈິຕພາຍໃນສງົບ ກະທຳຈິຕພາຍໃນໃຫ້ເປັນທັມອັນເອກຜຸດຂຶ້ນ ຕັ້ງຈິຕ

ພາຍໃນໃຫ້ໝັ້ນໃນສະມາທິນິມິຕຂ້າງຕົ້ນນັ້ນແລ ເຂົາຍ່ອມໃສ່ໃຈໃນຄວາມວ່າງພາຍໃນ ເມື່ອເຂົາໃສ່ໃຈໃນຄວາມວ່າງພາຍໃນ ຈິຕຍ່ອມແລ່ນໄປ ຍ່ອມເຫລື້ອມໃສ ຍ່ອມຕັ້ງໝັ້ນຍ່ອມນຶກນ້ອມໄປໃນຄວາມວ່າງພາຍໃນ ເມື່ອເປັນເຊັ່ນນັ້ນພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າ ເມື່ອເຮົາກຳລັງໃສ່ໃຈໃນຄວາມວ່າງພາຍໃນ ຈິຕຍ່ອມແລ່ນໄປ ຍ່ອມເຫລື້ອມໃສ ຍ່ອມຕັ້ງໝັ້ນ ຍ່ອມນຶກນ້ອມໄປໃນຄວາມວ່າງພາຍໃນ ດ້ວຍອາການນີ້ແລ ຍ່ອມເປັນອັນເຂົາຮູ້ສຶກໂຕໃນເຣື່ອງຄວາມວ່າງພາຍໃນນັ້ນໄດ້.

ພິກຂຸນັ້ນຍ່ອມໃສ່ໃຈໃນຄວາມວ່າງພາຍນອກ...ຯລຯ

ພິກຂຸນັ້ນຍ່ອມໃສ່ໃຈໃນຄວາມວ່າງທັງພາຍໃນແລະພາຍນອກ...ຯລຯ

ພິກຂຸນັ້ນຍ່ອມໃສ່ໃຈໃນອາເນນຊະສະມາບັຕ ຈິຕຍ່ອມແລ່ນໄປຍ່ອມເຫລື້ອມໃສ ຍ່ອມຕັ້ງໝັ້ນ ຍ່ອມນຶກນ້ອມໄປໃນອາເນນຊະສະມາບັຕ ເມື່ອເປັນເຊັ່ນນັ້ນ ພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າເມື່ອເຮົາກຳລັງໃສ່ໃຈໃນອາເນນຊະສະມາບັຕ ຈິຕຍ່ອມແລ່ນໄປ ຍ່ອມເຫລື້ອມໃສ ຍ່ອມຕັ້ງໝັ້ນ ຍ່ອມນຶກນ້ອມໄປໃນອາ

ເນນຊະສະມາບັຕ ດ້ວຍອາການນີ້ແລ ຍ່ອມເປັນອັນເຂົາຮູ້ສຶກໂຕໃນເຣື່ອງອາເນນຊະສະມາບັຕນັ້ນໄດ້.

ອານົນທ໌! ຫາກເມື່ອພິກຂຸນັ້ນຢູ່ດ້ວຍວິຫາຣະທັມນີ້ ຈິຕຍ່ອມນ້ອມໄປເພື່ອຈະຈົງກົມ ເຂົາຍ່ອມຈົງກົມດ້ວຍໃສ່ໃຈວ່າ ອະກຸສົລທັມອັນເປັນບາບທັງຫລາຍຄື ອະພິຊຊາແລະໂທມະນັສຈັກບໍ່ຄອບງຳເຮົາຜູ້ຈົງກົມຢູ່ຢ່າງນີ້ໄດ້ ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງການຈົງກົມ.

ອານົນທ໌! ຫາກເມື່ອພິກຂຸນັ້ນຢູ່ດ້ວຍວິຫາຣະທັມນີ້ ຈິຕຍ່ອມນ້ອມໄປເພື່ອຈະຢືນ ເຂົາຍ່ອມຢືນດ້ວຍໃສ່ໃຈວ່າ ອະກຸສົລທັມອັນເປັນບາບທັງຫລາຍຄື ອະພິຊຊາແລະໂທມະນັສ ຈັກບໍ່ຄອບງຳເຮົາຜູ້ຢືນຢູ່ຢ່າງນີ້ໄດ້ ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງການຢືນ.

ອານົນທ໌! ຫາກເມື່ອພິກຂຸນັ້ນຢູ່ດ້ວຍວິຫາຣະທັມນີ້ ຈິຕຍ່ອມນ້ອມໄປເພື່ອຈະນັ່ງ ເຂົາຍ່ອມນັ່ງດ້ວຍໃສ່ໃຈວ່າ ອະກຸສົລທັມອັນເປັນບາບທັງຫລາຍຄື ອະພິຊຊາແລະໂທມະນັສ ຈັກບໍ່ຄອບງຳເຮົາຜູ້ນັ່ງຢູ່ຢ່າງນີ້ໄດ້ ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງການນັ່ງ.

ອານົນທ໌! ຫາກເມື່ອພິກຂຸນັ້ນຢູ່ດ້ວຍວິຫາຣະທັມນີ້ ຈິຕຍ່ອມນ້ອມໄປເພື່ອຈະນອນ ເຂົາຍ່ອມນອນດ້ວຍໃສ່ໃຈວ່າ ອະກຸສົລທັມອັນເປັນບາບທັງຫລາຍຄື ອະພິຊຊາແລະໂທມະນັສ ຈັກບໍ່ຄອບງຳເຮົາຜູ້ນອນຢູ່ຢ່າງນີ້ໄດ້ ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງການນອນ.

ອານົນທ໌! ຫາກເມື່ອພິກຂຸນັ້ນຢູ່ດ້ວຍວິຫາຣະທັມນີ້ ຈິຕຍ່ອມນ້ອມໄປເພື່ອຈະເວົ້າ ເຂົາຍ່ອມເວົ້າດ້ວຍໃສ່ໃຈວ່າ ເຮົາຈັກບໍ່ເວົ້າເຣື່ອງຣາວເຫັນປານນີ້ ເຊິ່ງເປັນຂອງຕ່ຳຊາມ ເປັນຂອງຊາວບ້ານ ເປັນຂອງປຸຖຸຊົນ ບໍ່ເປັນຂອງພຣະອະຣິຍະ ບໍ່ປະກອບດ້ວຍປະໂຍຊນ໌ ບໍ່ເປັນໄປເພື່ອຄວາມເບື່ອໜ່າຍ ເພື່ອຄວາມຄາຍກຳນັດ ເພື່ອຄວາມດັບ ເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພພານ ຄື ເຣື່ອງພຣະຣາຊາ, ເຣື່ອງໂຈຣ, ເຣື່ອງມະຫາອະມາຕຍ໌, ເຣື່ອງກອງທັບ, ເຣື່ອງພັຍ, ເຣື່ອງຣົບ, ເຣື່ອງເຂົ້າ, ເຣື່ອງນ້ຳ, ເຣື່ອງຜ້າ, ເຣື່ອງທີ່ນອນ, ເຣື່ອງດອກໄມ້, ເຣື່ອງຂອງຫອມ, ເຣື່ອງຍາຕ, ເຣື່ອງຍານ, ເຣື່ອງບ້ານ, ເຣື່ອງນິຄົມ, ເຣື່ອງຣາຊະທານີ, ເຣື່ອງຊົນບົທ, ເຣື່ອງສະຕຣີ, ເຣື່ອງຄົນກ້າຫານ, ເຣື່ອງທາງ, ເຣື່ອງທ່ານ້ຳ, ເຣື່ອງຍິງສາວໃຊ້ຕັກນ້ຳ, ເຣື່ອງຄົນທີ່ລ່ວງລັບໄປແລ້ວ, ເຣື່ອງເລັກໆນ້ອຍໆ, ເຣື່ອງໂລກ ເຣື່ອງທະເລ, ເຣື່ອງຄວາມຈະເຣີນແລະຄວາມເສື່ອມ ດ້ວຍປະການນັ້ນໆ.

ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເລື່ອງການເວົ້າ; ແລະເຂົາໃສ່ໃຈວ່າ ເຮົາຈັກເວົ້າເລື່ອງຣາວເຫັນປານນີ້ ເຊິ່ງເປັນເລື່ອງຂັດເກົາກິເລສຢ່າງຍິ່ງ ເປັນທີ່ສະບາຍແກ່ການພິຈາຣະນາທາງຈິຕ ເປັນໄປເພື່ອຄວາມເບື່ອໜ່າຍ ເພື່ອຄວາມຄາຍກຳນັດ ເພື່ອຄວາມດັບ ເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພພານຄື:

**ອັປປິຈສະກະຖາ** *(ເລື່ອງຄວາມມັກນ້ອຍ),*
**ສັນຕຸຕຖິກະຖາ** *(ເລື່ອງຄວາມສັນໂດດ),*
**ປະວິເວກະກະຖາ** *(ເລື່ອງຄວາມສງັດ),*
**ອະສັງສັຄຄະກະຖາ** *(ເລື່ອງຄວາມບໍ່ຄຸກຄີ),*
**ວິຣິຍາຣັມພະກະຖາ** *(ເລື່ອງການປຣາຣົພຄວາມພຽນ),*
**ສີລະກະຖາ** *(ເລື່ອງສີລ),*
**ສະມາທິກະຖາ** *(ເລື່ອງສະມາທິ),*
**ປັນຍາກະຖາ** *(ເລື່ອງປັນຍາ),*
**ວິມຸຕຕິກະຖາ** *(ເລື່ອງວິມຸຕ),*
**ວິມຸຕຕິຍານທັສສະນະກະຖາ** *(ເລື່ອງວິມຸຕຕິຍານທັສສະນະ),*
ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເລື່ອງການເວົ້າ.

ອານົນທ໌! ຫາກເມື່ອພິກຂຸນັ້ນຢູ່ດ້ວຍວິຫາຣະທັມນີ້ ຈິຕຍ່ອມນ້ອມໄປເພື່ອຈະນຶກ ເຂົາຍ່ອມໃສ່ໃຈວ່າ ເຮົາຈັກບໍ່ນຶກໃນວິຕົກເຫັນປານນີ້ ເຊິ່ງເປັນວິຕົກທີ່ຕ່ຳຊາມ ເປັນຂອງຊາວບ້ານ ເປັນ

ຂອງປຸຖຸຊົນ ບໍ່ເປັນຂອງພຣະອະຣິຍະ ບໍ່ປະກອບດ້ວຍປະໂຍຊນ໌ ບໍ່ເປັນໄປເພື່ອຄວາມເບື່ອໜ່າຍ ເພື່ອຄວາມຄາຍກໍານັດ ເພື່ອຄວາມດັບ ເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພພານ ຄື ກາມວິຕົກ ພະຍາປາທະວິຕົກ ວິຫິງສາວິຕົກ ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງການນຶກ; ແລະເຂົາໃສ່ໃຈວ່າ ເຮົາຈັກນຶກໃນວິຕົກເຫັນປານນີ້ ເຊິ່ງເປັນວິຕົກຂອງພຣະອະຣິຍະ ເປັນເຄື່ອງນໍາອອກທີ່ນໍາອອກເພື່ອຄວາມສິ້ນທຸກຂ໌ໂດຍຊອບແກ່ບຸຄຄົລຜູ້ທໍາຕາມຄື **ເນກຂັມມະວິຕົກ ອັພພະຍາປາທະວິຕົກ ອະວິຫິງສາວິຕົກ** ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງການນຶກ.

ອານົນທ໌! ກາມຄຸນ ໕ ຢ່າງນີ້, ໕ ຢ່າງເປັນຢ່າງໃດ? ຄື: ຮູປທີ່ເຫັນດ້ວຍຕາ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ ເປັນທີ່ຍົ້ວຍວນຊວນໃຫ້ກໍານັດ;
ສຽງທີ່ຮູ້ໄດ້ດ້ວຍຫູ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ ເປັນທີ່ຍົ້ວຍວນຊວນໃຫ້ກໍານັດ;
ກິ່ນທີ່ຮູ້ໄດ້ດ້ວຍດັງ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ ເປັນທີ່ຍົ້ວຍວນຊວນໃຫ້ກໍານັດ;
ຣົສທີ່ຮູ້ໄດ້ດ້ວຍລີ້ນ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ ເປັນທີ່ຍົ້ວຍວນຊວນໃຫ້ກໍານັດ;

ໂຜຕຖັພພະທີ່ຮູ້ໄດ້ດ້ວຍກາຍ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ ເປັນທີ່ຢົ້ວຍວນຊວນໃຫ້ກຳນັດ.
ອານົນທ໌! ກາມຄຸນ ໕ ຢ່າງນີ້ແລ.

ອານົນທ໌! ພິກຂຸຄວນພິຈາຣະນາຈິຕຂອງຕົນເນື່ອງໆວ່າ ຄວາມຟຸ້ງຊ່ານແຫ່ງຈິຕເກີດຂຶ້ນແກ່ເຮົາເພາະກາມຄຸນ ໕ ນີ້ຢ່າງໃດຢ່າງໜຶ່ງ ຫລືໃນອາຍະຕະນະໃດອາຍະຕະນະໜຶ່ງມີຢູ່ ຫລືທໍແລ; ຖ້າພິກຂຸຮູ້ຊັດຢ່າງນີ້ວ່າ ຄວາມຟຸ້ງຊ່ານແຫ່ງຈິຕເກີດຂຶ້ນແກ່ເຮົາເພາະກາມຄຸນ ໕ ນີ້ຢ່າງໃດຢ່າງໜຶ່ງ ຫລືໃນອາຍະຕະນະໃດອາຍະຕະນະໜຶ່ງມີຢູ່, ເມື່ອເປັນເຊັ່ນນັ້ນ ພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າ ຄວາມກຳນັດພໍໃຈໃນກາມຄຸນ ໕ ນີ້ແລ ເຮົາຍັງລະບໍ່ໄດ້.

ແຕ່ຖ້າພິກຂຸພິຈາຣະນາຢູ່ ຮູ້ຢູ່ຢ່າງນີ້ວ່າ ຄວາມຟຸ້ງຊ່ານແຫ່ງຈິຕເກີດຂຶ້ນແກ່ເຮົາເພາະກາມຄຸນ ໕ ນີ້ຢ່າງໃດຢ່າງໜຶ່ງ ຫລືໃນອາຍະຕະນະໃດອາຍະຕະນະໜຶ່ງບໍ່ມີເລີຍ, ເມື່ອເປັນເຊັ່ນນັ້ນ ພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າ ຄວາມກຳນັດພໍໃຈໃນກາມຄຸນ ໕ ນີ້ແລ ເຮົາລະໄດ້ແລ້ວ. ດ້ວຍອາການນີ້ແລ ເປັນອັນເຂົາຮູ້ສຶກໂຕໃນເຣື່ອງກາມຄຸນ ໕.

ອານົນທ໌! ອຸປາທານຂັນທ໌ ໕ ນີ້ແລ ເປັນທັມທີ່ພິກຂຸຄວນພິຈາ ຣະນາເຫັນທັງຄວາມເກີດແລະຄວາມດັບຢູ່ວ່າ:
ຣູປເປັນດັ່ງນີ້,
ຄວາມເກີດຂອງຣູປເປັນດັ່ງນີ້,
ຄວາມດັບຂອງຣູປເປັນດັ່ງນີ້;
ເວທະນາເປັນດັ່ງນີ້,
ຄວາມເກີດຂອງເວທະນາເປັນດັ່ງນີ້,
ຄວາມດັບຂອງເວທະນາເປັນດັ່ງນີ້;
ສັນຍາເປັນດັ່ງນີ້,
ຄວາມເກີດຂອງສັນຍາເປັນດັ່ງນີ້,
ຄວາມດັບຂອງສັນຍາເປັນດັ່ງນີ້;
ສັງຂາຣທັງຫລາຍເປັນດັ່ງນີ້,
ຄວາມເກີດຂອງສັງຂາຣທັງຫລາຍເປັນດັ່ງນີ້,
ຄວາມດັບຂອງສັງຂາຣທັງຫລາຍເປັນດັ່ງນີ້;
ວິນຍານເປັນດັ່ງນີ້,
ຄວາມເກີດຂອງວິນຍານເປັນດັ່ງນີ້,
ຄວາມດັບຂອງວິນຍານເປັນດັ່ງນີ້.

ເມື່ອເຂົາພິຈາຣະນາເຫັນທັງຄວາມເກີດແລະຄວາມດັບໃນ ອຸປາທານຂັນທ໌ ໕ ນີ້ຢູ່ ຍ່ອມລະອັສສະມິມານະໃນອຸປາທານ ຂັນທ໌ ໕ ໄດ້ ເມື່ອເປັນເຊັ່ນນັ້ນ ພິກຂຸນັ້ນຍ່ອມຮູ້ຊັດຢ່າງນີ້ວ່າ

ອັສສະມິມານະໃນອຸປາທານຂັນທ໌ ໕ ເຮົາລະໄດ້ແລ້ວ ດ້ວຍອາການນີ້ແລ ເປັນອັນເຂົ້າຮູ້ສຶກໂຕໃນເຣື່ອງອຸປາທານຂັນທ໌ ໕.

ອານົນທ໌! ທັມນັ້ນໆ ເຫລົ່ານີ້ແລ ເນື່ອງມາແຕ່ກຸສົລສ່ວນດຽວ ໄກຈາກຂ້າເສິກ ເປັນໂລກຸຕຕະຣະ ອັນມາຣຜູ້ມີບາບຢັ່ງລົງບໍ່ໄດ້.

ອານົນທ໌! ເຈົ້າຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ສາວົກມອງເຫັນອຳນາຈປະໂຍຊນ໌ອັນໃດ ຈຶ່ງຄວນໃກ້ຊິດຕິດຕາມສາສດາ?

ທ່ານພຣະອານົນທ໌ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ທັມຂອງພວກຂ້ານ້ອຍທັງຫລາຍມີພຣະຜູ້ມີພຣະພາຄເປັນມູລ ມີພຣະຜູ້ມີພຣະພາຄເປັນຜູ້ນຳ ມີພຣະຜູ້ມີພຣະພາຄເປັນທີ່ເພິ່ງອາສັຍ ຂໍປະທານໂອກາສ ຂໍເນື້ອຄວາມແຫ່ງພາສິຕນີ້ຈົ່ງແຈ່ມແຈ້ງກັບພຣະຜູ້ມີພຣະພາຄເຖີດ ພິກຂຸທັງຫລາຍໄດ້ຟັງຕໍ່ພຣະຜູ້ມີພຣະພາຄແລ້ວຈັກຊົງຈຳໄວ້.

ອານົນທ໌! ສາວົກບໍ່ຄວນຕິດຕາມສາສດາພຽງເພື່ອຟັງສຸຕຕະ ເຄີຍຍະ ເວີຍຍາກະຣະນະເລີຍ ນັ້ນເພາະເຫຕໃດ? ເພາະທັມ ທັງຫລາຍອັນພວກເຈົ້າທັງຫລາຍສະດັບແລ້ວ ຊົງຈຳແລ້ວ ຄ່ອງປາກແລ້ວ ເພັ່ງຕາມດ້ວຍໃຈແລ້ວ ແທງຕລອດດີແລ້ວ ດ້ວຍຄວາມເຫັນເປັນເວລານານ.

ອານົນທ໌! ແຕ່ສາວົກຄວນຈະໃກ້ຊິດຕິດຕາມສາສດາເພື່ອ ຟັງເຣື່ອງຣາວເຫັນປານນີ້ຄື **ອັປປິຈສະກະຖາ ສັນຕຸຕຖິກະຖາ ປະວິເວກະກະຖາ ອະສັງສັຄຄະກະຖາ ວີຣິຍາຣັມພະກະຖາ ສີລະກະຖາ ສະມາທິກະຖາ ປັນຍາກະຖາ ວິມຸຕຕິກະຖາ ວິມຸຕຕິຍານທັສສະນະກະຖາ** ເຊິ່ງເປັນເຣື່ອງຂັດເກົາກິເລສ ຢ່າງຍິ່ງ ເປັນທີ່ສະບາຍແກ່ການພິຈາຣະນາທາງຈິຕ ເປັນໄປ ເພື່ອຄວາມເບື່ອໜ່າຍ ເພື່ອຄວາມຄາຍກຳນັດ ເພື່ອຄວາມດັບ ເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພ ພານ.

ອານົນທ໌! ເມື່ອເປັນເຊັ່ນນັ້ນ ອຸປັທທະວະຂອງອາຈາຣຍ໌ຈຶ່ງມີ ໄດ້; ເມື່ອເປັນເຊັ່ນນັ້ນ ອຸປັທທະວະຂອງສິສຈຶ່ງມີໄດ້; ເມື່ອ ເປັນເຊັ່ນນັ້ນ ອຸປັທທະວະຂອງຜູ້ປະພຶຕພຣົມມະຈັນຍ໌ຈຶ່ງມີໄດ້;

ອານົນທ໌! ອຸປັທທະວະຂອງອາຈາຣຍ໌ຍ່ອມມີໄດ້ຢ່າງໃດ?

ອານົນທ໌! ສາສດາບາງຄົນໃນໂລກນີ້ ຍ່ອມພໍໃຈໃນເສນາສະນະອັນສງັດຄື ປ່າ ເຫງ້ົາໄມ້ ພູເຂົາ ຮ່ອມພູ ຖ້ຳ ປ່າຊ້າ ປ່າທຶບ ທີ່ແຈ້ງ ແລະປ່າເລົ່າ ເມື່ອສາສດານັ້ນຫລີກອອກຢູ່ຢ່າງນັ້ນ, ພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທຈະພາກັນເຂົ້າໄປຫາ, ເມື່ອພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທພາກັນເຂົ້າໄປຫາແລ້ວ ສາສດານັ້ນຍ່ອມຍິນດີໃນຄວາມໝົກມົ່ນ ເຖິງຄວາມຢາກໄດ້ຈະວຽນມາເພື່ອຄວາມເປັນຜູ້ມັກມາກ. ອານົນທ໌ ສາສດານີ້ຮຽກວ່າ ອາຈາຣຍ໌ມີອຸປັທທະວະດ້ວຍອຸປັທທະວະຂອງອາຈາຣຍ໌ ອະກຸສົລທັມອັນເປັນບາບ ເສົ້າໝອງ ເປັນເຫຕເກີດໃນພົພໃໝ່ ມີຄວາມກະວົນກະວາຍ ມີທຸກຂ໌ເປັນວິບາກ ເປັນທີ່ຕັ້ງແຫ່ງຊາຕ ຊະຣາ ມະຣະນະຕໍ່ໄປ ໄດ້ຂ້າສາສດານັ້ນເສຍແລ້ວ. ອານົນທ໌ ອຸປັທທະວະຂອງອາຈາຣຍ໌ຍ່ອມມີໄດ້ຢ່າງນີ້ແລ.

ອານົນທ໌! ອຸປັທທະວະຂອງສິສຍ່ອມມີໄດ້ຢ່າງໃດ?
ອານົນທ໌! ສາວົກຂອງສາສດານັ້ນແລ ເມື່ອເພີ່ມພູນວິເວກຕາມສາສດານັ້ນ ຍ່ອມພໍໃຈໃນເສນາສະນະອັນສງັດຄື ປ່າ ເຫງ້ົາໄມ້ ພູເຂົາ ຮ່ອມພູ ຖ້ຳ ປ່າຊ້າ ປ່າທຶບ ທີ່ແຈ້ງ ແລະປ່າເລົ່າ ເມື່ອສາວົກນັ້ນຫລີກອອກຢູ່ຢ່າງນັ້ນ, ພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທຈະພາກັນເຂົ້າໄປຫາ, ເມື່ອພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທ

ພາກັນເຂົ້າໄປຫາແລ້ວ ສາວົກນັ້ນຍ່ອມຍິນດີໃນຄວາມໝົກມົ່ນ ເຖິງຄວາມຢາກໄດ້ ຈະວຽນມາເພື່ອຄວາມເປັນຜູ້ມັກມາກ. ອານົນທ໌ ສາວົກນີ້ຮຽກວ່າ ສິສມີອຸປັທທະວະດ້ວຍອຸປັທທະວະຂອງສິສ ອະກຸສົລທັມອັນເປັນບາບ ເສົ້າໝອງ ເປັນເຫຕເກີດໃນພົພໃໝ່ ມີຄວາມກະວົນກະວາຍ ມີທຸກຂ໌ເປັນວິບາກ ເປັນທີ່ຕັ້ງແຫ່ງຊາຕ ຊະຣາ ມະຣະນະຕໍ່ໄປ ໄດ້ຂ້າສາວົກນັ້ນເສຍແລ້ວ. ອານົນທ໌ ອຸປັທທະວະຂອງສິສຍ່ອມມີໄດ້ຢ່າງນີ້ແລ.

ອານົນທ໌! ອຸປັທທະວະຂອງຜູ້ປະພຶຕພຣົມມະຈັນຍ໌ຍ່ອມມີໄດ້ຢ່າງໃດ? ອານົນທ໌ ຕະຖາຄົຕອຸບັຕຂຶ້ນໃນໂລກນີ້ ເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ ຕະຖາຄົຕນັ້ນຍ່ອມພໍໃຈໃນເສນາສະນະອັນສງັດຄື ປ່າເຫຼົ້າໄມ້ ພູເຂົາ ຮ່ອມພູ ຖ້ຳ ປ່າຊ້າ ປ່າທຶບ ທີ່ແຈ້ງ ແລະປ່າເລົ່າ ເມື່ອຕະຖາຄົຕນັ້ນຫລີກອອກຢູ່ຢ່າງນັ້ນ, ພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທຈະພາກັນເຂົ້າໄປຫາ, ເມື່ອພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທພາກັນເຂົ້າໄປຫາແລ້ວ ຕະຖາຄົຕນັ້ນຍ່ອມບໍ່ຍິນດີໃນ

ຄວາມໝົກມົ່ນ ບໍ່ເຖິງຄວາມຢາກໄດ້ ບໍ່ວຽນມາເພື່ອຄວາມເປັນ
ຜູ້ມັກມາກ.

ສ່ວນສາວົກຂອງຕະຖາຄົຕນັ້ນແລ ເມື່ອເພິ່ນພູນວິເວກຕາມ ສາສດາພຣະອົງຄ໌ນັ້ນ ຍ່ອມພໍໃຈໃນເສນາສະນະອັນສງັດຄື ປ່າ ເຫງົ້າໄມ້ ພູເຂົາ ຮ່ອມພູ ຖ້ຳ ປ່າຊ້າ ປ່າທຶບ ທີ່ແຈ້ງ ແລະປ່າເລົ່າ ເມື່ອສາວົກນັ້ນຫລີກອອກຢູ່ຢ່າງນັ້ນ, ພວກ ພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະຊາວຊົນບົທຈະພາກັນ ເຂົ້າໄປຫາ, ເມື່ອພວກພຣາມນ໌ແລະຄະຫະບໍດີ ຊາວນິຄົມແລະ ຊາວຊົນບົທພາກັນເຂົ້າໄປຫາແລ້ວ ສາວົກນັ້ນຍ່ອມຍິນດີໃນ ຄວາມໝົກມົ່ນ ເຖິງຄວາມຢາກໄດ້ ຈະວຽນມາເພື່ອຄວາມເປັນ ຜູ້ມັກມາກ.

ອານົນທ໌! ສາວົກນີ້ຮຽກວ່າ ເປັນຜູ້ປະພຶຕພຣົມມະຈັນຍ໌ມີອຸປັທ ທະວະດ້ວຍອຸປັທທະວະຂອງຜູ້ປະພຶຕພຣົມມະຈັນຍ໌ ອະກຸສົລ ທັມອັນເປັນບາບ ເສົ້າໝອງ ເປັນເຫຕເກີດໃນພົພໃໝ່ ມີ ຄວາມກະວົນກະວາຍ ມີທຸກຂ໌ເປັນວິບາກ ເປັນທີ່ຕັ້ງແຫ່ງຊາຕ ຊະຣາ ມະຣະນະຕໍ່ໄປ ໄດ້ຂ້າສາວົກນັ້ນເສຍແລ້ວ. ອານົນທ໌ ອຸປັທທະວະຂອງຜູ້ປະພຶຕພຣົມມະຈັນຍ໌ຍ່ອມມີໄດ້ຢ່າງນີ້ແລ.

**ອານົນທ໌! ໃນບັນດາອຸປັທທະວະທັງ ๓ ນັ້ນ ອຸປັທທະວະຂອງຜູ້ປະພຶຕພຣົມມະຈັນຍ໌ນີ້ ມີວິບາກເປັນທຸກຂ໌ ມີວິບາກເຜັດຮ້ອນກວ່າອຸປັທທະວະຂອງອາຈາຣຍ໌ແລະອຸປັທທະວະຂອງສິສທັງເປັນໄປເພື່ອຄວາມຕົກຕ່ຳດ້ວຍ.**

ອານົນທ໌! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຈົ່ງປະພຶຕຕໍ່ເຮົາດ້ວຍຄວາມເປັນມິຕເຖີດ ຢ່າປະພຶຕຕໍ່ເຮົາດ້ວຍຄວາມເປັນສັດຕູເລີຍ ຂໍ້ນັ້ນຈັກເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂແກ່ພວກເຈົ້າທັງຫລາຍຕລອດກາລນານ *(ຕັສມາຕິຫະ ມັງ ອານັນທະ ມິຕຕະວະຕາຍະ ສະມຸທາຈະຣະຖະ ມາ ສະ-ປັຕຕະວະຕາຍະ ຕັງ ໂວ ພະວິສສະຕິ ທີຄະຣັຕຕັງ ຫິຕາຍະ ສຸຂາຍະ).*

ອານົນທ໌! ກໍສາວົກຍ່ອມປະພຶຕຕໍ່ສາສດາດ້ວຍຄວາມເປັນສັດຕູບໍ່ປະພຶຕຕໍ່ສາສດາດ້ວຍຄວາມເປັນມິຕເປັນຢ່າງໃດ?

ອານົນທ໌! ສາສດາໃນທັມວິນັຍນີ້ ເປັນຜູ້ອະນຸເຄາະສະແຫວງຫາປະໂຍຊນ໌ເກື້ອກູນ ອາສັຍຄວາມເອັນດູສະແດງທັມແກ່ສາວົກທັງຫລາຍວ່າ ນີ້ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນແກ່ພວກເຈົ້າທັງຫລາຍ, ນີ້ຍ່ອມເປັນໄປເພື່ອຄວາມສຸຂແກ່ພວກເຈົ້າທັງຫລາຍ, **ສາວົກຂອງສາສດານັ້ນກັບບໍ່ຟັງດ້ວຍ**

**ດີ ບໍ່ງ່ຽງໂສຕະລົງຟັງ ບໍ່ຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະຍັງປະພຶດຫລີກລຽງຄຳສອນຂອງສາສດາ.** ອານົນທ໌ ຢ່າງນີ້ແລ ສາວົກຊື່ວ່າປະພຶດຕໍ່ສາສດາດ້ວຍຄວາມເປັນສັດຕູ ບໍ່ປະພຶດຕໍ່ສາສດາດ້ວຍຄວາມເປັນມິດ.

ອານົນທ໌! ກໍສາວົກຍ່ອມປະພຶດຕໍ່ສາສດາດ້ວຍຄວາມເປັນມິດ ບໍ່ປະພຶດຕໍ່ສາສດາດ້ວຍຄວາມເປັນສັດຕູເປັນຢ່າງໃດ?

ອານົນທ໌! ສາສດາໃນທັມວິນັຍນີ້ ເປັນຜູ້ອະນຸເຄາະ ສະແຫວງຫາປະໂຍຊນ໌ເກື້ອກູນ ອາສັຍຄວາມເອັນດູສະແດງທັມແກ່ສາວົກທັງຫລາຍວ່າ ນີ້ຍ່ອມເປັນໄປເພື່ອປະໂຍຊນ໌ເກື້ອກູນແກ່ພວກເຈົ້າທັງຫລາຍ, ນີ້ຍ່ອມເປັນໄປເພື່ອຄວາມສຸຂແກ່ພວກເຈົ້າທັງຫລາຍ, **ສາວົກຂອງສາສດານັ້ນຍ່ອມຟັງດ້ວຍດີ ຍ່ອມງ່ຽງໂສຕະລົງຟັງ ຍ່ອມຕັ້ງຈິດເພື່ອຈະຮູ້ທົ່ວເຖິງ ແລະບໍ່ປະພຶດຫລີກລຽງຄຳສອນຂອງສາສດາ.** ອານົນທ໌ ຢ່າງນີ້ແລ ສາວົກຊື່ວ່າປະພຶດຕໍ່ສາສດາດ້ວຍຄວາມເປັນມິດ ບໍ່ປະພຶດຕໍ່ສາສດາດ້ວຍຄວາມເປັນສັດຕູ.

ອານົນທ໌! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຈົ່ງປະພຶດຕໍ່ເຮົາດ້ວຍຄວາມເປັນມິດເຖີດ ຢ່າປະພຶດຕໍ່ເຮົາດ້ວຍຄວາມເປັນ

ສັດຕູເລີຍ ຂໍ້ນັ້ນຈັກເປັນໄປເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂແກ່ພວກເຈົ້າທັງຫລາຍຕລອດກາລນານ.

**ອານົນທ໌! ເຮົາຈັກບໍ່ພະຍາຍາມກະທຳກັບພວກເຈົ້າຢ່າງທະນຸຖະໜອມເໝືອນຊ່າງໝໍ້ກະທຳແກ່ໝໍ້ທີ່ຍັງປຽກຍັງດິບຢູ່; ອານົນທ໌ ເຮົາຈັກຂະນາບແລ້ວ ຂະນາບອີກບໍ່ມີຢຸດ;**

**ອານົນທ໌! ເຮົາຈັກຊີ້ໂທສແລ້ວ ຊີ້ໂທສອີກບໍ່ມີຢຸດ ຜູ້ໃດມີມັຄຜົລເປັນແກ່ນສາຣ ຜູ້ນັ້ນຈັກທົນຢູ່ໄດ້.**

ເມື່ອພຣະຜູ້ມີພຣະພາຄໄດ້ຕຣັສພາສິຕນີ້ແລ້ວ ທ່ານພຣະອານົນທ໌ມີໃຈຊື່ນຊົມຍິນດີພຣະພາສິຕຂອງພຣະຜູ້ມີພຣະພາຄແລ.

---

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ๑๔/๑๙๕-๑๙๖/๒๔๖-๒๔๗*



**“Reflecting wisely, he uses the resting place only for protection from cold, for protection from heat, for protection from contact with gadflies, mosquitoes, wind, the sun, and creeping things, and only for the purpose of warding off the perils of climate and for enjoying retreat.**

Sabbāsavasutta MN 2
https://suttacentral.net/mn2



# ພຣະຜູ້ມີພຣະພາຄຊົງປຣາຣົພເຖິງທ່ານພຣະມະຫາກັສສະປະທີ່ທ່ານເປັນຜູ້ສັນໂດດ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣສາວັຕຖີ. ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸທັງຫລາຍ...ແລ້ວໄດ້ຕຣັສວ່າ:

ພິກຂຸທັງຫລາຍ! ກັສສະປະນີ້ເປັນຜູ້ສັນໂດດດ້ວຍຈີວອຣຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດ

ດ້ວຍຈີວອຣຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫດແຫ່ງຈີວອຣ ບໍ່ໄດ້ຈີວອຣກໍບໍ່ສະດຸ້ງ ຄັນໄດ້ຈີວອຣແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່.

ພິກຂຸທັງຫລາຍ! ກັສສະປະນີ້ເປັນຜູ້ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫດແຫ່ງບິນທະບາຕ ບໍ່ໄດ້ບິນທະບາຕກໍບໍ່ສະດຸ້ງ ຄັນໄດ້ບິນທະບາຕແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກບໍຣິໂພຄຢູ່.

ພິກຂຸທັງຫລາຍ! ກັສສະປະນີ້ເປັນຜູ້ສັນໂດດດ້ວຍເສນາສະນະຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍເສນາສະນະຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫດແຫ່ງເສນາສະນະ ບໍ່ໄດ້ເສນາສະນະກໍບໍ່ສະດຸ້ງ ຄັນໄດ້ເສນາສະນະແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່.

ພິກຂຸທັງຫລາຍ! ກັສສະປະນີ້ເປັນຜູ້ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງຄິລານະປັຈຈັຍເພສັຊບໍຣິຂາຣ ບໍ່ໄດ້ຄິລານະປັຈຈັຍເພສັຊບໍຣິຂາຣກໍບໍ່ສະດຸ້ງ ຄັນໄດ້ຄິລານະປັຈຈັຍເພສັຊບໍຣິຂາຣແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ບໍຣິໂພຄຢູ່.

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ເຮົາທັງຫລາຍຈັກເປັນຜູ້ສັນໂດດດ້ວຍຈີວອຣຕາມມີຕາມໄດ້ ແລະຈັກເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍຈີວອຣຕາມມີຕາມໄດ້ ຈັກບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງຈີວອຣ ບໍ່ໄດ້ຈີວອຣກໍບໍ່ສະດຸ້ງ ຄັນໄດ້ຈີວອຣແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່.

ຈັກເປັນຜູ້ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ ແລະຈັກເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ ຈັກບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງບິນທະບາຕ ບໍ່ໄດ້ບິນທະບາຕກໍບໍ່ສະດຸ້ງ ຄັນ

ໄດ້ບິນທະບາຕແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ບໍຣິໂພຄຢູ່.

ຈັກເປັນຜູ້ສັນໂດດດ້ວຍເສນາສະນະຕາມມີຕາມໄດ້ ແລະຈັກເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍເສນາສະນະຕາມມີຕາມໄດ້ ຈັກບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງເສນາສະນະ ບໍ່ໄດ້ເສນາສະນະກໍບໍ່ສະດຸ້ງ ຄັນໄດ້ເສນາສະນະແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່.

ຈັກເປັນຜູ້ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້ ແລະຈັກເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້ ຈັກບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງຄິລານະປັຈຈັຍເພສັຊບໍຣິຂາຣ ບໍ່ໄດ້ຄິລານະປັຈຈັຍເພສັຊບໍຣິຂາຣກໍບໍ່ສະດຸ້ງ ຄັນໄດ້ຄິລານະປັຈຈັຍເພສັຊບໍຣິຂາຣແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ບໍຣິໂພຄຢູ່. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

**ພິກຂຸທັງຫລາຍ! ເຮົາກ່າວສອນພວກເຈົ້າທັງຫລາຍຕາມແບບກັສສະປະ ຫລືຜູ້ໃດທີ່ເປັນເຊັ່ນກັສສະປະ ແລະເມື່ອພວກເຈົ້າທັງຫລາຍໄດ້ຮັບໂອວາທນີ້ແລ້ວ ຄວນປະຕິບັດເພື່ອຄວາມເປັນຢ່າງນັ້ນ ດັ່ງນີ້.**

---

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໙໘/໔໙໘*



“ເມື່ອພິກຂຸສັນໂດດດ້ວຍປັຈຈັຍອັນຫາໂທສບໍ່ໄດ້ ທັງນ້ອຍ ແລະຫາໄດ້ງ່າຍ ປຣາຣົພເສນາສະນະ ຈີວອຣ ປານະ ແລະໂພຊະນະ ຈິຕຂອງເຂົາກໍບໍ່ຄັບແຄ້ນ ບໍ່ກະທົບກະເທືອນທຸກທິສ ແລະທັມເຫລົ່າໃດອັນພິກຂຸນັ້ນກ່າວແລ້ວ ອະນຸໂລມແກ່ສະມະນະທັມ ທັມເຫລົ່ານັ້ນອັນພິກຂຸຜູ້ບໍ່ປະມາທ ມີຄວາມສັນໂດດຖືເອົາໂດຍຍິ່ງ.”

ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໖/໒໗



# ອະຣິຍະວົງສ໌ ໔ ທີ່ວິນຍູຊົນ ສັນລະເສີນວ່າເປັນເລີດ

ພິກຂຸທັງຫລາຍ! ອະຣິຍະວົງສ໌ ໔ ປະການີ້ ວິນຍູຊົນສັນລະເສີນວ່າເປັນເລີດ ມີມານານ ເປັນເຊື້ອສາຍແຫ່ງພຣະອະຣິຍະ ເປັນຂອງເກົ່າ ບໍ່ກະແຈກກະຈາຍ ບໍ່ເຄີຍກະແຈກກະຈາຍ ອັນບັນດິຕບໍ່ລັງກຽດ ຈັກບໍ່ລັງກຽດ ວິນຍູຊົນທັງສະມະນະແລະພຣາມນ໌ບໍ່ລັງກຽດ. ອະຣິຍະວົງສ໌ ໔ ປະການ ເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ສັນໂດດດ້ວຍຈີວອນຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງ

ຄວາມສັນໂດດດ້ວຍຈີວອຣຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງຈີວອຣ ບໍ່ໄດ້ຈີວອຣກໍບໍ່ສະດຸ້ງ ຄັນໄດ້ຈີວອຣແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່ ບໍ່ຍົກຕົນ ບໍ່ຂົ່ມຜູ້ອື່ນເພາະເຫຕແຫ່ງຄວາມສັນໂດດດ້ວຍຈີວອຣຕາມມີຕາມໄດ້ນັ້ນ. ຈິງຢູ່ ພິກຂຸໃດເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນການສັນໂດດດ້ວຍຈີວອຣຕາມມີຕາມໄດ້ນັ້ນ ມີສັມປະຊັນຍະ ມີສະຕິສະເພາະໜ້າ. ພິກຂຸທັງຫລາຍ ພິກຂຸນີ້ເຮົາກ່າວວ່າ ເປັນຜູ້ຕັ້ງຢູ່ໃນອະຣິຍະວົງສ໌ອັນເປັນຂອງເກົ່າ ເຊິ່ງວິນຍູຊົນສັນລະເສີນວ່າເປັນເລີດ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງບິນທະບາຕ ບໍ່ໄດ້ບິນທະບາຕກໍບໍ່ສະດຸ້ງ ຄັນໄດ້ບິນທະບາຕແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່ ບໍ່ຍົກຕົນ ບໍ່ຂົ່ມຜູ້ອື່ນເພາະເຫຕແຫ່ງຄວາມສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ນັ້ນ. ຈິງຢູ່ ພິກຂຸໃດເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນການສັນໂດດດ້ວຍບິນທະບາຕຕາມມີຕາມໄດ້ນັ້ນ ມີສັມປະຊັນຍະ ມີສະຕິ

ສະເພາະໜ້າ. ພິກຂຸທັງຫລາຍ ພິກຂຸນີ້ເຮົາກ່າວວ່າ ເປັນຜູ້ຕັ້ງຢູ່ໃນອະຣິຍະວົງສ໌ອັນເປັນຂອງເກົ່າ ເຊິ່ງວິນຍູຊົນສັນລະເສີນວ່າເປັນເລີດ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ສັນໂດດດ້ວຍເສນາສະນະຕາມມີຕາມໄດ້ ແລະເປັນຜູ້ກ່າວສັນລະເສີນຄຸນແຫ່ງຄວາມສັນໂດດດ້ວຍເສນາສະນະຕາມມີຕາມໄດ້ ບໍ່ເຖິງການສະແຫວງຫາອັນບໍ່ສົມຄວນເພາະເຫຕແຫ່ງເສນາສະນະ ບໍ່ໄດ້ເສນາສະນະກໍບໍ່ສະດຸ້ງ ຄັນໄດ້ເສນາສະນະແລ້ວ ກໍບໍ່ກຳນັດ ບໍ່ມົວເມົາ ບໍ່ຫລົງ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ໃຊ້ສອຍຢູ່ ບໍ່ຍົກຕົນ ບໍ່ຂົ່ມຜູ້ອື່ນເພາະເຫຕແຫ່ງຄວາມສັນໂດດດ້ວຍເສນາສະນະຕາມມີຕາມໄດ້ນັ້ນ. ຈິງຢູ່ ພິກຂຸໃດເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນການສັນໂດດດ້ວຍເສນາສະນະຕາມມີຕາມໄດ້ນັ້ນ ມີສັມປະຊັນຍະ ມີສະຕິສະເພາະໜ້າ. ພິກຂຸທັງຫລາຍ ພິກຂຸນີ້ເຮົາກ່າວວ່າ ເປັນຜູ້ຕັ້ງຢູ່ໃນອະຣິຍະວົງສ໌ອັນເປັນຂອງເກົ່າ ເຊິ່ງວິນຍູຊົນສັນລະເສີນວ່າເປັນເລີດ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ມີພາວະນາເປັນທີ່ມາຍິນດີ ຍິນດີແລ້ວໃນພາວະນາ ມີປະຫານະເປັນທີ່ມາຍິນດີຍິນດີແລ້ວໃນປະຫານະ ບໍ່ຍົກຕົນ ບໍ່ຂົ່ມຜູ້ອື່ນເພາະຄວາມທີ່ມີ

ພາວະນາເປັນທີ່ມາຍິນດີ ເພາະຍິນດີໃນພາວະນາ ເພາະມີປະຫານະເປັນທີ່ມາຍິນດີ ເພາະຍິນດີໃນປະຫານະນັ້ນ. ຈິງຢູ່ ພິກຂຸໃດເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນພາວະນາແລະປະຫານະນັ້ນ ມີສັມປະຊັນຍະ ມີສະຕິສະເພາະໜ້າ. ພິກຂຸທັງຫລາຍ ພິກຂຸນີ້ເຮົາກ່າວວ່າ ເປັນຜູ້ຕັ້ງຢູ່ໃນອະຣິຍະວົງສ໌ອັນເປັນຂອງເກົ່າ ເຊິ່ງວິນຍູຊົນສັນລະເສີນວ່າເປັນເລີດ.

ພິກຂຸທັງຫລາຍ! ອະຣິຍະວົງສ໌ ໔ ປະການນີ້ແລ ວິນຍູຊົນສັນລະເສີນວ່າເປັນເລີດ ມີມານານ ເປັນເຊື້ອສາຍແຫ່ງພຣະອະຣິຍະ ເປັນຂອງເກົ່າ ບໍ່ກະແຈກກະຈາຍ ບໍ່ເຄີຍກະແຈກກະຈາຍ ອັນບັນດິຕບໍ່ລັງກຽດ ຈັກບໍ່ລັງກຽດ ວິນຍູຊົນທັງສະມະນະແລະພຣາມມ໌ບໍ່ລັງກຽດ.

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍອະຣິຍະວົງສ໌ ໔ ປະການນີ້ ເຖິງແມ່ນວ່າຢູ່ໃນທິສຕາເວັນອອກ ເຂົາຍ່ອມຄອບງຳຄວາມບໍ່ຍິນດີເສຍໄດ້ ຄວາມບໍ່ຍິນດີຍ່ອມບໍ່ຄອບງຳເຂົາໄດ້.

ເຖິງແມ່ນວ່າຢູ່ໃນທິສຕາເວັນຕົກ ເຂົາຍ່ອມຄອບງຳຄວາມບໍ່ຍິນດີເສຍໄດ້ ຄວາມບໍ່ຍິນດີຍ່ອມບໍ່ຄອບງຳເຂົາໄດ້.

ເຖິງແມ່ນວ່າຢູ່ໃນທິສເໜືອ ເຂົາຍ່ອມຄອບງຳຄວາມບໍ່ຍິນດີເສຍໄດ້ ຄວາມບໍ່ຍິນດີຍ່ອມບໍ່ຄອບງຳເຂົາໄດ້.

ເຖິງແມ່ນວ່າຢູ່ໃນທິສໃຕ້ ເຂົາຍ່ອມຄອບງຳຄວາມບໍ່ຍິນດີເສຍໄດ້ ຄວາມບໍ່ຍິນດີຍ່ອມບໍ່ຄອບງຳເຂົາໄດ້.

ຂໍ້ນັ້ນເພາະເຫດໃດ?

**ເພາະເຂົາເປັນທີຣະຊົນຄອບງຳຄວາມບໍ່ຍິນດີແລະຄວາມຍິນດີໄດ້.**

ຄວາມຍິນດີຍ່ອມຄອບງຳທີຣະຊົນບໍ່ໄດ້ ຄວາມບໍ່ຍິນດີບໍ່ສາມາດຄອບງຳທີຣະຊົນ ທີຣະຊົນຍ່ອມຄອບງຳຄວາມບໍ່ຍິນດີໄດ້ ເພາະທີຣະຊົນເປັນຜູ້ຄອບງຳຄວາມບໍ່ຍິນດີ ກິເລສອັນໃດຈະມາກາງກັ້ນບຸຄຄົລຜູ້ກຳຈັດກິເລສເສຍແລ້ວ ມີປົກກະຕິລະກັມທັງປວງໄດ້ເດັດຂາດ ໃຜຈະຕິຕຽນບຸຄຄົລນັ້ນ ຜູ້ເປັນດັ່ງແທ່ງຄຳຊົມພູນຸທ ແມ່ນແຕ່ເທວະດາກໍຍັງຊື່ນຊົມ ພຣົມກໍຍັງສັນລະເສີນເຂົາ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໒໓/໒໘*



"ຄວາມບໍ່ມີໂຣຄເປັນລາພຢ່າງຍິ່ງ,
ຄວາມສັນໂດດເປັນຊັພຍ໌ຢ່າງຍິ່ງ,
ຄວາມຄຸ້ນເຄີຍເປັນຍາຕຢ່າງຍິ່ງ,
ນິພພານເປັນສຸຂຢ່າງຍິ່ງ."

ພຣະໄຕປິດົກສະບັບມະຫາຈຸລາ ໘໕/໑໖/໘໐໔



**“Bhikkhus, I do not see a single thing that is so very beneficial as contentment. Contentment is very beneficial.”**

Pamādādivagga AN 1.82–97
https://suttacentral.net/an1.82-97

# ພຣະຜູ້ມີພຣະພາຄຊົງແນະນຳໃຫ້ທ່ານພຣະມະຫາກັສສະປະຊົງຄະຫະບໍດີຈີວອຣ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເວລຸວັນ ໆລໆ ເຂຕພຣະນະຄອຣຣາຊະຄຶຫ໌ ຄັ້ງນັ້ນແລ ທ່ານພຣະມະຫາກັສສະປະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ.

ເມື່ອທ່ານພຣະມະຫາກັສສະປະນັ່ງຮຽບຮ້ອຍແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສດັ່ງນີ້ວ່າ:

ກັສສະປະ! ບັດນີ້ເຈົ້າຊະຣາແລ້ວ ຜ້າປ່ານບັງສຸກຸລເຫລົ່ານີ້ຂອງເຈົ້າໜັກ ບໍ່ໜ້ານຸ່ງຫົ່ມ ເພາະເຫຕນັ້ນແລ ເຈົ້າຈົ່ງຊົງຄະຫະບໍດີຈີວອຣ ຈົ່ງບໍຣິໂພຄໂພຊະນະທີ່ເຂົານິມົນ ແລະຈົ່ງຢູ່ໃນສຳນັກຂອງເຮົາເຖີດ.

ທ່ານພຣະມະຫາກັສສະປະກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ເປັນເວລານານມາແລ້ວທີ່ຂ້ານ້ອຍຢູ່ປ່າເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຢູ່ປ່າເປັນວັຕ, ເປັນຜູ້ທ່ຽວບິນທະບາຕເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການທ່ຽວບິນທະບາຕເປັນວັຕ, ເປັນຜູ້ຊົງຜ້າບັງສຸກຸລເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງຜ້າບັງສຸກຸລເປັນວັຕ, ເປັນຜູ້ຊົງໄຕຣຈີວອຣເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງໄຕຣຈີວອຣເປັນວັຕ, ເປັນຜູ້ມີຄວາມມັກນ້ອຍ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ມັກນ້ອຍ, ເປັນຜູ້ສັນໂດດ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ສັນໂດດ, ເປັນຜູ້ສງັດຈາກໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ສງັດຈາກໝູ່, ເປັນຜູ້ບໍ່ຄຸກຄີດ້ວຍໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ບໍ່ຄຸກຄີດ້ວຍໝູ່, ເປັນຜູ້ປຣາຣົພຄວາມພຽນ ແລະກ່າວສັນລະເສີນຄຸນແຫ່ງການປຣາຣົພຄວາມພຽນ ດັ່ງນີ້.

ພຣະຜູ້ມີພຣະພາຄຕຣັສຖາມວ່າ:

**ກັສສະປະ! ເຈົ້າມອງເຫັນອຳນາຈປະໂຍຊນ໌ອັນໃດ ຈຶ່ງເປັນຜູ້ຢູ່ປ່າເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຢູ່ປ່າເປັນວັຕຕລອດກາລະນານ, ເປັນຜູ້ທ່ຽວບິນທະບາຕເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການທ່ຽວບິນທະບາຕເປັນວັຕ, ເປັນຜູ້ຊົງຜ້າບັງສຸກຸລເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງຜ້າບັງສຸກຸລເປັນວັຕ, ເປັນຜູ້ຊົງໄຕຣຈີວອຣເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງໄຕຣຈີວອຣເປັນວັຕ, ເປັນຜູ້ມີຄວາມມັກນ້ອຍ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ມັກນ້ອຍ, ເປັນຜູ້ສັນໂດດ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ສັນໂດດ, ເປັນຜູ້ສງັດຈາກໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ສງັດຈາກໝູ່, ເປັນຜູ້ບໍ່ຄຸກຄີດ້ວຍໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມເປັນຜູ້ບໍ່ຄຸກຄີດ້ວຍໝູ່, ເປັນຜູ້ປຣາຣົພຄວາມພຽນ ແລະກ່າວສັນລະເສີນຄຸນແຫ່ງການປຣາຣົພຄວາມພຽນ ດັ່ງນີ້?**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການ ຈຶ່ງຢູ່ປ່າເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຢູ່ປ່າເປັນວັຕຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ

ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ຖືການຢູ່ປ່າເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຢູ່ປ່າເປັນວັຕຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການນີ້ແລ ຈຶ່ງຢູ່ປ່າເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຢູ່ປ່າເປັນວັຕຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການ ຈຶ່ງທ່ຽວບິນທະບາຕເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການທ່ຽວບິນທະບາຕເປັນວັຕຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ທ່ຽວບິນທະບາຕເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການທ່ຽວບິນທະບາຕເປັນວັຕຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂ

ຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການນີ້ແລ ຈຶ່ງຫົ່ງວບິນທະບາຕເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການທົ່ງວບິນທະບາຕເປັນວັຕຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການ ຈຶ່ງຊົງຜ້າບັງສຸກຸລເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງຜ້າບັງສຸກຸລເປັນວັຕຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ຊົງຜ້າບັງສຸກຸລເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງຜ້າບັງສຸກຸລເປັນວັຕຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການນີ້ແລ ຈຶ່ງຊົງຜ້າບັງສຸກຸລເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງຜ້າບັງສຸກຸລເປັນວັຕຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການ ຈຶ່ງຊົງໄຕຣຈີວອຣເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງໄຕຣຈີວອຣເປັນວັຕຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ຊົງໄຕຣຈີວອຣເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງໄຕຣຈີວອຣເປັນວັຕຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການນີ້ແລ ຈຶ່ງຊົງໄຕຣຈີວອຣເປັນວັຕ ແລະກ່າວສັນລະເສີນຄຸນແຫ່ງການຊົງໄຕຣຈີວອຣເປັນວັຕຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການ ຈຶ່ງເປັນຜູ້ມີຄວາມປາຖນານ້ອຍ ແລະກ່າວສັນລະເສີນຄຸນແຫ່ງຄວາມປາຖນານ້ອຍຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະ

ເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ມີຄວາມປາຖນານ້ອຍ ແລະກ່າວສັນລະເສີນຄຸນແຫ່ງຄວາມປາຖນານ້ອຍຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໘ ປະກາຣນີ້ແລ ຈຶ່ງເປັນຜູ້ມີຄວາມປາຖນານ້ອຍແລະກ່າວສັນລະເສີນຄຸນແຫ່ງຄວາມປາຖນານ້ອຍຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໘ ປະກາຣ ຈຶ່ງເປັນຜູ້ສັນໂດດ ແລະກ່າວສັນລະເສີນຄຸນແຫ່ງຄວາມສັນໂດດຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ສັນໂດດ ແລະກ່າວສັນລະເສີນຄຸນແຫ່ງຄວາມສັນໂດດຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດ

ກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການນີ້ແລ ຈຶ່ງເປັນຜູ້ສັນໂດດ ແລະກ່າວສັນລະເສີນຄຸນແຫ່ງຄວາມສັນໂດດຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການ ຈຶ່ງເປັນຜູ້ສງັດຈາກໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມສງັດຈາກໝູ່ຕລອດກາລະນານ ຄືພິຈາຣະນາເຫັນການຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ສງັດຈາກໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມສງັດຈາກໝູ່ຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໔ ປະການນີ້ແລ ຈຶ່ງເປັນຜູ້ສງັດຈາກໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມສງັດຈາກໝູ່ຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ៨ ປະກາຣ ຈຶ່ງເປັນຜູ້ບໍ່ຄຸກຄີດ້ວຍໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມບໍ່ຄຸກຄີດ້ວຍໝູ່ຕລອດກາລະນານ ຄືພິຈາຣະນາເຫັນກາຣຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ບໍ່ຄຸກຄີດ້ວຍໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມບໍ່ຄຸກຄີດ້ວຍໝູ່ຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ៨ ປະກາຣນີ້ແລ ຈຶ່ງເປັນຜູ້ບໍ່ຄຸກຄີດ້ວຍໝູ່ ແລະກ່າວສັນລະເສີນຄຸນແຫ່ງຄວາມບໍ່ຄຸກຄີດ້ວຍໝູ່ຕລອດກາລະນານ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ៨ ປະກາຣ ຈຶ່ງເປັນຜູ້ປຣາຣົພຄວາມພຽນ ແລະກ່າວສັນລະເສີນຄຸນແຫ່ງກາຣປຣາຣົພຄວາມພຽນຕລອດກາລະນານ ຄືພິຈາຣະນາເຫັນກາຣຢູ່ເປັນສຸຂໃນປັຈຈຸບັນ ແລະອະນຸເຄາະຊົນໃນພາຍຫລັງວ່າ ສັນໃດໜໍ ໝູ່ຊົນໃນພາຍຫລັງຈຶ່ງຈະເຖິງທິຕຖານຸຄະຕິວ່າ ໄດ້ຍິນວ່າ ພຣະພຸທທະເຈົ້າແລະພຣະ

ສາວົກຂອງພຣະພຸທທະເຈົ້າທີ່ໄດ້ມີມາແລ້ວ ທ່ານເປັນຜູ້ປຣາຣົພຄວາມພຽນ ແລະກ່າວສັນລະເສີນຄຸນແຫ່ງການປຣາຣົພຄວາມພຽນຕລອດກາລະນານ ທ່ານເຫລົ່ານັ້ນຈັກປະຕິບັຕເພື່ອຄວາມເປັນຢ່າງນັ້ນ ຂໍ້ປະຕິບັຕຂອງທ່ານເຫລົ່ານັ້ນຈັກເປັນໄປເພື່ອປະໂຍຊນ໌ ເພື່ອຄວາມສຸຂຕລອດກາລະນານ ດັ່ງນີ້. ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຂ້ານ້ອຍມອງເຫັນອຳນາຈປະໂຍຊນ໌ ໘ ປະການນີ້ແລ ຈຶ່ງເປັນຜູ້ປຣາຣົພຄວາມພຽນ ແລະກ່າວສັນລະເສີນຄຸນແຫ່ງການປຣາຣົພຄວາມພຽນຕລອດກາລະນານ.

**ສາທຸ ສາທຸ ກັສສະປະ! ເມື່ອໄດ້ຍິນວ່າ ເຈົ້າປະຕິບັຕເພື່ອປະໂຍຊນ໌ແກ່ມະຫາຊົນ ເພື່ອຄວາມສຸຂແກ່ມະຫາຊົນ ເພື່ອອະນຸເຄາະໂລກ ເພື່ອປະໂຍຊນ໌ ເພື່ອເກື້ອກູນ ເພື່ອຄວາມສຸຂແກ່ເທວະດາແລະມະນຸສທັງຫລາຍ.**

**ກັສສະປະ! ເພາະເຫຕນັ້ນ ເຈົ້າຈົ່ງຊົງຜ້າປ່ານບັງສຸກຸລ ອັນບໍ່ໜ້ານຸ່ງຫົ່ມ ຈົ່ງທ່ຽວບິນທະບາຕ ແລະຈົ່ງຢູ່ໃນປ່າເຖິດ.**

---

*ສັງຍຸຕຕະນິກາຍ ນິທານະວັຄ ໑໖/໑໙໙/໔໗໘*



# ພິກຂຸປະກອບດ້ວຍທັມ ៥ ປະການ ບໍ່ຄວນຫລີກອອກຈາກໝູ່ຢູ່ຜູ້ດຽວ

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ៥ ປະການ ບໍ່ຄວນຫລີກອອກຈາກໝູ່ຢູ່ຜູ້ດຽວ ທັມ ៥ ປະການເປັນຢ່າງໃດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ບໍ່ສັນໂດດດ້ວຍຈີວອຣຕາມມີຕາມໄດ້,**

**ເປັນຜູ້ບໍ່ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້,**

**ເປັນຜູ້ບໍ່ສັນໂດດດ້ວຍເສນາສະນະຕາມມີຕາມໄດ້,**

**ເປັນຜູ້ບໍ່ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້,**

**ເປັນຜູ້ມາກດ້ວຍຄວາມດຳຣິໃນກາມ**

*(ກາມະສັງກັປປະພະຫຸໂລ ຈະ ວິຫະຣະຕິ).*

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໕ ປະການີ້ແລ ບໍ່ຄວນຫລີກອອກຈາກໝູ່ຢູ່ຜູ້ດຽວ.

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໕ ປະການີ້ ຍ່ອມຄວນເພື່ອຫລີກອອກຈາກໝູ່ຢູ່ຜູ້ດຽວ ທັມ ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ສັນໂດດດ້ວຍຈີວອນຕາມມີຕາມໄດ້,

ເປັນຜູ້ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້,

ເປັນຜູ້ສັນໂດດດ້ວຍເສນາສະນະຕາມມີຕາມໄດ້,

ເປັນຜູ້ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂານຕາມມີຕາມໄດ້,

ເປັນຜູ້ມາກດ້ວຍຄວາມດຳຣິໃນເນກຂັມມະ

*(ເນກຂັມມະສັງກັປປະພະຫຸໂລ ຈະ ວິຫະຣະຕິ).*

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໕ ປະການີ້ແລ ຍ່ອມຄວນເພື່ອຫລີກອອກຈາກໝູ່ຢູ່ຜູ້ດຽວ.

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໕໑/໑໕໗*



# ຄວາມທຸກຂ໌ ຄວາມສຸຂຂອງສະມະນະ ៥ ປະການ

ພິກຂຸທັງຫລາຍ! ທຸກຂ໌ຂອງສະມະນະ ៥ ປະການນີ້ ៥ ປະການເປັນຢ່າງໃດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ບໍ່ສັນໂດດດ້ວຍຈີວອຣຕາມມີຕາມໄດ້,**

**ເປັນຜູ້ບໍ່ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້,**

**ເປັນຜູ້ບໍ່ສັນໂດດດ້ວຍເສນາສະນະຕາມມີຕາມໄດ້,**

**ເປັນຜູ້ບໍ່ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້,**

**ບໍ່ຍິນດີປະພຶຕພຣົມມະຈັນຍ໌.**

ພິກຂຸທັງຫລາຍ! ທຸກຂ໌ຂອງສະມະນະ ៥ ປະການນີ້ແລ

ພິກຂຸທັງຫລາຍ! ສຸຂຂອງສະມະນະ ໕ ປະການນີ້ ໕ ປະການ ເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ສັນໂດດດ້ວຍຈີວອຣຕາມມີຕາມໄດ້,

ເປັນຜູ້ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້,

ເປັນຜູ້ສັນໂດດດ້ວຍເສນາສະນະຕາມມີຕາມໄດ້,

ເປັນຜູ້ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້,

ຍິນດີປະພຶຕພຣົມມະຈັນຍ໌.

ພິກຂຸທັງຫລາຍ! ສຸຂຂອງສະມະນະ ໕ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໖໒/໑໒໗*


Quechua

# ອາສະວະທີ່ຈະລະໄດ້ເພາະການພິຈາຣະນາເສພ

ພິກຂຸທັງຫລາຍ! ກໍອາສະວະເຫລົ່າໃດ ທີ່ຈະລະໄດ້ເພາະການພິຈາຣະນາເສພ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ພິຈາຣະນາໂດຍລະອຽດແລ້ວ ເສພຈີວອຣພຽງເພື່ອກຳຈັດຄວາມໜາວ ຄວາມຮ້ອນ ການສັມຜັສແຫ່ງເຫລືອກ ຍຸງ ລົມ ແດດ ແລະສັຕເລືອຄານທັງຫລາຍ ພຽງເພື່ອປົກປິດອະວັຍວະທີ່ກໍ່ໃຫ້ເກີດຄວາມລະອາຍ.

ພິຈາຣະນາໂດຍລະອຽດແລ້ວ ເສພບິນທະບາຕ ບໍ່ແມ່ນເພື່ອຫລິ້ນ ບໍ່ແມ່ນເພື່ອມົວເມົາ ບໍ່ແມ່ນເພື່ອປະດັບ ບໍ່ແມ່ນເພື່ອຕົບແຕ່ງ ແຕ່ພຽງເພື່ອໃຫ້ກາຍນີ້ຕັ້ງຢູ່ໄດ້ ເພື່ອຊີວິຕເປັນໄປເພື່ອປ້ອງກັນຄວາມລຳບາກ ເພື່ອອະນຸເຄາະພຣົມມະຈັນຍ໌ດ້ວຍຄິດວ່າ ເຮົາຈັກກຳຈັດເວທະນາເກົ່າເສຍ ແລະບໍ່ກະທຳເວທະນາໃໝ່ໃຫ້ເກີດຂຶ້ນ ຄວາມທີ່ອາຍຸດຳເນີນໄປໄດ້ ຄວາມບໍ່ມີໂທສເພາະອາຫາຣ ແລະຄວາມຢູ່ຜາສຸກສຳຣານຈັກມີແກ່ເຮົາດັ່ງນີ້.

ພິຈາຣະນາໂດຍລະອຽດແລ້ວ ເສພເສນາສະນະ ພຽງເພື່ອກຳຈັດຄວາມຮ້ອນ ການສັມຜັສແຫ່ງເຫລືອກ ຍຸງ ລົມ ແດດ ແລະສັຕເລືອຄານທັງຫລາຍ ພຽງເພື່ອບັນເທົາອັນຕຣາຍອັນເກີດແຕ່ລະດູ ເພື່ອເປັນທີ່ສະບາຍໃນການຫລີກເຣັ້ນ.

ພິຈາຣະນາໂດຍລະອຽດແລ້ວ ເສພຄິລານະປັຈຈັຍເພສັຊບໍຣິຂາຣ ພຽງເພື່ອກຳຈັດເວທະນາອັນເກີດແຕ່ອາພາທຕ່າງໆທີ່ເກີດຂຶ້ນແລ້ວ ເພື່ອຄວາມເປັນຜູ້ບໍ່ມີອາພາທບຽດບຽນເປັນຢ່າງຍິ່ງ.

ພິກຂຸທັງຫລາຍ! ອາສະວະທັງຫລາຍແລະຄວາມຮ້ອນຮົນອັນກະທຳຄວາມຄັບແຄ້ນເຫລົ່າໃດ ຍ່ອມເກີດຂຶ້ນແກ່ພິກຂຸຜູ້

ບໍ່ພິຈາຣະນາເສພປັຈຈັຍອັນໃດອັນໜຶ່ງ ອາສະວະທັງຫລາຍ ແລະຄວາມຮ້ອນຮົນອັນກະທຳຄວາມຄັບແຄ້ນເຫລົ່ານັ້ນ ຍ່ອມບໍ່ມີແກ່ພິກຂຸນັ້ນ ຜູ້ພິຈາຣະນາເສພຢູ່ຢ່າງນີ້.

ພິກຂຸທັງຫລາຍ! ອາສະວະເຫລົ່ານີ້ ເຮົາກ່າວວ່າ ຍ່ອມລະໄດ້ເພາະການພິຈາຣະນາເສພ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໑/໑໔/໑໔*



# ພິກຂຸຜູ້ເປັນເຖຣະປະກອບດ້ວຍທັມ ៥ ປະການ ຍ່ອມເປັນຜູ້ປະຕິບັຕເພື່ອສິ່ງບໍ່ເປັນປະໂຍຊນ໌ແກ່ພະຫຸຊົນ

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເຖຣະປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ປະຕິບັຕເພື່ອສິ່ງບໍ່ເປັນປະໂຍຊນ໌ແກ່ພະຫຸຊົນ ເພື່ອຄວາມບໍ່ຜາສຸກແກ່ພະຫຸຊົນ ເພື່ອຄວາມຈິບຫາຍແກ່ພະຫຸຊົນ ເພື່ອຄວາມບໍ່ເກື້ອກູນ ເພື່ອຄວາມທຸກຂ໌ແກ່ເທວະດາແລະມະນຸສທັງຫລາຍ. ທັມ ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເຖຣະເປັນຣັຕຕັນຍູ ບວຊນານ,

ເປັນຜູ້ມີຊື່ສຽງ ມີຍົສ ມີພະຫຸຊົນເປັນບໍຣິວາຣ ປາກົຕແກ່ຄະຣືຫັສຖ໌ແລະບັນພະຊິຕ,

ເປັນຜູ້ໄດ້ຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣ,

ເປັນພະຫຸສູຕ ຊົງສຸຕະ ສັ່ງສົມສຸຕະ ເປັນຜູ້ໄດ້ຟັງຫລາຍ ຊົງຈຳໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິເຊິ່ງທັມທັງຫລາຍອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ,

**ເປັນຜູ້ມີຄວາມເຫັນຜິດ ມີຄວາມເຫັນວິປະຣິຕ** (ມິຈສາທິຕຖິໂກໂຫຕິ ວິປະຣິຕະທັສສະໂນ).

ເຂົາຍ່ອມຍັງພະຫຸຊົນໃຫ້ຫ່າງເຫີນຈາກສັທທັມ ໃຫ້ຕັ້ງຢູ່ໃນອະສັທທັມ ພະຫຸຊົນຍ່ອມຢຶດຖືທິຕຖານຸຄະຕິ *(ການດຳເນີນຕາມແບບຢ່າງທີ່ຕົນເຫັນ, ຖືເອົາຕາມ)* ຂອງເຂົາວ່າ ເຂົາເປັນພິກຂຸຜູ້ເຖຣະເປັນຣັຕຕັນຍູ ບວຊນານ ດັ່ງນີ້ແດ່,

ເຂົາເປັນພິກຂຸຜູ້ເຖຣະມີຊື່ສຽງ ມີຍົສ ມີພະຫຸຊົນເປັນບໍຣິວາຣ ປາກົຕແກ່ຄະຣືຫັສຖ໌ແລະບັນພະຊິຕ ດັ່ງນີ້ແດ່,

ເຂົາເປັນພິກຂຸຜູ້ເຖຣະໄດ້ຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣ ດັ່ງນີ້ແດ່,

ເຂົາເປັນພິກຂຸຜູ້ເຖຣະທີ່ເປັນພະຫຸສູຕ ຊົງສຸຕະ ສັ່ງສົມສຸຕະ ເປັນຜູ້ໄດ້ຟັງຫລາຍ ຊົງຈຳໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິເຊິ່ງທັມທັງຫລາຍອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ ດັ່ງນີ້ແດ່.

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເຖຣະປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມເປັນຜູ້ປະຕິບັຕເພື່ອສິ່ງບໍ່ເປັນປະໂຍຊນ໌ແກ່ພະຫຸຊົນ ເພື່ອຄວາມບໍ່ຜາສຸກແກ່ພະຫຸຊົນ ເພື່ອຄວາມຈິບຫາຍແກ່ພະຫຸຊົນ ເພື່ອຄວາມບໍ່ເກື້ອກູນ ເພື່ອຄວາມທຸກຂ໌ແກ່ເທວະດາແລະມະນຸສທັງຫລາຍ.

**ພິກຂຸທັງຫລາຍ! ພິກຂຸຜູ້ເປັນເຖຣະປະກອບດ້ວຍທັມ ໕ ປະການ ຍ່ອມເປັນຜູ້ປະຕິບັຕເພື່ອປະໂຍຊນ໌ແກ່ພະຫຸຊົນ ເພື່ອຄວາມສຸຂແກ່ພະຫຸຊົນ ເພື່ອຄວາມຈະເຣີນແກ່ພະຫຸຊົນ ເພື່ອຄວາມເກື້ອກູນ ເພື່ອຄວາມສຸຂແກ່ເທວະດາແລະມະນຸສທັງຫລາຍ. ທັມ ໕ ປະການເປັນຢ່າງໃດ?**

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເຖຣະເປັນຣັຕຕັນຍູ ບວຊນານ,

ເປັນຜູ້ມີຊື່ສຽງ ມີຍົສ ມີພະຫຸຊົນເປັນບໍຣິວານ ປາກົຕແກ່ຄະຣືຫັສຖ໌ແລະບັນພະຊິຕ,

ເປັນຜູ້ໄດ້ຈີວອນ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂານ,

ເປັນພະຫຸສູຕ ຊົງສຸຕະ ສັ່ງສົມສຸຕະ ເປັນຜູ້ໄດ້ຟັງຫລາຍ ຊົງຈຳໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິເຊິ່ງທັມທັງຫລາຍອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ,

**ເປັນຜູ້ມີຄວາມເຫັນຊອບ ມີຄວາມເຫັນບໍ່ວິປະຣິດ** (ສັມມາທິຕຖິໂກ ໂຫຕິ ອະວິປະຣິຕະທັສສະໂນ).

ເຂົາຍ່ອມຍັງພະຫຸຊົນໃຫ້ຫ່າງເຫີນຈາກອະສັທທັມ ໃຫ້ຕັ້ງຢູ່ໃນສັທທັມ ພະຫຸຊົນຍ່ອມຍຶດຖືທິຕຖານຸຄະຕິຂອງເຂົາວ່າ ເຂົາເປັນພິກຂຸຜູ້ເຖຣະເປັນຣັຕຕັນຍູ ບວຊນານ ດັ່ງນີ້ແດ່,

ເຂົາເປັນພິກຂຸຜູ້ເຖຣະມີຊື່ສຽງ ມີຍົສ ມີພະຫຸຊົນເປັນບໍຣິວາຣປາກົຕແກ່ຄະຣືຫັສຖ໌ແລະບັນພະຊິຕ ດັ່ງນີ້ແດ່,

ເຂົາເປັນພິກຂຸຜູ້ເຖຣະໄດ້ຈີວອຣ ບິນທະບາຕ ເສນາສະນະແລະຄິລານະປັຈຈັຍເພສັຊບໍຣິຂາຣ ດັ່ງນີ້ແດ່,

ເຂົາເປັນພິກຂຸຜູ້ເຖຣະທີ່ເປັນພະຫຸສູຕ ຊົງສຸຕະ ສັ່ງສົມສຸຕະເປັນຜູ້ໄດ້ຟັງຫລາຍ ຊົງຈຳໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິເຊິ່ງທັມທັງຫລາຍອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ ດັ່ງນີ້ແດ່.

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເຖຣະປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມເປັນຜູ້ປະຕິບັຕເພື່ອປະໂຍຊນ໌ແກ່ພະຫຸຊົນ

ເພື່ອຄວາມສຸຂແກ່ພະຫຸຊົນ ເພື່ອຄວາມຈະເຣີນແກ່ພະຫຸຊົນ ເພື່ອຄວາມເກື້ອກູນ ເພື່ອຄວາມສຸຂແກ່ເທວະດາແລະມະນຸສ ທັງຫລາຍ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໙໙/໗໗*



ພິກຂຸທັງຫລາຍ ເຮົາມອງບໍ່ເຫັນທັມອື່ນແມ່ນແຕ່ຢ່າງໆດຽວທີ່ເປັນເຫຕ
ໃຫ້ກຸສົລທັມທີ່ຍັງບໍ່ເກີດ ເກີດຂຶ້ນ ຫລືອະກຸສົລທັມທີ່ເກີດຂຶ້ນແລ້ວ
ຍ່ອມເສື່ອມໄປ ເໝືອນຄວາມເປັນຜູ້ມັກນ້ອຍ.

ພິກຂຸທັງຫລາຍ ເມື່ອບຸຄຄົລເປັນຜູ້ມັກນ້ອຍ ກຸສົລທັມທີ່ຍັງບໍ່ເກີດ
ຍ່ອມເກີດຂຶ້ນ ແລະອະກຸສົລທັມທີ່ເກີດຂຶ້ນແລ້ວ ຍ່ອມເສື່ອມໄປ.

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໑໐/໕໔



# ເລື່ອງພິກຂຸຊາວອັຖອາລະວີ

ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເວລຸວັນ ອັນເປັນສະຖານທີ່ພຣະຣາຊະທານເຫຍື່ອແກ່ກະແຕ ເຂຕພຣະນະຄອຣຣາຊະຄຶຫ໌ ຄັ້ງນັ້ນ ພິກຂຸທັ້ງຫລາຍຊາວອັຖອາລະວີສ້າງກຸຕິເຊິ່ງມີເຄື່ອງອຸປະກອຣອັນຕົນຂໍເຂົາມາເອງ ອັນຫາເຈົ້າຂອງບໍ່ໄດ້ ເປັນສ່ວນສະເພາະຕົນເອງ ໃຫຍ່ບໍ່ມີກໍານົດ ກຸຕິເຫລົ່ານັ້ນຈຶ່ງບໍ່ສໍາເຣັຈ ພວກເຂົາຕ້ອງມີການວິງວອນ ມີການຂໍເຂົາຢູ່ລ້ຳໄປວ່າ ທ່ານທັ້ງຫລາຍຈົ່ງໃຫ້ບຸຣຸສ ຈົ່ງໃຫ້ແຮງບຸຣຸສ ຈົ່ງໃຫ້ງົວ ຈົ່ງໃຫ້ກວຽນ ຈົ່ງໃຫ້ມີດ ຈົ່ງໃຫ້ຂວານ ຈົ່ງໃຫ້ສິ່ວ ຈົ່ງໃຫ້ສຽມ ຈົ່ງໃຫ້ເຄືອ ຈົ່ງໃຫ້ໄມ້ໄຜ່ ຈົ່ງ

ໃຫ້ຫຍ້າມຸງກະຕ່າຍ ຈຶ່ງໃຫ້ຫຍ້າປ້ອງ ຈຶ່ງໃຫ້ຫຍ້າສາມັນ ຈຶ່ງໃຫ້ດິນ ດັ່ງນີ້ເປັນຕົ້ນ. ປະຊາຊົນທີ່ຖືກບຽດບຽນດ້ວຍການວິງວອນ ດ້ວຍການຂໍ ພໍເຫັນພິກຂຸທັງຫລາຍແລ້ວກໍຫວາດຫວັ່ນແດ່ ສະດຸ້ງແດ່ ໜີໄປເສຍແດ່ ເດີນຫລີກໄປທາງອື່ນແດ່ ເມີນໜ້າແດ່ ປິດປະຕູແດ່ ແມ່ນແຕ່ພົບແມ່ງົວກໍຍັງຫລົບໜີ ສຳຄັນວ່າພວກພິກຂຸ.

ຄັ້ງນັ້ນ ທ່ານພຣະມະຫາກັສສະປະຈຳພັນສາຢູ່ໃນພຣະນະຄອຣຣາຊະຄຶຫ໌ ແລ້ວອອກເດີນທາງມຸ່ງໄປສູ່ຣັຖອາລະວີທ່ຽວຈາຣິກໄປໂດຍລຳດັບເຖິງຣັຖອາລະວີແລ້ວ ຊາບວ່າທ່ານພັກຢູ່ທີ່ອັຄຄາລະເຈດີຍ໌ໃນຣັຖອາລະວີນັ້ນ. ຄັນເວລາເຊົ້າທ່ານພຣະມະຫາກັສສະປະຄອງອັນຕະຣະວາສົກແລ້ວ ຖືບາຕແລະຈີວອຣເຂົ້າໄປບິນທະບາຕໃນຣັຖອາລະວີ ປະຊາຊົນເຫັນທ່ານພຣະມະຫາກັສສະປະແລ້ວກໍຫວາດຫວັ່ນແດ່ ສະດຸ້ງແດ່ໜີໄປເສຍແດ່ ເດີນຫລີກໄປທາງອື່ນແດ່ ເມີນໜ້າແດ່ ປິດປະຕູແດ່ ຄັນທ່ານພຣະມະຫາກັສສະປະທ່ຽວບິນທະບາຕໃນຣັຖອາລະວີ ເວລາຫລັງອາຫາຣກັບຈາກບິນທະບາຕແລ້ວ ໄດ້ຮຽກພິກຂຸທັງຫລາຍມາຖາມວ່າ:

ທ່ານທັງຫລາຍ! ເມື່ອກ່ອນຣັຖອາລະວີມີອາຫາຣສົມບູນ ຫາບິນທະບາຕໄດ້ງ່າຍ ພິກຂຸສົງຄ໌ຄອງຊີພດ້ວຍການຖືບາຕ

ສະແຫວງຫາກໍກະທຳໄດ້ງ່າຍ ມາບັດນີ້ຣັຖອາລະວີອັຕຕະຄັດອາຫານ ຫາບິນທະບາຕໄດ້ຍາກ ພິກຂຸສົງຄ໌ຈະຄອງຊີພດ້ວຍການຖືບາຕສະແຫວງຫາກໍກະທຳໄດ້ບໍ່ງ່າຍ ອັນໃດເປັນເຫຕອັນໃດເປັນປັຈຈັຍ ໃຫ້ຣັຖອາລະວີນີ້ເປັນດັ່ງນີ້ ພິກຂຸເຫລົ່ານັ້ນຈຶ່ງກາບຮຽນເຣື່ອງນັ້ນໃຫ້ທ່ານພຣະມະຫາກັສສະປະຊາບແລ້ວ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ໃນພຣະນະຄອຣຣາຊະຄຶຫ໌ຕາມພຣະພຸທທາພິຣົມຍ໌ແລ້ວ ສະເດັຈຈາຣິກໂດຍຫົນທາງອັນຈະໄປສູ່ຣັຖອາລະວີ ເມື່ອສະເດັຈຈາຣິກໂດຍລຳດັບ ໄດ້ສະເດັຈເຖິງຣັຖອາລະວີແລ້ວ ຊາບວ່າພຣະອົງຄ໌ປະທັບຢູ່ທີ່ອັຄຄາລະວະເຈດີຍ໌ໃນຣັຖອາລະວີນັ້ນ ທ່ານພຣະມະຫາກັສສະປະຈຶ່ງເຂົ້າໄປເຝົ້າ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງໄດ້ກາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສສັ່ງໃຫ້ປະຊຸມພິກຂຸສົງຄ໌ໃນເພາະເຫຕອັນເປັນເຄົ້າມູລນັ້ນ ໃນເພາະເຫຕແຣກເກີດນັ້ນແລ້ວຊົງສອບຖາມພິກຂຸຊາວຣັຖອາລະວີວ່າ:

ພິກຂຸທັງຫລາຍ! ຂ່າວວ່າ ພວກເຈົ້າທັງຫລາຍໃຫ້ສ້າງກຸຕິເຊິ່ງມີເຄື່ອງອຸປະກອຣອັນຕົນຂໍເຂົາມາເອງ ອັນຫາເຈົ້າຂອງບໍ່

ໄດ້ ເປັນສ່ວນສະເພາະຕົນເອງ ໃຫຍ່ບໍ່ມີກຳນົດ ກຸຕິເຫລົ່ານັ້ນຈຶ່ງບໍ່ສຳເຣັຈ ພວກເຈົ້າຕ້ອງມີການວິງວອນ ມີການຂໍເຂົາຢູ່ລ້ຳໄປວ່າ ທ່ານທັງຫລາຍຈົ່ງໃຫ້ບຸຣຸສ ຈົ່ງໃຫ້ແຮງບຸຣຸສ ຈົ່ງໃຫ້ງົວ ຈົ່ງໃຫ້ກວຽນ ຈົ່ງໃຫ້ມີດ ຈົ່ງໃຫ້ຂວານ ຈົ່ງໃຫ້ສິ່ວ ຈົ່ງໃຫ້ສຽມ ຈົ່ງໃຫ້ເຄືອ ຈົ່ງໃຫ້ໄມ້ໄຜ່ ຈົ່ງໃຫ້ຫຍ້າມຸງກະຕ່າຍ ຈົ່ງໃຫ້ຫຍ້າປ້ອງ ຈົ່ງໃຫ້ຫຍ້າສາມັນ ຈົ່ງໃຫ້ດິນ ດັ່ງນີ້ເປັນຕົ້ນ. ປະຊາຊົນທີ່ຖືກບຽດບຽນດ້ວຍການວິງວອນ ດ້ວຍການຂໍ ພໍເຫັນພິກຂຸທັງຫລາຍແລ້ວກໍຫວາດຫວັ່ນແດ່ ສະດຸ້ງແດ່ ໜີໄປເສຍແດ່ ເດີນຫລີກໄປທາງອື່ນແດ່ ເມີນໜ້າແດ່ ປິດປະຕູແດ່ ແມ່ນແຕ່ພົບແມ່ງົວກໍຍັງຫລົບໜີ ສຳຄັນວ່າພວກພິກຂຸ ດັ່ງນີ້ ຈິງຫລື?

ພິກຂຸເຫລົ່ານັ້ນທູລຮັບວ່າ ຈິງ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄຊົງຕິຕຽນວ່າ:

ໂມຄະບຸຣຸສທັງຫລາຍ! ການກະທຳຂອງພວກເຈົ້ານັ້ນບໍ່ເໝາະບໍ່ສົມ ບໍ່ຄວນ ບໍ່ແມ່ນກິຈຂອງສະມະນະ ໃຊ້ບໍ່ໄດ້ ບໍ່ຄວນກະທຳ ເຫຕໃດພວກເຈົ້າຈຶ່ງໄດ້ໃຫ້ສ້າງກຸຕິ ເຊິ່ງມີເຄື່ອງອຸປະກອນອັນຕົນຂໍເຂົາມາເອງ ອັນຫາເຈົ້າຂອງບໍ່ໄດ້ ເປັນສ່ວນສະເພາະຕົນເອງ ໃຫຍ່ບໍ່ມີກຳນົດ ກຸຕິເຫລົ່ານັ້ນຈຶ່ງບໍ່ສຳເຣັຈ ພວກເຈົ້າຕ້ອງມີການວິງວອນ ມີການຂໍເຂົາຢູ່ລ້ຳໄປວ່າ ທ່ານ

ທັງຫລາຍຈົ່ງໃຫ້ບຸຣຸສ ຈົ່ງໃຫ້ແຮ່ງບຸຣຸສ ຈົ່ງໃຫ້ງົວ ຈົ່ງໃຫ້ກວຽນ ຈົ່ງໃຫ້ມີດ ຈົ່ງໃຫ້ຂວານ ຈົ່ງໃຫ້ສິ່ວ ຈົ່ງໃຫ້ສຽມ ຈົ່ງໃຫ້ເຄືອ ຈົ່ງໃຫ້ໄມ້ໄຜ່ ຈົ່ງໃຫ້ຫຍ້າມຸງກະຕ່າຍ ຈົ່ງໃຫ້ຫຍ້າປ້ອງ ຈົ່ງໃຫ້ຫຍ້າສາມັນ ຈົ່ງໃຫ້ດິນ ດັ່ງນີ້ເປັນຕົ້ນ.

ໂມຄະບຸຣຸສທັງຫລາຍ! ການກະທຳຂອງພວກເຈົ້ານັ້ນ ບໍ່ເປັນໄປເພື່ອຄວາມເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ຫລືເພື່ອຄວາມເຫລື້ອມໃສຢ່າງຍິ່ງຂອງຊົນທີ່ເຫລື້ອມໃສແລ້ວ ໂດຍແທ້ແລ້ວ ການກະທຳຂອງພວກເຈົ້ານັ້ນ ເປັນໄປເພື່ອຄວາມບໍ່ເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເຫລື້ອມໃສແລ້ວ.

ເມື່ອພຣະຜູ້ມີພຣະພາຄຊົງຕິຕຽນພິກຂຸຊາວຣັຖອາລະວີໂດຍອະເນກປະຣິຍາຍດັ່ງນີ້ແລ້ວ **ຊົງຕຣັສເຖິງໂທສແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດດ ຄວາມຄຸກຄີດ້ວຍໝູ່ ຄວາມກຽດຄ້ານ ແລະຊົງຕຣັສເຖິງຄຸນແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມກຳຈັດ ອາການທີ່ໜ້າເຫລື້ອມໃສ ການບໍ່ສະສົມ ການປຣາຣົພຄວາມພຽນ ໂດຍອະເນກປະຣິຍາຍ** ຊົງສະແດງທັມມີກະຖາທີ່ສົມຄວນແກ່ເຣື່ອງນັ້ນ ທີ່ເໝາະ

ສົມແກ່ເຣື່ອງນັ້ນແກ່ພິກຂຸທັງຫລາຍ ແລ້ວຊົງຕຣັສກັບພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ຣືສີສອງພີ່ນ້ອງເຂົ້າອາສັຍແມ່ນ້ຳຄົງຄາສຳນັກຢູ່. ຄັ້ງນັ້ນ ມະນີກັນຖະນາຄະຣາຊຂຶ້ນຈາກແມ່ນ້ຳຄົງຄາ ເຂົ້າໄປຫາຣືສີຜູ້ເປັນນ້ອງ ຄັນແລ້ວວົງດ້ວຍຂະນົດ ໆ ຮອບ ແຜ່ພັງພານໃຫຍ່ຢູ່ເທິງຫົວ ເພາະຄວາມຢ້ານກົວນາຄະຣາຊນັ້ນ ຣືສີຜູ້ເປັນນ້ອງໄດ້ຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນ ຣືສີຜູ້ເປັນອ້າຍເຫັນຣືສີຜູ້ເປັນນ້ອງຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນ ຈຶ່ງໄດ້ໄຕ່ຖາມວ່າ:

ເຫຕໃດເຈົ້າຈຶ່ງຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນ?

ອ້າຍ! ມະນີກັນຖະນາຄະຣາຊຂຶ້ນຈາກແມ່ນ້ຳຄົງຄາ ເຂົ້າມາຫາຂ້ານ້ອຍໃນສະຖານທີ່ນີ້ ຄັນແລ້ວວົງຂ້ານ້ອຍດ້ວຍຂະນົດ ໆ ຮອບ ແຜ່ພັງພານໃຫຍ່ຢູ່ເທິງຫົວ ເພາະຄວາມຢ້ານກົວນາຄະຣາຊນັ້ນ ຂ້ານ້ອຍຈຶ່ງໄດ້ຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນ.

ເຈົ້າຕ້ອງການບໍ່ໃຫ້ນາຄະຣາຊນັ້ນມາຫລື?

ຂ້ານ້ອຍຕ້ອງການບໍ່ໃຫ້ນາຄະຣາຊນັ້ນມາ.

ເຈົ້າເຫັນນາຄະຣາຊນັ້ນມີອັນໃດແດ່?

ຂ້ານ້ອຍເຫັນມີແກ້ວມະນີປະດັບຢູ່ທີ່ຄໍ.

ຖ້າເຊັ່ນນັ້ນ ເຈົ້າຈົ່ງຂໍແກ້ວມະນີກັບນາຄະຣາຊນັ້ນວ່າ ທ່ານຈົ່ງໃຫ້ແກ້ວມະນີແກ່ຂ້າພະເຈົ້າ ຂ້າພະເຈົ້າຕ້ອງການແກ້ວມະນີ.

ພິກຂຸທັງຫລາຍ! ຄັນມະນີກັນຖະນາຄະຣາຊຂຶ້ນຈາກແມ່ນ້ຳຄົງຄາ ເຂົ້າໄປຫາຣືສີຜູ້ເປັນນ້ອງ ຢຸດຢູ່ໃນທີ່ຄວນສ່ວນຂ້າງໜຶ່ງແລ້ວ ຣືສີຜູ້ເປັນນ້ອງໄດ້ກ່າວຂໍແກ້ວມະນີກັບມະນີກັນຖະນາຄະຣາຊວ່າ:

ຂໍທ່ານຈົ່ງໃຫ້ແກ້ວມະນີແກ່ຂ້າພະເຈົ້າ ຂ້າພະເຈົ້າຕ້ອງການແກ້ວມະນີ.

ມະນີກັນຖະນາຄະຣາຊຣຳພຶງວ່າ ພິກຂຸຂໍແກ້ວມະນີ ພິກຂຸຕ້ອງການແກ້ວມະນີ ແລ້ວໄດ້ຟ້າວກັບໄປ.

ແມ່ນແຕ່ຄັ້ງທີ ໔ ມະນີກັນຖະນາຄະຣາຊຂຶ້ນຈາກແມ່ນ້ຳຄົງຄາ ເຂົ້າໄປຫາຣືສີຜູ້ເປັນນ້ອງ ຣືສີຜູ້ເປັນນ້ອງໄດ້ເຫັນມະນີກັນຖະນາຄະຣາຊມາແຕ່ໄກ ໄດ້ກ່າວຂໍແກ້ວມະນີກັບມະນີກັນຖະນາຄະຣາຊວ່າ:

ຂໍທ່ານຈົ່ງໃຫ້ແກ້ວມະນີແກ່ຂ້າພະເຈົ້າ ຂ້າພະເຈົ້າຕ້ອງການແກ້ວມະນີ.

ມະນີກັນຖະນາຄະຣາຊຣຳພຶງວ່າ ພິກຂຸຂໍແກ້ວມະນີ ພິກຂຸຕ້ອງການແກ້ວມະນີ ແລ້ວໄດ້ກັບໄປແຕ່ທີ່ໄກນັ້ນແລ.

ແມ່ນແຕ່ຄັ້ງທີ ໓ ມະນີກັນຖະນາຄະຣາຊກຳລັງຈະຂຶ້ນຈາກແມ່ນ້ຳຄົງຄາ ຣືສີຜູ້ເປັນນ້ອງໄດ້ເຫັນມະນີກັນຖະນາຄະຣາຊກຳລັງໂຜ່ຂຶ້ນຈາກແມ່ນ້ຳຄົງຄາ ກໍໄດ້ກ່າວຂໍແກ້ວມະນີກັບມະນີກັນຖະນາຄະຣາຊວ່າ:

ຂໍທ່ານຈົ່ງໃຫ້ແກ້ວມະນີແກ່ຂ້າພະເຈົ້າ ຂ້າພະເຈົ້າຕ້ອງການແກ້ວມະນີ.

ຂະນະນັ້ນ ມະນີກັນຖະນາຄະຣາຊໄດ້ກ່າວຕອບຣືສີຜູ້ເປັນນ້ອງດ້ວຍຄາຖາວ່າ:

ເຂົ້ານ້ຳທີ່ດີຍິ່ງມາກມາຍບັງເກີດຂຶ້ນແກ່ຂ້າພະເຈົ້າ
ເພາະເຫຕແຫ່ງແກ້ວມະນີດວງນີ້
ຂ້າພະເຈົ້າຈະໃຫ້ແກ້ວນັ້ນແກ່ທ່ານບໍ່ໄດ້ ທ່ານເປັນຄົນຂໍຫລາຍ
ຂ້າພະເຈົ້າຈັກບໍ່ມາສູ່ອາສົມຂອງທ່ານອີກແລ້ວ
ທ່ານຂໍແກ້ວມະນີຂ້າພະເຈົ້າ ກະທຳໃຫ້ຂ້າພະເຈົ້າສະດຸ້ງກົວ
ດັ່ງຄົນໜຸ່ມຖືດາບເຊິ່ງລັບດີແລ້ວດ້ວຍຫີນລັບ
ຂ້າພະເຈົ້າຈັກບໍ່ໃຫ້ແກ້ວມະນີນັ້ນແກ່ທ່ານ ທ່ານເປັນຄົນຂໍ
ຫລາຍ ຂ້າພະເຈົ້າຈັກບໍ່ມາສູ່ອາສົມຂອງທ່ານອີກແລ້ວ.

ຄັ້ງນັ້ນ ມະນີກັນຖະນາຄະຣາຊໄດ້ຫລີກໄປ ພາງຣຳພຶງວ່າ ພິກຂຸຂໍແກ້ວມະນີ ພິກຂຸຕ້ອງການແກ້ວມະນີ ໄດ້ຫລີກໄປຢ່າງນັ້ນແລ້ວ ບໍ່ກັບມາອີກ.

ພິກຂຸທັງຫລາຍ! ຕໍ່ມາ ຣືສີຜູ້ເປັນນ້ອງໄດ້ຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນຍິ່ງກວ່າເກົ່າ ເພາະບໍ່ໄດ້ເຫັນນາຄະຣາຊຜູ້ໜ້າເບິ່ງນັ້ນ ຣືສີຜູ້ເປັນອ້າຍເຫັນຣືສີຜູ້ເປັນນ້ອງຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນຍິ່ງກວ່າເກົ່າ ຈຶ່ງໄດ້ຖາມເບິ່ງວ່າ:

ເຫຕໃດເຈົ້າຈຶ່ງຊູບຜອມ ເສົ້າໝອງ ມີຜິວພັນເສົ້າໝອງ ມີຜິວເຫລືອງຂຶ້ນໆ ມີໂຕສະພັ່ງດ້ວຍເອັນຍິ່ງກວ່າເກົ່າ?

ຣືສີຜູ້ເປັນນ້ອງຕອບວ່າ:

ເພາະບໍ່ໄດ້ເຫັນນາຄະຣາຊຜູ້ໜ້າເບິ່ງນັ້ນ ຣືສີຜູ້ເປັນອ້າຍຈຶ່ງໄດ້ກ່າວກັບຣືສີຜູ້ເປັນນ້ອງດ້ວຍຄາຖາວ່າ:

ບຸຄຄົລຮູ້ວ່າສິ່ງໃດເປັນທີ່ຮັກຂອງເຂົາ ບໍ່ຄວນຂໍສິ່ງນັ້ນ
ອີກຢ່າງໜຶ່ງ ຄົນຍ່ອມເປັນທີ່ກຽດຊັງ ກໍເພາະຂໍຫລາຍ
ນາຄທີ່ຖືກພຣາມນ໌ຂໍແກ້ວມະນີຈຶ່ງບໍ່ມາໃຫ້ພຣາມນ໌ນັ້ນເຫັນອີກ
ເລີຍ.

**ພິກຂຸທັງຫລາຍ! ການວິງວອນ ການຂໍ ຍ່ອມບໍ່ເປັນທີ່ພໍໃຈຂອງສັຕດິຣັຈສານເຫລົ່ານັ້ນແລ້ວ ຈະກ່າວຫຍັງເຖິງໝູ່ສັຕທີ່ເກີດເປັນມະນຸສໜໍ.**

# ເຣື່ອງນົກຝູງໃຫຍ່

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ພິກຂຸອົງຄ໌ໜຶ່ງຢູ່ໃນໄພສົນແຫ່ງໜຶ່ງ ແຖບພູເຂົາຫິມະພານ ໃນສະຖານທີ່ບໍ່ໄກຈາກໄພສົນນັ້ນ ມີໜອງນ້ຳໃຫຍ່ ຄັ້ງນັ້ນນົກຝູງໃຫຍ່ ກາງເວັນທ່ຽວຫາອາຫາຣທີ່ໜອງນ້ຳນັ້ນ ຕອນແລງເຂົ້າອາສັຍໄພສົນນັ້ນສຳນັກຢູ່ ພິກຂຸນັ້ນຣຳຄານເພາະສຽງນົກຝູງນັ້ນ ຈຶ່ງເຂົ້າໄປຫາເຮົາ ຄັນກຣາບໄຫວ້ເຮົາແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ເຮົາໄດ້ຖາມພິກຂຸນັ້ນວ່າ:

ດູກ່ອນພິກຂຸ! ຍັງພໍທົນໄດ້ຫລື ຍັງພໍຄອງອັຕຕະພາບໃຫ້ເປັນໄປໄດ້ຫລື ເຈົ້າເດີນທາງມາດ້ວຍຄວາມລຳບາກເລັກນ້ອຍຫລື ກໍເຈົ້າມາຈາກໃສໜໍ?

ພິກຂຸນັ້ນກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຍັງພໍທົນໄດ້ຢູ່ ຍັງພໍຄອງອັຕຕະພາບໃຫ້ເປັນໄປໄດ້ຢູ່ ຂ້ານ້ອຍເດີນທາງມາດ້ວຍຄວາມລຳບາກເລັກນ້ອຍ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ມີໄພສົນໃຫຍ່ຢູ່ແຖບພູເຂົາຫິມະພານ ໃນສະຖານທີ່ບໍ່ໄກຈາກໄພສົນນັ້ນ ມີໜອງນໍ້າໃຫຍ່ ໃນເວລາກາງເວັນ ນົກຝູງໃຫຍ່ທ່ຽວຫາອາຫານທີ່ໜອງນໍ້ານັ້ນ ເວລາຕອນແລງກໍເຂົ້າອາສັຍໄພສົນນັ້ນສໍານັກຢູ່ ຂ້ານ້ອຍຖືກສຽງນົກຝູງນັ້ນຣົບກວນ ຈຶ່ງໜີມາຈາກໄພສົນນັ້ນ ພຣະອົງຄ໌ຜູ້ຈະເຣີນ.

ດູກ່ອນພິກຂຸ! ເຈົ້າຕ້ອງການບໍ່ໃຫ້ນົກຝູງນັ້ນມາຫລື?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຕ້ອງການບໍ່ໃຫ້ນົກຝູງນັ້ນມາ.

ດູກ່ອນພິກຂຸ! ຖ້າເຊັ່ນນັ້ນ ເຈົ້າຈົ່ງກັບໄປທີ່ໄພສົນນັ້ນ ເຂົ້າອາສັຍຢູ່ໃນໄພສົນນັ້ນແລ້ວ ໃນປະຖົມຍາມແຫ່ງຣາຕຣີ ຈົ່ງປະກາສ ໓ ຄັ້ງວ່າດັ່ງນີ້:

ດູກ່ອນນົກທັງຫລາຍ! ນົກທັງຫລາຍທີ່ອາສັຍຢູ່ໃນໄພສົນນີ້ມີປະມານເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ນົກທັງຫລາຍຈົ່ງໃຫ້ຂົນແກ່ເຮົານົກລະໜຶ່ງຂົນ *(ສຸນັນຕຸ ເມ ໂພນໂຕ ສະກຸນາ ຍາວະຕິກາ ອິມັສມິງ ວະນະສັນເທ ວາສັງ ອຸປະຄະຕາ ປັຕເຕນະ ເມ ອັຕໂຖ ເອເກກັງ ເມ ໂພນໂຕ ປັຕຕັງ ທະທັນຕູຕິ).*

ໃນມັຊຊິມະຍາມແຫ່ງຣາຕຣີ ກໍຈຶ່ງປະກາສ ໓ ຄັ້ງວ່າດັ່ງນີ້:

ດູກ່ອນນົກທັງຫລາຍ! ນົກທັງຫລາຍທີ່ອາສັຍຢູ່ໃນໄພສົນນີ້ມີປະມານເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ນົກທັງຫລາຍຈົ່ງໃຫ້ຂົນແກ່ເຮົານົກລະໜຶ່ງຂົນ.

ໃນປັຈສິມະຍາມແຫ່ງຣາຕຣີ ກໍຈຶ່ງປະກາສ ໓ ຄັ້ງວ່າດັ່ງນີ້:

ດູກ່ອນນົກທັງຫລາຍ! ນົກທັງຫລາຍທີ່ອາສັຍຢູ່ໃນໄພສົນນີ້ມີປະມານເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ນົກທັງຫລາຍຈົ່ງໃຫ້ຂົນແກ່ເຮົານົກລະໜຶ່ງຂົນ.

ພິກຂຸນັ້ນຈຶ່ງກັບໄປທີ່ໄພສົນນັ້ນ ເຂົ້າອາສັຍຢູ່ໃນໄພສົນນັ້ນແລ້ວ ໃນປະຖົມຍາມແຫ່ງຣາຕຣີ ກໍປະກາສ ໓ ຄັ້ງວ່າ:

ດູກ່ອນນົກທັງຫລາຍ! ນົກທັງຫລາຍທີ່ອາສັຍຢູ່ໃນໄພສົນນີ້ມີປະມານເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ນົກທັງຫລາຍຈົ່ງໃຫ້ຂົນແກ່ເຮົານົກລະໜຶ່ງຂົນ.

ໃນມັຊຊິມະຍາມແຫ່ງຣາຕຣີ ກໍປະກາສ ໓ ຄັ້ງວ່າ:

ດູກ່ອນນົກທັງຫລາຍ! ນົກທັງຫລາຍທີ່ອາສັຍຢູ່ໃນໄພສົນນີ້ມີປະມານເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ນົກທັງຫລາຍຈົ່ງໃຫ້ຂົນແກ່ເຮົານົກລະໜຶ່ງຂົນ.

ໃນປັຈສິມະຍາມແຫ່ງຣາຕຣີ ກໍປະກາສ ໓ ຄັ້ງວ່າ:

ດູກ່ອນນົກທັງຫລາຍ! ນົກທັງຫລາຍທີ່ອາສັຍຢູ່ໃນໄພສົນນີ້ມີປະມານເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ນົກທັງຫລາຍຈົ່ງໃຫ້ຂົນແກ່ເຮົານົກລະໜຶ່ງຂົນ.

ຄັນນົກຝູງນັ້ນຊາບວ່າ ພິກຂຸຂໍຂົນ ພິກຂຸຕ້ອງການຂົນ ດັ່ງນີ້ ກໍໄດ້ຫລີກໄປຈາກໄພສົນນັ້ນ ໄດ້ຫລີກໄປຢ່າງນັ້ນແລ້ວ ບໍ່ກັບມາອີກ.

**ພິກຂຸທັງຫລາຍ! ຂຶ້ນຊື່ວ່າ ການອິງວອນ ການຂໍ ຍ່ອມບໍ່ເປັນທີ່ພໍໃຈຂອງສັຕດິຣັຈສານເຫລົ່ານັ້ນແລ້ວ ຈະກ່າວຫຍັງເຖິງໝູ່ສັຕທີ່ເກີດເປັນມະນຸສໜໍ.**

# ເຣື່ອງຣັຕຖະປາລະກຸລະບຸຕ

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ບິດາຂອງຣັຕຖະປາລະກຸລະບຸຕໄດ້ກ່າວຖາມຣັຕຖະປາລະກຸລະບຸຕດ້ວຍຄາຖາວ່າ:

ຣັຕຖະປາລະ! ເອີ ກໍຄົນເປັນຈຳນວນຫລາຍທີ່ພາກັນມາຂໍເຮົາ
ເຮົາກໍບໍ່ຮູ້ຈັກເຂົາ ເຫຕໃດເຈົ້າຈຶ່ງບໍ່ຂໍເຮົາ?

ຣັຕຖະປາລະກຸລະບຸຕໄດ້ກ່າວຕອບບິດາດ້ວຍຄາຖາວ່າ:
ຄົນຜູ້ຂໍ ຍ່ອມບໍ່ເປັນທີ່ຮັກຂອງຜູ້ຖືກຂໍ
ຝ່າຍຄົນຜູ້ຖືກຂໍ ເມື່ອບໍ່ໃຫ້ ກໍຍ່ອມບໍ່ເປັນທີ່ຮັກຂອງຜູ້ຂໍ
ເພາະສະນັ້ນ ຂ້ານ້ອຍຈຶ່ງບໍ່ຂໍທ່ານ
ຂໍຢ່າໃຫ້ຂ້ານ້ອຍເປັນທີ່ກຽດຊັງຂອງທ່ານເລີຍ.

ພິກຂຸທັງຫລາຍ! ຣັຕຖະປາລະກຸລະບຸຕນັ້ນຍັງໄດ້ກ່າວຕອບຢ່າງນີ້ກັບບິດາຂອງຕົນແລ້ວ ຈະກ່າວຫຍັງເຖິງຄົນອື່ນຕໍ່ຄົນອື່ນໜໍ.

ພິກຂຸທັງຫລາຍ! ໂພຄະສົມບັຕຂອງຄະຣືຫັສຖ໌ຣວບຣວມໄດ້ຍາກ ແມ່ນແຕ່ໄດ້ມາແລ້ວກໍຍັງຍາກທີ່ຈະຕາມຮັກສາ.

ໂມຄະບຸຣຸສທັງຫລາຍ! ເມື່ອໂພຄະສົມບັດນັ້ນອັນພວກຄະຣີຫັສຖ໌ຮວບຮວມໄດ້ຍາກ ແມ່ນແຕ່ເຂົາໄດ້ມາແລ້ວກໍຍັງຍາກທີ່ຈະຕາມຮັກສາຢ່າງນີ້ ພວກເຈົ້າໄດ້ມີການວິງວອນ ມີການຂໍເຂົາຫລາຍຄັ້ງ ຫລາຍຄາວແລ້ວວ່າ ຂໍທ່ານທັງຫລາຍຈົ່ງໃຫ້ບຸຣຸສ ຈົ່ງໃຫ້ແຮງບຸຣຸສ ຈົ່ງໃຫ້ງົວ ຈົ່ງໃຫ້ກວຽນ ຈົ່ງໃຫ້ມີດ ຈົ່ງໃຫ້ຂວານ ຈົ່ງໃຫ້ສິ່ວ ຈົ່ງໃຫ້ສຽມ ຈົ່ງໃຫ້ເຊືອ ຈົ່ງໃຫ້ໄມ້ໄຜ່ ຈົ່ງໃຫ້ຫຍ້າມຸງກະຕ່າຍ ຈົ່ງໃຫ້ຫຍ້າປ້ອງ ຈົ່ງໃຫ້ຫຍ້າສາມັນ ຈົ່ງໃຫ້ດິນ ດັ່ງນີ້ເປັນຕົ້ນ.

ໂມຄະບຸຣຸສທັງຫລາຍ! ການກະທຳຂອງພວກເຈົ້ານັ້ນ ບໍ່ເປັນໄປເພື່ອຄວາມເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ຫລືເພື່ອຄວາມເຫລື້ອມໃສຢ່າງຍິ່ງຂອງຊົນທີ່ເຫລື້ອມໃສແລ້ວ ໂດຍແທ້ແລ້ວ ການກະທຳຂອງພວກເຈົ້ານັ້ນ ເປັນໄປເພື່ອຄວາມບໍ່ເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເຫລື້ອມໃສແລ້ວ.

ເມື່ອພຣະຜູ້ມີພຣະພາຄຊົງຕິຕຽນພິກຂຸຊາວຣັຖອາລະວີໂດຍອະເນກປະຣິຍາຍດັ່ງນີ້ແລ້ວ **ຊົງຕຣັສເຖິງໂທສແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບຳຣຸງຍາກ ຄວາມເປັນຄົນມັກມາກ ຄວາມເປັນຄົນບໍ່ສັນໂດດ ຄວາມຄຸກຄີດ້ວຍໝູ່ ຄວາມກຽດຄ້ານ ແລະຊົງຕຣັສເຖິງຄຸນແຫ່ງຄວາມເປັນຄົນລ້ຽງ**

**ງ່າຍ ຄວາມເປັນຄົນບຳຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມກຳຈັດ ອາການທີ່ໜ້າເຫລື້ອມໃສ ການບໍ່ສະສົມ ການປຣາຣົພຄວາມພຽນ ໂດຍອະເນກປະຣິຍາຍ** ຊົງສະແດງທັມມິກະຖາທີ່ສົມຄວນແກ່ເຣື່ອງນັ້ນ ທີ່ເໝາະສົມແກ່ເຣື່ອງນັ້ນແກ່ພິກຂຸທັງຫລາຍ ແລ້ວຕຣັສສັ່ງກັບພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ ເຮົາຈັກບັນຍັຕສິກຂາບົທແກ່ພວກເຈົ້າທັງຫລາຍ ໂດຍອາສັຍອຳນາຈປະໂຍຊນ໌ ໑໐ ປະການຄື:

ເພື່ອຄວາມຮັບວ່າດີແຫ່ງສົງຄ໌,
ເພື່ອຄວາມສຳຣານແຫ່ງສົງຄ໌,
ເພື່ອຂົ່ມບຸຄຄົລຜູ້ວ່າຍາກ,
ເພື່ອຄວາມຢູ່ສຳຣານແຫ່ງພິກຂຸຜູ້ມີສີລເປັນທີ່ຮັກ,
ເພື່ອປ້ອງກັນອາສະວະທັງຫລາຍອັນຈະເກີດໃນປັຈຈຸບັນ,
ເພື່ອກຳຈັດອາສະວະທັງຫລາຍອັນຈະເກີດໃນອະນາຄົຕ,
ເພື່ອຄວາມເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ,
ເພື່ອຄວາມເຫລື້ອມໃສຢ່າງຍິ່ງຂອງຊົນທີ່ເຫລື້ອມໃສແລ້ວ,
ເພື່ອຄວາມຕັ້ງໝັ້ນແຫ່ງພຣະສັທທັມ,
ເພື່ອຖືຕາມວິນັຍ.

ພິກຂຸທັງຫລາຍ! ກໍແລ ພວກເຈົ້າທັງຫລາຍຈົ່ງຍົກສິກຂາບົທນີ້ ຂຶ້ນສະແດງຢ່າງນີ້ ວ່າດັ່ງນີ້:

**ອີກຢ່າງໜຶ່ງ ພິກຂຸຜູ້ທີ່ຈະສ້າງກຸຕິອັນຫາເຈົ້າຂອງບໍ່ໄດ້ ສະເພາະຕົນເອງ ດ້ວຍອາການຂໍເອົາເອງ ຄວນສ້າງໃຫ້ໄດ້ ປະມານ ປະມານໃນການສ້າງກຸຕິນັ້ນມີດັ່ງນີ້ ໂດຍຍາວ ໑໒ ຄືບ, ໂດຍກວ້າງ ໗ ຄືບ ໂດຍຄືບພຣະສຸຄົຕ ຈົ່ງນຳພິກຂຸ ທັງຫລາຍໄປສະແດງທີ່ອັນບໍ່ມີຜູ້ຈ່ອງໄວ້ ອັນມີຊານຮອບ ຫາກພິກຂຸສ້າງກຸຕິໂດຍອາການຂໍເອົາເອງໃນບ່ອນທີ່ມີເຈົ້າຂອງ ຈ່ອງໄວ້ ອັນຫາຊານຮອບບໍ່ໄດ້ ຫລືບໍ່ນຳພິກຂຸທັງຫລາຍໄປ ເພື່ອສະແດງທີ່ ຫລືສ້າງໃຫ້ລ່ວງປະມານ ເປັນສັງຄາທິເສສ.**

---

*ວິນັຍປິດົກ ມະຫາວິພັງຄ໌ ພາຄ ໑ ເຫລັ້ມທີ ໑/໕໒໘-໕໓໐/໔໙໔-໔໐໐*



# ພິກຂຸປະກອບດ້ວຍທັມ ໗ ປະການ ຍ່ອມຫວັງໄດ້ຄວາມເສື່ອມໃນກຸສົລທັມທັງຫລາຍຢ່າງດຽວ ບໍ່ຫວັງໄດ້ຄວາມຈະເຣີນເລີຍ ຕລອດຄືນຫລືວັນທີ່ຜ່ານໄປ

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໗ ປະການ ຍ່ອມຫວັງໄດ້ຄວາມເສື່ອມໃນກຸສົລທັມທັງຫລາຍຢ່າງດຽວ ບໍ່ຫວັງໄດ້ຄວາມຈະເຣີນເລີຍ ຕລອດຄືນຫລືວັນທີ່ຜ່ານໄປ. ທັມ ໗ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມັກມາກ, ມີຄວາມຄັບແຄ້ນໃຈ, **ບໍ່ສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້** *(ອິທະ ພິກຂະເວ ພິກຂຸ ມະຫິຈໂສ ໂຫຕິ ວິຄາຕະວາ ອະສັນຕຸຕໂຖ ອິຕະຣິຕະຣະຈີວະຣະປິນຕະປາຕະເສນາສະນະຄິລານະປັຈຈະຍະເພສັຊຊະປະຣິກຂາເຣນະ)*,

ເປັນຜູ້ບໍ່ມີສັທທາ *(ອະສັທໂທ ໂຫຕິ)*,

ເປັນຜູ້ທຸສີລ *(ທຸສສີໂລ ໂຫຕິ)*,

ເປັນຜູ້ກຽດຄ້ານ *(ກຸສີໂຕ ໂຫຕິ)*,

ເປັນຜູ້ມີສະຕິຫລົງລືມ *(ມຸຕຖັສສະຕິ ໂຫຕິ)*,

ເປັນຜູ້ມີປັນຍາຊາມ *(ທຸປປັນໂຍ ໂຫຕິ)*.

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໕ ປະການນີ້ແລ ຍ່ອມຫວັງໄດ້ຄວາມເສື່ອມໃນກຸສົລທັມທັງຫລາຍຢ່າງດຽວ ບໍ່ຫວັງໄດ້ຄວາມຈະເຣີນເລີຍ ຕລອດຄືນຫລືວັນທີ່ຜ່ານໄປ.

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໕ ປະການ ຍ່ອມຫວັງໄດ້ຄວາມຈະເຣີນໃນກຸສົລທັມທັງຫລາຍຢ່າງດຽວ ບໍ່ຫວັງໄດ້ຄວາມເສື່ອມເລີຍ ຕລອດຄືນຫລືວັນທີ່ຜ່ານໄປ. ທັມ ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ບໍ່ມັກມາກ, ບໍ່ມີຄວາມຄັບແຄ້ນໃຈ, **ສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້** *(ອິທະ ພິກຂະເວ ພິກຂຸ ນະ ມະຫິຈໂສ ໂຫຕິ ນະ ວິຄາຕະວາ ສັນຕຸຕໂຖ ອິຕະຣິຕະຣະຈີວະຣະປິນຕະປາຕະເສນາສະນະຄິລານະປັຈຈະຍະເພສັຊຊະປະຣິກຂາເຣນະ)*,

ເປັນຜູ້ມີສັທທາ *(ສັທໂທ ໂຫຕິ)*,

ເປັນຜູ້ມີສີລ *(ສີລະວາ ໂຫຕິ)*,

ເປັນຜູ້ປຣາຣົພຄວາມພຽນ *(ອາຣັທທະວິຣິໂຍ ໂຫຕິ)*,

ເປັນຜູ້ມີສະຕິ *(ສະຕິມາ ໂຫຕິ)*,

ເປັນຜູ້ມີປັນຍາ *(ປັນຍະວາ ໂຫຕິ)*.

ພິກຂຸທັງຫລາຍ! ພິກຂຸປະກອບດ້ວຍທັມ ໖ ປະການນີ້ແລ ຍ່ອມຫວັງໄດ້ຄວາມຈະເຣີນໃນກຸສົລທັມທັງຫລາຍຢ່າງດຽວ ບໍ່ຫວັງໄດ້ຄວາມເສື່ອມເລີຍ ຕລອດຄືນຫລືວັນທີ່ຜ່ານໄປ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/ໝຖາ/໖໕໕*



ພິກຂຸທັງຫລາຍ ເຮົາອະນຸຍາຕຄະຫະບໍດີ
ຈີວອຣ ອົງຄ໌ໃດປາຖນາຜ້າບັງສຸກຸລ ກໍຈົ່ງຖື
ຜ້າບັງສຸກຸລ ອົງຄ໌ໃດປາຖນາຄະຫະບໍດີ
ຈີວອຣ ກໍຈົ່ງຍິນດີຄະຫະບໍດີຈີວອຣ,
ແຕ່ເຮົາສັນລະເສີນການຍິນດີດ້ວຍປັຈຈັຍ
ຕາມມີຕາມໄດ້.

ວິນັຍປິດົກ ມະຫາວັຄ ພາຄ ໔ ເຫລັ້ມ ໕/໑໔ກ/໑໙໕

# ພຣະຜູ້ມີພຣະພາຄຊົງສັນລະເສີນການຍິນດີດ້ວຍປັຈຈັຍຕາມມີຕາມໄດ້

ກໍໂດຍສມັຍນັ້ນ ພຣະກາຍຂອງພຣະຜູ້ມີພຣະພາຄໝັກໝົມດ້ວຍສິ່ງອັນເປັນໂທສ ພຣະຜູ້ມີພຣະພາຄຈຶ່ງຕຣັສສັ່ງກັບທ່ານພຣະອານົນທ໌ວ່າ:

ອານົນທ໌! ກາຍຂອງຕະຖາຄົຕໝັກໝົມດ້ວຍສິ່ງອັນເປັນໂທສ ຕະຖາຄົຕຕ້ອງການສັນຍາຖ່າຍ.

ຄັ້ງນັ້ນ ທ່ານພຣະອານົນທ໌ເດີນໄປຫາຊີວົກໂກມາຣະພັຈຈ໌ ຄັນເຖິງແລ້ວໄດ້ກ່າວກັບຊີວົກໂກມາຣະພັຈຈ໌ວ່າ:

ທ່ານຊີວົກ! ພຣະກາຍຂອງພຣະຜູ້ມີພຣະພາຄໝັກໝົມດ້ວຍສິ່ງອັນເປັນໂທສ ພຣະຕະຖາຄົຕຕ້ອງການສະເຫວີຍພຣະໂອສົຖຖ່າຍ.

ຊີວົກໂກມາຣະພັຈຈ໌ກ່າວວ່າ:

ຂ້າແຕ່ທ່ານຜູ້ຈະເຣີນ! ຖ້າຢ່າງນັ້ນ ຂໍທ່ານຈົ່ງໂປດກະທຳພຣະກາຍຂອງພຣະຜູ້ມີພຣະພາຄໃຫ້ຊຸ່ມຊື່ນຈັກ ໒-໓ ວັນ.

ຄັ້ງນັ້ນ ທ່ານພຣະອານົນທ໌ໄດ້ກະທຳພຣະກາຍຂອງພຣະຜູ້ມີພຣະພາຄໃຫ້ຊຸ່ມຊື່ນ ໒-໓ ວັນແລ້ວ ເດີນໄປຫາຊີວົກໂກມາຣະພັຈຈ໌ ຄັນເຖິງແລ້ວໄດ້ກ່າວກັບຊີວົກໂກມາຣະພັຈຈ໌ວ່າ:

ທ່ານຊີວົກ! ພຣະກາຍຂອງພຣະຜູ້ມີພຣະພາຄຊຸ່ມຊື່ນແລ້ວ ບັດນີ້ ທ່ານຈົ່ງຮູ້ກາລອັນຄວນເຖີດ.

ຄັ້ງນັ້ນ ຊີວົກໂກມາຣະພັຈຈ໌ໄດ້ມີຄວາມປະຣິວິຕົກດັ່ງນີ້ວ່າ: ການທີ່ເຮົາຈະທູລຖວາຍພຣະໂອສົຖຖ່າຍທີ່ຫຍາບແກ່ພຣະຜູ້

ມີພຣະພາຄນັ້ນບໍ່ສົມຄວນເລີຍ ຖ້າເຊັ່ນນັ້ນເຮົາຄວນອົບກ້ານອຸບົນ ៥ ກ້ານດ້ວຍຢາຕ່າງໆ ແລ້ວທູລຖວາຍພຣະຕະຖາຄົຕ ຄັນແລ້ວໄດ້ອົບກ້ານອຸບົນ ៥ ກ້ານດ້ວຍຢາຕ່າງໆ ແລ້ວເຂົ້າເຝົ້າພຣະຜູ້ມີພຣະພາຄ ຄັນແລ້ວໄດ້ທູລຖວາຍກ້ານອຸບົນກ້ານທີໜຶ່ງແດ່ພຣະຜູ້ມີພຣະພາຄ ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຈົ່ງຊົງສູບກ້ານອຸບົນກ້ານທີ ໑ ນີ້ ການສູບກ້ານອຸບົນນີ້ຈັກກະທຳໃຫ້ພຣະຜູ້ມີພຣະພາຄຖ່າຍເຖິງ ໑໐ ຄັ້ງ.

ແລ້ວໄດ້ທູລຖວາຍກ້ານອຸບົນກ້ານທີ ໔ ແດ່ພຣະຜູ້ມີພຣະພາຄ ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຈົ່ງຊົງສູບກ້ານອຸບົນກ້ານທີ ໔ ນີ້ ການສູບກ້ານອຸບົນນີ້ຈັກກະທຳໃຫ້ພຣະຜູ້ມີພຣະພາຄຖ່າຍເຖິງ ໑໐ ຄັ້ງ.

ແລ້ວໄດ້ທູລຖວາຍກ້ານອຸບົນກ້ານທີ ៥ ແດ່ພຣະຜູ້ມີພຣະພາຄ ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຈົ່ງຊົງສູບກ້ານອຸບົນກ້ານທີ ໑ ນີ້ ການສູບກ້ານອຸບົນນີ້ຈັກກະທຳໃຫ້ພຣະຜູ້ມີພຣະພາຄຖ່າຍເຖິງ ໑໐ ຄັ້ງ.

ດ້ວຍວິທີນີ້ ພຣະຜູ້ມີພຣະພາຄຈັກຊົງຖ່າຍເຖິງ ໑໐ ຄັ້ງ.

ຄັນຊີວົກໂກມາຣະພັຈຈ໌ທູລຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະພາຄເພື່ອຖ່າຍຄົບ ໑໐ ຄັ້ງແລ້ວ ຖວາຍບັງຄົມພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວກັບໄປ. ຂະນະທີ່ຊີວົກໂກມາຣະພັຈຈ໌ເດີນອອກໄປນອກຊຸ້ມປະຕູແລ້ວ ໄດ້ມີຄວາມປະຣິວິຕົກຢ່າງນີ້ວ່າ ເຮົາທູລຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະພາຄເພື່ອຖ່າຍຄົບ ໑໐ ຄັ້ງ ພຣະກາຍຂອງພຣະຕະຖາຄົຕໝັກໝົມດ້ວຍສິ່ງອັນເປັນໂທສ ຈັກບໍ່ກະທຳໃຫ້ພຣະຜູ້ມີພຣະພາຄຖ່າຍຄົບ ໑໐ ຄັ້ງ ຈັກຖ່າຍພຽງ ໒໙ ຄັ້ງ ແຕ່ພຣະຜູ້ມີພຣະພາຄຊົງຖ່າຍແລ້ວຈັກສົງພຣະກາຍ ຄັນສົງພຣະກາຍແລ້ວ ຈັກຖ່າຍອີກຄັ້ງໜຶ່ງ ຢ່າງນີ້ ພຣະຜູ້ມີພຣະພາຄຈັກຊົງຖ່າຍຄົບ ໑໐ ຄັ້ງ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງຊາບຄວາມປະຣິວິຕົກແຫ່ງຈິຕຂອງຊີວົກໂກມາຣພັຈຈ໌ດ້ວຍພຣະທັຍແລ້ວ ຕຣັສສັ່ງກັບພຣະອານົນທ໌ວ່າ:

ອານົນທ໌! ຊີວົກໂກມາຣະພັຈຈ໌ກຳລັງເດີນອອກນອກຊຸ້ມປະຕູວິຫາຣນີ້ໄດ້ມີຄວາມປະຣິວິຕົກຢ່າງນີ້ວ່າ ເຮົາທູລຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະພາຄເພື່ອຖ່າຍຄົບ ໓໐ ຄັ້ງ ພຣະກາຍຂອງພຣະຕະຖາຄົຕໝັກໝົມດ້ວຍສິ່ງອັນເປັນໂທສ ຈັກບໍ່ກະທຳໃຫ້ພຣະຜູ້ມີພຣະພາຄຖ່າຍຄົບ ໓໐ ຄັ້ງ ຈັກຖ່າຍພຽງ ໒໙ ຄັ້ງ ແຕ່ພຣະຜູ້ມີພຣະພາຄຊົງຖ່າຍແລ້ວຈັກສົງພຣະກາຍຄັນສົງພຣະກາຍແລ້ວ ຈັກຖ່າຍອີກຄັ້ງໜຶ່ງ ຢ່າງນີ້ ພຣະຜູ້ມີພຣະພາຄຈັກຊົງຖ່າຍຄົບ ໓໐ ຄັ້ງ. ອານົນທ໌ ຖ້າຢ່າງນັ້ນເຈົ້າຈົ່ງຈັດກຽມນ້ຳຮ້ອນໄວ້.

ທ່ານພຣະອານົນທ໌ທູລຮັບສະໜອງພຣະຜູ້ມີພຣະພາຄແລ້ວຈັດກຽມນ້ຳຮ້ອນໄວ້ຖວາຍຕໍ່ມາ.

ຊີວົກໂກມາຣະພັຈຈ໌ໄປໃນພຸທທະສຳນັກ ຄັນເຖິງແລ້ວຖວາຍບັງຄົມພຣະຜູ້ມີພຣະພາຄ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະຜູ້ມີພຣະພາຄຊົງຖ່າຍແລ້ວຫລື?

ເຮົາຖ່າຍແລ້ວ ຊີວົກ!

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍກຳລັງເດີນອອກນອກຊຸ້ມປະຕູວິຫານນີ້ໄດ້ມີຄວາມປະຣິວິຕົກຢ່າງນີ້ວ່າ ເຮົາທູລຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະພາຄເພື່ອຖ່າຍຄົບ ໓໐ ຄັ້ງ ພຣະກາຍຂອງພຣະຕະຖາຄົຕໝັກໝົມດ້ວຍສິ່ງອັນເປັນໂທສ ຈັກບໍ່ກະທຳໃຫ້ພຣະຜູ້ມີພຣະພາຄຖ່າຍຄົບ ໓໐ ຄັ້ງ ຈັກຖ່າຍພຽງ ໒໙ ຄັ້ງ ແຕ່ພຣະຜູ້ມີພຣະພາຄຊົງຖ່າຍແລ້ວຈັກສົງພຣະກາຍ ຄັນສົງພຣະກາຍແລ້ວ ຈັກຖ່າຍອີກຄັ້ງໜຶ່ງ ຢ່າງນີ້ ພຣະຜູ້ມີພຣະພາຄຈັກຊົງຖ່າຍຄົບ ໓໐ ຄັ້ງ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຈົ່ງໂປດສົງພຣະກາຍ ຂໍພຣະສຸຄົຕຈົ່ງໂປດສົງພຣະກາຍ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງສົງນ້ຳອຸ່ນ ຄັນສົງແລ້ວ ຊົງຖ່າຍອີກຄັ້ງໜຶ່ງ ຢ່າງນີ້ ພຣະຜູ້ມີພຣະພາຄກໍໄດ້ຖ່າຍຄົບ ໓໐ ຄັ້ງ.

ລຳດັບນັ້ນແລ ຊີວົກໂກມາຣະພັຈຈ໌ທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະຜູ້ມີພຣະພາຄບໍ່ຄວນສະເຫວີຍພຣະກະຍາຫານທີ່ປຸງດ້ວຍນ້ຳຕົ້ມຜັກຕ່າງໆ ຈົນກ່ວາ

ຈະມີພຣະກາຍເປັນປົກກະຕິ. ຕໍ່ມາບໍ່ນານເທົ່າໃດ ພຣະກາຍຂອງພຣະຜູ້ມີພຣະພາຄກໍໄດ້ເປັນປົກກະຕິ.

ຄັ້ງນັ້ນ ຊີວົກໂກມາຣະພັຈຈ໌ຖືຜ້າສີໄວຍະກະຄູ່ນັ້ນໄປໃນສຳນັກຂອງພຣະຜູ້ມີພຣະພາຄ ຄັນເຖິງແລ້ວ ຖວາຍບັງຄົມພຣະຜູ້ມີພຣະພາຄ ແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຊີວົກໂກມາຣະພັຈຈ໌ນັ່ງຮຽບຮ້ອຍແລ້ວ ໄດ້ກຣາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈະຂໍພອນຕໍ່ພຣະຜູ້ມີພຣະພາຄຈັກຢ່າງໜຶ່ງ.

ພຣະຜູ້ມີພຣະພາຄຕຣັສວ່າ:

ພຣະຕະຖາຄົຕທັງຫລາຍເລີກໃຫ້ພອນເສຍແລ້ວ ຊີວົກ!
ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຂໍພອນທີ່ສົມຄວນແລະບໍ່ມີໂທສ.

ຈົ່ງວ່າມາເຖີດ ຊີວົກ!

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະຜູ້ມີພຣະພາຄແລະພຣະພິກຂຸສົງຄ໌ຖືຜ້າບັງສຸກຸລເປັນປົກກະຕິຢູ່ ຜ້າສີໄວຍະກະຂອງຂ້ານ້ອຍຄູ່ນີ້ ພຣະເຈົ້າປັຊໂຊຕຊົງສົ່ງມາພຣະຣາຊະທານ ເປັນຜ້າເນື້ອດີເລີດ ປະເສີດ ມີຊື່ສຽງເດັ່ນດັງ ແລະເປັນຍັງມກວ່າຜ້າທັງຫລາຍ ຕັ້ງຫລາຍຄູ່ ຕັ້ງຫລາຍຮ້ອຍຄູ່ ຫລາຍພັນຄູ່ ຫລາຍແສນຄູ່ ຂໍພຣະຜູ້ມີພຣະພາຄຈົ່ງຊົງພຣະກະຣຸນາໂປດຮັບຜ້າຄູ່ສີໄວຍະກະຂອງຂ້ານ້ອຍດ້ວຍ ແລະຂໍຈົ່ງຊົງພຣະພຸທທານຸຍາຕຄະຫະບໍດີຈີວອຣແກ່ພຣະສົງຄ໌ດ້ວຍເຖີດ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄຊົງຮັບຜ້າຄູ່ສີໄວຍະກະແລ້ວ ຄັນແລ້ວຊົງຊີ້ແຈງໃຫ້ຊີວົກໂກມາຣະພັຈຈ໌ເຫັນແຈ້ງ ສະມາທານ ອາດຫານຣ່າເຣີງດ້ວຍທັມມີກະຖາ ຄັນຊີວົກໂກມາຣະພັຈຈ໌ ອັນພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ສະມາທານ ອາດຫານ ຣ່າເຣີງດ້ວຍທັມມີກະຖາແລ້ວ ລຸກຈາກອາສະນະ ຖວາຍບັງຄົມພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວກັບໄປ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງກະທຳທັມມີກະຖາໃນເພາະເຫຕອັນເປັນເຄົ້າມູລນັ້ນ ໃນເພາະເຫຕເກີດຂຶ້ນທຳອິດນັ້ນແລ້ວຕຣັສສັ່ງກັບພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ເຮົາອະນຸຍາດຄະຫະບໍດີຈີວອນ ອົງຄ໌ໃດ ປາຖນາຜ້າບັງສຸກຸລ ກໍຈົ່ງຖືຜ້າບັງສຸກຸລ ອົງຄ໌ໃດປາຖນາຄະຫະບໍດີຈີວອນ ກໍຈົ່ງຍິນດີຄະຫະບໍດີຈີວອນ,

***ແຕ່ເຮົາສັນລະເສີນການຍິນດີດ້ວຍປັຈຈັຍຕາມມີຕາມໄດ້***

*(ອະນຸຊານາມິ ພິກຂະເວ ຄະຫະປະຕິຈີວະຣັງ ໂຍ ອິຈສະຕິ ປັງສຸກູລິໂກ ໂຫຕຸ ໂຍ ອິຈສະຕິ ຄະຫະປະຕິຈີວະຣັງ ສາທິຍະຕຸ ອິຕະຣີຕະເຣນະ ຈາ-ຫັງ ພິກຂະເວ ສັນຕຸຕຖີ ວັນເນມິຕິ)*

---

*ວິນັຍປິດົກ ມະຫາວັຄ ພາຄ ໔ ເຫລັ້ມ ໕/໑໔໗/໑໓໕*



# ພິກຂຸປະກອບດ້ວຍທັມ ໕ ປະການ ເສພອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກໍາເຣີບຕໍ່ການບໍ່ນານ

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍທັມ ໕ ປະການ ເສພອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກໍາເຣີບຕໍ່ການບໍ່ນານ, ທັມ ໕ ປະການເປັນຢ່າງໃດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີທຸຣະໜ້ອຍ ມີກິຈໜ້ອຍ ລ້ຽງງ່າຍ ຍິນດີຍິ່ງໃນບໍຣິຂານແຫ່ງຊີວິຕ.**

**ເປັນຜູ້ມີອາຫານໜ້ອຍ ປະກອບດ້ວຍຄວາມເປັນຜູ້ບໍ່ເຫັນແກ່ປາກແກ່ທ້ອງ.**

**ເປັນຜູ້ນອນໜ້ອຍ ໝັ່ນປະກອບຄວາມພຽນເປັນເຄື່ອງຕື່ນຢູ່.**

**ເປັນພະຫຸສູຕ ຊົງສຸຕະ ສັ່ງສົມສຸຕະ ເປັນຜູ້ໄດ້ສະດັບຫລາຍ ຊົງຈຳໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິ ເຊິ່ງທັມທັງຫລາຍ ອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ.**

**ພິຈາຣະນາຈິຕຕາມທີ່ຫລຸດພົ້ນແລ້ວ.**

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍທັມ ໕ ປະການນີ້ແລ ເສພອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣິບຕໍ່ກາລບໍ່ນານ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໑໐໖/໑໖*

ສຸຂທີ່ຍິ່ງກວ່າຄວາມສງົບບໍ່ມີ
ນັຕຖິ ສັນຕິປະຣັງ ສຸຂັງ”

ຂຸທທະກະນິກາຍ ໒໕/໒໙/໒໕



# ພິກຂຸປະກອບດ້ວຍທັມ ໕ ປະການ ຈະເຮີນອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ກາລບໍ່ນານ

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍທັມ ໕ ປະການ ຈະເຮີນອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ກາລບໍ່ນານ, ທັມ ໕ ປະການເປັນຢ່າງໃດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີທຸຣະໜ້ອຍ ມີກິຈໜ້ອຍ ລ້ຽງງ່າຍ ຍິນດີຍິ່ງໃນບໍຣິຂານແຫ່ງຊີວິຕ.**

**ເປັນຜູ້ມີອາຫານໜ້ອຍ ປະກອບດ້ວຍຄວາມເປັນຜູ້ບໍ່ເຫັນແກ່ປາກແກ່ທ້ອງ.**

**ເປັນຜູ້ນອນໜ້ອຍ ໝັ່ນປະກອບຄວາມພຽນເປັນເຄື່ອງຕື່ນຢູ່.**

**ເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ ເຊິ່ງກະຖາອັນເປັນໄປເພື່ອການຂັດເກົາກິເລສ ເປັນທີ່ສະບາຍແກ່ທັມເຄື່ອງເປີດໂປ່ງຈິຕຄື ອັປປິຈສະກະຖາ ສັນຕຸຕຖິກະຖາ ປະວິເວກະກະຖາ ອະສັງສັຄຄະກະຖາ ວິຣິຍາຣັມພະກະຖາ ສີລະກະຖາ ສະມາທິກະຖາ ປັນຍາກະຖາ ວິມຸຕຕິກະຖາ ວິມຸຕຕິຍານທັສສະນະກະຖາ.**

**ພິຈາຣະນາຈິຕຕາມທີ່ຫລຸດພົ້ນແລ້ວ.**

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍທັມ ໕ ປະການນີ້ແລ ຈະເຣີນອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ກາລບໍ່ນານ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໑໐໖/໙໗*



# ພິກຂຸປະກອບດ້ວຍທັມ ໕ ປະການ ກະທຳໃຫ້ຫລາຍເຊິ່ງອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ກາລບໍ່ນານ

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍທັມ ໕ ປະການ ກະທຳໃຫ້ຫລາຍເຊິ່ງອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣີບຕໍ່ກາລບໍ່ນານ, ທັມ ໕ ປະການເປັນຢ່າງໃດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີທຸຣະໜ້ອຍ ມີກິຈໜ້ອຍ ລ້ຽງງ່າຍ ຍິນດີຍິ່ງໃນບໍຣິຂານແຫ່ງຊີວິຕ.**

**ເປັນຜູ້ມີອາຫານໜ້ອຍ ປະກອບດ້ວຍຄວາມເປັນຜູ້ບໍ່ເຫັນແກ່ປາກແກ່ທ້ອງ.**

**ເປັນຜູ້ນອນໜ້ອຍ ໝັ່ນປະກອບຄວາມພຽນເປັນເຄື່ອງຕື່ນຢູ່.**

**ເປັນຜູ້ຖືການຢູ່ປ່າເປັນວັດ ເປັນຜູ້ຢູ່ໃນເສນາສະນະອັນສງັດ.**

**ພິຈາລະນາຈິດຕາມທີ່ຫລຸດພົ້ນແລ້ວ.**

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍທັມ ໕ ປະການນີ້ແລ ກະທຳໃຫ້ຫລາຍເຊິ່ງອານາປານະສະຕິຢູ່ ຍ່ອມແທງຕລອດທັມທີ່ບໍ່ກຳເຣິບຕໍ່ກາລບໍ່ນານ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໘/໑໐໗/໙໘*



**“Taking into account exterior factors, mendicants, I do not see a single one that is so very beneficial as good friends. Good friends are very beneficial.”**

Dutiyapamādādivagga AN 1.98–139
https://suttacentral.net/an1.98-139

# ພິກຂຸເປັນຜູ້ມີມິດດີ ມີສະຫາຍດີ ມີເພື່ອນດີ ຍ່ອມຫວັງໄດ້ເຊິ່ງຄວາມສັນໂດດ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ຈາລິກະບັນພົຕ ໃກ້ເມືອງຈາລິກາ ໃນສມັຍນັ້ນ ທ່ານພຣະເມຄິຍະເປັນອຸປັຕຖາກຂອງພຣະຜູ້ມີພຣະພາຄ. ຄັ້ງນັ້ນແລ ທ່ານພຣະເມຄິຍະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ກຣາບອະພິວາທແລ້ວຢືນຢູ່ໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍປາຖນາຈະເຂົ້າໄປບິນທະບາຕໃນຊັນຕຸຄາມ.

ພຣະຜູ້ມີພຣະພາຄຕຣັສວ່າ:

ເມຄິຍະ! ເຈົ້າຈົ່ງສຳຄັນກາລອັນຄວນໃນບັດນີ້ເຖີດ.

ຄັ້ງນັ້ນແລ ເປັນເວລາເຊົ້າ ທ່ານພຣະເມຄິຍະຄອງອັນຕະຣະວາສົກ ຖືບາຕແລະຈີວອຣເຂົ້າໄປບິນທະບາຕໃນຊັນຕຸຄາມ ຄັນທ່ຽວບິນທະບາຕໃນຊັນຕຸຄາມສຳເຣັຈແລ້ວ ກັບຈາກບິນທະບາຕໃນເວລາປັຈສາພັຕ ເຂົ້າໄປຍັງຝັ່ງແມ່ນ້ຳກິມິກາລາ ທ່ານພຣະເມຄິຍະເດີນທ່ຽວພັກຜ່ອນຢູ່ທີ່ຝັ່ງແມ່ນ້ຳກິມິກາລາ ໄດ້ເຫັນອັມພະວັນອັນໜ້າເຫລື້ອມໃສ ໜ້າຣື່ນຣົມຍ໌ ຄັນເຫັນແລ້ວ ໄດ້ມີຄວາມຄິດດັ່ງນີ້ວ່າ ອັມພະວັນນີ້ຊ່າງໜ້າເຫລື້ອມໃສ ໜ້າຣື່ນຣົມຍ໌ຫໍ ຄວນແກ່ການບຳເພັນພຽນຂອງກຸລະບຸຕຜູ້ຕ້ອງການຄວາມພຽນ ຖ້າພຣະຜູ້ມີພຣະພາຄຊົງອະນຸຍາຕເຮົາ ເຮົາຈະມາຍັງອັມພະວັນນີ້ເພື່ອບຳເພັນພຽນ.

ຄັ້ງນັ້ນແລ ທ່ານພຣະເມຄິຍະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສ ເວລາເຊົ້າ ຂ້ານ້ອຍຄອງອັນຕະຣະວາສົກ ຖືບາຕແລະຈີວອຣເຂົ້າໄປ

ບິນທະບາຕໃນຊັນຕຸຄາມ ຄັນທ່ຽວບິນທະບາຕໃນຊັນຕຸຄາມສຳເລັຈແລ້ວ ກັບຈາກບິນທະບາຕໃນເວລາປັຈສາພັຕ ເຂົ້າໄປຍັງຝັ່ງແມ່ນ້ຳກິມິກາລາ ຂ້ານ້ອຍເດີນທ່ຽວພັກຜ່ອນຢູ່ທີ່ຝັ່ງແມ່ນ້ຳກິມິກາລາ ໄດ້ເຫັນອັມພະວັນອັນໜ້າເຫລື້ອມໃສ ໜ້າຣື່ນຣົມຍ໌ ຄັນເຫັນແລ້ວ ຂ້ານ້ອຍໄດ້ມີຄວາມຄິດດັ່ງນີ້ວ່າ ອັມພະວັນນີ້ຊ່າງໜ້າເຫລື້ອມໃສ ໜ້າຣື່ນຣົມຍ໌ທໍ່ ຄວນແກ່ການບຳເພັນພຽນຂອງກຸລະບຸຕຜູ້ຕ້ອງການຄວາມພຽນ ຖ້າພຣະຜູ້ມີພຣະພາຄຊົງອະນຸຍາຕເຮົາ ເຮົາຈະມາຍັງອັມພະວັນນີ້ເພື່ອບຳເພັນພຽນ.

ເມື່ອທ່ານພຣະເມຄິຍະກຣາບທູລຢ່າງນີ້ແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສກັບທ່ານພຣະເມຄິຍະວ່າ:

ເມຄິຍະ! ຈົ່ງລໍຢູ່ກ່ອນ ເຮົາຢູ່ຄົນດຽວ ເຈົ້າຈົ່ງລໍຢູ່ຈົນກວ່າພິກຂຸອົງຄ໌ອື່ນມາແທນ.

ແມ່ນແຕ່ຄັ້ງທີ ໔ ທ່ານພຣະເມຄິຍະກໍໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະຜູ້ມີພຣະພາຄບໍ່ມີກິຈອັນໃດທີ່ຄວນກະທຳໃຫ້ຍິ່ງຂຶ້ນ ບໍ່ມີການສັ່ງສົມອະຣິຍະມັຄທີ່ຊົງກະທຳ

ແລ້ວ ສ່ວນຂ້ານ້ອຍຍັງມີກິຈທີ່ຄວນກະທຳໃຫ້ຍິ່ງຂຶ້ນ ຍັງມີການສັ່ງສົມອະຣິຍະມັດທີ່ກະທຳແລ້ວ ຖ້າພຣະຜູ້ມີພຣະພາຄຊົງອະນຸຍາຕຂ້ານ້ອຍ ຂ້ານ້ອຍຈະໄປຍັງອັມພະວັນເພື່ອບຳເພັນພຽນ.

ພຣະຜູ້ມີພຣະພາຄຕຣັສວ່າ:

ເມຄິຍະ! ຈົ່ງລໍຢູ່ກ່ອນ ເຮົາຢູ່ຄົນດຽວ ເຈົ້າຈົ່ງລໍຢູ່ຈົນກວ່າພິກຂຸອົງຄ໌ອື່ນມາແທນ.

ແມ່ນແຕ່ຄັ້ງທີ ໒ ທ່ານພຣະເມຄິຍະກໍໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພຣະຜູ້ມີພຣະພາຄບໍ່ມີກິຈອັນໃດທີ່ຄວນກະທຳໃຫ້ຍິ່ງຂຶ້ນ ບໍ່ມີການສັ່ງສົມອະຣິຍະມັດທີ່ຊົງກະທຳແລ້ວ ສ່ວນຂ້ານ້ອຍຍັງມີກິຈທີ່ຄວນກະທຳໃຫ້ຍິ່ງຂຶ້ນ ຍັງມີການສັ່ງສົມອະຣິຍະມັດທີ່ກະທຳແລ້ວ ຖ້າພຣະຜູ້ມີພຣະພາຄຊົງອະນຸຍາຕຂ້ານ້ອຍ ຂ້ານ້ອຍຈະໄປຍັງອັມພະວັນເພື່ອບຳເພັນພຽນ.

ພຣະຜູ້ມີພຣະພາຄຕຣັສວ່າ:

ເມຄິຍະ! ເຮົາຈະວ່າອັນໃດເຈົ້າຜູ້ກ່າວຢູ່ວ່າ ບຳເພັນພຽນ. ເມຄິຍະ! ເຈົ້າຈົ່ງສຳຄັນກາລອັນຄວນໃນບັດນີ້ເຖີດ.

ຄັ້ງນັ້ນແລ ທ່ານພຣະເມຄິຍະລຸກຈາກອາສະນະ ຖວາຍອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວເຂົ້າໄປຍັງປ່າອັມພະວັນ ອາສັຍອັມພະວັນນັ້ນ ນັ່ງພັກທ່ຽງວັນຢູ່ທີ່ເຫງົ້າໄມ້ແຫ່ງໜຶ່ງ. ຄັ້ງນັ້ນແລ ເມື່ອທ່ານພຣະເມຄິຍະພັກຢູ່ອັມພະວັນນັ້ນ ອະກຸສົລວິຕົກອັນເປັນບາບຄື ກາມວິຕົກ ພະຍາປາທະວິຕົກ ວິຫິງສາວິຕົກຍ່ອມຟຸ້ງຊ່ານຫລາຍ. ລຳດັບນັ້ນທ່ານພຣະເມຄິຍະໄດ້ມີຄວາມຄິດດັ່ງນີ້ວ່າ ທ່ານຜູ້ຈະເຣີນ ໜ້າອັສສະຈັນຍ໌ໜໍ ບໍ່ເຄີຍມີມາເລີຍ ກຸລະບຸຕອອກບວຊເປັນບັນພະຊິຕດ້ວຍສັທທາກໍຍັງຖືກອະກຸສົລວິຕົກອັນເປັນບາບ ໓ ປະການຄື ກາມວິຕົກ ພະຍາປາທະວິຕົກ ວິຫິງສາວິຕົກຄອບງຳ.

ຄັ້ງນັ້ນແລ ທ່ານພຣະເມຄິຍະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສ ເມື່ອຂ້ານ້ອຍຢູ່ໃນອັມພະວັນນັ້ນ ອະກຸສົລວິຕົກອັນເປັນບາບຄືກາມວິຕົກ ພະຍາປາທະວິຕົກ ວິຫິງສາວິຕົກຍ່ອມຟຸ້ງຊ່ານ

ຫລາຍ. ຂ້ານ້ອຍນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ ທ່ານຜູ້ຈະເຣີນໜ້າອັສສະຈັນຍ໌ໜໍ ບໍ່ເຄີຍມີມາເລີຍ ກຸລະບຸຕອອກບວຊເປັນບັນພະຊິຕດ້ວຍສັທທາກໍຍັງຖືກອະກຸສົລວິຕົກອັນເປັນບາບ ໓ ປະການຄື ກາມວິຕົກ ພະຍາປາທະວິຕົກ ວິຫິງສາວິຕົກຄອບງຳ.

ພຣະຜູ້ມີພຣະພາຄຕຣັສວ່າ:

ເມຄິຍະ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມແກ່ກ້າແຫ່ງເຈໂຕວິມຸຕທີ່ຍັງບໍ່ແກ່ກ້າ, ທັມ ໕ ປະການເປັນຢ່າງໃດ?

ເມຄິຍະ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີມິຕດີ ມີສະຫາຍດີ ມີເພື່ອນດີ. ເມຄິຍະ ນີ້ເປັນທັມປະການທີ ໑ ຍ່ອມເປັນໄປເພື່ອຄວາມແກ່ກ້າແຫ່ງເຈໂຕວິມຸຕທີ່ຍັງບໍ່ແກ່ກ້າ.

ເມຄິຍະ! ອີກປະການໜຶ່ງ ພິກຂຸເປັນຜູ້ມີສີລ ສັງຣວມຣະວັງໃນປາຕິໂມກຂ໌ ເຖິງພ້ອມດ້ວຍອາຈາຣະແລະໂຄຈອຣ ມີປົກກະຕິເຫັນພັຍໃນໂທສແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັງຫລາຍ. ເມຄິຍະ ນີ້ເປັນທັມປະການທີ ໔ ຍ່ອມເປັນໄປເພື່ອຄວາມແກ່ກ້າແຫ່ງເຈໂຕວິມຸຕທີ່ຍັງບໍ່ແກ່ກ້າ.

ເມຄິຍະ! ອີກປະການໜຶ່ງ ພິກຂຸເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງກະຖາອັນເປັນໄປເພື່ອການ ຂັດເກົາກິເລສ ເປັນທີ່ສະບາຍໃນການເປີດຈິດຄື ອັປປິຈສະ ກະຖາ **ສັນຕຸຕຖີກະຖາ** *(ເລື່ອງຄວາມສັນໂດດ)* ປະວິເວ ກະກະຖາ ອະສັງສັຄຄະກະຖາ ວິຣິຍາຣັມພະກະຖາ ສີລະ ກະຖາ ສະມາທິກະຖາ ປັນຍາກະຖາ ວິມຸຕຕິກະຖາ ວິມຸຕຕິ ຍານທັສສະນະກະຖາ. ເມຄິຍະ ນີ້ເປັນທັມປະການທີ ໓ ຍ່ອມ ເປັນໄປເພື່ອຄວາມແກ່ກ້າແຫ່ງເຈໂຕວິມຸຕທີ່ຍັງບໍ່ແກ່ກ້າ.

ເມຄິຍະ! ອີກປະການໜຶ່ງ ພິກຂຸເປັນຜູ້ປຣາຣົພຄວາມພຽນເພື່ອ ລະອະກຸສົລທັມທັງຫລາຍ ເພື່ອຄວາມເຖິງພ້ອມແຫ່ງກຸສົລທັມ ທັງຫລາຍ ເປັນຜູ້ມີກຳລັງ ມີຄວາມບາກບັ່ນໝັ້ນຄົງ ບໍ່ປະຖິ້ມ ທຸຣະໃນກຸສົລທັມທັງຫລາຍ. ເມຄິຍະ ນີ້ເປັນທັມປະການທີ ໔ ຍ່ອມເປັນໄປເພື່ອຄວາມແກ່ກ້າແຫ່ງເຈໂຕວິມຸຕທີ່ຍັງບໍ່ແກ່ກ້າ.

ເມຄິຍະ! ອີກປະການໜຶ່ງ ພິກຂຸເປັນຜູ້ມີປັນຍາ ປະກອບດ້ວຍ ປັນຍາເຄື່ອງພິຈາຣະນາຄວາມເກີດແລະຄວາມດັບອັນເປັນ ອະຣິຍະ ເປັນເຄື່ອງຊຳແຣກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍ ຊອບ. ເມຄິຍະ ນີ້ເປັນທັມປະການທີ ໕ ຍ່ອມເປັນໄປເພື່ອ ຄວາມແກ່ກ້າແຫ່ງເຈໂຕວິມຸຕທີ່ຍັງບໍ່ແກ່ກ້າ.

ເມຄິຍະ! ພິກຂຸຜູ້ມີມິດດີ ມີສະຫາຍດີ ມີເພື່ອນດີ ຍ່ອມຫວັງຂໍ້ນີ້ໄດ້ວ່າ ເຂົາຈັກເປັນຜູ້ມີສິລ ສັງຣວມຣະວັງໃນປາຕິໂມກຂ໌ ເຖິງພ້ອມດ້ວຍອາຈາຣະແລະໂຄຈອຣ ມີປົກກະຕິເຫັນພັຍໃນໂທສແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັງຫລາຍ.

ເມຄິຍະ! ພິກຂຸຜູ້ມີມິດດີ ມີສະຫາຍດີ ມີເພື່ອນດີ ຍ່ອມຫວັງຂໍ້ນີ້ໄດ້ວ່າ ເຂົາຈັກໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງກະຖາອັນເປັນໄປເພື່ອການຂັດເກົາກິເລສ ເປັນທີ່ສະບາຍໃນການເປີດຈິດຄື ອັປປິຈສະກະຖາ ສັນຕຸຕຖິກະຖາ ປະວິເວກະກະຖາ ອະສັງສັຄຄະກະຖາ ວິຣິຍາຣັມພະກະຖາ ສີລະກະຖາ ສະມາທິກະຖາ ປັນຍາກະຖາ ວິມຸຕຕິກະຖາ ວິມຸຕຕິຍານທັສສະນະກະຖາ.

ເມຄິຍະ! ພິກຂຸຜູ້ມີມິດດີ ມີສະຫາຍດີ ມີເພື່ອນດີ ຍ່ອມຫວັງຂໍ້ນີ້ໄດ້ວ່າ ເຂົາຈັກປຣາຣົພຄວາມພຽນເພື່ອລະອະກຸສົລທັມທັງຫລາຍ ເພື່ອຄວາມເຖິງພ້ອມແຫ່ງກຸສົລທັມທັງຫລາຍ ເປັນຜູ້ມີກຳລັງ ມີຄວາມບາກບັ່ນໝັ້ນຄົງ ບໍ່ປະຖິ້ມທຸຣະໃນກຸສົລທັມທັງຫລາຍ.

ເມຄິຍະ! ພິກຂຸຜູ້ມີມິດດີ ມີສະຫາຍດີ ມີເພື່ອນດີ ຍ່ອມຫວັງຂໍ້ນີ້ໄດ້ວ່າ ເຂົາຈັກເປັນຜູ້ມີປັນຍາ ປະກອບດ້ວຍປັນຍາເຄື່ອງພິຈາລະນາຄວາມເກີດແລະຄວາມດັບອັນເປັນອະຣິຍະ ເປັນເຄື່ອງຊຳແຮກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍຊອບ.

ເມຄິຍະ! ເມື່ອພິກຂຸນັ້ນຕັ້ງຢູ່ໃນທັມ ໕ ປະການນີ້ແລ້ວ ຄວນຈະເຈີນທັມ ໔ ປະການໃຫ້ຍິ່ງຂຶ້ນໄປຄື:

**ຄວນຈະເຈີນອະສຸພະເພື່ອລະຣາຄະ,**

**ຄວນຈະເຈີນເມຕຕາເພື່ອລະພະຍາບາທ,**

**ຄວນຈະເຈີນອານາປານະສະຕິເພື່ອຕັດເຊິ່ງວິຕົກ,**

**ຄວນຈະເຈີນອະນິຈຈະສັນຍາເພື່ອຖອນອັສສະມິມານະ.**

**ເມຄິຍະ! ອະນັຕຕະສັນຍາຍ່ອມປາກົຕແກ່ພິກຂຸຜູ້ໄດ້ອະນິຈຈະສັນຍາ ຜູ້ທີ່ໄດ້ອະນັຕຕະສັນຍາຍ່ອມບັນລຸນິພພານ ອັນຖອນເສຍໄດ້ເຊິ່ງອັສສະມິມານະໃນປັຈຈຸບັນແລ.**

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*
*໔໓/໔໗໖/໔໐໗*





# ພິກຂຸຊາວຊາຕິພູມຍົກຍ້ອງທ່ານພຣະປຸນນະມັນຕານີບຸຕວ່າ ເປັນຜູ້ມັກນ້ອຍ ສັນໂດດ...

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເວລຸວັນອັນເປັນສະຖານທີ່ພຣະຣາຊະທານເຫຍື່ອແກ່ກະແຕ ເຂຕພຣະນະຄອຣຣາຊະຄຶຫ໌. ຄັ້ງນັ້ນ ພິກຂຸຊາວຊາຕິພູມປະເທສຈຳນວນຫລາຍ ຈຳພັນສາແລ້ວໃນຊາຕິພູມ ພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄໄດ້ຕຣັສຖາມພິກຂຸເຫລົ່ານັ້ນດັ່ງນີ້ວ່າ:

ພິກຂຸທັງຫລາຍ! ໃນຊາຕິພູມປະເທສ ພິກຂຸອົງຄ໌ໃດໜໍ ທີ່ເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຊາວຊາຕິພູມປະເທສຍົກຍ້ອງຢ່າງນີ້ວ່າ ເຂົາເປັນຜູ້ມັກນ້ອຍ ສັນໂດດ ງຽບສງັດ ບໍ່ຄຸກຄີດ້ວຍໝູ່ ປຣາຣົພຄວາມພຽນ ສົມບູນດ້ວຍສີລ ສະມາທິ ປັນຍາ ວິມຸຕຕິ ວິມຸຕຕິຍານທັສສະນະແລ້ວ ຍັງກ່າວຖ້ອຍຄໍາພັນນະນາຄວາມມັກນ້ອຍ ຄວາມສັນໂດດ ຄວາມງຽບສງັດ ຄວາມບໍ່ຄຸກຄີດ້ວຍໝູ່ ກາຣປຣາຣົພຄວາມພຽນ ຄວາມສົມບູນດ້ວຍສີລ ສະມາທິ ປັນຍາ ວິມຸຕຕິ ວິມຸຕຕິຍານທັສສະນະແກ່ພິກຂຸທັງຫລາຍອີກດ້ວຍ ເປັນຜູ້ໃຫ້ໂອວາທ ແນະນໍາ ຊີ້ແຈງຊັກຊວນເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ທັງຫລາຍໃຫ້ອາດຫານ ຣ່າເຣີງ?

ພິກຂຸຊາວຊາຕິພູມປະເທສເຫລົ່ານັ້ນກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໃນຊາຕິພູມປະເທສ ທ່ານພຣະປຸນນະມັນຕານີບຸຕແລ ເປັນຜູ້ທີ່ເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຊາວຊາຕິພູມປະເທສຍົກຍ້ອງຢ່າງນີ້ວ່າ ທ່ານເປັນຜູ້ມັກນ້ອຍ ສັນໂດດ ງຽບສງັດ ບໍ່ຄຸກຄີດ້ວຍໝູ່ ປຣາຣົພຄວາມພຽນ ສົມບູນດ້ວຍສີລ ສະມາທິ ປັນຍາ ວິມຸຕຕິ ວິມຸຕຕິຍານທັສສະນະແລ້ວ ຍັງກ່າວຖ້ອຍຄໍາພັນນະນາຄວາມມັກນ້ອຍ ຄວາມສັນໂດດ ຄວາມງຽບສງັດ ຄວາມບໍ່ຄຸກຄີດ້ວຍໝູ່ ກາຣປຣາຣົພ

ຄວາມພຽນ ຄວາມສົມບູນດ້ວຍສີລ ສະມາທິ ປັນຍາ ວິມຸຕຕິ ວິມຸຕຕິຍານທັສສະນະແກ່ພິກຂຸທັງຫລາຍອີກດ້ວຍ ເປັນຜູ້ໃຫ້ໂອວາທ ແນະນຳ ຊີ້ແຈງ ຊັກຊວນເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ທັງຫລາຍໃຫ້ອາດຫານ ຣ່າເຣີງ.

ສມັຍນັ້ນ ທ່ານພຣະສາຣີບຸຕນັ່ງເຝົ້າພຣະຜູ້ມີພຣະພາຄຢູ່ໃນທີ່ໃກ້ ຈຶ່ງດຳຣິວ່າ ເປັນລາພຂອງທ່ານປຸນນະມັນຕານີບຸຕ ຄວາມເປັນມະນຸສອັນທ່ານປຸນນະມັນຕານີບຸຕໄດ້ດີແລ້ວ ທີ່ເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຜູ້ເປັນວິນຍູຊົນກ່າວຍົກຍ້ອງພັນນະນາຄຸນສະເພາະພຣະພັກພຣະສາສດາ ແລະພຣະສາສດາກໍຊົງອະນຸໂມທະນາເຊິ່ງກະຖານັ້ນ ບາງທີເຮົາຄົງໄດ້ພົບກັບທ່ານປຸນນະມັນຕານີບຸຕ ແລ້ວສົນທະນາປຣາສັຍກັນຈັກຄັ້ງໜຶ່ງ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະນະຄອຣຣາຊະຄຶຫ໌ຕາມສຳຣານພຣະອັທທະຍາສັຍແລ້ວ ສະເດັຈຈາຣິກໄປໂດຍລຳດັບ ເຖິງພຣະນະຄອຣສາວັຕຖີ ປະທັບໃນພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີເຂຕພຣະນະຄອຣສາວັຕຖີ.

ທ່ານພຣະປຸນນະມັນຕານີບຸຕໄດ້ຊາບຂ່າວວ່າ ພຣະຜູ້ມີພຣະພາຄສະເດັຈເຖິງພຣະນະຄອຣສາວັຕຖີ ປະທັບໃນພຣະວິຫາຣ

ເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂດພຣະນະຄອຣສາວັຕຖີ ທ່ານຈຶ່ງເກັບງຳເສນາສະນະ ຖືບາຕແລະຈີວອຣຈາຣິກໄປໂດຍລຳດັບ ຕາມທາງທີ່ຈະໄປຍັງພຣະນະຄອຣສາວັຕຖີ ເຖິງພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂດພຣະນະຄອຣສາວັຕຖີແລ້ວ ຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນນັ່ງຮຽບຮ້ອຍແລ້ວ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ໃຫ້ສະມາທານ ໃຫ້ອາດຫານ ຣ່າເຣີງ ດ້ວຍທັມມີກະຖາ.

ເມື່ອພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ໃຫ້ສະມາທານ ໃຫ້ອາດຫານ ຣ່າເຣີງ ດ້ວຍທັມມີກະຖາແລ້ວ ທ່ານພຣະປຸນນະມັນຕານີບຸຕກໍຊື່ນຊົມ ອະນຸໂມທະນາພຣະພາສິຕຂອງພຣະຜູ້ມີພຣະພາຄ ລຸກຈາກອາສະນະ ຖວາຍອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວເຂົ້າໄປສູ່ປ່າອັນທະວັນເພື່ອພັກທ່ຽງວັນ.

ຄັ້ງນັ້ນ ພິກຂຸອົງຄ໌ໜຶ່ງເຂົ້າໄປຫາທ່ານພຣະສາຣີບຸຕແລ້ວແຈ້ງຂ່າວວ່າ ຂ້າແຕ່ທ່ານພຣະສາຣີບຸຕ ທ່ານພຣະປຸນນະມັນຕານີບຸຕທີ່ທ່ານໄດ້ສັນລະເສີນເນື່ອງໆນັ້ນ ບັດນີ້ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ໃຫ້ສະມາທານ ໃຫ້ອາດຫານ

ຣ່າເຣີງ ດ້ວຍທັມມີກະຖາແລ້ວ ທ່ານກໍຊື່ນຊົມ ອະນຸໂມທະນາ ພຣະພາສິຕຂອງພຣະຜູ້ມີພຣະພາຄ ລຸກຈາກອາສະນະ ຖວາຍອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວເຂົ້າໄປສູ່ປ່າອັນທະວັນເພື່ອພັກທ່ຽງວັນ.

ລຳດັບນັ້ນ ທ່ານພຣະສາຣີບຸຕຟ້າວຖືຜ້ານິສີທະນະ*(ຜ້າປູນັ່ງ)* ແລ້ວຕິດຕາມທ່ານພຣະປຸນນະມັນຕານີບຸຕໄປຂ້າງຫລັງໆ ພໍເຫັນຫົວກັນ.

ຄັ້ງນັ້ນ ທ່ານພຣະປຸນນະມັນຕານີບຸຕເຂົ້າໄປປ່າອັນທະວັນແລ້ວ ນັ່ງພັກທ່ຽງວັນຢູ່ທີ່ເຫງົ້າໄມ້ແຫ່ງໜຶ່ງ ແມ່ນແຕ່ທ່ານພຣະສາຣີບຸຕກໍເຂົ້າໄປສູ່ປ່າອັນທະວັນແລ້ວ ກໍນັ່ງພັກທ່ຽງວັນຢູ່ທີ່ເຫງົ້າໄມ້ແຫ່ງໜຶ່ງເໝືອນກັນ.

ຄັ້ງນັ້ນ ເປັນເວລາຕອນແລງ ທ່ານພຣະສາຣີບຸຕອອກຈາກທີ່ພັກຜ່ອນແລ້ວ ເຂົ້າໄປຫາທ່ານພຣະປຸນນະມັນຕານີບຸຕເຖິງທີ່ຢູ່ ໄດ້ປຣາສັຍກັບທ່ານພຣະປຸນນະມັນຕານີບຸຕ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນນັ່ງຮຽບຮ້ອຍແລ້ວ ຈຶ່ງຖາມທ່ານພຣະປຸນນະມັນຕານີບຸຕດັ່ງນີ້ວ່າ:

ອາວຸໂສ! ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄຂອງເຮົາຫລື?

ທ່ານພຣະປຸນນະມັນຕານີບຸຕຕອບວ່າ:
ຖືກແລ້ວ ອາວຸໂສ!

ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອສີລວິສຸທທິຫລື ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອຈິຕຕະວິສຸທທິຫລື ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ຖ້າຢ່າງນັ້ນ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອທິຕຖິວິສຸທທິຫລື ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ຖ້າຢ່າງນັ້ນ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄ ເພື່ອກັງຂາວິຕະຣະນະວິສຸທທິຫລື *(ຄວາມບໍຣິສຸທແຫ່ງການກ້າວລ່ວງຄວາມສົງສັຍ)* ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ຖ້າຢ່າງນັ້ນ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄ ເພື່ອມັຄຄາມັຄຄະຍານທັສສະນະວິສຸທທິຫລື ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ຖ້າຢ່າງນັ້ນ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄ ເພື່ອປະຕິປະທາຍານທັສສະນະວິສຸທທິຫລື ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ຖ້າຢ່າງນັ້ນ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄ ເພື່ອຍານທັສສະນະວິສຸທທິຫລື ອາວຸໂສ!

ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ຂ້ານ້ອຍຖາມທ່ານວ່າ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອສີລວິສຸທທິຫລື ອາວຸໂສ! ທ່ານກໍຕອບວ່າ ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ຂ້ານ້ອຍຖາມທ່ານວ່າ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອຈິຕຕະວິສຸທທິຫລື ເພື່ອທິຕຖິວິສຸທທິຫລື ເພື່ອກັງຂາວິຕະຣະນະວິສຸທທິຫລື ເພື່ອມັຄຄາມັຄຄະຍານທັສສະນະວິສຸທທິຫລື ເພື່ອປະຕິປະທາຍານທັສສະນະວິສຸທທິຫລື ເພື່ອຍານທັສສະນະວິສຸທທິຫລື ທ່ານກໍຕອບວ່າ ບໍ່ແມ່ນຢ່າງນັ້ນໆ. ເມື່ອເປັນເຊັ່ນນັ້ນ ທ່ານປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອອັນໃດ?

ອາວຸໂສ! ຂ້ານ້ອຍປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອອະນຸປາທາປະຣິນິພພານ*(ຄວາມດັບສະໜິດແຫ່ງຄວາມຢຶດໝັ້ນ)*.

ອາວຸໂສ! ສີລວິສຸທທິຫລື ເປັນອະນຸປາທາປະຣິນິພພານ?
ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ຈິຕຕະວິສຸທທິຫລື ເປັນອະນຸປາທາປະຣິນິພພານ?
ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ທິຕຖິວິສຸທທິຫລື ເປັນອະນຸປາທາປະຣິນິພພານ? ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ກັງຂາວິຕະຣະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ? ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ມັຄຄາມັຄຄະຍານທັສສະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ? ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ປະຕິປະທາຍານທັສສະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ? ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ຍານທັສສະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ? ບໍ່ແມ່ນຢ່າງນັ້ນ ອາວຸໂສ!

ອາວຸໂສ! ຂ້ານ້ອຍຖາມທ່ານວ່າ ສີລວິສຸທທິຫລື ເປັນອະນຸປາທາປະຣິນິພພານ, ຈິຕຕະວິສຸທທິຫລື ເປັນອະນຸປາທາປະຣິນິພພານ, ທິຕຖິວິສຸທທິຫລື ເປັນອະນຸປາທາປະຣິນິພພານ, ກັງຂາວິຕະຣະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ, ມັຄຄາມັຄຄະຍານທັສສະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ, ປະຕິປະທາຍານທັສສະນະວິສຸທທິຫລື

ເປັນອະນຸປາທາປະຣິນິພພານ, ຍານທັສສະນະວິສຸທທິຫລື ເປັນອະນຸປາທາປະຣິນິພພານ?

ທ່ານກໍຕອບຂ້ານ້ອຍວ່າ ບໍ່ແມ່ນຢ່າງນັ້ນໆ ເມື່ອເປັນເຊັ່ນນັ້ນ ຄວນຈະເຫັນເນື້ອຄວາມຂອງຖ້ອຍຄຳທີ່ທ່ານກ່າວນີ້ຢ່າງໃດໜໍ?

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊົງບັນຍັຕສີລວິສຸທທິວ່າ ເປັນອະນຸປາທາປະຣິນິພພານແລ້ວ ກໍຊື່ວ່າຊົງບັນຍັຕທັມທີ່ຍັງ ມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊົງບັນຍັຕຈິຕຕະວິສຸທທິວ່າ ເປັນອະນຸປາທາປະຣິນິພພານແລ້ວ ກໍຊື່ວ່າຊົງບັນຍັຕທັມທີ່ຍັງ ມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊົງບັນຍັຕທິຕຖິວິສຸທທິວ່າ ເປັນອະນຸປາທາປະຣິນິພພານແລ້ວ ກໍຊື່ວ່າຊົງບັນຍັຕທັມທີ່ຍັງ ມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊົງບັນຍັຕກັງຂາວິຕະຣະ ນະວິສຸທທິວ່າເປັນອະນຸປາທາປະຣິນິພພານແລ້ວ ກໍຊື່ວ່າຊົງ ບັນຍັຕທັມທີ່ຍັງມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊີ້ງບັນຍັຕມັຄຄາມັຄຄະຍານທັສສະນະວິສຸທທິວ່າເປັນອະນຸປາທາປະຣິນິພພານແລ້ວກໍຊື່ວ່າຊີ້ງບັນຍັຕທັມທີ່ຍັງມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊີ້ງບັນຍັຕປະຕິປະທາຍານທັສສະນະວິສຸທທິວ່າເປັນອະນຸປາທາປະຣິນິພພານແລ້ວກໍຊື່ວ່າຊີ້ງບັນຍັຕທັມທີ່ຍັງມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າພຣະຜູ້ມີພຣະພາຄຈັກຊີ້ງບັນຍັຕຍານທັສສະນະວິສຸທທິວ່າເປັນອະນຸປາທາປະຣິນິພພານແລ້ວ ກໍຊື່ວ່າຊີ້ງບັນຍັຕທັມທີ່ຍັງມີອຸປາທານວ່າເປັນອະນຸປາທາປະຣິນິພພານ.

ອາວຸໂສ! ຖ້າຫາກວ່າ ທັມນອກຈາກທັມເຫລົ່ານີ້ ຈັກເປັນອະນຸປາທາປະຣິນິພພານແລ້ວ ປຸຖຸຊົນຈະຊື່ວ່າປະຣິນິພພານເພາະວ່າປຸຖຸຊົນບໍ່ມີທັມເຫລົ່ານີ້.

ອາວຸໂສ! ຂ້ານ້ອຍຈະອຸປະມາໃຫ້ທ່ານຟັງ ບຸຣຸສຜູ້ເປັນວິນຍູຊົນບາງພວກໃນໂລກນີ້ ຍ່ອມຮູ້ເນື້ອຄວາມແຫ່ງຄຳທີ່ກ່າວແລ້ວດ້ວຍອຸປະມາ.

ອາວຸໂສ! ປຽບເໝືອນພຣະເຈົ້າປະເສນທິໂກສົລກຳລັງປະທັບຢູ່ໃນພຣະນະຄອຣສາວັຕຖີ ມີພຣະຣາຊະກະຣະນີຍະກິຈດ່ວນບາງຢ່າງເກີດຂຶ້ນໃນເມືອງສາເກຕ ແລະໃນລະຫວ່າງພຣະນະຄອຣສາວັຕຖີກັບເມືອງສາເກຕນັ້ນ ຈະຕ້ອງໃຊ້ຣົຖເຖິງ ໗ ຄັນຜັດປ່ຽນກັນ. ລຳດັບນັ້ນ ພຣະເຈົ້າປະເສນທິໂກສົລສະເດັຈອອກຈາກພຣະນະຄອຣສາວັຕຖີ ຊົງຣົຖພຣະທີ່ນັ່ງຄັນທີ ໑ ທີ່ປະຕູພຣະຣາຊະວັງ ໄປເຖິງຣົຖພຣະທີ່ນັ່ງຄັນທີ ໒ ດ້ວຍຣົຖພຣະທີ່ນັ່ງຄັນທີ ໑ ຊົງສະເດັຈອອກຈາກຣົຖພຣະທີ່ນັ່ງຄັນທີ ໑ ຊົງຣົຖພຣະທີ່ນັ່ງຄັນທີ ໒

ສະເດັຈໄປເຖິງຣົຖພຣະທີ່ນັ່ງຄັນທີ ໓ ດ້ວຍຣົຖພຣະທີ່ນັ່ງຄັນທີ ໒ ຊົງສະເດັຈອອກຈາກຣົຖພຣະທີ່ນັ່ງຄັນທີ ໒ ຊົງຣົຖພຣະທີ່ນັ່ງຄັນທີ ໓

ສະເດັຈໄປເຖິງຣົຖພຣະທີ່ນັ່ງຄັນທີ ໔ ດ້ວຍຣົຖພຣະທີ່ນັ່ງຄັນທີ ໓ ຊົງສະເດັຈອອກຈາກຣົຖພຣະທີ່ນັ່ງຄັນທີ ໓ ຊົງຣົຖພຣະທີ່ນັ່ງຄັນທີ ໔

ສະເດັຈໄປເຖິງຣົຖພຣະທີ່ນັ່ງຄັນທີ ໕ ດ້ວຍຣົຖພຣະທີ່ນັ່ງຄັນທີ ໔ ຊົງສະເດັຈອອກຈາກຣົຖພຣະທີ່ນັ່ງຄັນທີ ໔ ຊົງຣົຖພຣະທີ່ນັ່ງຄັນທີ ໕

ສະເດັຈໄປເຖິງຣົຖພຣະທີ່ນັ່ງຄັນທີ ໖ ດ້ວຍຣົຖພຣະທີ່ນັ່ງຄັນທີ ໕ ຊຶ່ງສະເດັຈອອກຈາກຣົຖພຣະທີ່ນັ່ງຄັນທີ ໕ ຊຶ່ງຣົຖພຣະທີ່ນັ່ງຄັນທີ ໖

ສະເດັຈໄປເຖິງຣົຖພຣະທີ່ນັ່ງຄັນທີ ໗ ດ້ວຍຣົຖພຣະທີ່ນັ່ງຄັນທີ ໖ ຊຶ່ງສະເດັຈອອກຈາກຣົຖພຣະທີ່ນັ່ງຄັນທີ ໖ ຊຶ່ງຣົຖພຣະທີ່ນັ່ງຄັນທີ ໗ ສະເດັຈໄປເຖິງເມືອງສາເກຕທີ່ປະຕູພຣະຣາຊະວັງດ້ວຍຣົຖພຣະທີ່ນັ່ງຄັນທີ ໗.

ອາວຸໂສ! ຖ້າພວກມິຕອະມາຕຍ໌ ຫລືພຣະຍາຕສາຍໂລຫິຕຈະທູລຖາມພຣະອົງຄ໌ເຊິ່ງສະເດັຈເຖິງປະຕູພຣະຣາຊະວັງວ່າ ຂ້າແຕ່ມະຫາຣາຊເຈົ້າ ພຣະອົງຄ໌ສະເດັຈມາຈາກພຣະນະຄອຣສາວັຕຖີເຖິງເມືອງສາເກຕທີ່ປະຕູພຣະຣາຊະວັງ ດ້ວຍຣົຖພຣະທີ່ນັ່ງຄັນດຽວຫລື?

ອາວຸໂສ! ພຣະເຈົ້າປະເສນທິໂກສົລຈະຕຣັສຕອບຢ່າງໃດ ຈຶ່ງຈະເປັນການຕຣັສຕອບທີ່ຖືກຕ້ອງ?

ອາວຸໂສ! ພຣະເຈົ້າປະເສນທິໂກສົລຈະຕ້ອງຕຣັສຕອບຢ່າງນີ້ ຈຶ່ງຈະເປັນການຕຣັສຕອບທີ່ຖືກຕ້ອງຄື ເມື່ອເຮົາຢູ່ໃນພຣະນະຄອຣສາວັຕຖີນັ້ນ ມີກະຣະນີຍະກິຈດ່ວນບາງຢ່າງເກີດຂຶ້ນ

ໃນເມືອງສາເກດ ແລະໃນລະຫວ່າງພຣະນະຄອຣສາວັຕຖີກັບ ເມືອງສາເກຕນັ້ນ ຈະຕ້ອງໃຊ້ຣົຖເຖິງ ໗ ຄັນຜັດປ່ຽນກັນ. ເມື່ອເປັນເຊັ່ນນັ້ນ ເຮົາຈຶ່ງອອກຈາກພຣະນະຄອຣສາວັຕຖີ ຂຶ້ນຣົຖຄັນທີ ໑ ທີ່ປະຕູວັງ ໄປເຖິງຣົຖຄັນທີ ໒ ດ້ວຍຣົຖຄັນທີ ໑ ອອກຈາກຣົຖຄັນທີ ໑ ຂຶ້ນຣົຖຄັນທີ ໒

ໄປເຖິງຣົຖຄັນທີ ໓ ດ້ວຍຣົຖຄັນທີ ໒ ອອກຈາກຣົຖຄັນທີ ໒ ຂຶ້ນຣົຖຄັນທີ ໓

ໄປເຖິງຣົຖຄັນທີ ໔ ດ້ວຍຣົຖຄັນທີ ໓ ອອກຈາກຣົຖຄັນທີ ໓ ຂຶ້ນຣົຖຄັນທີ ໔

ໄປເຖິງຣົຖຄັນທີ ໕ ດ້ວຍຣົຖຄັນທີ ໔ ອອກຈາກຣົຖຄັນທີ ໔ ຂຶ້ນຣົຖຄັນທີ ໕

ໄປເຖິງຣົຖຄັນທີ ໖ ດ້ວຍຣົຖຄັນທີ ໕ ອອກຈາກຣົຖຄັນທີ ໕ ຂຶ້ນຣົຖຄັນທີ ໖

ໄປເຖິງຣົຖຄັນທີ ໗ ດ້ວຍຣົຖຄັນທີ ໖ ອອກຈາກຣົຖຄັນທີ ໖ ຂຶ້ນຣົຖຄັນທີ ໗ ມາເຖິງເມືອງສາເກຕທີ່ປະຕູວັງດ້ວຍຣົຖຄັນທີ ໗.

ອາວຸໂສ! ພຣະເຈົ້າປະເສນທິໂກສົລຈະຕ້ອງຕຣັສຕອບຢ່າງນີ້ຈຶ່ງຈະເປັນການຕຣັສຕອບທີ່ຖືກຕ້ອງ.

ອາວຸໂສ! ຂໍ້ນີ້ກໍສັນນັ້ນ ສີລວິສຸທທິເປັນປະໂຍຊນ໌ແກ່ຈິຕຕະວິສຸທທິ, ຈິຕຕະວິສຸທທິເປັນປະໂຍຊນ໌ແກ່ທິຕຖິວິສຸທທິ, ທິຕຖິວິສຸທທິເປັນປະໂຍຊນ໌ແກ່ກັງຂາວິຕະຣະນະວິສຸທທິ, ກັງຂາວິຕະຣະນະວິສຸທທິເປັນປະໂຍຊນ໌ແກ່ມັຄຄາມັຄຄະຍານທັສສະນະວິສຸທທິ, ມັຄຄາມັຄຄະຍານທັສສະນະວິສຸທທິເປັນປະໂຍຊນ໌ແກ່ປະຕິປະທາຍານທັສສະນະວິສຸທທິ, ປະຕິປະທາຍານທັສສະນະວິສຸທທິເປັນປະໂຍຊນ໌ແກ່ຍານທັສສະນະວິສຸທທິ, ຍານທັສສະນະວິສຸທທິເປັນປະໂຍຊນ໌ແກ່ອະນຸປາທາປະຣິນິພພານ.

ອາວຸໂສ! ຂ້ານ້ອຍປະພຶຕພຣົມມະຈັນຍ໌ໃນພຣະຜູ້ມີພຣະພາຄເພື່ອອະນຸປາທາປະຣິນິພພານ.

ເມື່ອທ່ານພຣະປຸນນະມັນຕານີບຸຕກ່າວຢ່າງນີ້ແລ້ວ ທ່ານພຣະສາຣີບຸຕຈຶ່ງຖາມວ່າ:

ອາວຸໂສ! ທ່ານຊື່ຫຍັງ ແລະເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຮູ້ຈັກທ່ານວ່າແນວໃດ?

ທ່ານພຣະປຸນນະມັນຕານີບຸຕຕອບວ່າ:

ອາວຸໂສ! ຂ້ານ້ອຍຊື່ ປຸນນະ ແຕ່ເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຮູ້ຈັກຂ້ານ້ອຍວ່າ ມັນຕານີບຸຕ.

ທ່ານພຣະສາຣີບຸຕກ່າວວ່າ:

ອາວຸໂສ! ໜ້າອັສສະຈັນຍ໌ຫລາຍ ບໍ່ເຄີຍມີມາແລ້ວ ທັມອັນເລິກເຊິ່ງ ອັນທ່ານພຣະປຸນນະມັນຕານີບຸຕເລືອກເຟັ້ນມາກ່າວແກ້ດ້ວຍປັນຍາອັນເລິກເຊິ່ງ ຕາມຢ່າງທີ່ພຣະສາວົກຜູ້ໄດ້ສະດັບແລ້ວ ຮູ້ທົ່ວເຖິງຄຳສອນຂອງພຣະສາສດາໂດຍທ່ອງແທ້ ທີ່ຄວນກ່າວແກ້ ສະນັ້ນ ເປັນລາພຂອງເພື່ອນພຣົມມະຈັນຍ໌ທັງຫລາຍ ຄວາມເປັນມະນຸສອັນເພື່ອນພຣົມມະຈັນຍ໌ທັງຫລາຍໄດ້ດີແລ້ວ ທີ່ໄດ້ພົບເຫັນ ໄດ້ນັ່ງໃກ້ທ່ານພຣະປຸນນະມັນຕານີບຸຕ ເຖິງວ່າເພື່ອນພຣົມມະຈັນຍ໌ທັງຫລາຍຈະເທີດທູນທ່ານພຣະປຸນນະມັນຕານີບຸຕໄວ້ເທິງຫົວດ້ວຍເທີດຜ້າຈຶ່ງຈະໄດ້ພົບເຫັນ ໄດ້ນັ່ງໃກ້ ເຖິງຢ່າງນັ້ນກໍນັບວ່າເປັນລາພຂອງທ່ານເຫລົ່ານັ້ນ ຄວາມເປັນມະນຸສອັນທ່ານເຫລົ່ານັ້ນໄດ້ດີແລ້ວ. ອີກຢ່າງໜຶ່ງ ນັບວ່າເປັນລາພຂອງຂ້ານ້ອຍດ້ວຍ ເປັນການໄດ້ດີຂອງຂ້ານ້ອຍດ້ວຍ ທີ່ໄດ້ພົບເຫັນ ໄດ້ນັ່ງໃກ້ທ່ານພຣະປຸນນະມັນຕານີບຸຕ.

ເມື່ອທ່ານພຣະສາຣີບຸຕກ່າວຢ່າງນີ້ແລ້ວ ທ່ານພຣະປຸນນະມັນຕານີບຸຕຈຶ່ງຖາມວ່າ:

ອາວຸໂສ! ທ່ານຊື່ຫຍັງ ແລະເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຮູ້ຈັກທ່ານວ່າແນວໃດ?

ທ່ານພຣະສາຣີບຸຕຕອບວ່າ:

ອາວຸໂສ! ຂ້ານ້ອຍຊື່ ອຸປະຕິສສະ ແຕ່ເຫລົ່າພິກຂຸເພື່ອນພຣົມມະຈັນຍ໌ຮູ້ຈັກຂ້ານ້ອຍວ່າ ສາຣີບຸຕ.

ທ່ານພຣະປຸນນະມັນຕານີບຸຕກ່າວວ່າ:

ທ່ານຜູ້ຈະເຣີນ! ຂ້ານ້ອຍກຳລັງເວົ້າຢູ່ກັບທ່ານຜູ້ເປັນສາວົກຊຶ່ງຄຸນຄ້າຍກັບພຣະສາສດາ ບໍ່ຮູ້ເລີຍວ່າ ທ່ານຊື່ສາຣີບຸຕ ຖ້າຂ້ານ້ອຍຮູ້ວ່າ ທ່ານຊື່ສາຣີບຸຕແລ້ວ ຄຳທີ່ເວົ້າໄປພຽງເທົ່ານີ້ຄົງບໍ່ແຈ່ມແຈ້ງແກ່ຂ້ານ້ອຍໄດ້ ເປັນກາຣໜ້າອັສສະຈັນຍ໌ຈິງ ບໍ່ເຄີຍມີມາແລ້ວ ທັມອັນເລິກເຊິ່ງ ອັນທ່ານພຣະສາຣີບຸຕເລືອກເຟັ້ນມາຖາມແລ້ວດ້ວຍປັນຍາອັນເລິກເຊິ່ງ ຕາມຢ່າງທີ່ພຣະສາວົກຜູ້ໄດ້ສະດັບແລ້ວ ຮູ້ທົ່ວເຖິງຄຳສອນຂອງພຣະສາສດາໂດຍທ່ອງແທ້ ທີ່ຄວນຈະຖາມ ສະນັ້ນ ເປັນລາພຂອງ

ເພື່ອນພຣົມມະຈັນຍ໌ທັງຫລາຍ ຄວາມເປັນມະນຸສອັນເພື່ອນພຣົມມະຈັນຍ໌ທັງຫລາຍໄດ້ດີແລ້ວ ທີ່ໄດ້ພົບເຫັນ ໄດ້ນັ່ງໃກ້ທ່ານພຣະສາຣີບຸຕ ເຖິງວ່າເພື່ອນພຣົມມະຈັນຍ໌ທັງຫລາຍຈະເທີດທູນທ່ານພຣະສາຣີບຸຕໄວ້ເທິງຫົວດ້ວຍເທີດຜ້າຈຶ່ງຈະໄດ້ພົບເຫັນ ໄດ້ນັ່ງໃກ້ ເຖິງຢ່າງນັ້ນກໍນັບວ່າເປັນລາພຂອງທ່ານເຫລົ່ານັ້ນ ຄວາມເປັນມະນຸສອັນທ່ານເຫລົ່ານັ້ນໄດ້ດີແລ້ວ. ອີກຢ່າງໜຶ່ງ ນັບວ່າເປັນລາພຂອງຂ້ານ້ອຍດ້ວຍ ເປັນກາຣໄດ້ດີຂອງຂ້ານ້ອຍດ້ວຍ ທີ່ໄດ້ພົບເຫັນ ໄດ້ນັ່ງໃກ້ທ່ານພຣະສາຣີບຸຕ.

ພຣະມະຫານາຄທັງສອງນັ້ນ ຕ່າງຊື່ນຊົມສຸພາສິຕຂອງກັນແລະກັນດ້ວຍປະກາຣຢ່າງນີ້ແລ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໔/໔໐໑-໔໐໓/໔໙໔-໕໐໐*





ພິກຂຸທັງຫລາຍ ເຮົາຍ່ອມບໍ່ເຫັນທັມອື່ນແມ່ນແຕ່ຢ່າງດຽວທີ່ເປັນໄປເພື່ອຄວາມຕັ້ງໝັ້ນ ເພື່ອຄວາມບໍ່ເສື່ອມສູນ ເພື່ອຄວາມບໍ່ອັນຕຣະທານແຫ່ງສັທທັມເໝືອນຄວາມເປັນຜູ້ສັນໂດດ. ພິກຂຸທັງຫລາຍ ຄວາມເປັນຜູ້ສັນໂດດຍ່ອມເປັນໄປເພື່ອຄວາມຕັ້ງໝັ້ນ ເພື່ອຄວາມບໍ່ເສື່ອມສູນ ເພື່ອຄວາມບໍ່ອັນຕຣະທານແຫ່ງສັທທັມ.

*ອັງຄຸຕຕຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໑໗/໑໔໔*

# ຄວາມສັນໂດດເປັນໜຶ່ງໃນທັມທີ່ກະທຳທີ່ເພິ່ງ

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງເປັນຜູ້ມີທີ່ເພິ່ງຢູ່ເຖີດ ຢ່າເປັນຜູ້ບໍ່ມີທີ່ເພິ່ງຢູ່ເລີຍ ບຸຄຄົລຜູ້ບໍ່ມີທີ່ເພິ່ງຍ່ອມຢູ່ເປັນທຸກຂ໌.

ພິກຂຸທັງຫລາຍ! ທັມທີ່ກະທຳທີ່ເພິ່ງ ໑໐ ປະການີ້, ໑໐ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີສີລ ສັງຣວມໃນປາຕິໂມກຂ໌ ເຖິງພ້ອມດ້ວຍອາຈາຣະແລະໂຄຈອຣ ມີປົກກະຕິ

ເຫັນພັຍໃນໂທສແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັງຫລາຍ. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ມີສີລສັງຣວມໃນປາຕິໂມກຂ໌ ເຖິງພ້ອມດ້ວຍອາຈາຣະແລະໂຄຈອຣມີປົກກະຕິເຫັນພັຍໃນໂທສແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັງຫລາຍ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນພະຫູສູຕ ຊົງສຸຕະສັ່ງສົມສຸຕະ ເປັນຜູ້ໄດ້ຍິນໄດ້ຟັງຫລາຍ ຊົງໄວ້ ຄ່ອງປາກຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິເຊິ່ງທັມທັງຫລາຍອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທບໍຣິບູນສິ້ນເຊີງ. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນພະຫູສູຕ ຊົງສຸຕະ ສັ່ງສົມສຸຕະ ເປັນຜູ້ໄດ້ຍິນໄດ້ຟັງຫລາຍ ຊົງໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິເຊິ່ງທັມທັງຫລາຍອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະບໍຣິສຸທ ບໍຣິບູນສິ້ນເຊີງ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ມີມິຕດີ ມີສະຫາຍດີ ມີເພື່ອນດີ. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ມີມິຕດີມີສະຫາຍດີ ມີເພື່ອນດີ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ວ່າງ່າຍ ປະກອບດ້ວຍທັມທີ່ກະທຳໃຫ້ເປັນຜູ້ວ່າງ່າຍ ເປັນຜູ້ອົດທົນ ຮັບອະນຸສາສນີໂດຍເຄົາຣົພ. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ວ່າງ່າຍ ປະກອບດ້ວຍທັມທີ່ກະທຳໃຫ້ເປັນຜູ້ວ່າງ່າຍ ເປັນຜູ້ອົດທົນ ຮັບອະນຸສາສນີໂດຍເຄົາຣົພ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນກິຈທີ່ຄວນກະທຳທັງສູງທັງຕ່ຳຂອງເພື່ອນພຣົມມະຈັນຍ໌ທັງຫລາຍ ປະກອບດ້ວຍປັນຍາເປັນເຄື່ອງພິຈາຣະນາອັນເປັນອຸບາຍໃນກິຈນັ້ນ ສາມາດກະທຳ ສາມາດຈັດການໄດ້. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ຂະຫຍັນ ບໍ່ກຽດຄ້ານໃນກິຈທີ່ຄວນກະທຳທັງສູງທັງຕ່ຳຂອງເພື່ອນພຣົມມະຈັນຍ໌ທັງຫລາຍ ປະກອບດ້ວຍປັນຍາເປັນເຄື່ອງພິຈາຣະນາອັນເປັນອຸບາຍໃນກິຈນັ້ນ ສາມາດກະທຳ ສາມາດຈັດການໄດ້ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ຮັກໃຄ່ໃນທັມ ເປັນຜູ້ຟັງແລະເປັນຜູ້ສະແດງທັມອັນເປັນທີ່ຮັກ ມີຄວາມປາໂມຫຍ່າງຍິ່ງໃນທັມອັນຍິ່ງ ໃນວິນັຍອັນຍິ່ງ. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ຮັກໃຄ່ໃນທັມ ເປັນຜູ້ຟັງແລະເປັນຜູ້ສະແດງທັມ

ອັນເປັນທີ່ຮັກ ມີຄວາມປາໂມຫຍ່າງຍິ່ງໃນທັມອັນຍິ່ງ ໃນວິນັຍອັນຍິ່ງ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ປຣາຣົພຄວາມພຽນເພື່ອລະອະກຸສົລທັມທັງຫລາຍ ເພື່ອຄວາມເຖິງພ້ອມແຫ່ງກຸສົລທັມທັງຫລາຍ ເປັນຜູ້ມີກຳລັງ ມີຄວາມບາກບັ່ນໝັ້ນຄົງ ບໍ່ປະຖິ້ມທຸຣະໃນກຸສົລທັມທັງຫລາຍ. ພິກຂຸທັງຫລາຍຂໍ້ທີ່ພິກຂຸເປັນຜູ້ປຣາຣົພຄວາມພຽນເພື່ອລະອະກຸສົລທັມທັງຫລາຍ ເພື່ອຄວາມເຖິງພ້ອມແຫ່ງກຸສົລທັມທັງຫລາຍ ເປັນຜູ້ມີກຳລັງ ມີຄວາມບາກບັ່ນໝັ້ນຄົງ ບໍ່ປະຖິ້ມທຸຣະໃນກຸສົລທັມທັງຫລາຍ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

**ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້ ນີ້ເປັນທັມທີ່ກະທຳທີ່ເພິ່ງ.**

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ມີສະຕິ ປະກອບດ້ວຍສະຕິເປັນເຄື່ອງຮັກສາຕົນຢ່າງຍິ່ງ ຍ່ອມຕາມຣະນຶກເຖິງສິ່ງທີ່ເຄີຍທຳ ຄຳທີ່ເຄີຍເວົ້າແມ່ນແຕ່ນານໄດ້. ພິກຂຸທັງຫລາຍ

ຂໍ້ທີ່ພິກຂຸເປັນຜູ້ມີສະຕິ ປະກອບດ້ວຍສະຕິເປັນເຄື່ອງຮັກສາຕົນຢ່າງຍິ່ງ ຍ່ອມຕາມຣະນຶກເຖິງສິ່ງທີ່ເຄີຍທຳ ຄຳທີ່ເຄີຍເວົ້າແມ່ນແຕ່ນານໄດ້ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ມີປັນຍາ ປະກອບດ້ວຍປັນຍາເຄື່ອງກຳນົດຮູ້ຄວາມເກີດແລະຄວາມດັບ ອັນເປັນອະຣິຍະ ເປັນເຄື່ອງຊຳແຮກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍຊອບ. ພິກຂຸທັງຫລາຍ ຂໍ້ທີ່ພິກຂຸເປັນຜູ້ມີປັນຍາ ປະກອບດ້ວຍປັນຍາເຄື່ອງກຳນົດຮູ້ຄວາມເກີດແລະຄວາມດັບ ອັນເປັນອະຣິຍະ ເປັນເຄື່ອງຊຳແຮກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍຊອບ ນີ້ເປັນທັມທີ່ກະທຳທີ່ເພິ່ງ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງເປັນຜູ້ມີທີ່ເພິ່ງຢູ່ເຖີດ ຢ່າເປັນຜູ້ບໍ່ມີທີ່ເພິ່ງຢູ່ເລີຍ ບຸຄຄົລຜູ້ບໍ່ມີທີ່ເພິ່ງຍ່ອມຢູ່ເປັນທຸກຂ໌. ພິກຂຸທັງຫລາຍ ທັມທີ່ກະທຳທີ່ເພິ່ງ ໑໐ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໒໓-໒໕/໑໗*



# ຄວາມສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣ ເປັນໜຶ່ງໃນທັມອັນເປັນທີ່ຕັ້ງແຫ່ງຄວາມເຫລື້ອມໃສ

ສມັຍໜຶ່ງ ເມື່ອພຣະຜູ້ມີພຣະພາຄປະຣິນິພພານແລ້ວບໍ່ນານ ທ່ານພຣະອານົນທ໌ຢູ່ທີ່ພຣະວິຫາຣເວລຸວັນ ອັນເຄີຍເປັນສະຖານທີ່ພຣະຣາຊະທານເຫຍື່ອແກ່ກະແຕ ເຂຕພຣະນະຄອຣຣາຊະຄຶຫ໌ ສມັຍນັ້ນແລ ພຣະເຈົ້າອະຊາສັຕຕູເວເທຫິບຸຕ ເປັນຣາຊາແຫ່ງແຄວ້ນມະຄົທ ຊົງລະແວງພຣະເຈົ້າປັຊໂຊຕ ຈຶ່ງຕຣັສສັ່ງໃຫ້ສ້ອມແຊມພຣະນະຄອຣຣາຊະຄຶຫ໌.

ຄັ້ງນັ້ນແລ ທ່ານພຣະອານົນທ໌ນຸ່ງສະບົງ ຊົງບາຕແລະຈີວອຣ ເຂົ້າໄປບິນທະບາຕໃນພຣະນະຄອຣຣາຊະຄຶທ໌ໃນເວລາເຊົ້າ ຂະນະນັ້ນ ທ່ານມີຄວາມດຳຣິຢ່າງນີ້ວ່າ ຍັງເຊົ້າເກີນໄປທີ່ຈະທ່ຽວບິນທະບາຕໃນພຣະນະຄອຣຣາຊະຄຶທ໌ ຖ້າເຊັ່ນນັ້ນ ເຮົາຄວນເຂົ້າໄປຫາພຣາມນ໌ໂຄປະກະໂມຄຄັລລານະໃນບ່ອນເຮັດວຽກແລະທີ່ຢູ່ເຖີດ.

ຄັນແລ້ວ ທ່ານພຣະອານົນທ໌ຈຶ່ງເຂົ້າໄປຍັງທີ່ນັ້ນ ພຣາມນ໌ໂຄປະກະໂມຄຄັລລານະແລເຫັນທ່ານພຣະອານົນທ໌ເດີນມາແຕ່ໄກຈຶ່ງໄດ້ກ່າວກັບທ່ານພຣະອານົນທ໌ດັ່ງນີ້ວ່າ:

ນິມົນເຖີດ ທ່ານພຣະອານົນທ໌ຜູ້ຈະເຣີນ ທ່ານມາດີແລ້ວ ດົນແລ້ວທີ່ທ່ານໄດ້ແວະມາທີ່ນີ້ ນິມົນນັ່ງເຖີດ ນີ້ອາສະນະແຕ່ງຕັ້ງໄວ້ແລ້ວ ທ່ານພຣະອານົນທ໌ນັ່ງເທິງອາສະນະທີ່ແຕ່ງຕັ້ງໄວ້ແລ້ວ ຝ່າຍພຣາມນ໌ໂຄປະກະໂມຄຄັລລານະກໍຖືເອົາອາສະນະຕ່ຳແຫ່ງໜຶ່ງນັ່ງລົງ ພໍນັ່ງຮຽບຮ້ອຍແລ້ວ ພຣາມນ໌ໂຄປະກະໂມຄຄັລລານະໄດ້ກ່າວກັບທ່ານພຣະອານົນທ໌ວ່າ:

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍທີ່ເປັນຜູ້ເຖິງພ້ອມດ້ວຍທັມທຸກໆຂໍ້ ແລະທຸກໆປະການ ເໝືອນ

ດັ່ງທີ່ພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນ ຜູ້ເປັນພຣະອະຣະຫັນຕະສັມມາສັມພຸທທະເຖິງພ້ອມແລ້ວ?

ທ່ານພຣະອານົນທ໌ກ່າວວ່າ:

ພຣາມນ໌! ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ເປັນຜູ້ເຖິງພ້ອມດ້ວຍທັມທຸກໆຂໍ້ ແລະທຸກໆປະການ ເໝືອນດັ່ງທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ເປັນພຣະອະຣະຫັນຕະສັມມາສັມພຸທທະເຖິງພ້ອມແລ້ວ ເພາະພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນຊົງກະທຳມັຄທີ່ຍັງບໍ່ອຸບັຕ ໃຫ້ອຸບັຕ ທີ່ຍັງບໍ່ເກີດ ໃຫ້ເກີດ ຕຣັສບອກມັຄທີ່ຍັງບໍ່ມີໃຜບອກ ຊົງຊາບມັຄ*(ມັຄຄັນຍູ)* ຊົງຮູ້ແຈ້ງມັຄ*(ມັຄຄະວິທູ)* ແລະຊົງສລາດໃນມັຄ*(ມັຄຄະໂກວິໂທ)* ສ່ວນເຫລົ່າສາວົກໃນບັດນີ້ ເປັນຜູ້ດຳເນີນຕາມມັຄ*(ມັຄຄານຸຄາ)* ຈຶ່ງເປັນຜູ້ເຖິງພ້ອມໃນພາຍຫລັງຢູ່.

ກໍແລ ຄຳເວົ້າລະຫວ່າງທ່ານພຣະອານົນທ໌ກັບພຣາມນ໌ໂຄປະກະໂມຄຄັລລານະໄດ້ຄ້າງຢູ່ພຽງນີ້.

ຂະນະນັ້ນ ວັສສະກາຣະພຣາມນ໌ ມະຫາອະມາຕຍ໌ແຫ່ງມະຄົທຣັຖ ທ່ຽວກວດຣາຊະການໃນພຣະນະຄອຣຣາຊະຄຶຫ໌ໄດ້ເຂົ້າໄປຍັງບ່ອນເຮັດວຽກຂອງພຣາມນ໌ໂຄປະກະໂມຄຄັລ

ລານະ ທີ່ມີທ່ານພຣະອານົນທ໌ຢູ່ດ້ວຍ ແລ້ວໄດ້ທັກທາຍປຣາສັຍກັບທ່ານພຣະອານົນທ໌ ຄັນຜ່ານການທັກທາຍປຣາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ໄດ້ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພໍນັ່ງຮຽບຮ້ອຍແລ້ວ ໄດ້ກ່າວກັບທ່ານພຣະອານົນທ໌ດັ່ງນີ້ວ່າ:

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ພຣະຄຸນເຈົ້ານັ່ງສົນທະນາກັນດ້ວຍເຣື່ອງອັນໃດໜໍ ແລະພຣະຄຸນເຈົ້າເວົ້າເຣື່ອງອັນໃດຄ້າງຢູ່ໃນລະຫວ່າງ?

ທ່ານພຣະອານົນທ໌ກ່າວວ່າ:

ພຣາມນ໌! ໃນເຣື່ອງທີ່ເວົ້າກັນຢູ່ນີ້ ພຣາມນ໌ໂຄປະກະໂມຄຄັລລານະໄດ້ຖາມອາຕະມະພາບວ່າ:

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍທີ່ເປັນຜູ້ເຖິງພ້ອມດ້ວຍທັມທຸກໆຂໍ້ ແລະທຸກໆປະການ ເໝືອນດັ່ງທີ່ພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນ ຜູ້ເປັນພຣະອະຣະຫັນຕະສັມມາສັມພຸທທະເຖິງພ້ອມແລ້ວ?

ເມື່ອພຣາມນ໌ໂຄປະກະໂມຄຄັລລານະຖາມຢ່າງນີ້ແລ້ວ ອາຕະມະພາບໄດ້ຕອບວ່າ:

ພຣາມນ໌! ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ເປັນຜູ້ເຖິງພ້ອມດ້ວຍທັມທຸກໆຂໍ້ ແລະທຸກໆປະກາຣ ເໝືອນດັ່ງທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ເປັນພຣະອະຣະຫັນຕະສັມມາສັມພຸທທະເຖິງພ້ອມແລ້ວ ເພາະພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນຊົງກະທຳມັຄທີ່ຍັງບໍ່ອຸບັຕ ໃຫ້ອຸບັຕ ທີ່ຍັງບໍ່ເກີດ ໃຫ້ເກີດ ຕຣັສບອກມັຄທີ່ຍັງບໍ່ມີໃຜບອກ ຊົງຊາບມັຄ ຊົງຮູ້ແຈ້ງມັຄ ແລະຊົງສລາດໃນມັຄ ສ່ວນເຫລົ່າສາວົກໃນບັດນີ້ ເປັນຜູ້ດຳເນີນຕາມມັຄ ຈຶ່ງເປັນຜູ້ເຖິງພ້ອມໃນພາຍຫລັງຢູ່.

ນີ້ແລ ຄຳເວົ້າລະຫວ່າງອາຕະມະພາບກັບພຣາມນ໌ໂຄປະກະໂມຄຄັລລານະໄດ້ຄ້າງຢູ່ພຽງນີ້ ຈາກນັ້ນທ່ານກໍມາເຖິງ.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍທີ່ທ່ານພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນຊົງແຕ່ງຕັ້ງໄວ້ວ່າເມື່ອເຮົາລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງທ່ານທັງຫລາຍ ເຊິ່ງພຣະຄຸນເຈົ້າທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້?

ພຣາມນ໌! ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ຊົງຮູ້ ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະຊົງແຕ່ງຕັ້ງໄວ້ວ່າ ເມື່ອເຮົາລ່ວງລັບໄປແລ້ວ

ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງທ່ານທັງຫລາຍ ເຊິ່ງອາຕະມະພາບທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ທີ່ສົງຄ໌ອັນພິກຂຸຜູ້ເປັນເຖຣະຫລາຍອົງຄ໌ສົມມຸຕແລ້ວ ແຕ່ງຕັ້ງໄວ້ວ່າ ເມື່ອພຣະຜູ້ມີພຣະພາຄສະເດັຈລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງເຮົາທັງຫລາຍ ເຊິ່ງພຣະຄຸນເຈົ້າທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້?

ພຣາມນ໌! ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ສົງຄ໌ອັນພິກຂຸຜູ້ເປັນເຖຣະຫລາຍອົງຄ໌ສົມມຸຕແລ້ວ ແຕ່ງຕັ້ງໄວ້ວ່າ ເມື່ອພຣະຜູ້ມີພຣະພາຄສະເດັຈລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງເຮົາທັງຫລາຍ ເຊິ່ງອາຕະມະພາບທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ກໍເມື່ອບໍ່ມີທີ່ເພິ່ງອາສັຍຢ່າງນີ້ ອັນໃດໜໍຈະເປັນເຫຕແຫ່ງຄວາມສາມັຄຄີກັນໂດຍທັມ?

**ພຣາມນ໌! ອາຕະມະພາບທັງຫລາຍບໍ່ແມ່ນວ່າບໍ່ມີທີ່ເພິ່ງອາສັຍເລີຍ ພວກອາຕະມະພາບມີທີ່ເພິ່ງອາສັຍຄື ມີທັມເປັນທີ່ເພິ່ງອາສັຍ.**

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ຂ້ານ້ອຍຖາມພຣະຄຸນເຈົ້າຢ່າງນີ້ວ່າ ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ທີ່ທ່ານພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນຊົງແຕ່ງຕັ້ງໄວ້ວ່າ ເມື່ອເຮົາລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງທ່ານທັງຫລາຍ ເຊິ່ງພຣະຄຸນເຈົ້າທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້ ພຣະຄຸນເຈົ້າຕອບວ່າ “ພຣາມນ໌ ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ຊົງຮູ້ ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະຊົງແຕ່ງຕັ້ງໄວ້ວ່າ ເມື່ອເຮົາລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງທ່ານທັງຫລາຍ ເຊິ່ງອາຕະມະພາບທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້.”

ຂ້ານ້ອຍຖາມຕໍ່ໄປວ່າ:

ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ທີ່ສົງຄ໌ອັນພິກຂຸຜູ້ເປັນເຖຣະຫລາຍອົງຄ໌ສົມມຸຕແລ້ວ ແຕ່ງຕັ້ງໄວ້ວ່າ ເມື່ອພຣະຜູ້ມີພຣະພາຄສະເດັຈລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງເຮົາທັງຫລາຍ ເຊິ່ງພຣະຄຸນເຈົ້າທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້?

ພຣະຄຸນເຈົ້າກໍຕອບວ່າ:

"ພຣາມນ໌! ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ສົງຄ໌ອັນພິກຂຸຜູ້ເປັນເຖຣະຫລາຍອົງຄ໌ສົມມຸຕແລ້ວ ແຕ່ງຕັ້ງໄວ້ວ່າ ເມື່ອພຣະຜູ້ມີພຣະພາຄສະເດັຈລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງເຮົາທັງຫລາຍ ເຊິ່ງອາຕະມະພາບທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້."

ແລະຂ້ານ້ອຍກໍຖາມຕໍ່ໄປອີກວ່າ:

ກໍເມື່ອບໍ່ມີທີ່ເພິ່ງອາສັຍຢ່າງນີ້ ອັນໃດໜໍຈະເປັນເຫຕແຫ່ງຄວາມສາມັຄຄີກັນໂດຍທັມ?

ພຣະຄຸນເຈົ້າກໍຕອບວ່າ:

"ພຣາມນ໌! ອາຕະມະພາບທັງຫລາຍບໍ່ແມ່ນວ່າບໍ່ມີທີ່ເພິ່ງອາສັຍເລີຍ ພວກອາຕະມະພາບມີທີ່ເພິ່ງອາສັຍຄື ມີທັມເປັນທີ່ເພິ່ງອາສັຍ."

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ກໍຄຳທີ່ພຣະຄຸນເຈົ້າກ່າວແລ້ວນີ້ ຂ້ານ້ອຍຄວນຈະເຫັນເນື້ອຄວາມໄດ້ຢ່າງໃດ?

ພຣາມນ໌! ມີຢູ່ແລ ທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ຊົງຮູ້ ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະ ຊົງບັນຍັຕ ສິກຂາບົທແກ່ພິກຂຸທັງຫລາຍ ຊົງສະແດງປາຕິໂມກຂ໌ແກ່ພິກຂຸ ທັງຫລາຍທຸກໆວັນອຸໂປສົຖ ອາຕະມະພາບທັງຫລາຍເທົ່າທີ່ມີ ຢູ່ນັ້ນ ຈະເຂົ້າໄປອາສັຍຄາມະເຂຕແຫ່ງໜຶ່ງຢູ່ ທຸກໆອົງຄ໌ຈະ ປະຊຸມຮ່ວມກັນ ຄັນແລ້ວຈະນິມົນພິກຂຸອົງຄ໌ທີ່ສູຕປາຕິໂມກຂ໌ ໄດ້ໃຫ້ສູຕ ຖ້າຂະນະທີ່ສູຕປາຕິໂມກຂ໌ຢູ່ ປາກົຕພິກຂຸມີອາບັຕ ແລະໂທສທີ່ລ່ວງລະເມີດ ອະຕະມະພາບທັງຫລາຍຈະໃຫ້ເຂົາ ກະທຳຕາມທັມ ຕາມທີ່ຊົງສັ່ງສອນໄວ້ ເພາະສະນັ້ນເປັນ ອັນວ່າ ພິກຂຸຜູ້ຈະເຣີນທັງຫລາຍບໍ່ໄດ້ໃຫ້ພວກອາຕະມະພາບ ກະທຳ, ທັມຕ່າງຫາກໃຫ້ພວກອາຕະມະພາບກະທຳ.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ເຊິ່ງພິກຂຸທັງຫລາຍສັກກາຣະ ເຄົາຣົພ ນັບຖື ບູຊາ ຄັນສັກ ກາຣະ ເຄົາຣົພແລ້ວ ຍ່ອມເຂົ້າໄປອາສັຍຢູ່ໃນບັດນີ້?

ພຣາມນ໌! ມີຢູ່ອົງຄ໌ໜຶ່ງແລ ເຊິ່ງພິກຂຸທັງຫລາຍສັກກາຣະ ເຄົາ ຣົພ ນັບຖື ບູຊາ ຄັນສັກກາຣະ ເຄົາຣົພແລ້ວ ຍ່ອມເຂົ້າໄປ ອາສັຍຢູ່ໃນບັດນີ້.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ຂ້ານ້ອຍຖາມພຣະຄຸນເຈົ້າຢ່າງນີ້ວ່າ ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ທີ່ທ່ານພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນຊົງແຕ່ງຕັ້ງໄວ້ວ່າ ເມື່ອເຮົາລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງທ່ານທັງຫລາຍ ເຊິ່ງພຣະຄຸນເຈົ້າທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້ ພຣະຄຸນເຈົ້າຕອບວ່າ "ພຣາມນ໌ ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ຊົງຮູ້ ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະຊົງແຕ່ງຕັ້ງໄວ້ວ່າ ເມື່ອເຮົາລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງທ່ານທັງຫລາຍ ເຊິ່ງອາຕະມະພາບທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້."

ຂ້ານ້ອຍຖາມຕໍ່ໄປວ່າ:

ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ທີ່ສົງຄ໌ອັນພິກຂຸຜູ້ເປັນເຖຣະຫລາຍອົງຄ໌ສົມມຸຕແລ້ວ ແຕ່ງຕັ້ງໄວ້ວ່າ ເມື່ອພຣະຜູ້ມີພຣະພາຄສະເດັຈລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງເຮົາທັງຫລາຍ ເຊິ່ງພຣະຄຸນເຈົ້າທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້?

ພຣະຄຸນເຈົ້າກໍຕອບວ່າ:

"ພຣາມນ໌! ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ສົງຄ໌ອັນພິກຂຸຜູ້ເປັນເຖຣະຫລາຍອົງຄ໌ສົມມຸຕແລ້ວ ແຕ່ງຕັ້ງໄວ້ວ່າ ເມື່ອພຣະຜູ້ມີພຣະພາຄສະເດັຈລ່ວງລັບໄປແລ້ວ ພິກຂຸອົງຄ໌ນີ້ຈັກເປັນທີ່ເພິ່ງອາສັຍຂອງເຮົາທັງຫລາຍ ເຊິ່ງອາຕະມະພາບທັງຫລາຍຍ່ອມເຂົ້າໄປຫາໄດ້ໃນບັດນີ້."

ແລະຂ້ານ້ອຍກໍຖາມຕໍ່ໄປອີກວ່າ:

ມີພິກຂຸຈັກອົງຄ໌ໜຶ່ງແດ່ບໍ ເຊິ່ງພິກຂຸທັງຫລາຍສັກກາຣະ ເຄົາຣົພ ນັບຖື ບູຊາ ຄັນສັກກາຣະ ເຄົາຣົພແລ້ວ ຍ່ອມເຂົ້າໄປອາສັຍຢູ່ໃນບັດນີ້?

ພຣະຄຸນເຈົ້າກໍຕອບວ່າ:

"ພຣາມນ໌! ມີຢູ່ອົງຄ໌ໜຶ່ງແລ ເຊິ່ງພິກຂຸທັງຫລາຍສັກກາຣະເຄົາຣົພ ນັບຖື ບູຊາ ຄັນສັກກາຣະ ເຄົາຣົພແລ້ວ ຍ່ອມເຂົ້າໄປອາສັຍຢູ່ໃນບັດນີ້."

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ກໍຄໍາທີ່ພຣະຄຸນເຈົ້າກ່າວແລ້ວນີ້ ຂ້ານ້ອຍຄວນຈະເຫັນເນື້ອຄວາມໄດ້ຢ່າງໃດ?

ພຣາມນ໌! ມີຢູ່ແລ ທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ຊົງຮູ້ ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະ ຕຣັສບອກ ທັມເປັນທີ່ຕັ້ງແຫ່ງຄວາມເຫລື້ອມໃສ ໑໐ ປະການ ບັນດາ ພິກຂຸທັງຫລາຍ ອົງຄ໌ໃດມີທັມເຫລົ່ານັ້ນ ອາຕະມະພາບ ທັງຫລາຍຍ່ອມສັກກາຣະ ເຄົາຣົພ ນັບຖື ບູຊາ ຄັນສັກກາຣະ ເຄົາຣົພແລ້ວ ຍ່ອມເຂົ້າໄປອາສັຍຢູ່ໃນບັດນີ້, ໑໐ ປະການເປັນ ຢ່າງໃດ?

ພຣາມນ໌! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີສີລ ສັງຣວມຣະວັງໃນ ປາຕິໂມກຂ໌ ເຖິງພ້ອມດ້ວຍມະຣະຍາທແລະໂຄຈອຣ ເປັນຜູ້ ເຫັນພັຍໃນໂທສແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນ ສິກຂາບົທທັງຫລາຍ.

ເປັນພະຫຸສູຕ ຊົງສຸຕະ ສັ່ງສົມສຸຕະ ເປັນຜູ້ໄດ້ສະດັບຫລາຍ ຊົງໄວ້ ຄ່ອງປາກ ຂຶ້ນໃຈ ແທງຕລອດດ້ວຍດີດ້ວຍທິຕຖິໃນ ທັມທັງຫລາຍ ອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມ ໃນທີ່ສຸດ ປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງ ພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ.

**ເປັນຜູ້ສັນໂດດດ້ວຍຈີວອຣ ບິນທະບາຕ ເສນາສະນະ ແລະ ຄິລານະປັຈຈັຍເພສັຊບໍຣິຂາຣ.**

ເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ ເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນເປັນເຄື່ອງຢູ່ເປັນສຸຂ ໃນປັຈຈຸບັນ.

ຍ່ອມສະແດງລິທໄດ້ໂດຍອະເນກປະການຄື:
ຄົນດຽວເຮັດເປັນຫລາຍຄົນກໍໄດ້;
ຫລາຍຄົນເປັນຄົນດຽວກໍໄດ້;
ຫາຍໂຕໄປນອກຝາ ນອກກຳແພງ ນອກພູເຂົາໄດ້ໂດຍບໍ່ຕິດ ຂັດເໝືອນໄປໃນທີ່ວ່າງກໍໄດ້;
ກະທຳການຜຸດຂຶ້ນຫລືມຸດລົງໃນແຜ່ນດິນເໝືອນໃນນ້ຳກໍໄດ້;
ເດີນເທິງນ້ຳເໝືອນເດີນໃນແຜ່ນດິນກໍໄດ້;
ເຫາະໄປໃນອາກາສທັງໆທີ່ຍັງນັ່ງຄູ້ບັນລັງເໝືອນນົກກໍໄດ້;
ລູບຄຳດວງຈັນທ໌ ດວງອາທິຕເຊິ່ງມີລິທຫລາຍ ມີອານຸພາບ ຫລາຍດ້ວຍຝາມືກໍໄດ້;
ໃຊ້ອຳນາຈທາງກາຍໄປຕລອດພຣົມມະໂລກກໍໄດ້.

ສາມາດຟັງສຽງທັງ ໒ ຄື ສຽງທິພຍ໌ແລະສຽງມະນຸສທັງໃນທີ່ ໄກແລະໃນທີ່ໃກ້ ດ້ວຍທິພພະໂສຕະ*(ຫູທິບ)* ອັນບໍຣິສຸທ ລ່ວງ ໂສຕະຂອງມະນຸສ.

ສາມາດກຳນົດຮູ້ໃຈຂອງສັຕອື່ນ ແລະບຸຄຄົລອື່ນໄດ້ດ້ວຍໃຈຄື:

ຈິຕມີຣາຄະ ກໍຮູ້ວ່າ ຈິຕມີຣາຄະ;
ຈິຕປາສະຈາກຣາຄະ ກໍຮູ້ວ່າ ຈິຕປາສະຈາກຣາຄະ;
ຈິຕມີໂທສະ ກໍຮູ້ວ່າ ຈິຕມີໂທສະ;
ຈິຕປາສະຈາກໂທສະ ກໍຮູ້ວ່າ ຈິຕປາສະຈາກໂທສະ;
ຈິຕມີໂມຫະ ກໍຮູ້ວ່າ ຈິຕມີໂມຫະ;
ຈິຕປາສະຈາກໂມຫະ ກໍຮູ້ວ່າ ຈິຕປາສະຈາກໂມຫະ;
ຈິຕຫົດຫູ່ ກໍຮູ້ວ່າ ຈິຕຫົດຫູ່;
ຈິຕຟຸ້ງຊ່ານ ກໍຮູ້ວ່າ ຈິຕຟຸ້ງຊ່ານ;
ຈິຕເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕເປັນມະຫັຄຄະຕະ;
ຈິຕບໍ່ເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕບໍ່ເປັນມະຫັຄຄະຕະ;
ຈິຕມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕມີຈິຕອື່ນຍິ່ງກວ່າ;
ຈິຕບໍ່ມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕບໍ່ມີຈິຕອື່ນຍິ່ງກວ່າ;
ຈິຕຕັ້ງໝັ້ນ ກໍຮູ້ວ່າ ຈິຕຕັ້ງໝັ້ນ;
ຈິຕບໍ່ຕັ້ງໝັ້ນ ກໍຮູ້ວ່າ ຈິຕບໍ່ຕັ້ງໝັ້ນ;
ຈິຕຫລຸດພົ້ນ ກໍຮູ້ວ່າ ຈິຕຫລຸດພົ້ນ;
ຈິຕບໍ່ຫລຸດພົ້ນ ກໍຮູ້ວ່າ ຈິຕບໍ່ຫລຸດພົ້ນ.

ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອະເນກປະກາຣຄື ຣະນຶກໄດ້ຊາຕໜຶ່ງແດ່ ສອງຊາຕແດ່ ສາມຊາຕແດ່ ສີ່ຊາຕແດ່ ຫ້າຊາຕແດ່ ສິບຊາຕແດ່ ຊາວຊາຕແດ່ ສາມສິບຊາຕແດ່ ສີ່ສິບຊາຕແດ່ ຫ້າສິບຊາຕແດ່ ຮ້ອຍຊາຕແດ່ ພັນຊາຕແດ່ ແສນ

ຊາຕແດ່ ຫລາຍສັງວັຕຕະກັປ ຫລາຍວິວັຕຕະກັປແດ່ ຫລາຍສັງວັຕຕະວິວັຕຕະກັປແດ່ ວ່າໃນພົພນັ້ນ ເຮົາມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫາຣຢ່າງນັ້ນ ສະເຫວີຍສຸຂສະເຫວີຍທຸກຂ໌ຢ່າງນັ້ນ ມີກຳນົດອາຍຸເທົ່ານັ້ນ. ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ໄປບັງເກີດໃນພົພນັ້ນ ແມ່ນແຕ່ໃນພົພນັ້ນ ເຮົາກໍມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫາຣຢ່າງນັ້ນ ສະເຫວີຍສຸຂສະເຫວີຍທຸກຂ໌ຢ່າງນັ້ນ ມີກຳນົດອາຍຸເທົ່ານັ້ນ ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ມາບັງເກີດໃນພົພນີ້ ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອະເນກ ພ້ອມທັງອາການ ພ້ອມທັງອຸເທສ ດ້ວຍປະການຢ່າງນີ້.

ຍ່ອມມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກ ດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕຜູ້ເປັນໄປຕາມກັມວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຢຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕນະຣົກ. ສ່ວນສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຢຶດຖືການກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກ

ກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ ດັ່ງນີ້. ເຂົາຍ່ອມເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກ ດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕທີ່ເປັນໄປຕາມກັມ ດ້ວຍປະການຢ່າງນີ້.

ຍ່ອມກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່.

ພຣາມນ໌! ນີ້ແລ ທັມເປັນທີ່ຕັ້ງແຫ່ງຄວາມເຫລື້ອມໃສ ໑໐ ປະການ ທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ຊົງຮູ້ ຊົງເຫັນເປັນພຣະອະຣະຫັນຕະສັມມາສັມພຸທທະ ຕຣັສບອກໄວ້ບັນດາພິກຂຸທັງຫລາຍ ອົງຄ໌ໃດມີທັມເຫລົ່ານັ້ນ ອາຕະມະພາບທັງຫລາຍຍ່ອມສັກກາຣະ ເຄົາຣົພ ນັບຖື ບູຊາ ຄັນສັກກາຣະເຄົາຣົພແລ້ວ ຍ່ອມເຂົ້າໄປອາສັຍຢູ່ໃນບັດນີ້.

ເມື່ອທ່ານພຣະອານົນທ໌ກ່າວຢ່າງນີ້ແລ້ວ ວັສສະກາຣະພຣາມນ໌ມະຫາອະມາຕຍ໌ແຫ່ງມະຄົທຣັຖໄດ້ຮຽກອຸປະນັນທະເສນາບໍດີມາກ່າວວ່າ:

ເສນາບໍດີ! ທ່ານຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ທີ່ພຣະຄຸນເຈົ້າເຫລົ່ານີ້ ສັກກາຣະທັມທີ່ຄວນສັກກາຣະ ເຄົາຣົພທັມທີ່ຄວນເຄົາຣົພ ນັບຖືທັມທີ່ຄວນນັບຖື ບູຊາທັມທີ່ຄວນບູຊາຢູ່ຢ່າງນີ້ ຕົກລົງພຣະຄຸນເຈົ້າເຫລົ່ານີ້ ຍ່ອມສັກກາຣະທັມທີ່ຄວນສັກກາຣະ ເຄົາຣົພທັມທີ່ຄວນເຄົາຣົພ ນັບຖືທັມທີ່ຄວນນັບຖືບູຊາທັມທີ່ຄວນບູຊາ ກໍຖ້າພຣະຄຸນເຈົ້າເຫລົ່ານີ້ບໍ່ສັກກາຣະເຄົາຣົພ ນັບຖື ບູຊາສິ່ງນີ້ ພຣະຄຸນເຈົ້າເຫລົ່ານີ້ຈະສັກກາຣະເຄົາຣົພ ນັບຖື ບູຊາສິ່ງໃດ ແລ້ວຈະເຂົ້າໄປອາສັຍສິ່ງໃດຢູ່ໄດ້?

ຈາກນັ້ນ ວັສສະກາຣະພຣາມນ໌ ມະຫາອະມາຕຍ໌ແຫ່ງມະຄົທຣັຖຖາມທ່ານພຣະອານົນທ໌ດັ່ງນີ້ວ່າ:

ກໍເວລານີ້ ທ່ານພຣະອານົນທ໌ອາສັຍຢູ່ທີ່ໃດໜໍ?

ພຣາມນ໌! ເວລານີ້ ອາຕະມະພາບຢູ່ທີ່ພຣະວິຫາຣເວລຸວັນ.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ກໍພຣະວິຫາຣເວລຸວັນເປັນທີ່ຣື່ນຣົມຍ໌ ງຽບສງັດ ແລະບໍ່ອຶກະທຶກຄຶກໂຄມ ມີລົມພັດເຢັນສະບາຍ ເປັນທີ່ພັກຜ່ອນຂອງມະນຸສ ສົມຄວນແກ່ການຫລີກເຣັ້ນຢູ່.

ພຣາມນ໌! ຄວາມຈິງ ພຣະວິຫາຣເວລຸວັນຈະເປັນທີ່ຣື່ນຣົມຍ໌ ງຽບສງັງ ແລະບໍ່ອຶກະທຶກຄຶກໂຄມ ມີລົມພັດເຢັນສະບາຍ ເປັນທີ່ພັກຜ່ອນຂອງມະນຸສ ສົມຄວນແກ່ການຫລີກເຮັ້ນຢູ່ ກໍດ້ວຍມີຜູ້ຮັກສາຄຸ້ມຄອງເຊັ່ນທ່ານ.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ຄວາມຈິງ ພຣະວິຫາຣເວລຸວັນຈະເປັນທີ່ຣື່ນຣົມຍ໌ ງຽບສງັງ ແລະບໍ່ອຶກະທຶກຄຶກໂຄມ ມີລົມພັດເຢັນສະບາຍ ເປັນທີ່ພັກຜ່ອນຂອງມະນຸສ ສົມຄວນແກ່ການຫລີກເຮັ້ນຢູ່ ກໍດ້ວຍມີພຣະຄຸນເຈົ້າທັງຫລາຍເປັນຜູ້ມີຊານ ແລະເຂົ້າຊານເປັນປົກກະຕິຕ່າງຫາກ ພຣະຄຸນເຈົ້າທັງຫລາຍທັງມີຊານແລະເຂົ້າຊານເປັນປົກກະຕິ.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ຂ້ານ້ອຍຂໍເລົ່າຖວາຍສມັຍໜຶ່ງ ພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນ ປະທັບຢູ່ທີ່ກູຕາຄາຣະສາລາ ໃນປ່າມະຫາວັນ ເຂຕພຣະນະຄອຣເວສາລີ ຄັ້ງນັ້ນແລ ຂ້ານ້ອຍເຂົ້າໄປເຝົ້າພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນເຖິງທີ່ປະທັບ ໃນກູຕາຄາຣະສາລາ ປ່າມະຫາວັນ ໃນທີ່ນັ້ນແລ ພຣະອົງຄ໌ໄດ້ຕຣັສຊານກະຖາໂດຍອະເນກປະຣິຍາຍ ພຣະອົງຄ໌ທັງເປັນຜູ້ມີຊານແລະເປັນຜູ້ເຂົ້າຊານເປັນປົກກະຕິ ແລະຊົງສັນລະເສີນຊານທັງປວງ.

ພຣາມນ໌! ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຊົງສັນລະເສີນຊານທັງປວງກໍບໍ່ແມ່ນ ບໍ່ຊົງສັນລະເສີນຊານທັງປວງກໍບໍ່ແມ່ນ ພຣະອົງຄ໌ບໍ່ຊົງສັນລະເສີນຊານເຊັ່ນໃດ?

ພຣາມນ໌! ພິກຂຸບາງອົງຄ໌ໃນທັມວິນັຍນີ້ ມີໃຈປະກອບດ້ວຍການຣາຄະ ຖືກການຣາຄະຄອບງໍາຢູ່ ແລະບໍ່ຮູ້ຈັກການສະລັດອອກເຊິ່ງການຣາຄະທີ່ເກີດຂຶ້ນແລ້ວຕາມຄວາມເປັນຈິງ ເຂົາຍ່ອມເພັ່ງເລັ່ງ ຈົດຈໍ່ ປັກໃຈ ມຸ່ງໝາຍສະເພາະການຣາຄະ ກະທໍາການຣາຄະໄວ້ໃນພາຍໃນ;

ມີໃຈປະກອບດ້ວຍພະຍາບາທ ຖືກພະຍາບາທຄອບງໍາຢູ່ ແລະບໍ່ຮູ້ຈັກການສະລັດອອກເຊິ່ງພະຍາບາທທີ່ເກີດຂຶ້ນແລ້ວຕາມຄວາມເປັນຈິງ ເຂົາຍ່ອມເພັ່ງເລັ່ງ ຈົດຈໍ່ ປັກໃຈ ມຸ່ງໝາຍສະເພາະພະຍາບາທ ກະທໍາພະຍາບາທໄວ້ໃນພາຍໃນ;

ມີໃຈປະກອບດ້ວຍຖີນະມິທທະ ຖືກຖີນະມິທທະຄອບງໍາຢູ່ ແລະບໍ່ຮູ້ຈັກການສະລັດອອກເຊິ່ງຖີນະມິທທະທີ່ເກີດຂຶ້ນແລ້ວຕາມຄວາມເປັນຈິງ ເຂົາຍ່ອມເພັ່ງເລັ່ງ ຈົດຈໍ່ ປັກໃຈ ມຸ່ງໝາຍສະເພາະຖີນະມິທທະ ກະທໍາຖີນະມິທທະໄວ້ໃນພາຍໃນ;

ມີໃຈປະກອບດ້ວຍອຸທທັຈຈະກຸກກຸຈຈະ ຖືກອຸທທັຈຈະກຸກກຸຈຈະຄອບງຳຢູ່ ແລະບໍ່ຮູ້ຈັກການສະລັດອອກເຊິ່ງອຸທທັຈຈະກຸກກຸຈຈະທີ່ເກີດຂຶ້ນແລ້ວຕາມຄວາມເປັນຈິງ ເຂົາຍ່ອມເພັ່ງເລັ່ງຈົດຈໍ່ ປັກໃຈ ມຸ່ງໝາຍສະເພາະອຸທທັຈຈະກຸກກຸຈຈະ ກະທຳອຸທທັຈຈະກຸກກຸຈຈະໄວ້ໃນພາຍໃນ;

ມີໃຈປະກອບດ້ວຍວິຈິກິຈສາ ຖືກວິຈິກິຈສາຄອບງຳຢູ່ ແລະບໍ່ຮູ້ຈັກການສະລັດອອກເຊິ່ງວິຈິກິຈສາທີ່ເກີດຂຶ້ນແລ້ວຕາມຄວາມເປັນຈິງ ເຂົາຍ່ອມເພັ່ງເລັ່ງ ຈົດຈໍ່ ປັກໃຈ ມຸ່ງໝາຍສະເພາະວິຈິກິຈສາ ກະທຳວິຈິກິຈສາໄວ້ໃນພາຍໃນ.

ພຣາມນ໌! ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນບໍ່ຊົງສັນລະເສີນຊານເຊັ່ນນີ້ແລ.

ພຣາມນ໌! ກໍພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນຊົງສັນລະເສີນຊານເຊັ່ນໃດ?

ພຣາມນ໌! ພິກຂຸໃນທັມວິນັຍນີ້ ສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣມີປີຕິແລະສຸຂອັນເກີດແຕ່ວິເວກຢູ່;

ເພາະວິຕົກວິຈາຣສງົບຣະງັບໄປ ຍ່ອມບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິຢູ່;

ເພາະປີຕິສິ້ນໄປ ເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະສະເຫວີຍສຸຂດ້ວຍກາຍ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາ ມີສະຕິຢູ່ເປັນສຸຂ.

ເພາະລະສຸຂແລະທຸກຂ໌ເສຍໄດ້ ແລະເພາະຄວາມດັບຫາຍໄປແຫ່ງໂສມະນັສແລະໂທມະນັສໃນກາລກ່ອນ ຍ່ອມບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່.

ພຣາມນ໌! ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນຊົງສັນລະເສີນຊານເຊັ່ນນີ້ແລ.

ຂ້າແຕ່ທ່ານພຣະອານົນທ໌ຜູ້ຈະເຣີນ! ເປັນອັນວ່າ ພຣະໂຄດົມຜູ້ຈະເຣີນພຣະອົງຄ໌ນັ້ນຊົງຕິຕຽນຊານທີ່ຄວນຕິຕຽນ ຊົງສັນລະເສີນຊານທີ່ຄວນສັນລະເສີນ.

ເອີາລະ! ຂ້ານ້ອຍມີກິຈຫລາຍ ມີກະຣະນີຍະກິຈຫລາຍ ຈະຂໍລາໄປໃນບັດນີ້.

ພຣາມນ໌! ຂໍທ່ານໂປດສຳຄັນກາລອັນຄວນໃນບັດນີ້ເຖີດ. ວັສສະກາຣະພຣາມນ໌ ມະຫາອະມາຕຍ໌ແຫ່ງມະຄົທຣັຖຊື່ນຊົມຍິນດີພາສິຕຂອງທ່ານພຣະອານົນທ໌ແລ້ວ ລຸກຈາກອາສະນະຫລີກໄປ.

ເມື່ອວັສສະກາຣະພຣາມນ໌ ມະຫາອະມາຕຍ໌ແຫ່ງມະຄົທຣັຖຫລີກໄປແລ້ວບໍ່ນານ, ພຣາມນ໌ໂຄປະກະໂມຄຄັລລານະໄດ້ກ່າວກັບທ່ານພຣະອານົນທ໌ວ່າ:

ບັນຫາຂອງຂ້ານ້ອຍ ເຊິ່ງຂ້ານ້ອຍໄດ້ຖາມທ່ານພຣະອານົນທ໌ນັ້ນ ທ່ານພຣະອານົນທ໌ຍັງບໍ່ໄດ້ພະຍາກອຣແກ່ຂ້ານ້ອຍເລີຍ.

ທ່ານພຣະອານົນທ໌ກ່າວວ່າ:

ພຣາມນ໌! ເຮົາໄດ້ກ່າວແກ່ທ່ານແລ້ວບໍ່ແມ່ນຫລືວ່າ ພຣາມນ໌ ບໍ່ມີເລີຍແມ່ນແຕ່ອົງຄ໌ດຽວ ທີ່ເປັນຜູ້ເຖິງພ້ອມດ້ວຍທັມທຸກໆຂໍ້ແລະທຸກໆປະການ ເໝືອນດັ່ງທີ່ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຜູ້ເປັນພຣະອະຣະຫັນຕະສັມມາສັມພຸທທະເຖິງພ້ອມແລ້ວ

ເພາະພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນຊົງກະທຳມັຄທີ່ຍັງບໍ່ອຸບັຕ ໃຫ້ອຸບັຕ ທີ່ຍັງບໍ່ເກີດ ໃຫ້ເກີດ ຕຣັສບອກມັຄທີ່ຍັງບໍ່ມີໃຜບອກ ຊົງຊາບມັຄ ຊົງຮູ້ແຈ້ງມັຄ ແລະຊົງສລາດໃນມັຄ ສ່ວນເຫລົ່າສາວົກໃນບັດນີ້ ເປັນຜູ້ດຳເນີນຕາມມັຄ ຈຶ່ງເປັນຜູ້ເຖິງພ້ອມໃນພາຍຫລັງຢູ່.

---

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໖໘-໗໙/໑໐໕-໑໑໒*



## ພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເສພອາສັຍຢູ່ເຊິ່ງເສນາສະນະທີ່ປະກອບດ້ວຍອົງຄ໌ ໕ ບໍ່ນານຍ່ອມກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປ

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເສພ ອາສັຍຢູ່ເຊິ່ງເສນາສະນະທີ່ປະກອບດ້ວຍອົງຄ໌ ໕ ບໍ່ນານຍ່ອມກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່.

ພິກຂຸທັງຫລາຍ! ກໍພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີສັທທາ ເຊື່ອພຣະປັນຍາກາຣຕຣັສຮູ້ຂອງຕະຖາຄົຕວ່າ ເພາະເຫຕນີ້ໆ ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ.

ເປັນຜູ້ມີອາພາທໜ້ອຍ ມີໂຣຄເບົາບາງ ປະກອບດ້ວຍໄຟທາຕສຳຣັບຍ່ອຍອາຫາຣສະໝ່ຳສະເໝີ ບໍ່ເຢັນຫລາຍ ບໍ່ຮ້ອນຫລາຍ ປານກາງ ຄວນແກ່ກາຣບຳເພັນພຽນ.

ເປັນຜູ້ບໍ່ໂອ້ອວດ ບໍ່ມີມາຍາ ກະທຳຕົນໃຫ້ເປີດເຜີຍຕາມຄວາມເປັນຈິງໃນສາສດາຫລືໃນເພື່ອນພຣົມມະຈັນຍ໌ທີ່ເປັນວິນຍູຊົນ.

ເປັນຜູ້ປຣາຣົພຄວາມພຽນເພື່ອລະອະກຸສົລທັມທັງຫລາຍ ເພື່ອຄວາມເຖິງພ້ອມແຫ່ງກຸສົລທັມທັງຫລາຍ ເປັນຜູ້ມີກຳລັງ ມີຄວາມບາກບັ່ນໝັ້ນຄົງ ບໍ່ປະຖິ້ມທຸຣະໃນກຸສົລທັມທັງຫລາຍ.

ເປັນຜູ້ມີປັນຍາ ປະກອບດ້ວຍປັນຍາທີ່ເຫັນຄວາມເກີດຄວາມດັບອັນເປັນອະຣິຍະ ເປັນເຄື່ອງຊຳແຮກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍຊອບ.

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເປັນຢ່າງນີ້ແລ.

ພິກຂຸທັງຫລາຍ! ເສນາສະນະອັນປະກອບດ້ວຍອົງຄ໌ ໕ ເປັນຢ່າງໃດ?

ພິກຂຸທັງຫລາຍ! ເສນາສະນະໃນທຳຣະນີນີ້ ຢູ່ບໍ່ໄກຫລາຍ ບໍ່ໃກ້ຫລາຍ ສົມບູນດ້ວຍທາງໄປມາ.

ກາງເວັນບໍ່ເກື່ອນກົ່ນ ກາງຄືນງຽບສງົງ ປາສະຈາກສຽງອຶກະທຶກ.

ມີເຫລືອກ ຍຸງ ລົມ ແດດ ແລະສັຕເລືອຄານໜ້ອຍ.

ຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣຍ່ອມເກີດຂຶ້ນໂດຍບໍ່ຝືດເຄືອງແກ່ພິກຂຸຜູ້ຢູ່ໃນເສນາສະນະນັ້ນ.

ພິກຂຸທັງຫລາຍຜູ້ເປັນເຖຣະ ເປັນພະຫູສູດ ເລົ່າຮຽນທັມ ຊົງທັມ ຊົງວິນັຍ ຊົງມາຕິກາ ຢູ່ໃນເສນາສະນະນັ້ນ ພິກຂຸນັ້ນເຂົ້າໄປຫາພຣະເຖຣະເຫລົ່ານັ້ນຕາມກາລອັນສົມຄວນ ແລ້ວຍ່ອມສອບຖາມ ໄຕ່ຖາມວ່າ ຂ້າແຕ່ທ່ານຜູ້ຈະເຣີນ ຂໍ້ນີ້ເປັນຢ່າງໃດ ເນື້ອຄວາມແຫ່ງພາສິຕເປັນຢ່າງໃດ ທ່ານພຣະເຖຣະເຫລົ່ານັ້ນຍ່ອມເປີດເຜີຍຂໍ້ທີ່ຍັງບໍ່ໄດ້ເປີດເຜີຍ ຍ່ອມກະທຳໃຫ້ງ່າຍເຊິ່ງຂໍ້ທີ່ຍັງບໍ່ໄດ້ກະທຳໃຫ້ງ່າຍ ຍ່ອມບັນເທົາຄວາມສົງສັຍໃນທັມອັນເປັນທີ່ຕັ້ງແຫ່ງຄວາມສົງສັຍແກ່ພິກຂຸນັ້ນ.

ພິກຂຸທັງຫລາຍ! ເສນາສະນະອັນປະກອບດ້ວຍອົງຄ໌ ໕ ເປັນຢ່າງນີ້ແລ.

ພິກຂຸທັງຫລາຍ! ພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເສພ ອາສັຍຢູ່ເຊິ່ງເສນາສະນະທີ່ປະກອບດ້ວຍອົງຄ໌ ໕ ນີ້ແລ ບໍ່ນານຍ່ອມກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປ ດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໑໔/໑໑*



# ພິກຂຸທັງຫລາຍບໍ່ຄວນກີດກັ້ນເສນາສະນະຂອງສົງຄ໌ຕາມລຳດັບພັນສາ ອົງຄ໌ໃດກີດກັ້ນຕ້ອງອາບັດທຸກກົດ

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະນະຄອຣເວສາລີຕາມພຣະພຸທທາພິຣົມຍ໌ ແລ້ວສະເດັຈຈາຣິກໄປທາງພຣະນະຄອຣສາວັຕຖີ ສມັຍນັ້ນ ພິກຂຸອັນເຕວາສິກ *[ໝາຍເຖິງສິສຜູ້ຢູ່ພາຍໃຕ້ການຄຸ້ມຄອງ]* ຂອງພຣະສັພພັຄຄີຟ້າວໄປຂ້າງໜ້າພິກຂຸສົງຄ໌ເຊິ່ງມີພຣະພຸທທະເຈົ້າເປັນປະມຸຂ ຈ່ອງວິຫາຣ ກັ້ນບ່ອນນອນໄວ້ວ່າ ບ່ອນນີ້ຂອງອຸປັຊຊາຂອງພວກເຮົາ ບ່ອນນີ້ຂອງ

ອາຈາຣຍ໌ຂອງພວກເຮົາ ບ່ອນນີ້ຂອງພວກເຮົາ. ຄັ້ງນັ້ນທ່ານພຣະສາຣີບຸຕໄປທີ່ຫລັງພິກຂຸສົງຄ໌ເຊິ່ງມີພຣະພຸທທະເຈົ້າເປັນປະມຸຂ ເມື່ອພິກຂຸທັງຫລາຍຈ່ອງວິຫາຣແລະບ່ອນນອນໝົດແລ້ວ ຫາບ່ອນນອນບໍ່ໄດ້ ທ່ານຈຶ່ງໄປນັ່ງທີ່ເຫງົ້າໄມ້ແຫ່ງໜຶ່ງ ຄັນເວລາປັຈຈຸສສະມັຍແຫ່ງຣາຕຣີ *[ເວລາເຊົ້າມືດ]* ພຣະຜູ້ມີພຣະພາຄສະເດັຈລຸກຂຶ້ນຊົງພຣະກາສະ *[ໄອ]* ພຣະສາຣີບຸຕກໍໄອອະແຮມ

**ພ. ໃຜຫັ້ນ?**

ສ. ຂ້ານ້ອຍ ສາຣີບຸຕ ພຣະອົງຄ໌ຜູ້ຈະເຣີນ!

**ພ. ສາຣີບຸຕ ເປັນຫຍັງເຈົ້າຈຶ່ງມານັ່ງທີ່ເຫງົ້າໄມ້ນີ້?**

ລຳດັບນັ້ນ ທ່ານພຣະສາຣີບຸຕໄດ້ກຣາບທູລເຣື່ອງນັ້ນແກ່ພຣະຜູ້ມີພຣະພາຄ.

ລຳດັບນັ້ນ, ພຣະຜູ້ມີພຣະພາຄຕຣັສສັ່ງໃຫ້ປະຊຸມສົງຄ໌ໃນເພາະເຫຕອັນເປັນເຄົ້າມູລນັ້ນ ໃນເພາະເຫຕທີ່ເກີດຂຶ້ນເປັນຄັ້ງທຳອິດ ແລ້ວຊົງສອບຖາມພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ຂ່າວວ່າພິກຂຸອັນເຕວາສິກຂອງພຣະສັພພັຄ ຄີຟ້າວໄປກ່ອນພິກຂຸສົງຄ໌ມີພຣະພຸທທະເຈົ້າເປັນປະມຸຂ ແລ້ວ ຈ່ອງວິຫາຣ ກັ້ນບ່ອນນອນໄວ້ວ່າ ບ່ອນນີ້ຂອງອຸປັຊຊາຂອງ ພວກເຮົາ ບ່ອນນີ້ຂອງອາຈາຣຍ໌ຂອງພວກເຮົາ ບ່ອນນີ້ຂອງ ພວກເຮົາຈິງຫລື?

ພິກຂຸທັງຫລາຍກຣາບທູລວ່າ ຈິງຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ເຫຕໃດໂມຄະບຸຣຸສເຫລົ່ານັ້ນຈຶ່ງຟ້າວໄປ ກ່ອນພິກຂຸສົງຄ໌ມີພຣະພຸທທະເຈົ້າເປັນປະມຸຂ ແລ້ວຈ່ອງວິ ຫາຣ ກັ້ນບ່ອນນອນໄວ້ວ່າ ບ່ອນນີ້ຂອງອຸປັຊຊາຂອງພວກເຮົາ ບ່ອນນີ້ຂອງອາຈາຣຍ໌ຂອງພວກເຮົາ ບ່ອນນີ້ຂອງພວກເຮົາ ການກະທຳຂອງໂມຄະບຸຣຸສເຫລົ່ານັ້ນ ບໍ່ເປັນໄປເພື່ອຄວາມ ເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ຫລືເພື່ອຄວາມເຫລື້ອມ ໃສຢ່າງຍິ່ງຂອງຊົນທີ່ເຫລື້ອມໃສແລ້ວ ໂດຍແທ້ແລ້ວ ການ ກະທຳຂອງພວກເຂົານັ້ນ ຍ່ອມເປັນໄປເພື່ອຄວາມບໍ່ເຫລື້ອມ ໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ແລະເພື່ອຄວາມເປັນຢ່າງອື່ນ ຂອງຊົນບາງພວກທີ່ເຫລື້ອມໃສແລ້ວ. ຄັນແລ້ວຊົງສະແດງ ທັມມີກະຖາ ຕຣັສຮຽກພິກຂຸທັງຫລາຍມາຖາມວ່າ:

**ພິກຂຸທັງຫລາຍ! ພິກຂຸໃດຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ?**

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດອອກບວຊຈາກຕະກຸນກະສັຕ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດອອກບວຊຈາກຕະກຸນພຣາມນ໌** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດອອກບວຊຈາກຕະກຸນຄະຫະບໍດີ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດຊົງຈຳພຣະສູຕໄວ້ໄດ້** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດຊົງວິນັຍ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນໍ້າອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດເປັນທັມມະກະຖຶກ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນໍ້າອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດໄດ້ປະຖົມຊານ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນໍ້າອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດໄດ້ທຸຕິຍະຊານ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນໍ້າອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດໄດ້ຕະຕິຍະຊານ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນໍ້າອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດໄດ້ຈະຕຸຕຖະຊານ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດເປັນໂສດາບັນ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດເປັນສະກະທາຄາມີ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດເປັນອະນາຄາມີ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກຣາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດເປັນພຣະອະຣະຫັນຕ໌** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດໄດ້ວິຊຊາ ໃ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ພິກຂຸບາງພວກກາບທູລຢ່າງນີ້ວ່າ: ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ **ພິກຂຸໃດໄດ້ອະພິນຍາ ຜ** ພິກຂຸນັ້ນຄວນໄດ້ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ.

ລຳດັບນັ້ນ, ພຣະຜູ້ມີພຣະພາຄຊົງຕຣັສກັບພິກຂຸທັງຫລາຍວ່າ:

## [ເຣື່ອງສັຕ 3 ສະຫາຍ]

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ມີຕົ້ນໄຊໃຫຍ່ຕົ້ນໜຶ່ງຢູ່ແຖບຫິມະພານ ມີສັຕ ໓ ສະຫາຍຄື **ນົກກະທາ, ລີງ ແລະຊ້າງ** ອາສັຍຕົ້ນໄຊໃຫຍ່ນັ້ນຢູ່ ສັຕທັງສາມນັ້ນບໍ່ໄດ້ເຄົາຣົພ ບໍ່ໄດ້ຢຳເກງກັນ ມີຄວາມປະພຶຕບໍ່ກົມກຽວກັນ.

ພິກຂຸທັງຫລາຍ! ຕໍ່ມາ ສັຕ ໓ ສະຫາຍຈຶ່ງປຶກສາກັນວ່າ ໂອພວກເຮົາຈະເຮັດແນວໃດຈຶ່ງຈະຮູ້ໄດ້ແນ່ວ່າ ບັນດາເຮົາທັງສາມຜູ້ໃດເປັນໃຫຍ່ໂດຍກຳເນີດ ພວກເຮົາຈະໄດ້ສັກກາຣະ

ເຄົາຣົພ ນັບຖື ບູຊາຜູ້ນັ້ນ ແລະຈະໄດ້ຕັ້ງຢູ່ໃນໂອວາທຂອງຜູ້ນັ້ນ;

ພິກຂຸທັງຫລາຍ! ຄັ້ງນັ້ນ ນົກກະທາແລະລີງຈຶ່ງຖາມຊ້າງວ່າ: ສະຫາຍ ທ່ານຈຳເຣື່ອງເກົ່າແກ່ອັນໃດໄດ້ແດ່?

ຊ້າງຕອບວ່າ: ສະຫາຍທັງຫລາຍ ຕອນເຮົາຍັງນ້ອຍ ເຮົາເດີນຂ້າມຕົ້ນໄຊນີ້ໄດ້ ຍອດໄຊເທົ່າກັບທ້ອງຂອງເຮົາ ເຮົາຈຳເຣື່ອງເກົ່ານີ້ໄດ້.

ພິກຂຸທັງຫລາຍ! ລຳດັບນັ້ນ, ນົກກະທາແລະຊ້າງຖາມລີງວ່າ ເພື່ອນຈຳເຣື່ອງຣາວເກົ່າໆອັນໃດໄດ້ແດ່?

ລີງຕອບວ່າ: ເມື່ອເຮົາຍັງນ້ອຍ ເຮົາເຄີຍນັ່ງເທິງພື້ນດິນຄ້ຽວກິນຍອດໄຊຕົ້ນນີ້ ເຮົາຈຳເຣື່ອງເກົ່ານີ້ໄດ້.

ພິກຂຸທັງຫລາຍ! ລຳດັບນັ້ນ, ລີງແລະຊ້າງກໍໄດ້ຖາມນົກກະທາວ່າ ເພື່ອນຈຳເຣື່ອງຣາວເກົ່າໆອັນໃດໄດ້ແດ່?

ນົກກະທາຕອບວ່າ: ສະຫາຍທັງຫລາຍ ໃນສະຖານທີ່ໂນ້ນມີຕົ້ນໄຊໃຫຍ່ ເຮົາກິນໝາກຈາກຕົ້ນໄຊໃຫຍ່ນັ້ນ ແລ້ວໄດ້ຖ່າຍ

ໄວ້ໃນສະຖານທີ່ນີ້ ຕົ້ນໄຊຕົ້ນນີ້ເກີດຈາກໝາກຂອງຕົ້ນໄຊໃຫຍ່ນັ້ນ ເພາະສະນັ້ນ ເຮົາຈຶ່ງເປັນໃຫຍ່ກວ່າໂດຍກຳເນີດ.

ພິກຂຸທັງຫລາຍ! ລຳດັບນັ້ນ, ລີງກັບຊ້າງໄດ້ກ່າວກັບນົກກະທາວ່າ ບັນດາພວກເຮົາ ທ່ານເປັນຜູ້ໃຫຍ່ກວ່າໂດຍກຳເນີດ ເຮົາທັງຫລາຍຈະສັກກາຣະ ເຄົາຣົພ ນັບຖື ບູຊາທ່ານ ແລະຈະຕັ້ງຢູ່ໃນໂອວາທຂອງທ່ານ.

ພິກຂຸທັງຫລາຍ! ນົກກະທາໄດ້ໃຫ້ລີງກັບຊ້າງສະມາທານສີລ ໕ ທັງຕົນເອງກໍຮັກສາສີລ ໕; ສັຕທັງສາມມີຄວາມເຄົາຣົພຢຳເກງກັນແລະກັນ ມີຄວາມປະພຶຕກົມກຽວກັນຢູ່ ພາຍຫລັງຕາຍໄປ ກໍໄດ້ໄປບັງເກີດໃນສຸຄະຕິໂລກສວັນ.

ພິກຂຸທັງຫລາຍ! ຂໍ້ປະຕິບັຕນີ້ຮຽກວ່າ: **ຕິຕຕິຣິຍະພຣົມມະຈັນຍ໌** /ພຣົມມະຈັນຍ໌ແບບນົກກະທາ/

*(ເອຕັງ ໂຂ ພິກຂະເວ ຕິຕຕິຣິຍັງ ນາມະ ພຣັມມະຈະຣິຍັງ ອະໂຫສີຕິ).*

**ຄົນເຫລົ່າໃດ ສລາດໃນທັມ ປະພຶຕອ່ອນນ້ອມຕໍ່ທ່ານຜູ້ໃຫຍ່ ຍ່ອມເປັນຜູ້ອັນມະຫາຊົນສັນລະເສີນໃນປັຈຈຸບັນ ທັງສັມປະຣາຍະພົພ**_[ພົພໜ້າ]_ **ຂອງຄົນເຫລົ່ານັ້ນຍ່ອມເປັນສຸຄະຕິແລ.**

ພິກຂຸທັງຫລາຍ! ສັດດິຣັຈສານພວກນັ້ນຍັງມີຄວາມເຄົາຣົພຢຳເກງກັນ ມີຄວາມປະພຶດກົມກຽວກັນຢູ່ ການທີ່ພວກເຈົ້າທັງຫລາຍເປັນບັນພະຊິດໃນທັມວິນັຍທີ່ເຮົາກ່າວໄວ້ດີແລ້ວຢ່າງນີ້ ມີຄວາມເຄົາຣົພຢຳເກງກັນ ມີຄວາມປະພຶດກົມກຽວກັນຢູ່ ຍ່ອມງົດງາມໃນທັມວິນັຍນີ້.

ພິກຂຸທັງຫລາຍ! ການກະທຳຂອງໂມຄະບຸຣຸສເຫລົ່ານັ້ນ ບໍ່ເປັນໄປເພື່ອຄວາມເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ຫລືເພື່ອຄວາມເຫລື້ອມໃສຢ່າງຍິ່ງຂອງຊົນທີ່ເຫລື້ອມໃສແລ້ວ ໂດຍແທ້ແລ້ວ ການກະທຳຂອງພວກເຂົານັ້ນ ຍ່ອມເປັນໄປເພື່ອຄວາມບໍ່ເຫລື້ອມໃສຂອງຊົນທີ່ຍັງບໍ່ເຫລື້ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກທີ່ເຫລື້ອມໃສແລ້ວ... ຄັນແລ້ວຊົງສະແດງທັມມີກະຖາ ຊົງຕຣັສກັບພິກຂຸທັງຫລາຍວ່າ:

**ພິກຂຸທັງຫລາຍ! ເຮົາອະນຸຍາດການກາບໄຫວ້ ການລຸກຮັບ ການກະທຳອັນຊະລີ ການກະທຳສາມີຈິກັມ ອາສະນະອັນເລີດ ນ້ຳອັນເລີດ ບິນທະບາຕອັນເລີດ ຕາມລຳດັບຜູ້ແກ່ກວ່າ** *[ຕາມລຳດັບພັນສາ]*

ອີກຢ່າງໜຶ່ງ **ພິກຂຸທັງຫລາຍບໍ່ຄວນກີດກັ້ນເສນາສະນະຂອງສົງຄ໌ຕາມລຳດັບພັນສາ ອົງຄ໌ໃດກີດກັ້ນຕ້ອງອາບັດທຸກກົດ** *[ພິກຂະເວ ສັງຄິກັງ ຍະຖາວຸທທັງ ປະຕິພາທິຕັພພັງ ໂຍ ປະຕິພາເຫີຍຍະ ອາປັດຕິ ທຸກກະຕັສສາຕິ ໆ].*

---

*ວິນັຍປິດົກ ຈຸລວັຄ ພາຄ ໔ ເຫລັ້ມທີ ໗/໗໔-໗໕/໔໓໐-໔໓໓*



ພິກຂຸທັງຫລາຍ ເຮົາຍ່ອມບໍ່ເຫັນທັມອື່ນແມ່ນແຕ່ຢ່າງດຽວ
ທີ່ເປັນໄປເພື່ອຄວາມເສື່ອມສູນ ເພື່ອຄວາມອັນຕຣະທານ
ແຫ່ງສັທທັມເໝືອນຄວາມເປັນຜູ້ບໍ່ສັນໂດດ. ພິກຂຸ
ທັງຫລາຍ ຄວາມເປັນຜູ້ບໍ່ສັນໂດດຍ່ອມເປັນໄປເພື່ອຄວາມ
ເສື່ອມສູນ ເພື່ອຄວາມອັນຕຣະທານແຫ່ງສັທທັມ.

*ອັງຄຸຕຕຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໑໗/໑໔໑*

# ພັຍໃນອະນາຄົຕ ໕ ປະການ

ພິກຂຸທັງຫລາຍ! ພັຍໃນອະນາຄົຕ ໕ ປະການນີ້ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນການຕໍ່ໄປ ພັຍເຫລົ່ານັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍເຫລົ່ານັ້ນ, ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ໃນອະນາຄົຕ ພິກຂຸທັງຫລາຍຈັກເປັນຜູ້ຊອບຈີວອນດີງາມ ເມື່ອຊອບຈີວອນດີງາມ ກໍຈັກລະຄວາມເປັນຜູ້ຖືຜ້າບັງສຸກຸລເປັນວັຕ ຈັກລະເສນາສະນະອັນສງັດຄືປ່າແລະປ່າດົງໜາ ຈັກປະຊຸມກັນຢູ່ທີ່ບ້ານ ນິຄົມ ແລະຣາຊະທານີ

ແລະຈັກເຖິງການສະແຫວງຫາອັນບໍ່ສົມຄວນ ບໍ່ເໝາະສົມຕ່າງໆ ເພາະເຫດແຫ່ງຈີວອຣ. ພິກຂຸທັງຫລາຍ ພັຍໃນອະນາຄົຕຂໍ້ທີ ໑ ນີ້ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນກາລຕໍ່ໄປ ພັຍນັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍນັ້ນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ໃນອະນາຄົຕ ພິກຂຸທັງຫລາຍຈັກເປັນຜູ້ຊອບບິນທະບາຕດີງາມ ເມື່ອຊອບບິນທະບາຕດີງາມ ກໍຈັກລະຄວາມເປັນຜູ້ຖືການທ່ຽວບິນທະບາຕເປັນວັຕ ຈັກລະເສນາສະນະອັນສງັດຄືປ່າແລະປ່າດົງໝາ ຈັກປະຊຸມກັນຢູ່ທີ່ບ້ານ ນິຄົມ ແລະຣາຊະທານີ ສະແຫວງຫາບິນທະບາຕທີ່ມີຣົສອັນເລີດດ້ວຍປາຍລີ້ນ ແລະຈັກເຖິງການສະແຫວງຫາອັນບໍ່ສົມຄວນ ບໍ່ເໝາະສົມຕ່າງໆ ເພາະເຫດແຫ່ງບິນທະບາຕ. ພິກຂຸທັງຫລາຍ ພັຍໃນອະນາຄົຕຂໍ້ທີ ໔ ນີ້ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນກາລຕໍ່ໄປ ພັຍນັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍນັ້ນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ໃນອະນາຄົຕ ພິກຂຸທັງຫລາຍຈັກເປັນຜູ້ຊອບເສນາສະນະດີງາມ ເມື່ອຊອບເສນາສະນະດີງາມ ກໍຈັກລະຄວາມເປັນຜູ້ຖືການຢູ່ປ່າເປັນວັຕ

ຈັກລະເສນາສະນະອັນສງັດຄືປ່າແລະປ່າດົງໜາ ຈັກປະຊຸມກັນຢູ່ທີ່ບ້ານ ນິຄົມ ແລະຣາຊະທານີ ແລະຈັກເຖິງການສະແຫວງຫາອັນບໍ່ສົມຄວນ ບໍ່ເໝາະສົມຕ່າງໆ ເພາະເຫດແຫ່ງເສນາສະນະ. ພິກຂຸທັງຫລາຍ ພັຍໃນອະນາຄົຕຂໍ້ທີ ໓ ນີ້ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນການຕໍ່ໄປ ພັຍນັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍນັ້ນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ໃນອະນາຄົຕ ພິກຂຸທັງຫລາຍຈັກເປັນຜູ້ຢູ່ຄຸກຄີດ້ວຍພິກຂຸນີ ສິກຂະມານາ ແລະສະມະນຸທເທສ ເມື່ອມີການຢູ່ຄຸກຄີດ້ວຍພິກຂຸນີ ສິກຂະມານາ ແລະສະມະນຸທເທສ ຍ່ອມຫວັງຂໍ້ນີ້ໄດ້ວ່າ ເຂົາເຫລົ່ານັ້ນຈັກເປັນຜູ້ບໍ່ຍິນດີປະພຶຕພຣົມມະຈັນຍ໌ ຈັກຕ້ອງອາບັຕອັນເສົ້າໝອງບາງຢ່າງ ຫລືຈັກບອກຄືນສິກຂາວຽນມາເພື່ອຄວາມເປັນຄະຣິຫັສຖ໌. ພິກຂຸທັງຫລາຍ ພັຍໃນອະນາຄົຕຂໍ້ທີ ໔ ນີ້ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນການຕໍ່ໄປ ພັຍນັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍນັ້ນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ໃນອະນາຄົຕ ພິກຂຸທັງຫລາຍຈັກເປັນຜູ້ຢູ່ຄຸກຄີດ້ວຍອາຣາມິກະບຸຣຸສ ແລະສະ

ມະນຸທເທສ ເມື່ອມີການຢູ່ຄຸກຄີດ້ວຍອາຣາມິກະບຸຣຸສ ແລະສະມະນຸທເທສ ຍ່ອມຫວັງຂໍ້ນີ້ໄດ້ວ່າ ເຂົາເຫລົ່ານັ້ນຈັກເປັນຜູ້ປະກອບການບໍຣິໂພຄຂອງທີ່ສະສົມໄວ້ມີປະການຕ່າງໆ ຈັກກະທຳນິມິຕອັນຫຍາບທີ່ແຜ່ນດິນແດ່ ທີ່ປາຍຂອງຊຽວແດ່. ພິກຂຸທັງຫລາຍ ພັຍໃນອະນາຄົຕຂໍ້ທີ ໕ ນີ້ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນກາລຕໍ່ໄປ ພັຍນັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍນັ້ນ.

ພິກຂຸທັງຫລາຍ! ພັຍໃນອະນາຄົຕ ໕ ປະການນີ້ແລ ເຊິ່ງຍັງບໍ່ເກີດຂຶ້ນໃນບັດນີ້ ແຕ່ຈັກເກີດຂຶ້ນໃນກາລຕໍ່ໄປ ພັຍເຫລົ່ານັ້ນອັນພວກເຈົ້າທັງຫລາຍຄວນຮູ້ໄວ້ສະເພາະ ຄັນແລ້ວຄວນພະຍາຍາມເພື່ອລະພັຍເຫລົ່ານັ້ນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໙໑/໗໐*



# ເຫດທີ່ເຮັດໃຫ້ຕັນຫາເກີດຂຶ້ນແກ່ພິກຂຸ

ພິກຂຸທັງຫລາຍ! ຄວາມເກີດຂຶ້ນແຫ່ງຕັນຫາທີ່ມີແກ່ພິກຂຸ ໔ ປະການນີ້ ເຊິ່ງເປັນເຫດໃຫ້ຕັນຫາເກີດຂຶ້ນໄດ້, ໔ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ຕັນຫາເມື່ອຈະເກີດແກ່ພິກຂຸ ຍ່ອມເກີດຂຶ້ນເພາະເຫດແຫ່ງຈີວອຣ *(ຈີວະຣະເຫຕຸ ວາ ພິກຂະເວ ພິກຂຸໂນ ຕັນຫາ ອຸປປັຊຊະມານາ ອຸປປັຊຊະຕິ).*

ພິກຂຸທັງຫລາຍ! ຕັນຫາເມື່ອຈະເກີດແກ່ພິກຂຸ ຍ່ອມເກີດຂຶ້ນເພາະເຫຕແຫ່ງບິນທະບາຕ.

ພິກຂຸທັງຫລາຍ! ຕັນຫາເມື່ອຈະເກີດແກ່ພິກຂຸ ຍ່ອມເກີດຂຶ້ນເພາະເຫຕແຫ່ງເສນາສະນະ.

ພິກຂຸທັງຫລາຍ! ຕັນຫາເມື່ອຈະເກີດແກ່ພິກຂຸ ຍ່ອມເກີດຂຶ້ນເພາະເຫຕແຫ່ງເພສັຊອັນປະນີຕແລະປະນີຕກວ່າ.

ພິກຂຸທັງຫລາຍ! ຄວາມເກີດຂຶ້ນແຫ່ງຕັນຫາທີ່ມີແກ່ພິກຂຸ ໔ ປະການີ້ແລ ເຊິ່ງເປັນເຫຕໃຫ້ຕັນຫາເກີດຂຶ້ນໄດ້.

ບຸຣຸສຜູ້ມີຕັນຫາເປັນເພື່ອນສອງ
ທ່ອງທ່ຽວໄປຕລອດກາລຍືດຍາວນານ
ຍ່ອມບໍ່ລ່ວງພົ້ນສົງສາຣອັນມີຄວາມເປັນຢ່າງນີ້
ແລະຄວາມເປັນຢ່າງອື່ນ.

ພິກຂຸຮູ້ໂທສນີ້ ຮູ້ຕັນຫາເປັນທີ່ເກີດແຫ່ງທຸກຂ໌
ຄວນເປັນຜູ້ບໍ່ມີຕັນຫາ ບໍ່ມີຄວາມຖືໝັ້ນ
ມີສະຕິສັມປະຊັນຍະຢູ່.

“Bhikkhus, there are these four ways in which craving arises in a bhikkhu. What four? Craving arises in a bhikkhu because of robes, almsfood, lodgings, or for the sake of life here or elsewhere. These are the four ways in which craving arises in a bhikkhu.”

With craving as companion
a person wanders during this long time.
Going from one state to another,
he does not overcome saṁsāra.

Having known this danger—
that craving is the origin of suffering—
free from craving, devoid of grasping,
a bhikkhu should wander mindfully.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໙/໙*

*Taṇhuppādasutta AN 4.9 https://suttacentral.net/an4.9*





# ທັມ ໕ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ທັມ ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເສຂະໃນທັມວິນັຍນີ້ ເປັນຜູ້ມີການງານເປັນທີ່ມາຍິນດີ ຍິນດີໃນການງານ ຂວນຂວາຍໃນຄວາມເປັນຜູ້ມີການງານເປັນທີ່ມາຍິນດີ ໑

ເປັນຜູ້ມັກເວົ້າ ຍິນດີໃນການເວົ້າ ຂວນຂວາຍໃນຄວາມເປັນຜູ້ມັກເວົ້າ ໑

ເປັນຜູ້ມັກນອນ ຍິນດີໃນການນອນ ຂວນຂວາຍໃນຄວາມເປັນຜູ້ມັກນອນ ໑

ພິກຂຸທັງຫລາຍ! ທັມ ໖ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໖ ປະການນີ້ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

ທັມ ໖ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເສຂະໃນທັມວິນັຍນີ້ ເປັນຜູ້ບໍ່ມີການງານເປັນທີ່ມາຍິນດີ ບໍ່ຍິນດີໃນການງານ ບໍ່ຂວນຂວາຍໃນຄວາມເປັນຜູ້ມີການງານເປັນທີ່ມາຍິນດີ ໑

ເປັນຜູ້ບໍ່ມັກເວົ້າ ບໍ່ຍິນດີໃນການເວົ້າ ບໍ່ຂວນຂວາຍໃນຄວາມເປັນຜູ້ມັກເວົ້າ ໑

ເປັນຜູ້ບໍ່ມັກນອນ ບໍ່ຍິນດີໃນການນອນ ບໍ່ຂືນຂວາຍໃນຄວາມເປັນຜູ້ມັກນອນ ໑

ພິກຂຸທັງຫລາຍ! ທັມ ໖ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໒໒໐/໒໕໗*



# ທັມ ໕ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ (1)

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໕ ປະການເປັນຢ່າງໃດ? ຄື **ຄວາມເປັນຜູ້ຍິນດີໃນການງານ** *(ກັມມາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການເວົ້າ** *(ພັສສາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການນອນ** *(ນິທທາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ** *(ສັງຄະນິກາຣາມະຕາ)*,
**ບໍ່ພິຈາຣະນາຈິຕຕາມທີ່ຫລຸດພົ້ນແລ້ວ** *(ຍະຖາວິມຸຕຕັງ ຈິຕຕັງ ນະ ປັຈຈະເວກຂະຕິ)*.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໕ ປະການເປັນຢ່າງໃດ? ຄື
ຄວາມເປັນຜູ້ບໍ່ຍິນດີໃນການງານ,
ຄວາມເປັນຜູ້ບໍ່ຍິນດີໃນການເວົ້າ,
ຄວາມເປັນຜູ້ບໍ່ຍິນດີໃນການນອນ,
ຄວາມເປັນຜູ້ບໍ່ຍິນດີໃນການຄຸກຄີດ້ວຍໝູ່ຄະນະ,
ພິຈາລະນາຈິຕຕາມທີ່ຫລຸດພົ້ນແລ້ວ.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໑໐໐/໘໙*



# ທັມ ໕ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ (2)

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເສຂະໃນທັມວິນັຍນີ້ ເປັນຜູ້ມີກິຈຫລາຍ ມີກະຣະນີຍະຫລາຍ ບໍ່ສລາດໃນກິຈນ້ອຍກິຈໃຫຍ່ ລະການຫລີກເຮັ້ນ ບໍ່ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໑ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມປ່ອຍໃຫ້ວັນເວລາລ່ວງໄປເພາະການງານເລັກນ້ອຍ ລະການຫລີກເຣັ້ນ ບໍ່ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໔ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມຄຸກຄີດ້ວຍຄະຣືຫັສຖ໌ແລະບັນພະຊິຕ ດ້ວຍການຄຸກຄີກັບຄະຣືຫັສຖ໌ອັນບໍ່ສົມຄວນ ລະການຫລີກເຣັ້ນ ບໍ່ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໕ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມເຂົ້າໄປໃນບ້ານໃນເວລາເຊົ້າຫລາຍ ກັບມາໃນເວລາສວາຍຫລາຍ ລະການຫລີກເຣັ້ນ ບໍ່ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໔ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມບໍ່ໄດ້ຕາມຄວາມປາຖນາ ໄດ້ໂດຍຍາກ ໄດ້ໂດຍລຳບາກເຊິ່ງກະຖາອັນເປັນໄປເພື່ອການຂັດເກົາກິເລສ ເປັນທີ່ສະບາຍແກ່ທັມ

ເຄື່ອງເປີດໂປ່ງຈິດຕື ອັປປິຈສະກະຖາ ສັນຕຸຕຖິກະຖາ ປະວິເວກະກະຖາ ອະສັງສັຄຄະກະຖາ ວິຣິຍາຣັມພະກະຖາ ສີລະກະຖາ ສະມາທິກະຖາ ປັນຍາກະຖາ ວິມຸຕຕິກະຖາ ວິມຸຕຕິຍານທັສສະນະກະຖາ ລະການຫລີກເຮັ້ນ ບໍ່ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໕ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໕ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸຜູ້ເປັນເສຂະໃນທັມວິນັຍນີ້ ເປັນຜູ້ບໍ່ມີກິຈຫລາຍ ບໍ່ມີກະຣະນີຍະຫລາຍ ສລາດໃນກິຈນ້ອຍກິຈໃຫຍ່ ບໍ່ລະການຫລີກເຮັ້ນ ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໑ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມບໍ່ປ່ອຍໃຫ້ວັນເວລາລ່ວງໄປເພາະການງານເລັກນ້ອຍ ບໍ່ລະການ

ຫລີກເຮັ້ນ ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໔ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມບໍ່ຄຸກຄີດ້ວຍຄະຣືຫັສຖ໌ແລະບັນພະຊິຕ ດ້ວຍການຄຸກຄີກັບຄະຣືຫັສຖ໌ອັນບໍ່ສົມຄວນ ບໍ່ລະການຫລີກເຮັ້ນ ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ໖ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມບໍ່ເຂົ້າໄປໃນບ້ານໃນເວລາເຊົ້າຫລາຍ ບໍ່ກັບມາໃນເວລາສວາຍຫລາຍ ບໍ່ລະການຫລີກເຮັ້ນ ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະການທີ ๘ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຜູ້ເປັນເສຂະຍ່ອມໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງກະຖາອັນເປັນໄປເພື່ອການຂັດເກົາກິເລສ ເປັນທີ່ສະບາຍແກ່ທັມເຄື່ອງເປີດໂປ່ງຈິຕຄື ອັປປິຈສະກະຖາ ສັນຕຸຕຖິກະຖາ ປະວິເວກະກະຖາ ອະສັງສັຄຄະກະຖາ ວິຣິຍາຣັມພະກະຖາ ສີລະ

ກະຖາ ສະມາທິກະຖາ ປັນຍາກະຖາ ວິມຸຕຕິກະຖາ ວິມຸຕຕິຍານທັສສະນະກະຖາ ບໍ່ລະກາຣຫລີກເຣັ້ນ ປະກອບຄວາມສງົບໃຈໃນພາຍໃນ. ພິກຂຸທັງຫລາຍ ນີ້ເປັນທັມປະກາຣທີ ໕ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໕ ປະກາຣນີ້ແລ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໑໐໑/໗໐*



# ທັມ ໕ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ

ພິກຂຸທັງຫລາຍ! ທັມ ໕ ປະການນີ້ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໕ ປະການເປັນຢ່າງໃດ? ຄື

**ຄວາມເປັນຜູ້ຍິນດີໃນການງານ** *(ກັມມາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການເວົ້າ** *(ພັສສາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການນອນ** *(ນິທທາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ**
*(ສັງຄະນິກາຣາມະຕາ)*,
**ຄວາມເປັນຜູ້ບໍ່ຄຸ້ມຄອງທະວາຣໃນອິນຊີທັງຫລາຍ**
*(ອິນທະຣິເຍສຸ ອະຄຸຕຕັທວາຣະຕາ)*,

## ຄວາມເປັນຜູ້ບໍ່ຮູ້ປະມານໃນໂພຊະນະ

*(ໂພຊະເນ ອະມັຕຕັນຍຸຕາ).*

ພິກຂຸທັງຫລາຍ! ທັມ ໖ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໖ ປະການນີ້ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໖ ປະການເປັນຢ່າງໃດ? ຄື
ຄວາມເປັນຜູ້ບໍ່ຍິນດີໃນການງານ,
ຄວາມເປັນຜູ້ບໍ່ຍິນດີໃນການເວົ້າ,
ຄວາມເປັນຜູ້ບໍ່ຍິນດີໃນການນອນ,
ຄວາມເປັນຜູ້ບໍ່ຍິນດີໃນການຄຸກຄີດ້ວຍໝູ່ຄະນະ,
ຄວາມເປັນຜູ້ຄຸ້ມຄອງທະວານໃນອິນຊີທັງຫລາຍ,
ຄວາມເປັນຜູ້ຮູ້ປະມານໃນໂພຊະນະ.

ພິກຂຸທັງຫລາຍ! ທັມ ໖ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໐໐/໑໐໔*



# ທັມ ໆ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ

ພິກຂຸທັງຫລາຍ! ທັມ ໆ ປະການນີ້ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໆ ປະການເປັນຢ່າງໃດ? ຄື

**ຄວາມເປັນຜູ້ຍິນດີໃນການງານ** *(ກັມມາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການເວົ້າ** *(ພັສສາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການນອນ** *(ນິທທາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ** *(ສັງຄະນິກາຣາມະຕາ)*,

**ຄວາມເປັນຜູ້ບໍ່ຄຸ້ມຄອງທະວາຣໃນອິນຊີທັງຫລາຍ**

*(ອິນທະຣິເຍສຸ ອະຄຸຕຕັທວາຣະຕາ),*

**ຄວາມເປັນຜູ້ບໍ່ຮູ້ປະມານໃນໂພຊະນະ**

*(ໂພຊະເນ ອະມັຕຕັນຍຸຕາ),*

**ກິຈທີ່ສົງຄ໌ຈະກະທຳມີຢູ່ໃນສົງຄ໌ ພິກຂຸບໍ່ສຶກສາໃນກິຈນັ້ນຢ່າງນີ້ວ່າ ກໍພຣະເຖຣະຜູ້ເປັນຣັຕຕັນຍູ ບວຊນານ ເປັນຜູ້ຮັບພາຣະ ມີຢູ່ໃນສົງຄ໌ ທ່ານເຫລົ່ານັ້ນຈະຮັບຜິດຊອບດ້ວຍກິຈນີ້ດັ່ງນີ້, ຕ້ອງຂົນຂວາຍດ້ວຍຕົນເອງ** *(ສັນຕິ ໂຂ ປະນະ ສັງເຄ ສັງຄະກະຣະນີຍານີ ຕັຕຣະ ພິກຂຸ ນະ ອິຕິ ປະຕິສັນຈິກຂະຕິ ສັນຕິ ໂຂ ປະນະ ສັງເຄ ເຖຣາ ຣັຕຕັນຍູ ຈິຣະປັພພະຊິຕາ ພາຣະວາຫິໂນ ເຕ ເຕ-ນະ ປັນຍານິສສັນຕິຕິ ອັຕຕະນະ ໂວ ໂຍຄັງ ອາປັຊຊະຕິ).*

ພິກຂຸທັງຫລາຍ! ທັມ ໆ ປະກາຣນີ້ແລ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

ພິກຂຸທັງຫລາຍ! ທັມ ໆ ປະກາຣນີ້ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໆ ປະກາຣເປັນຢ່າງໃດ? ຄື
ຄວາມເປັນຜູ້ບໍ່ຍິນດີໃນການງານ,
ຄວາມເປັນຜູ້ບໍ່ຍິນດີໃນກາຣເວົ້າ,
ຄວາມເປັນຜູ້ບໍ່ຍິນດີໃນກາຣນອນ,
ຄວາມເປັນຜູ້ບໍ່ຍິນດີໃນກາຣຄຸກຄີດ້ວຍໝູ່ຄະນະ,
ຄວາມເປັນຜູ້ຄຸ້ມຄອງທະວາຣໃນອິນຊີທັງຫລາຍ,

ຄວາມເປັນຜູ້ຮູ້ປະມານໃນໂພຊະນະ,
ກິຈທີ່ສົງຄ໌ຈະກະທຳມີຢູ່ໃນສົງຄ໌ ພິກຂຸສຶກສາໃນກິຈນັ້ນຢ່າງນີ້ວ່າ ກໍພຣະເຖຣະຜູ້ເປັນຣັຕຕັນຍູ ບວຊນານ ເປັນຜູ້ຣັບພາຣະມີຢູ່ໃນສົງຄ໌ ທ່ານເຫລົ່ານັ້ນຈະຮັບຜິດຊອບດ້ວຍກິຈນີ້ ດັ່ງນີ້, ບໍ່ຕ້ອງຂົນຂວາຍດ້ວຍຕົນເອງ.

ພິກຂຸທັງຫລາຍ! ທັມ ໗ ປະກາຣນີ້ແລ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ ໔໓/໔໕/໔໖*



# ທັມ ໗ ປະການທີ່ເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ

ພິກຂຸທັງຫລາຍ! ທັມ ໗ ປະການນີ້ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ໗ ປະການເປັນຢ່າງໃດ? ຄື

**ຄວາມເປັນຜູ້ຍິນດີໃນການງານ** *(ກັມມາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການເວົ້າ** *(ພັສສາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການນອນ** *(ນິທທາຣາມະຕາ)*,
**ຄວາມເປັນຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ**
*(ສັງຄະນິກາຣາມະຕາ)*,

**ຄວາມເປັນຜູ້ບໍ່ຄຸ້ມຄອງທະວານໃນອິນຊີທັງຫລາຍ**

*(ອິນທະຣິເຍສຸ ອະຄຸຕຕັທວາຣະຕາ),*

**ຄວາມເປັນຜູ້ບໍ່ຮູ້ປະມານໃນໂພຊະນະ**

*(ໂພຊະເນ ອະມັຕຕັນຍຸຕາ),*

**ຄວາມເປັນຜູ້ຍິນດີໃນທັມອັນເປັນເຄື່ອງຂ້ອງ**

*(ສັງສັຄຄາຣາມະຕາ),*

**ຄວາມເປັນຜູ້ຍິນດີໃນທັມເຄື່ອງໃຫ້ເນີນຊ້າ**

*(ປະປັນຈາຣາມະຕາ).*

ພິກຂຸທັງຫລາຍ! ທັມ ໗ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*

*໒໓/໒໕໕/໑໗໓*



# ທັມ ๗ ປະການທີ່ເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ

ພິກຂຸທັງຫລາຍ! ທັມ ๗ ປະການນີ້ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ. ທັມ ๗ ປະການເປັນຢ່າງໃດ? ຄື

ຄວາມເປັນຜູ້ບໍ່ຍິນດີໃນການງານ,

ຄວາມເປັນຜູ້ບໍ່ຍິນດີໃນການເວົ້າ,

ຄວາມເປັນຜູ້ບໍ່ຍິນດີໃນການນອນ,

ຄວາມເປັນຜູ້ບໍ່ຍິນດີໃນການຄຸກຄີດ້ວຍໝູ່ຄະນະ,

ຄວາມເປັນຜູ້ຄຸ້ມຄອງທະວານໃນອິນຊີທັງຫລາຍ,

ຄວາມເປັນຜູ້ຮູ້ປະມານໃນໂພຊະນະ,
ຄວາມເປັນຜູ້ບໍ່ຍິນດີໃນທັມອັນເປັນເຄື່ອງຂ້ອງ
*(ອະສັງສັຄຄາຣາມະຕາ)*,
ຄວາມເປັນຜູ້ບໍ່ຍິນດີໃນທັມເຄື່ອງໃຫ້ເນີນຊ້າ
*(ນິປປະປັນຈາຣາມະຕາ)*.

ພິກຂຸທັງຫລາຍ! ທັມ ໗ ປະການນີ້ແລ ຍ່ອມເປັນໄປເພື່ອຄວາມບໍ່ເສື່ອມແກ່ພິກຂຸຜູ້ເປັນເສຂະ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ*
*໔໓/໔໖໖/໑໗໔*

**“Taking into account interior factors, bhikkhus, I do not see a single one that is so very harmful as negligence. Negligence is very harmful.”**

Dutiyapamādādivagga AN 1.98–139
https://suttacentral.net/an1.98-139



# ກຸສິຕະວັຕຖຸ ໘ ປະການ[1]

ພິກຂຸທັງຫລາຍ! ກຸສິຕະວັຕຖຸ ໘ ປະການນີ້, ໘ ປະການເປັນຢ່າງໃດ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ຕ້ອງກະທຳການງານ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາຈັກຕ້ອງກະທຳການງານ ກໍເມື່ອເຮົາກະທຳການງານຢູ່ ກາຍຈັກລຳບາກ ສະນັ້ນເຮົາຈະນອນ ເຂົາກໍນອນເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສິຕະວັຕຖຸປະການທີ ໑.

---

[1] *ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ ນະວະກະນິບາຕ ໔ມ/໔ຜກ/໑໘໕*

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸກະທຳການງານແລ້ວ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາແລ ກະທຳການງານແລ້ວ ກໍ ເມື່ອເຮົາກະທຳການງານຢູ່ ກາຍກໍລຳບາກ ເພາະສະນັ້ນ ເຮົາ ຈະນອນ ເຂົາກໍນອນເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມ ທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມ ທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສິຕະວັຕຖຸປະ ການທີ ໔.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຕ້ອງເດີນທາງ ເຂົາມີ ຄວາມຄິດຢ່າງນີ້ວ່າ ເຮົາຈັກຕ້ອງເດີນທາງ ກໍເມື່ອເຮົາເດີນ ທາງຢູ່ ກາຍຈັກລຳບາກ ສະນັ້ນ ເຮົາຈະນອນ ເຂົາກໍນອນ ເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອ ບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສິຕະວັຕຖຸປະການທີ ໕.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເດີນທາງແລ້ວ ເຂົາມີ ຄວາມຄິດຢ່າງນີ້ວ່າ ເຮົາໄດ້ເດີນທາງແລ້ວ ກໍເມື່ອເຮົາເດີນ ທາງຢູ່ ກາຍກໍລຳບາກ ສະນັ້ນ ເຮົາຈະນອນ ເຂົາກໍນອນເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມ ທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສິຕະວັຕຖຸປະການທີ ໘.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸທ່ຽວບິນທະບາຕຕາມບ້ານຫລືນິຄົມ ບໍ່ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງການ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາທ່ຽວບິນທະບາຕຕາມບ້ານຫລືນິຄົມ ບໍ່ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງການ ກາຍຂອງເຮົານັ້ນລຳບາກແລ້ວ ບໍ່ຄວນແກ່ການງານ ສະນັ້ນ ເຮົາຈະນອນ ເຂົາກໍນອນເສຍບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສີຕະວັຕຖຸປະການທີ ໕.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸທ່ຽວບິນທະບາຕຕາມບ້ານຫລືນິຄົມ ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງການ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາທ່ຽວບິນທະບາຕຕາມບ້ານຫລືນິຄົມ ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງການແລ້ວ ກາຍຂອງເຮົານັ້ນໜັກ ບໍ່ຄວນແກ່ການງານ ເໝືອນຖົ່ວຊຸ່ມດ້ວຍນ້ຳ ສະນັ້ນເຮົາຈະນອນ ເຂົາກໍນອນເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສີຕະວັຕຖຸປະການທີ ໖.

ພິກຂຸທັງຫລາຍ! ອີກປະການໜຶ່ງ ອາພາທເລັກນ້ອຍເກີດຂຶ້ນແກ່ພິກຂຸ ເຂົາມີຄວາມຄິດຢ່າງນີ້ວ່າ ອາພາທເລັກນ້ອຍນີ້ເກີດຂຶ້ນແກ່ເຮົາແລ້ວ ເຫຕອັນສົມຄວນເພື່ອຈະນອນມີຢູ່ ສະນັ້ນ ເຮົາຈະນອນ ເຂົາກໍນອນເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສິຕະວັຕຖຸປະການທີ ໗.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຫາຍຈາກອາພາທແລ້ວ ແຕ່ຍັງຫາຍບໍ່ດົນ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາຫາຍຈາກອາພາທແລ້ວ ແຕ່ຍັງຫາຍບໍ່ດົນ ກາຍຂອງເຮົາຍັງອ່ອນເພຍ ບໍ່ຄວນແກ່ການງານ ສະນັ້ນ ເຮົາຈະນອນ ເຂົາກໍນອນເສຍ ບໍ່ປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນກຸສິຕະວັຕຖຸປະການທີ ໘.

ພິກຂຸທັງຫລາຍ! ກຸສິຕະວັຕຖຸ ໘ ປະການນີ້ແລ.



# ອາຣັພພະວັຕຖຸ ໘ ປະການ[2]

ພິກຂຸທັງຫລາຍ! ອາຣັພພະວັຕຖຸ ໘ ປະການນີ້, ໘ ປະການ ເປັນຢ່າງໃດ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ຕ້ອງກະທຳການງານ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາຈັກຕ້ອງກະທຳການງານ ກໍເມື່ອເຮົາກະທຳການງານຢູ່ ຈະມະນະສິການເຖິງຄຳສັ່ງສອນຂອງພຣະພຸທທະເຈົ້າທັງຫລາຍບໍ່ໄດ້ກະທຳໄດ້ງ່າຍ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນເສຍກ່ອນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພ

---

[2] *ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ ນະວະກະນິບາຕ ໒໓/໒໕໗/໑໗໕*

ຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະກາຣທີ ໑.

ພິກຂຸທັງຫລາຍ! ອີກປະກາຣໜຶ່ງ ພິກຂຸກະທຳກາຣງານແລ້ວ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາແລ ກະທຳກາຣງານແລ້ວ ກໍເມື່ອເຮົາກະທຳກາຣງານຢູ່ ຈະມະນະສິກາຣເຖິງຄຳສັ່ງສອນຂອງພຣະພຸທທະເຈົ້າທັງຫລາຍບໍ່ໄດ້ກະທຳໄດ້ງ່າຍ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນເສຍກ່ອນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະກາຣທີ ໔.

ພິກຂຸທັງຫລາຍ! ອີກປະກາຣໜຶ່ງ ພິກຂຸຕ້ອງເດີນທາງ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາຈັກຕ້ອງເດີນທາງ ກໍເມື່ອເຮົາເດີນທາງຢູ່ ຈະມະນະສິກາຣເຖິງຄຳສັ່ງສອນຂອງພຣະພຸທທະເຈົ້າທັງຫລາຍບໍ່ໄດ້ກະທຳໄດ້ງ່າຍ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນເສຍກ່ອນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ

ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະການທີ ໓.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເດີນທາງແລ້ວ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາໄດ້ເດີນທາງແລ້ວ ກໍເມື່ອເຮົາເດີນທາງຢູ່ ຈະມະນະສິການເຖິງຄຳສັ່ງສອນຂອງພຣະພຸທທະເຈົ້າທັງຫລາຍບໍ່ໄດ້ກະທຳໄດ້ງ່າຍ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນເສຍກ່ອນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະການທີ ໔.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸທ່ຽວບິນທະບາຕຕາມບ້ານຫລືນິຄົມ ບໍ່ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງການ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາທ່ຽວບິນທະບາຕຕາມບ້ານຫລືນິຄົມ ບໍ່ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງການ ກາຍຂອງເຮົານັ້ນເບົາ ຄວນແກ່ການງານ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງ

ທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະກາຣທີ ໕.

ພິກຂຸທັງຫລາຍ! ອີກປະກາຣໜຶ່ງ ພິກຂຸທ່ຽວບິນທະບາຕຕາມບ້ານຫລືນິຄົມ ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງກາຣ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາທ່ຽວບິນທະບາຕຕາມບ້ານຫລືນິຄົມ ໄດ້ໂພຊະນະອັນເສົ້າໝອງຫລືປະນີຕພໍແກ່ຄວາມຕ້ອງກາຣແລ້ວ ກາຍຂອງເຮົານັ້ນມີກຳລັງ ຄວນແກ່ກາຣງານ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະກາຣທີ ໖.

ພິກຂຸທັງຫລາຍ! ອີກປະກາຣໜຶ່ງ ອາພາທເລັກນ້ອຍເກີດຂຶ້ນແກ່ພິກຂຸ ເຂົາມີຄວາມຄິດຢ່າງນີ້ວ່າ ອາພາທເລັກນ້ອຍນີ້ເກີດຂຶ້ນແກ່ເຮົາແລ້ວ ກາຣທີ່ອາພາທຂອງເຮົາຈະກຳເຣີບນັ້ນເປັນຖານະທີ່ຈະມີໄດ້ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນເສຍ

ກ່ອນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະການທີ ໗.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸຫາຍຈາກອາພາທແລ້ວ ແຕ່ຍັງຫາຍບໍ່ດົນ ເຂົາມີຄວາມຄິດຢ່າງນີ້ວ່າ ເຮົາຫາຍຈາກອາພາທແລ້ວ ແຕ່ຍັງຫາຍບໍ່ດົນ ການທີ່ອາພາທຂອງເຮົາຈະກັບກຳເຣີບນັ້ນເປັນຖານະທີ່ຈະມີໄດ້ ສະນັ້ນ ເຮົາຈະຟ້າວປຣາຣົພຄວາມພຽນເສຍກ່ອນ ເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ ເຂົາປຣາຣົພຄວາມພຽນເພື່ອເຖິງທັມທີ່ຍັງບໍ່ເຖິງ ເພື່ອບັນລຸທັມທີ່ຍັງບໍ່ບັນລຸ ເພື່ອກະທຳໃຫ້ແຈ້ງທັມທີ່ຍັງບໍ່ກະທຳໃຫ້ແຈ້ງ. ພິກຂຸທັງຫລາຍ ນີ້ເປັນອາຣັພພະວັຕຖຸປະການທີ ໘.

ພິກຂຸທັງຫລາຍ! ອາຣັພພະວັຕຖຸ ໘ ປະການນີ້ແລ.





ພິກຂຸທັງຫລາຍ ເຮົາມອງບໍ່ເຫັນທັມອື່ນແມ່ນແຕ່ຢ່າງດຽວທີ່ເປັນເຫຕໃຫ້ກຸສົລທັມທີ່ຍັງບໍ່ເກີດ ເກີດຂຶ້ນ ຫລືອະກຸສົລທັມທີ່ເກີດຂຶ້ນແລ້ວ ຍ່ອມເສື່ອມໄປ ເໝືອນຄວາມບໍ່ປະມາທ.

ພິກຂຸທັງຫລາຍ ເມື່ອບຸຄຄົລບໍ່ປະມາທແລ້ວ ກຸສົລທັມທີ່ຍັງບໍ່ເກີດ ຍ່ອມເກີດຂຶ້ນ ແລະອະກຸສົລທັມທີ່ເກີດຂຶ້ນແລ້ວ ຍ່ອມເສື່ອມໄປ.

ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໔໐/໙/໖໐

# ທຸດັງຄະວັດ

## (ຂໍ້ປະຕິບັດເພື່ອການຂັດເກົາກິເລສ)

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການຢູ່ປ່າເປັນວັດ** ໕ ຈຳພວກນີ້; ໕ ຈຳພວກເປັນຢ່າງໃດ? ຄື:

- **ພິກຂຸຜູ້ຖືການຢູ່ປ່າເປັນວັດເພາະຄວາມໂງ່ເຂົາ ເພາະຄວາມຫລົງ;**
- **ມີຄວາມປາຖນາຊົ່ວ ຖືກຄວາມຢາກຄອບງຳຈຶ່ງຖືການຢູ່ປ່າເປັນວັດ;**
- **ຖືການຢູ່ປ່າເປັນວັດເພາະເປັນບ້າ ເພາະຈິຕຟຸ້ງຊ່ານ;**

- **ຖືການຢູ່ປ່າເປັນວັດເພາະຮູ້ວ່າເປັນຄວາມປະພຶດທີ່ພຣະພຸທທະເຈົ້າແລະສາວົກຂອງພຣະພຸທທະເຈົ້າທັງຫລາຍສັນລະເສີນ;**
- **ຖືການຢູ່ປ່າເປັນວັດເພາະອາສັຍຄວາມເປັນຜູ້ມີຄວາມປາຖນານ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມສງັດ ຄວາມເປັນຜູ້ຕ້ອງການດ້ວຍຂໍ້ປະຕິບັຕອັນງົດງາມເຊັ່ນນີ້.**

ພິກຂຸທັງຫລາຍ! ພິກຂຸຜູ້ຖືການຢູ່ປ່າເປັນວັຕ ໕ ຈຳພວກນີ້ແລ.

**ພິກຂຸທັງຫລາຍ! ບັນດາພິກຂຸຜູ້ຖືການຢູ່ປ່າເປັນວັຕ ໕ ຈຳພວກນີ້ ພິກຂຸຜູ້ຖືການຢູ່ປ່າເປັນວັຕ ເພາະອາສັຍຄວາມເປັນຜູ້ມີຄວາມປາຖນານ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມສງັດ ຄວາມເປັນຜູ້ຕ້ອງການດ້ວຍຂໍ້ປະຕິບັຕອັນງົດງາມເຊັ່ນນີ້ ເປັນຜູ້ເລີດ ເປັນຜູ້ປະເສີດ ເປັນປະທານ ສູງສຸດ ແລະດີກວ່າ.**

ປຽບເໝືອນນົມສົດເກີດຈາກແມ່ງົວ ນົມສົ້ມເກີດຈາກນົມສົດ ເນີຍຂຸ້ນເກີດຈາກນົມສົ້ມ ເນີຍໃສເກີດຈາກເນີຍຂຸ້ນ ຫົວເນີຍໃສເກີດຈາກເນີຍໃສ ຫົວເນີຍໃສຊາວໂລກກ່າວກັນວ່າເປັນເລີດໃນຈຳພວກຣົສອັນເກີດຈາກງົວເຫລົ່ານັ້ນ ສັນໃດ; ບັນດາ

ພິກຂຸຜູ້ຖືຢູ່ປ່າເປັນວັດ ໕ ຈຳພວກນີ້ ພິກຂຸຜູ້ຖືຢູ່ປ່າເປັນວັດ ເພາະອາສັຍຄວາມເປັນຜູ້ມີຄວາມປາຖນານ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມສງັດ ຄວາມເປັນຜູ້ຕ້ອງການດ້ວຍຂໍ້ປະຕິບັຕອັນງົດງາມເຊັ່ນນີ້ ເປັນຜູ້ເລີດ ເປັນຜູ້ປະເສີດ ເປັນປະທານ ສູງສຸດ ແລະດີກວ່າ ສັນນັ້ນເໝືອນກັນ.

ພິກຂຸທັງຫລາຍ! **ພິກຂຸຜູ້ຖືຜ້າບັງສຸກຸລເປັນວັດ** ໕ ຈຳພວກນີ້ ฯລฯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການຢູ່ເຫງົ້າໄມ້ເປັນວັດ** ໕ ຈຳພວກນີ້ ฯລฯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການຢູ່ປ່າຊ້າເປັນວັດ** ໕ ຈຳພວກນີ້ ฯລฯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການຢູ່ໃນທີ່ແຈ້ງເປັນວັດ** ໕ ຈຳພວກນີ້ ฯລฯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການນັ່ງເປັນວັດ** ໕ ຈຳພວກນີ້ ฯລฯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການຢູ່ໃນເສນາສະນະຕາມທີ່ທ່ານຈັດໃຫ້ເປັນວັຕ** ໕ ຈຳພວກນີ້ ຯລຯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການນັ່ງສັນໃນອາສະນະດຽວເປັນວັຕ** ໕ ຈຳພວກນີ້ ຯລຯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການຫ້າມພັຕຕາຫານທີ່ນຳມາຖວາຍໃນພາຍຫລັງເປັນວັຕ** ໕ ຈຳພວກນີ້ ຯລຯ

ພິກຂຸທັງຫລາຍ! **ພິກຂຸຜູ້ຖືການສັນສະເພາະໃນບາຕເປັນວັຕ** ໕ ຈຳພວກນີ້; ໕ ຈຳພວກເປັນຢ່າງໃດ? ຄື:

- **ພິກຂຸຜູ້ຖືການສັນສະເພາະໃນບາຕເປັນວັຕເພາະຄວາມໂງ່ເຂົາ ເພາະຄວາມຫລົງ;**
- **ມີຄວາມປາຖນາຊົ່ວ ຖືກຄວາມຢາກຄອບງຳຈຶ່ງຖືການສັນສະເພາະໃນບາຕເປັນວັຕ;**
- **ຖືການສັນສະເພາະໃນບາຕເປັນວັຕເພາະເປັນບ້າເພາະຈິຕຟຸ້ງຊ່ານ;**
- **ຖືການສັນສະເພາະໃນບາຕເປັນວັຕເພາະຮູ້ວ່າເປັນຄວາມປະພຶຕທີ່ພຣະພຸທທະເຈົ້າແລະສາວົກຂອງພຣະພຸທທະເຈົ້າທັງຫລາຍສັນລະເສີນ;**

- **ຖືການສັນສະເພາະໃນບາຕເປັນວັຕເພາະອາສັຍຄວາມເປັນຜູ້ມີຄວາມປາຖນານ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມສງັດ ຄວາມເປັນຜູ້ຕ້ອງການດ້ວຍຂໍ້ປະຕິບັຕອັນງົດງາມເຊັ່ນນີ້.**

ພິກຂຸທັງຫລາຍ! ພິກຂຸຜູ້ຖືການສັນສະເພາະໃນບາຕເປັນວັຕ ໕ ຈຳພວກນີ້ແລ.

**ພິກຂຸທັງຫລາຍ! ບັນດາພິກຂຸຜູ້ຖືການສັນສະເພາະໃນບາຕເປັນວັຕ ໕ ຈຳພວກນີ້ ຜູ້ຖືການສັນສະເພາະໃນບາຕເປັນວັຕເພາະອາສັຍຄວາມເປັນຜູ້ມີຄວາມປາຖນານ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມສງັດ ຄວາມເປັນຜູ້ຕ້ອງການດ້ວຍຂໍ້ປະຕິບັຕອັນງົດງາມເຊັ່ນນີ້ ເປັນຜູ້ເລີດ ເປັນຜູ້ປະເສີດເປັນປະທານ ສູງສຸດ ແລະດີກວ່າ.**

ປຽບເໝືອນນົມສົດເກີດຈາກແມ່ງົວ ນົມສົ້ມເກີດຈາກນົມສົດເນີຍຂຸ້ນເກີດຈາກນົມສົ້ມ ເນີຍໃສເກີດຈາກເນີຍຂຸ້ນ ຫົວເນີຍໃສເກີດຈາກເນີຍໃສ ຫົວເນີຍໃສຊາວໂລກກ່າວກັນວ່າເປັນເລີດໃນຈຳພວກຣົສອັນເກີດຈາກງົວເຫລົ່ານັ້ນ ສັນໃດ; ບັນດາພິກຂຸທີ່ຖືການສັນສະເພາະໃນບາຕເປັນວັຕ ໕ ຈຳພວກນີ້ພິກຂຸຜູ້ຖືການສັນສະເພາະໃນບາຕເປັນວັຕ ເພາະອາສັຍຄວາມ

ເປັນຜູ້ມີຄວາມປາຖນານ້ອຍ ຄວາມສັນໂດດ ຄວາມຂັດເກົາ ຄວາມສງັດ ຄວາມເປັນຜູ້ຕ້ອງການດ້ວຍຂໍ້ປະຕິບັດອັນງົດງາມ ເຊັ່ນນີ້ ເປັນຜູ້ເລີດ ເປັນຜູ້ປະເສີດ ເປັນປະທານ ສູງສຸດ ແລະ ດີກວ່າ ສັນນັ້ນເໝືອນກັນ.

*(ອີກສາມຂໍ້ບໍ່ປາກົດເຫັນໃນກຸ່ມພຣະສູດນີ້ເຊັ່ນ: ການຖືໄຕຣຈີວອຣເປັນວັດ, ການທ່ຽວບິນທະບາດເປັນວັດ, ການຖືບິນທະບາດຕາມລຳດັບບ້ານເປັນວັດ)*

---

*ສຸຕຕັນຕະປິດົກ ອັງຄຸຕຕະຣະນິກາຍ*
*ປັນຈະກະ-ສັກກະນິບາຕ ໒໒/໑໙໖-໑໙໗/໑໗໑-໑໗໐*



# ວ່າດ້ວຍສິ່ງທີ່ເປັນພັຍ ແລະໜ້າຢ້ານກົວ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ. ຄັ້ງນັ້ນແລ ຊານຸໂສນີພຣາມນ໌ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໄດ້ປຣາສັຍກັບພຣະຜູ້ມີພຣະພາຄ ຄັນຜ່ານການປຣາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຊານຸໂສນີພຣາມນ໌ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງແລ້ວ ໄດ້ກຣາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ:

ຂ້າແຕ່ທ່ານພຣະໂຄດົມ! ກຸລະບຸດເຫລົ່າໃດ ມີສັທທາ ອອກບວຊເປັນບັນພະຊິຕ ອຸທິສສະເພາະທ່ານພຣະໂຄດົມ ທ່ານພຣະໂຄດົມຊຶ່ງເປັນຫົວໜ້າຂອງກຸລະບຸດເຫລົ່ານັ້ນ ຊຶ່ງມີອຸປະກາຣະຫລາຍແກ່ກຸລະບຸດເຫລົ່ານັ້ນ ຊຶ່ງຍັງກຸລະບຸດເຫລົ່ານັ້ນໃຫ້ຖືເອົາຕາມ ແລະຊົນເຫລົ່ານັ້ນຍ່ອມປະຕິບັດຕາມແບບຢ່າງຂອງທ່ານສະມະນະໂຄດົມຫລື?

ພຣະຜູ້ມີພຣະພາຄຕຣັສວ່າ:

ພຣາມນ໌! ຂໍ້ນີ້ເປັນຢ່າງນັ້ນ

ພຣາມນ໌! ຂໍ້ນີ້ເປັນຢ່າງນັ້ນ, ກຸລະບຸດເຫລົ່າໃດ ມີສັທທາ ອອກບວຊເປັນບັນພະຊິຕ ອຸທິສສະເພາະເຮົາ ເຮົາເປັນຫົວໜ້າຂອງກຸລະບຸດເຫລົ່ານັ້ນ ມີອຸປະກາຣະຫລາຍແກ່ກຸລະບຸດເຫລົ່ານັ້ນ ຍັງກຸລະບຸດເຫລົ່ານັ້ນໃຫ້ຖືເອົາຕາມ ແລະຊົນເຫລົ່ານັ້ນຍ່ອມປະຕິບັດຕາມແບບຢ່າງຂອງເຮົາ.

ຂ້າແຕ່ທ່ານພຣະໂຄດົມ! ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ຍາກທີ່ຈະເປັນຢູ່ໄດ້ໃນພາວະທີ່ໂດດດ່ຽວ ຄວາມສງັດກາຍ ຍາກທີ່ຈະກະທຳໄດ້ ຍາກທີ່ຈະຍິນດີໄດ້ ປ່າທັງຫລາຍ

ເໝືອນດັ່ງວ່າຈະຊັກພາໃຈຂອງພິກຂຸຜູ້ຍັງບໍ່ໄດ້ສະມາທິໄປເສຍ.

ພຣາມນ໌! ຂໍ້ນີ້ເປັນຢ່າງນັ້ນ

ພຣາມນ໌! ຂໍ້ນີ້ເປັນຢ່າງນັ້ນ, ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ຍາກທີ່ຈະເປັນຢູ່ໄດ້ໃນພາວະທີ່ໂດດດ່ຽວ ຄວາມສງັດກາຍ ຍາກທີ່ຈະກະທຳໄດ້ ຍາກທີ່ຈະຍິນດີໄດ້ ປ່າທັງຫລາຍເໝືອນດັ່ງວ່າຈະຊັກພາໃຈຂອງພິກຂຸຜູ້ຍັງບໍ່ໄດ້ສະມາທິໄປເສຍ.

ພຣາມນ໌! ແມ່ນແຕ່ເຮົາເມື່ອເປັນໂພທິສັຕ ຍັງບໍ່ໄດ້ຕຣັສຮູ້ ກ່ອນການຕຣັສຮູ້ນັ້ນ ໄດ້ມີຄວາມດຳຣິຢ່າງນີ້ວ່າ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ຍາກທີ່ຈະເປັນຢູ່ໄດ້ໃນພາວະທີ່ໂດດດ່ຽວ ຄວາມສງັດກາຍ ຍາກທີ່ຈະກະທຳໄດ້ ຍາກທີ່ຈະຍິນດີໄດ້ ປ່າທັງຫລາຍເໝືອນດັ່ງວ່າຈະຊັກພາໃຈຂອງພິກຂຸຜູ້ຍັງບໍ່ໄດ້ສະມາທິໄປເສຍ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີກາຍະກັມບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ສະມະນະພຣາມນ໌ເຫລົ່ານັ້ນ

ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີກາຍະກັມບໍ່ບໍຣິສຸທເປັນເຫຕ ສ່ວນເຮົາບໍ່ມີກາຍະກັມບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາເປັນຜູ້ມີກາຍະກັມບໍຣິສຸທ. ພຣະອະຣິຍະເຈົ້າເຫລົ່າໃດມີກາຍະກັມບໍຣິສຸທ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ມີກາຍະກັມອັນບໍຣິສຸທນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບ*(ບໍ່ມີຂົນລຸກຊູຊັນ)*ໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີວະຈີກັມບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ສະມະນະພຣາມນ໌ເຫລົ່ານັ້ນຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີວະຈີກັມບໍ່ບໍຣິສຸທເປັນເຫຕ ສ່ວນເຮົາບໍ່ມີວະຈີກັມບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາເປັນຜູ້ມີວະຈີກັມບໍຣິສຸທ. ພຣະອະຣິຍະເຈົ້າເຫລົ່າໃດມີວະຈີກັມບໍຣິສຸທ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງ

ຄວາມເປັນຜູ້ມີວະຈີກັມອັນບໍຣິສຸທນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີມະໂນກັມບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ສະມະນະພຣາມນ໌ເຫລົ່ານັ້ນຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີມະໂນກັມບໍ່ບໍຣິສຸທເປັນເຫຕ ສ່ວນເຮົາບໍ່ມີມະໂນກັມບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາເປັນຜູ້ມີມະໂນກັມບໍຣິສຸທ. ພຣະອະຣິຍະເຈົ້າເຫລົ່າໃດມີມະໂນກັມບໍຣິສຸທ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ມີມະໂນກັມອັນບໍຣິສຸທນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີອາຊີວະບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ສະມະນະພຣາມນ໌ເຫລົ່ານັ້ນຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີອາຊີວະບໍ່ບໍຣິສຸທເປັນເຫຕ

ສ່ວນເຮົາບໍ່ມີອາຊີວະບໍ່ບໍຣິສຸທ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ມີອາຊີວະບໍຣິສຸທ. ພຣະອະຣິຍະເຈົ້າເຫລົ່າໃດມີອາຊີວະບໍຣິສຸທ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ມີອາຊີວະອັນບໍຣິສຸທນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລງບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີອະພິຊຊາ ມີຣາຄະກ້າໃນກາມທັງຫລາຍ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີອະພິຊຊາ ມີຣາຄະກ້າໃນກາມທັງຫລາຍເປັນເຫຕ ສ່ວນເຮົາບໍ່ມີອະພິຊຊາ ບໍ່ມີຣາຄະກ້າໃນກາມທັງຫລາຍ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ບໍ່ມີອະພິຊຊາ. ພຣະອະຣິຍະເຈົ້າເຫລົ່າໃດບໍ່ມີອະພິຊຊາ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ບໍ່ມີອະພິຊຊານີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລງບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີຈິຕພະຍາບາທ ມີຄວາມດຳຣິຊົ່ວ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີຈິຕພະຍາບາທ ມີຄວາມດຳຣິຊົ່ວເປັນເຫຕ ສ່ວນເຮົາບໍ່ມີຈິຕພະຍາບາທ ບໍ່ມີຄວາມດຳຣິຊົ່ວ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ມີຈິຕປະກອບດ້ວຍເມຕຕາ. ພຣະອະຣິຍະເຈົ້າເຫລົ່າໃດມີຈິຕປະກອບດ້ວຍເມຕຕາ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ມີຈິຕປະກອບດ້ວຍເມຕຕານີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດອັນຖີນະມິທທະກຸ້ມຮຸມແລ້ວ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຖືກຖີນະມິທທະກຸ້ມຮຸມເປັນເຫຕ ສ່ວນເຮົາບໍ່ມີຖີນະມິທທະກຸ້ມຮຸມ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້

ປາສະຈາກຖີນະມິທທະ. ພຣະອະຣິຍະເຈົ້າເຫລົ່າໃດ ປາສະຈາກຖີນະມິທທະ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ປາສະຈາກຖີນະມິທທະນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດຟຸ້ງຊ່ານ ມີຈິຕບໍ່ສງົບຣະງັບ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມຟຸ້ງຊ່ານ ມີຈິຕບໍ່ສງົບຣະງັບເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ມີຄວາມຟຸ້ງຊ່ານ ບໍ່ມີຈິຕບໍ່ສງົບຣະງັບ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ມີຈິຕສງົບຣະງັບແລ້ວ. ພຣະອະຣິຍະເຈົ້າເຫລົ່າໃດມີຈິຕສງົບຣະງັບ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ຈິຕສງົບຣະງັບນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະ ຫລືພຣາມນ໌ເຫລົ່າໃດມີຄວາມສົງສັຍເຄືອບແຄງ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ສະມະນະ ພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມ ຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີຄວາມ ສົງສັຍເຄືອບແຄງເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ມີຄວາມ ສົງສັຍເຄືອບແຄງ ເສພເສນາສະນະອັນສງັດ ທີ່ເປັນປ່າແລະ ປ່າປ່ຽວ ເຮົາເປັນຜູ້ຂ້າມພົ້ນຄວາມສົງສັຍໄດ້ແລ້ວ. ພຣະອະຣິ ຍະເຈົ້າເຫລົ່າໃດຂ້າມພົ້ນຄວາມສົງສັຍໄດ້ແລ້ວ ຍ່ອມເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາກໍເປັນອົງຄ໌ ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນ ຊັດເຊິ່ງຄວາມເປັນຜູ້ຂ້າມພົ້ນຄວາມສົງສັຍໄດ້ແລ້ວໃນຕົນ ຈຶ່ງ ເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລື ພຣາມນ໌ເຫລົ່າໃດຍົກຕົນຂົ່ມຜູ້ອື່ນ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມ ຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມຍົກຕົນຂົ່ມຜູ້ອື່ນເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ມີຄວາມຍົກຕົນຂົ່ມຜູ້ອື່ນ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ຽວ ເຮົາເປັນຜູ້ບໍ່ຍົກ

ຕົນ ບໍ່ຂົ່ມຜູ້ອື່ນ. ພຣະອະຣິຍະເຈົ້າເຫລົ່າໃດເປັນຜູ້ບໍ່ຍົກຕົນ ບໍ່ຂົ່ມຜູ້ອື່ນ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ບໍ່ຍົກຕົນ ບໍ່ຂົ່ມຜູ້ອື່ນນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດເປັນຜູ້ຫວາດຫວັ່ນ ມີຊາຕແຫ່ງຄົນຢ້ານ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ມີຄວາມຫວາດຫວັ່ນແລະມີຊາຕແຫ່ງຄົນຢ້ານເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ມີຄວາມຫວາດຫວັ່ນ ບໍ່ມີຊາຕແຫ່ງຄົນຢ້ານ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ປາສະຈາກຄວາມຢ້ານກົວ. ພຣະອະຣິຍະເຈົ້າເຫລົ່າໃດປາສະຈາກຄວາມຢ້ານກົວ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ປາສະຈາກຄວາມຢ້ານກົວນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລື ພຣາມນ໌ເຫລົ່າໃດປາຖນາລາພແລະຄວາມສັນລະເສີນ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະ ພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມ ຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມ ປາຖນາລາພແລະຄວາມສັນລະເສີນເປັນເຫຕ ພຣາມນ໌ ສ່ວນ ເຮົາບໍ່ມີຄວາມປາຖນາລາພແລະຄວາມສັນລະເສີນ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ມີ ຄວາມປາຖນານ້ອຍ. ພຣະອະຣິຍະເຈົ້າເຫລົ່າໃດມີຄວາມ ປາຖນານ້ອຍ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະ ປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າ ເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ມີຄວາມ ປາຖນານ້ອຍນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລື ພຣາມນ໌ເຫລົ່າໃດເປັນຜູ້ກຽດຄ້ານ ມີຄວາມພຽນຊົ່ວຊາມ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະ ພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມ ຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມ ເປັນຜູ້ກຽດຄ້ານ ມີຄວາມພຽນຊົ່ວຊາມເປັນເຫຕ ພຣາມນ໌

ສ່ວນເຮົາບໍ່ເປັນຜູ້ກຽດຄ້ານ ບໍ່ມີຄວາມພຽນຊົ່ວຊາມ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ປຣາຣົພຄວາມພຽນ. ພຣະອະຣິຍະເຈົ້າເຫລົ່າໃດເປັນຜູ້ປຣາຣົພຄວາມພຽນ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ປຣາຣົພຄວາມພຽນນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະຫລືພຣາມນ໌ເຫລົ່າໃດມີສະຕິຫລົງລືມ ບໍ່ມີສັມປະຊັນຍະ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມເປັນຜູ້ມີສະຕິຫລົງລືມ ບໍ່ມີສັມປະຊັນຍະເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ເປັນຜູ້ມີສະຕິຫລົງລືມ ເປັນຜູ້ມີສັມປະຊັນຍະ ເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ມີສະຕິຕັ້ງໝັ້ນ. ພຣະອະຣິຍະເຈົ້າເຫລົ່າໃດເປັນຜູ້ມີສະຕິຕັ້ງໝັ້ນ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ມີສະຕິຕັ້ງໝັ້ນນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະ ຫລືພຣາມນ໌ເຫລົ່າໃດມີຈິດບໍ່ຕັ້ງໝັ້ນ ມີຈິດໝູນໄປຜິດ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະ ພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມ ຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມ ເປັນຜູ້ມີຈິດບໍ່ຕັ້ງໝັ້ນ ມີຈິດໝູນໄປຜິດເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ເປັນຜູ້ມີຈິດບໍ່ຕັ້ງໝັ້ນ ບໍ່ມີຈິດໝູນໄປຜິດ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາເປັນຜູ້ເຖິງ ພ້ອມດ້ວຍສະມາທິ. ພຣະອະຣິຍະເຈົ້າເຫລົ່າໃດເປັນຜູ້ເຖິງ ພ້ອມດ້ວຍສະມາທິ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າ ແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າ ເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ເຖິງພ້ອມ ດ້ວຍສະມາທິນີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິດັ່ງນີ້ວ່າ ສະມະນະ ຫລືພຣາມນ໌ເຫລົ່າໃດເປັນຄົນໂງ່ເຂົາເບົາປັນຍາ ເສພ ເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ສະມະນະ ພຣາມນ໌ເຫລົ່ານັ້ນ ຍ່ອມຮຽກຮ້ອງຄວາມກົວແລະຄວາມ ຫວາດຫວັ່ນອັນເປັນອະກຸສົລ ເພາະໂທສຂອງຕົນຄື ຄວາມ ເປັນຄົນໂງ່ເຂົາເບົາປັນຍາເປັນເຫຕ ພຣາມນ໌ ສ່ວນເຮົາບໍ່ເປັນ

ຄົນໂງ່ເຂົາເບົາປັນຍາ ເສພເສນາສະນະອັນສງັດ ທີ່ເປັນປ່າ ແລະປ່າປ່ງວ ເຮົາເປັນຜູ້ເຖິງພ້ອມດ້ວຍປັນຍາ. ພຣະອະຣິຍະເຈົ້າເຫລົ່າໃດເປັນຜູ້ເຖິງພ້ອມດ້ວຍປັນຍາ ຍ່ອມເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງວ ເຮົາກໍເປັນອົງຄ໌ໜຶ່ງໃນບັນດາພຣະອະຣິຍະເຈົ້າເຫລົ່ານັ້ນ. ພຣາມນ໌ ເຮົາເຫັນຊັດເຊິ່ງຄວາມເປັນຜູ້ເຖິງພ້ອມດ້ວຍປັນຍານີ້ໃນຕົນ ຈຶ່ງເຖິງຄວາມເປັນຜູ້ມີຂົນລຽບໂດຍຍິ່ງ ເມື່ອຢູ່ໃນປ່າ.

ພຣາມນ໌! ເຮົານັ້ນໄດ້ມີຄວາມດຳຣິວ່າ ທາງທີ່ດີ ເຮົາຄວນຢູ່ໃນເສນາສະນະເຊັ່ນນີ້ຄື ອາຣາມເຈດີຍ໌ ວະນະເຈດີຍ໌ ຣຸກຂະເຈດີຍ໌ອັນໜ້າຢ້ານກົວ ໜ້າຂົນພອງສະຫຍອງເກົ້າ ໃນຣາຕຣີທີ່ຮູ້ກັນວ່າ ທີ່ກຳນົດກັນວ່າ ດິຖີທີ ໑໔, ດິຖີທີ ໑໕ ແລະທີ ໘ ແຫ່ງປັກຂ໌ ດ້ວຍຫວັງວ່າ ເຮົາຈະໄດ້ເຫັນຄວາມໜ້າກົວແລະຄວາມຫວາດສະດຸ້ງນັ້ນ ດັ່ງນີ້.

ພຣາມນ໌! ຕໍ່ມາ ເຮົາໄດ້ຢູ່ໃນເສນາສະນະເຊັ່ນນີ້ຄື ອາຣາມເຈດີຍ໌ ວະນະເຈດີຍ໌ ຣຸກຂະເຈດີຍ໌ອັນໜ້າຢ້ານກົວ ໜ້າຂົນພອງສະຫຍອງເກົ້າ ໃນຣາຕຣີທີ່ຮູ້ກັນວ່າ ທີ່ກຳນົດກັນວ່າ ດິຖີທີ ໑໔, ດິຖີທີ ໑໕ ແລະທີ ໘ ແຫ່ງປັກຂ໌. ພຣາມນ໌ ເມື່ອເຮົາຢູ່ໃນເສນາສະນະນັ້ນ ສັຕປ່າມາກໍດີ ນົກຍູງເຮັດໃຫ້ໄມ້ຕົກລົງມາກໍດີ ຫລືວ່າລົມພັດໃບໄມ້ໃຫ້ຕົກລົງມາກໍດີ, ພຣາມນ໌ ເຮົາ

ນັ້ນໄດ້ມີຄວາມດຳຣິຢ່າງນີ້ວ່າ ຄວາມໜ້າກົວແລະຄວາມຫວາດສະດຸ້ງນັ້ນເກີດຂຶ້ນແນ່ນອນ ເຮົານັ້ນໄດ້ມີຄວາມດຳຣິວ່າ ເພາະເຫດໃດເຮົາຈຶ່ງຫວັງສະເພາະແຕ່ເຣື່ອງຄວາມກົວຢູ່ຢ່າງດຽວທາງທີ່ດີ ຄວນກຳຈັດຄວາມກົວແລະຄວາມຫວາດສະດຸ້ງທີ່ເກີດຂຶ້ນແກ່ເຮົາໃນອິຣິຍາບົຖທີ່ເຮົາເປັນຢູ່ນັ້ນໆເສຍ ດັ່ງນີ້.

ພຣາມນ໌! ເມື່ອເຮົາກຳລັງຈົງກົມຢູ່ ຄວາມກົວແລະຄວາມຫວາດສະດຸ້ງເກີດຂຶ້ນແກ່ເຮົາ ເຮົາຈະບໍ່ຢືນ ບໍ່ນັ່ງ ບໍ່ນອນເລີຍຈະຈົງກົມຢູ່ ຈົນກວ່າຈະກຳຈັດຄວາມກົວແລະຄວາມຫວາດສະດຸ້ງນັ້ນໄດ້.

ພຣາມນ໌! ເມື່ອເຮົາຢືນຢູ່ ຄວາມກົວແລະຄວາມຫວາດສະດຸ້ງເກີດຂຶ້ນແກ່ເຮົາ ເຮົາຈະບໍ່ຈົງກົມ ບໍ່ນັ່ງ ບໍ່ນອນເລີຍ ຈະຢືນຢູ່ຈົນກວ່າຈະກຳຈັດຄວາມກົວແລະຄວາມຫວາດສະດຸ້ງນັ້ນໄດ້.

ພຣາມນ໌! ເມື່ອເຮົານັ່ງຢູ່ ຄວາມກົວແລະຄວາມຫວາດສະດຸ້ງເກີດຂຶ້ນແກ່ເຮົາ ເຮົາຈະບໍ່ນອນ ບໍ່ຢືນ ບໍ່ຈົງກົມເລີຍ ຈະນັ່ງຢູ່ຈົນກວ່າຈະກຳຈັດຄວາມກົວແລະຄວາມຫວາດສະດຸ້ງນັ້ນໄດ້.

ພຣາມນ໌! ເມື່ອເຮົານອນຢູ່ ຄວາມກົວແລະຄວາມຫວາດສະດຸ້ງເກີດຂຶ້ນແກ່ເຮົາ ເຮົາຈະບໍ່ນັ່ງ ບໍ່ຢືນ ບໍ່ຈົງກົມເລີຍ ຈະນອນຢູ່ຈົນກວ່າຈະກຳຈັດຄວາມກົວແລະຄວາມຫວາດສະດຸ້ງນັ້ນໄດ້.

ພຣາມນ໌! ມີສະມະນະພຣາມນ໌ພວກໜຶ່ງຍ່ອມສຳຄັນກາງຄືນແທ້ໆວ່າ ກາງເວັນ, ຍ່ອມສຳຄັນກາງເວັນແທ້ໆວ່າ ກາງຄືນເຮົາຍ່ອມກ່າວຄວາມສຳຄັນຢ່າງນີ້ຂອງສະມະນະພຣາມນ໌ເຫລົ່ານັ້ນວ່າ ຢູ່ດ້ວຍຄວາມຫລົງ.

ພຣາມນ໌! ສ່ວນເຮົາຍ່ອມສຳຄັນກາງຄືນວ່າ ກາງຄືນ ຍ່ອມສຳຄັນກາງເວັນວ່າ ກາງເວັນ.

ພຣາມນ໌! ບຸຄຄົລເມື່ອຈະກ່າວເຖິງສັຕຜູ້ບໍ່ມີຄວາມຫລົງເປັນທັມມະດາ ເກີດຂຶ້ນໃນໂລກ ເພື່ອປະໂຍຊນ໌ເກື້ອກູນແກ່ມະຫາຊົນ ເພື່ອຄວາມສຸຂແກ່ມະຫາຊົນ ເພື່ອອະນຸເຄາະໂລກເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂແກ່ເທວະດາແລະມະນຸສທັງຫລາຍ ບຸຄຄົລເມື່ອຈະກ່າວໃຫ້ຖືກ ຄວນກ່າວເຖິງເຮົານັ້ນແລວ່າ ສັຕຜູ້ບໍ່ມີຄວາມຫລົງເປັນທັມມະດາ ເກີດຂຶ້ນໃນໂລກ ເພື່ອປະໂຍຊນ໌ເກື້ອກູນແກ່ມະຫາຊົນ ເພື່ອຄວາມສຸຂແກ່ມະຫາຊົນ ເພື່ອອະນຸເຄາະໂລກ ເພື່ອປະໂຍຊນ໌ເກື້ອກູນ ເພື່ອຄວາມສຸຂແກ່ເທວະດາແລະມະນຸສທັງຫລາຍ.

ພຣາມນ໌! ເຮົາປຣາຣົພຄວາມພຽນບໍ່ຍໍ້ຍ່ອນ ມີສະຕິຕັ້ງໝັ້ນບໍ່ຟັ່ນເຟືອນ ກາຍກໍສະງົບຣະງັບບໍ່ກະສັບກະສ່າຍ ຈິຕຕັ້ງໝັ້ນມີອາຣົມນ໌ແນ່ວແນ່.

ພຣາມນ໌! ເຮົານັ້ນສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່;

ເພາະວິຕົກວິຈາຣສງົບຣະງັບໄປ ຍ່ອມບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິຢູ່;

ເພາະປີຕິສິ້ນໄປ ເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະສະເຫວີຍສຸຂດ້ວຍກາຍ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາມີສະຕິຢູ່ເປັນສຸຂ.

ເພາະລະສຸຂແລະທຸກຂ໌ເສຍໄດ້ ແລະເພາະຄວາມດັບຫາຍໄປແຫ່ງໂສມະນັສແລະໂທມະນັສໃນກາລກ່ອນ ຍ່ອມບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່.

ເຮົານັ້ນ ເມື່ອຈິດເປັນສະມາທິ ບໍຣິສຸທ ຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນບໍ່ຫວັ່ນໄຫວຢ່າງນີ້ແລ້ວ ຍ່ອມນ້ອມຈິດໄປເພື່ອປຸພເພນິວາສານຸສະຕິຍານ ເຮົານັ້ນຍ່ອມຣະນຶກຊາຕກ່ອນໄດ້ເປັນອັນມາກຄື ຣະນຶກໄດ້ຊາຕໜຶ່ງແດ່ ສອງຊາຕແດ່ ສາມຊາຕແດ່ ສີ່ຊາຕແດ່ ຫ້າຊາຕແດ່ ສິບຊາຕແດ່ ຊາວຊາຕແດ່ ສາມສິບຊາຕແດ່ ສີ່ສິບຊາຕແດ່ ຫ້າສິບຊາຕແດ່ ຮ້ອຍຊາຕແດ່ ພັນຊາຕແດ່ ແສນຊາຕແດ່ ຫລາຍສັງວັຕຕະກັປ ຫລາຍວິວັຕຕະກັປແດ່ ຫລາຍສັງວັຕຕະວິວັຕຕະກັປແດ່ ວ່າໃນພົພນັ້ນ ເຮົາມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສະເຫວີຍສຸຂສະເຫວີຍທຸກຂ໌ຢ່າງນັ້ນ ມີກຳນົດອາຍຸເທົ່ານັ້ນ. ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ໄປບັງເກີດໃນພົພນັ້ນ ແມ່ນແຕ່ໃນພົພນັ້ນ ເຮົາກໍມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫານຢ່າງນັ້ນ ສະເຫວີຍສຸຂສະເຫວີຍທຸກຂ໌ຢ່າງນັ້ນ ມີກຳນົດອາຍຸເທົ່ານັ້ນ ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ມາບັງເກີດໃນພົພນີ້ ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອັນມາກ ພ້ອມທັງອາການ ພ້ອມທັງອຸເທສ ດ້ວຍປະການຢ່າງນີ້. ພຣາມມ໌ ວິຊຊາທີ ໑ ນີ້ແລ ເຮົາໄດ້ບັນລຸແລ້ວ ໃນປະຖົມຍາມແຫ່ງຣາຕຣີ ກຳຈັດອະວິຊຊາເສຍໄດ້ ວິຊຊາກໍເກີດຂຶ້ນ ກຳຈັດຄວາມມືດເສຍໄດ້ ຄວາມສວ່າງກໍເກີດຂຶ້ນ ເໝືອນບຸຄຄົລຜູ້ບໍ່ປະມາທ ມີຄວາມພຽນເຜົາກິເລສ ມີຕົນສົ່ງໄປແລ້ວຢູ່ ສັນນັ້ນ.

ເຮົານັ້ນ ເມື່ອຈິດເປັນສະມາທິ ບໍຣິສຸທ ຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນບໍ່ຫວັ່ນໄຫວຢ່າງນີ້ແລ້ວ ຍ່ອມນ້ອມຈິດໄປເພື່ອຈຸຕູປະປາຕະຍານ ເຮົານັ້ນມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕຜູ້ເປັນໄປຕາມກັມວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕ ມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຢຶດຖືການກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງອະບາຍທຸຄະຕິ ວິນິບາຕ ນະຣົກ. ສ່ວນສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຢຶດຖືການກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ ດັ່ງນີ້. ເຮົາຍ່ອມເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕທີ່ເປັນໄປຕາມກັມ ດ້ວຍປະການຢ່າງນີ້. ພຣາມນ໌ ວິຊຊາທີ ໒ ນີ້ແລ ເຮົາໄດ້ບັນລຸແລ້ວ ໃນມັຊຊິມະຍາມແຫ່ງຣາຕຣີ ກຳຈັດອະວິຊຊາເສຍໄດ້ ວິຊຊາກໍເກີດຂຶ້ນ ກຳຈັດຄວາມມືດເສຍໄດ້ ຄວາມສວ່າງກໍເກີດຂຶ້ນ ເໝືອນ

ບຸຄຄົລຜູ້ບໍ່ປະມາທ ມີຄວາມພຽນເຜົາກິເລສ ມີຕົນສົ່ງໄປແລ້ວຢູ່ ສັນນັ້ນ.

ເຮົານັ້ນ ເມື່ອຈິຕເປັນສະມາທິ ບໍຣິສຸທ ຜຸດຜ່ອງ ບໍ່ມີກິເລສ ປາສະຈາກອຸປະກິເລສ ອ່ອນ ຄວນແກ່ການງານ ຕັ້ງໝັ້ນບໍ່ຫວັ່ນໄຫວຢ່າງນີ້ແລ້ວ ຍ່ອມນ້ອມຈິຕໄປເພື່ອອາສະວັກຂະຍະຍານ ໄດ້ຮູ້ຊັດຕາມຄວາມເປັນຈິງວ່າ ນີ້ທຸກຂ໌ ນີ້ທຸກຂະສະມຸທັຍ ນີ້ທຸກຂະນິໂຣທ ນີ້ທຸກຂະນິໂຣທະຄາມິນີປະຕິປະທາເຫລົ່ານີ້ອາສະວະ ນີ້ເຫຕເກີດແຫ່ງອາສະວະ ນີ້ຄວາມດັບແຫ່ງອາສະວະ ນີ້ປະຕິປະທາໃຫ້ເຖິງຄວາມດັບແຫ່ງອາສະວະ ເມື່ອເຮົານັ້ນຮູ້ເຫັນຢ່າງນີ້ແລ້ວ ຈິຕກໍຫລຸດພົ້ນຈາກກາມາສະວະພະວາສະວະ ອະວິຊຊາສະວະ ເມື່ອຈິຕຫລຸດພົ້ນແລ້ວ ກໍມີຍານຢັ່ງຮູ້ວ່າ ຫລຸດພົ້ນແລ້ວ ໄດ້ຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳ ໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ. ພຣາມນ໌ ວິຊຊາທີ ໓ ນີ້ແລເຮົາໄດ້ບັນລຸແລ້ວ ໃນປັຈສິມຍາມແຫ່ງຣາຕຣີ ກຳຈັດອະວິຊຊາເສຍໄດ້ ວິຊຊາກໍເກີດຂຶ້ນ ກຳຈັດຄວາມມືດເສຍໄດ້ ຄວາມສວ່າງກໍເກີດຂຶ້ນ ເໝືອນບຸຄຄົລຜູ້ບໍ່ປະມາທ ມີຄວາມພຽນເຜົາກິເລສ ມີຕົນສົ່ງໄປແລ້ວຢູ່ ສັນນັ້ນ.

ພຣາມນ໌! ທ່ານອາດມີຄວາມຄິດຢ່າງນີ້ວ່າ ແມ່ນແຕ່ວັນນີ້ພຣະສະມະນະໂຄດົມຍັງບໍ່ປາສະຈາກຣາຄະ ຍັງບໍ່ປາສະຈາກໂທສະ ຍັງບໍ່ປາສະຈາກໂມຫະແນ່ນອນ ເພາະສະນັ້ນ ຈຶ່ງຍັງເສພເສນາສະນະອັນສງັດ ທັງທີ່ເປັນປ່າແລະປ່າປ່ງອຢູ່ ດັ່ງນີ້, ພຣາມນ໌ ໃນຂໍ້ນີ້ ທ່ານຢ່າເຫັນຢ່າງນັ້ນ.

ພຣາມນ໌! ເຮົາເຫັນອຳນາຈປະໂຍຊນ໌ ໘ ປະການຄື ເຫັນຄວາມຢູ່ເປັນສຸຂໃນປັຈຈຸບັນ ແລະເພື່ອອະນຸເຄາະຊົນຜູ້ເກີດໃນພາຍຫລັງ ຈຶ່ງເສພເສນາສະນະອັນສງັດ ທີ່ເປັນປ່າແລະປ່າປ່ງອ.

ຊົນຜູ້ເກີດໃນພາຍຫລັງນີ້ ທ່ານພຣະໂຄດົມອະນຸເຄາະຢູ່ແລ້ວເພາະທ່ານເປັນພຣະອະຣະຫັນຕະສັມມາສັມພຸທທະ.

ຂ້າແຕ່ທ່ານພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ, ຂ້າແຕ່ທ່ານພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ພຣະໂຄດົມຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນບຸຄຄົລຫງາຍຂອງທີ່ຂວ້ຳເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍເຖິງທ່ານພຣະໂຄດົມ ພຣະທັມ ແລະພຣະພິກຂຸ

ສົງຄ໌ວ່າ ເປັນສະຣະນະ ຂໍທ່ານພຣະໂຄດົມໂປດຊົງຈໍາ ຂ້ານ້ອຍໄວ້ວ່າ ເປັນອຸປາສົກຜູ້ເຖິງສະຣະນະຕລອດຊີວິຕ ຕັ້ງແຕ່ວັນນີ້ເປັນຕົ້ນໄປ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໔/໔໓-໓໑/໔໗-໕໔*



# ຂໍ້ທີ່ຄວນຫວັງໄດ້ ໑໗ ປະການ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂຕພຣະນະຄອຣ ສາວັຕຖີ ໃນທີ່ນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸ ທັງຫລາຍມາວ່າ **ພິກຂຸທັງຫລາຍ** ພິກຂຸເຫລົ່ານັ້ນທູລຮັບພຣະ ຜູ້ມີພຣະພາຄວ່າ ພຣະອົງຄ໌ຜູ້ຈະເຣີນ! ພຣະຜູ້ມີພຣະພາຄ ໄດ້ຕຣັສວ່າ:

**ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງເປັນຜູ້ມີສີລສົມບູນ ມີ ປາຕິໂມກຂ໌ອັນສົມບູນຢູ່ເຖີດ ຈົ່ງເປັນຜູ້ສັງຣວມຣະວັງໃນ**

**ປາຕິໂມກຂ໌ ເຖິງພ້ອມດ້ວຍອາຈາຣະແລະໂຄຈອຣຢູ່ເຖີດ ຈົ່ງເປັນຜູ້ມີປົກກະຕິເຫັນພັຍໃນໂທສທັ້ງຫລາຍແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັ້ງຫລາຍເຖີດ.**

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງເປັນທີ່ຮັກ ເປັນທີ່ພໍໃຈ ເປັນທີ່ເຄົາຣົພ ແລະເປັນທີ່ຍົກຍ້ອງຂອງ ເພື່ອນພຣົມມະຈັນຍ໌ທັງຫລາຍເຖີດ ດັ່ງນີ້, ພິກຂຸນັ້ນຄວນ ກະທໍາໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບ ຈິຕໃນພາຍໃນ(ອັຊຊັຕຕັນເຈໂຕສະມະຖະມະນຸຍຸຕໂຕ) ບໍ່ ກະທໍາຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນ ສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງໄດ້ຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂາຣ ດັ່ງນີ້, ພິກຂຸນັ້ນຄວນກະທໍາໃຫ້ບໍຣິບູນໃນສີລ ໝັ່ນປະກອບ ເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທໍາຊານໃຫ້ເຫີນ ຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາບໍຣິໂພຄ ຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊ ບໍຣິຂາຣຂອງເທວະດາຫລືມະນຸສເຫລົ່າໃດ ສັກກາຣະຂອງ

ເທວະດາແລະມະນຸສເຫລົ່ານັ້ນຈິ່ງມີຜົລຫລາຍ ມີອານິສົງສ໌ຫລາຍເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຍາຕສາຍໂລຫິຕຂອງເຮົາເຫລົ່າໃດທີ່ລ່ວງລັບທຳກາລະໄປແລ້ວ ມີຈິຕເຫລື້ອມໃສ ຣະນຶກເຖິງຢູ່ ຄວາມຣະນຶກເຖິງດ້ວຍຈິຕອັນເຫລື້ອມໃສຂອງຍາຕສາຍໂລຫິຕເຫລົ່ານັ້ນ ຈິ່ງມີຜົລຫລາຍ ມີອານິສົງສ໌ຫລາຍເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈິ່ງເປັນຜູ້ຂົ່ມຄວາມຍິນດີແລະຄວາມບໍ່ຍິນດີໄດ້ ອີກຢ່າງໜຶ່ງ ຄວາມບໍ່ຍິນດີຢ່າຄອບງຳເຮົາໄດ້ເລີຍ ຂໍເຮົາຈິ່ງຄອບງຳຍ່ຳຍີຄວາມບໍ່ຍິນດີທີ່ເກີດຂຶ້ນແລ້ວໄດ້ຢູ່ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່

ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງເປັນຜູ້ຂົ່ມຄວາມຢ້ານກົວໄດ້ ອີກຢ່າງໜຶ່ງ ຄວາມຢ້ານກົວຢ່າຄອບງຳເຮົາໄດ້ເລີຍ ຂໍເຮົາຈົ່ງຄອບງຳຍ່ຳຍີຄວາມຢ້ານກົວທີ່ເກີດຂຶ້ນແລ້ວໄດ້ຢູ່ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນເປັນເຄື່ອງຢູ່ເປັນສຸຂໃນປັຈຈຸບັນເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງຖືກຕ້ອງວິໂມກຂ໌ອັນລະອຽດເຊິ່ງບໍ່ມີຮູປ ເພາະລ່ວງຮູປສະມາບັຕດ້ວຍກາຍຢູ່ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນ

ປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງເປັນໂສດາບັນ ເພາະຄວາມສິ້ນໄປແຫ່ງສັງໂຍຊນ໌ ໓ ມີຄວາມບໍ່ຕົກຕ່ຳເປັນທັມມະດາ ເປັນຜູ້ທ່ຽງທີ່ຈະຕຣັສຮູ້ໃນເບື້ອງໜ້າເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງເປັນສະກະທາຄາມີ ເພາະຄວາມສິ້ນໄປແຫ່ງສັງໂຍຊນ໌ ໓ ແລະເພາະຣາຄະ ໂທສະ ໂມຫະ ເບົາບາງ ຍ່ອມມາສູ່ໂລກນີ້ອີກພຽງຄາວດຽວ ແລ້ວກະທຳທີ່ສຸດແຫ່ງທຸກຂ໌ໄດ້ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງເປັນອຸປປາຕິກະສັຕ ເພາະຄວາມສິ້ນໄປແຫ່ງໂອຣັມພາຄີຍະສັງໂຍຊນ໌ ໕ ຈັກປະຣິນິພພານໃນພົພນັ້ນ ມີການບໍ່ກັບມາຈາກໂລກນັ້ນ

ເປັນທັມມະດາເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສິລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງ
ບັນລຸອິທທິວິທີຫລາຍປະການຄື:
ຄົນດຽວເຮັດເປັນຫລາຍຄົນກໍໄດ້;
ຫລາຍຄົນເປັນຄົນດຽວກໍໄດ້;
ຫາຍໂຕໄປນອກຝາ ນອກກຳແພງ ນອກພູເຂົາໄດ້ໂດຍບໍ່ຕິດ
ຂັດເໝືອນໄປໃນທີ່ວ່າງກໍໄດ້;
ກະທຳການຜຸດຂຶ້ນຫລືມຸດລົງໃນແຜ່ນດິນເໝືອນໃນນ້ຳກໍໄດ້;
ເດີນເທິງນ້ຳເໝືອນເດີນໃນແຜ່ນດິນກໍໄດ້;
ເຫາະໄປໃນອາກາສທັງໆທີ່ຍັງນັ່ງຄູ້ບັນລັງເໝືອນນົກກໍໄດ້;
ລູບຄຳດວງຈັນທ໌ ດວງອາທິຕເຊິ່ງມີລິທຫລາຍ ມີອານຸພາບ
ຫລາຍດ້ວຍຝາມືກໍໄດ້;
ໃຊ້ອຳນາຈທາງກາຍໄປຕລອດພຣົມມະໂລກກໍໄດ້ເຖີດ ດັ່ງນີ້,
ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສິລ ໝັ່ນປະກອບເນື່ອງໆ
ເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ
ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງໄດ້ຍິນສຽງທັງ ໘ ຄື ສຽງທິພຍ໌ແລະສຽງມະນຸສທັງໃນທີ່ໄກແລະໃນທີ່ໃກ້ ດ້ວຍທິພພະໂສຕະ*(ຫູທິບ)* ອັນບໍຣິສຸທ ລ່ວງໂສຕະຂອງມະນຸສເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງກຳນົດຮູ້ໃຈຂອງສັຕອື່ນ ແລະບຸຄຄົລອື່ນໄດ້ດ້ວຍໃຈຄື:

ຈິຕມີຣາຄະ ກໍຮູ້ວ່າ ຈິຕມີຣາຄະ;

ຈິຕປາສະຈາກຣາຄະ ກໍຮູ້ວ່າ ຈິຕປາສະຈາກຣາຄະ;

ຈິຕມີໂທສະ ກໍຮູ້ວ່າ ຈິຕມີໂທສະ;

ຈິຕປາສະຈາກໂທສະ ກໍຮູ້ວ່າ ຈິຕປາສະຈາກໂທສະ;

ຈິຕມີໂມຫະ ກໍຮູ້ວ່າ ຈິຕມີໂມຫະ;

ຈິຕປາສະຈາກໂມຫະ ກໍຮູ້ວ່າ ຈິຕປາສະຈາກໂມຫະ;

ຈິຕຫົດຫູ່ ກໍຮູ້ວ່າ ຈິຕຫົດຫູ່;

ຈິຕຟຸ້ງຊ່ານ ກໍຮູ້ວ່າ ຈິຕຟຸ້ງຊ່ານ;

ຈິຕເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕເປັນມະຫັຄຄະຕະ;

ຈິຕບໍ່ເປັນມະຫັຄຄະຕະ ກໍຮູ້ວ່າ ຈິຕບໍ່ເປັນມະຫັຄຄະຕະ;

ຈິຕມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕມີຈິຕອື່ນຍິ່ງກວ່າ;

ຈິຕບໍ່ມີຈິຕອື່ນຍິ່ງກວ່າ ກໍຮູ້ວ່າ ຈິຕບໍ່ມີຈິຕອື່ນຍິ່ງກວ່າ;
ຈິຕຕັ້ງໝັ້ນ ກໍຮູ້ວ່າ ຈິຕຕັ້ງໝັ້ນ;
ຈິຕບໍ່ຕັ້ງໝັ້ນ ກໍຮູ້ວ່າ ຈິຕບໍ່ຕັ້ງໝັ້ນ;
ຈິຕຫລຸດພົ້ນ ກໍຮູ້ວ່າ ຈິຕຫລຸດພົ້ນ;
ຈິຕບໍ່ຫລຸດພົ້ນ ກໍຮູ້ວ່າ ຈິຕບໍ່ຫລຸດພົ້ນເຖີດ ດັ່ງນີ້,
ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆ ເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງຣະນຶກເຖິງຊາຕກ່ອນໄດ້ເປັນອະເນກປະການຄື ຣະນຶກໄດ້ຊາຕໜຶ່ງແດ່ ສອງຊາຕແດ່ ສາມຊາຕແດ່ ສີ່ຊາຕແດ່ ຫ້າຊາຕແດ່ ສິບຊາຕແດ່ ຊາວຊາຕແດ່ ສາມສິບຊາຕແດ່ ສີ່ສິບຊາຕແດ່ ຫ້າສິບຊາຕແດ່ ຮ້ອຍຊາຕແດ່ ພັນຊາຕແດ່ ແສນຊາຕແດ່ ຫລາຍສັງວັຕຕະກັປ ຫລາຍວິວັຕຕະກັປແດ່ ຫລາຍສັງວັຕຕະວິວັຕຕະກັປແດ່ ວ່າໃນພົພນັ້ນ ເຮົາມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫາຣຢ່າງນັ້ນ ສະເຫວີຍສຸຂສະເຫວີຍທຸກຂ໌ຢ່າງນັ້ນ ມີກຳນົດອາຍຸເທົ່ານັ້ນ. ເຮົານັ້ນຈຸຕິຈາກພົພນັ້ນແລ້ວ ໄດ້ໄປບັງເກີດໃນພົພນັ້ນ ແມ່ນແຕ່ໃນພົພນັ້ນ ເຮົາກໍມີຊື່ຢ່າງນັ້ນ ມີໂຄຕຢ່າງນັ້ນ ມີຜິວພັນຢ່າງນັ້ນ ມີອາຫາຣຢ່າງນັ້ນ ສະເຫວີຍສຸຂສະເຫວີຍທຸກຂ໌ຢ່າງນັ້ນ ມີກຳນົດ

ອາຍຸເທົ່ານັ້ນ ເຮົານັ້ນຈຸຕິຈາກພົບນັ້ນແລ້ວ ໄດ້ມາບັງເກີດໃນພົບນີ້ ຍ່ອມຣະນຶກເຖິງຊາຕກ່ອນໄດ້ເປັນອັນມາກ ພ້ອມທັງອາກາຣ ພ້ອມທັງອຸເທສ ດ້ວຍປະກາຣຢ່າງນີ້ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງມອງເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທລ່ວງຈັກຂຸຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັຕຜູ້ເປັນໄປຕາມກັມວ່າ ສັຕເຫລົ່ານີ້ປະກອບດ້ວຍກາຍທຸຈະຣິຕ ວະຈີທຸຈະຣິຕມະໂນທຸຈະຣິຕ ຕິຕຽນພຣະອະຣິຍະເຈົ້າ ເປັນມິຈສາທິຕຖິ ຍຶດຖືກາຣກະທຳດ້ວຍອຳນາຈມິຈສາທິຕຖິ ເມື່ອແຕກກາຍຕາຍໄປເຂົາຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ. ສ່ວນສັຕເຫລົ່ານີ້ປະກອບດ້ວຍກາຍສຸຈະຣິຕ ວະຈີສຸຈະຣິຕ ມະໂນສຸຈະຣິຕ ບໍ່ຕິຕຽນພຣະອະຣິຍະເຈົ້າ ເປັນສັມມາທິຕຖິ ຍຶດຖືກາຣກະທຳດ້ວຍອຳນາຈສັມມາທິຕຖິ ເມື່ອແຕກກາຍຕາຍໄປ ເຂົາຍ່ອມເຂົ້າເຖິງສຸຄະຕິໂລກສວັນ ດັ່ງນີ້. ເຂົາຍ່ອມເຫັນໝູ່ສັຕທີ່ກຳລັງຈຸຕິ ກຳລັງອຸບັຕ ຕ່ຳຊາມ ປະນີຕ ມີຜິວພັນດີ ມີຜິວພັນຊາມ ໄດ້ດີ ຕົກຍາກດ້ວຍທິພພະຈັກຂຸອັນບໍຣິສຸທ ລ່ວງຈັກຂຸ

ຂອງມະນຸສ ຍ່ອມຮູ້ຊັດເຊິ່ງໝູ່ສັດທີ່ເປັນໄປຕາມກັມ ດ້ວຍປະການຢ່າງນີ້ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

ພິກຂຸທັງຫລາຍ! ຖ້າພິກຂຸມີຄວາມຫວັງວ່າ ຂໍເຮົາຈົ່ງກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ເຖີດ ດັ່ງນີ້, ພິກຂຸນັ້ນຄວນກະທຳໃຫ້ບໍຣິບູນໃນສີລ ໝັ່ນປະກອບເນື່ອງໆເຊິ່ງຄວາມສງົບຈິຕໃນພາຍໃນ ບໍ່ກະທຳຊານໃຫ້ເຫີນຫ່າງ ປະກອບດ້ວຍວິປັສສນາ ພອກພູນສຸນຍາຄາຣ.

**ຄຳທີ່ເຮົາກ່າວແລ້ວວ່າ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງເປັນຜູ້ມີສີລສົມບູນ ມີປາຕິໂມກຂ໌ອັນສົມບູນຢູ່ເຖີດ ຈົ່ງເປັນຜູ້ສັງວອນຣະວັງໃນປາຕິໂມກຂ໌ ເຖິງພ້ອມດ້ວຍອາຈາຣະແລະໂຄຈອຣຢູ່ເຖີດ ຈົ່ງເປັນຜູ້ມີປົກກະຕິເຫັນພັຍໃນໂທສທັງຫລາຍແມ່ນພຽງເລັກນ້ອຍ ສະມາທານສຶກສາຢູ່ໃນສິກຂາບົທທັງຫລາຍເຖີດ ດັ່ງນີ້, ຄຳນັ້ນ ເຮົາອາສັຍອຳນາຈປະໂຍຊນ໌ນີ້ແລ ກ່າວແລ້ວ.**

ພຣະຜູ້ມີພຣະພາຄໄດ້ຕຣັສພາສິຕນີ້ແລ້ວ ພິກຂຸເຫລົ່ານັ້ນມີໃຈ
ຊົມຊື່ນຍິນດີພຣະພາສິຕຂອງພຣະຜູ້ມີພຣະພາຄແລ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໕໓/໗໓*



**“Taking into account interior factors, mendicants, I do not see a single one that is so very beneficial as arousing energy. Arousing energy is very beneficial.”**

Dutiyapamādādivagga AN 1.98–139
https://suttacentral.net/an1.98-139



# ມະຫາປຸຣິສະວິຕົກ ໘

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ປ່າເພສະກະລາມິຄະທາຍະວັນ ເຂຕພຣະນະຄອຣສຸງສຸມາຣະຄິຣະ ແຄວ້ນພັຄຄະຊົນບົທ. ໃນສມັຍນັ້ນ ທ່ານພຣະອະນຸຣຸທທະຢູ່ທີ່ວິຫາຣປາຈີນະວັງສະທາຍະວັນ ແຄວ້ນເຈຕິຍະ, ຄັ້ງນັ້ນ ທ່ານພຣະອະນຸຣຸທທະຫລີກເຣັ້ນຢູ່ໃນທີ່ລັບ ເກີດຄວາມປະຣິວິຕົກທາງໃຈຢ່າງນີ້ວ່າ:

ທັມນີ້ເປັນຂອງບຸຄຄົລຜູ້ມີຄວາມປາຖນານ້ອຍ ບໍ່ແມ່ນຂອງບຸຄຄົລຜູ້ມີຄວາມປາຖນາມາກ,

ທັມນີ້ເປັນຂອງບຸຄຄົລຜູ້ສັນໂດດ ບໍ່ແມ່ນຂອງບຸຄຄົລຜູ້ບໍ່ສັນໂດດ,

ທັມນີ້ເປັນຂອງບຸຄຄົລຜູ້ສງັດ ບໍ່ແມ່ນຂອງບຸຄຄົລຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ,

ທັມນີ້ເປັນຂອງບຸຄຄົລຜູ້ປຣາຣົພຄວາມພຽນ ບໍ່ແມ່ນຂອງບຸຄຄົລຜູ້ກຽດຄ້ານ,

ທັມນີ້ເປັນຂອງບຸຄຄົລຜູ້ມີສະຕິຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີສະຕິຫລົງລືມ,

ທັມນີ້ເປັນຂອງບຸຄຄົລຜູ້ມີຈິຕຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີຈິຕບໍ່ຕັ້ງໝັ້ນ,

ທັມນີ້ເປັນຂອງບຸຄຄົລຜູ້ມີປັນຍາ ບໍ່ແມ່ນຂອງບຸຄຄົລຜູ້ມີປັນຍາຊາມ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງຊາບຄວາມປະຣິວິຕົກແຫ່ງໃຈຂອງທ່ານພຣະອະນຸຣຸທທະແລ້ວ ສະເດັຈຈາກເພສະກະລາມິຄະທາຍະວັນ ນະຄອຣສຸງສຸມາຣະຄິຣະ ແຄວ້ນພັຄຄະ

ຊົນບົທ ໄປປາກົຕຕໍ່ໜ້າທ່ານພຣະອະນຸຣຸທທະທີ່ວິຫາຣປາຈີນະວັງສະທາຍະວັນ ປຽບເໝືອນບຸຣຸສຜູ້ມີກຳລັງຢຽດແຂນທີ່ຄູ້ ຫລືຄູ້ແຂນທີ່ຢຽດ ສັນນັ້ນ. ພຣະຜູ້ມີພຣະພາຄປະທັບນັ່ງເທິງອາສະນະທີ່ຈັດຖວາຍແລ້ວ ທ່ານພຣະອະນຸຣຸທທະຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄໄດ້ຕຣັສກັບທ່ານພຣະອະນຸຣຸທທະວ່າ:

ສາທຸ ສາທຸ ອະນຸຣຸທທະ! ດີແລ້ວ ທີ່ເຈົ້າຣະນຶກມະຫາປຸຣິສະວິຕົກວ່າ:

ທັມນີ້ເປັນຂອງບຸຄຄົລຜູ້ມີຄວາມປາຖນານ້ອຍ ບໍ່ແມ່ນຂອງບຸຄຄົລຜູ້ມີຄວາມປາຖນາມາກ,

ທັມນີ້ເປັນຂອງບຸຄຄົລຜູ້ສັນໂດດ ບໍ່ແມ່ນຂອງບຸຄຄົລຜູ້ບໍ່ສັນໂດດ,

ທັມນີ້ເປັນຂອງບຸຄຄົລຜູ້ສງັດ ບໍ່ແມ່ນຂອງບຸຄຄົລຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ,

ທັມນີ້ເປັນຂອງບຸຄຄົລຜູ້ປຣາຣົພຄວາມພຽນ ບໍ່ແມ່ນຂອງບຸຄຄົລຜູ້ກຽດຄ້ານ,

ທັມນີ້ເປັນຂອງບຸຄຄົລຜູ້ມີສະຕິຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີສະຕິຫລົງລືມ,

ທັມນີ້ເປັນຂອງບຸຄຄົລຜູ້ມີຈິຕຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີຈິຕບໍ່ຕັ້ງໝັ້ນ,

ທັມນີ້ເປັນຂອງບຸຄຄົລຜູ້ມີປັນຍາ ບໍ່ແມ່ນຂອງບຸຄຄົລຜູ້ມີປັນຍາຊາມ.

ອະນຸຣຸທທະ! ຖ້າຢ່າງນັ້ນ ເຈົ້າຈົ່ງຣະນຶກມະຫາປຸຣິສະວິຕົກຂໍ້ທີ ໘ ນີ້ວ່າ ທັມນີ້ເປັນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ບໍ່ເນີນຊ້າ ຜູ້ຍິນດີໃນທັມທີ່ບໍ່ເນີນຊ້າ ບໍ່ແມ່ນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ເປັນເຫຕໃຫ້ເນີນຊ້າ ຜູ້ຍິນດີໃນທັມທີ່ເປັນເຫຕໃຫ້ເນີນຊ້າ.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໘ ປະກາຣນີ້ ໃນກາລນັ້ນ ເຈົ້າຈັກຫວັງໄດ້ວ່າ ຈັກສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໘ ປະກາຣນີ້ ໃນກາລນັ້ນ ເຈົ້າຈັກຫວັງໄດ້ວ່າ ຈັກບັນລຸທຸຕິຍະ

ຊານ ມີຄວາມຜ່ອງໃສແຫ່ງຈິດໃນພາຍໃນ ເປັນທັມອັນເອກ ຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ເພາະວິຕົກວິຈາຣສງົບໄປ ມີແຕ່ ປີຕິແລະສຸຂອັນເກີດແຕ່ສະມາທິຢູ່.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໘ ປະກາຣນີ້ ໃນກາລນັ້ນ ເຈົ້າຈັກຫວັງໄດ້ວ່າ ຈັກເປັນຜູ້ມີອຸ ເປກຂາ ມີສະຕິສັມປະຊັນຍະ ສະເຫວີຍສຸຂດ້ວຍກາຍ ເພາະ ປີຕິສິ້ນໄປ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າ ທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາ ມີສະຕິ ຢູ່ເປັນສຸຂ.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໘ ປະກາຣນີ້ ໃນກາລນັ້ນ ເຈົ້າຈັກຫວັງໄດ້ວ່າ ຈັກບັນລຸ ຈະຕຸຕຖະຊານ ອັນບໍ່ມີທຸກຂ໌ ບໍ່ມີສຸຂ ເພາະລະສຸຂລະທຸກຂ໌ ເສຍໄດ້ ແລະດັບໂສມະນັສໂທມະນັສໃນກາລກ່ອນໄດ້ ມີແຕ່ອຸ ເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໘ ປະກາຣນີ້ ແລະເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ ຍາກ ໂດຍບໍ່ລຳບາກເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນ ເປັນເຄື່ອງຢູ່ເປັນສຸຂໃນປັຈຈຸບັນ ໃນກາລນັ້ນ **ຜ້າບັງສຸກຸລ**

**ຈີວອຣ** ຈັກປາກົຕແກ່ເຈົ້າຜູ້ສັນໂດດ ຢູ່ດ້ວຍຄວາມຍິນດີ ດ້ວຍຄວາມບໍ່ຫວາດຫວັ່ນ ດ້ວຍຄວາມຢູ່ເປັນສຸຂ ດ້ວຍການກ້າວລົງສູ່ນິພພານ ປຽບເໝືອນຫີບໃສ່ຜ້າຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີອັນເຕັມໄປດ້ວຍຜ້າສີຕ່າງໆ ສັນນັ້ນ.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໗ ປະການນີ້ ແລະເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນເປັນເຄື່ອງຢູ່ເປັນສຸຂໃນປັຈຈຸບັນ ໃນກາລນັ້ນ **ໂພຊະນະຄືຄຳເຂົ້າທີ່ໄດ້ມາດ້ວຍບິແຂັ່ງ** ຈັກປາກົຕແກ່ເຈົ້າຜູ້ສັນໂດດ ຢູ່ດ້ວຍຄວາມຍິນດີ ດ້ວຍຄວາມບໍ່ຫວາດຫວັ່ນ ດ້ວຍຄວາມຢູ່ເປັນສຸຂ ດ້ວຍການກ້າວລົງສູ່ນິພພານ ປຽບເໝືອນເຂົ້າສຸກ (ຫຸງຈາກ) ເຂົ້າສາລີຄັດເອົາເມັດດຳອອກແລ້ວ ມີແກງແລະກັບຫລາຍຢ່າງຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີ ສັນນັ້ນ.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໗ ປະການນີ້ ແລະເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນເປັນເຄື່ອງຢູ່ເປັນສຸຂໃນປັຈຈຸບັນ ໃນກາລນັ້ນ **ເຫງົ້າໄມ້** ຈັກປາກົຕແກ່ເຈົ້າຜູ້ສັນໂດດ ຢູ່ດ້ວຍຄວາມຍິນດີ ດ້ວຍຄວາມບໍ່ຫວາດຫວັ່ນ ດ້ວຍຄວາມຢູ່ເປັນສຸຂ ດ້ວຍການກ້າວລົງສູ່ນິພ

ພານ ປຽບເໝືອນເຮືອນຍອດຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີ ສາບທາໄວ້ດີແລ້ວ ປາສະຈາກລົມ ໃສ່ລີ້ມສລັກມິດຊິດ ປິດໜ້າຕ່າງສນິດ ສັນນັ້ນ.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໗ ປະການີ້ ແລະເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນເປັນເຄື່ອງຢູ່ເປັນສຸຂໃນປັຈຈຸບັນ ໃນກາລນັ້ນ **ທີ່ນອນທີ່ນັ່ງອັນລາດດ້ວຍຫຍ້າ** ຈັກປາກົຕແກ່ເຈົ້າຜູ້ສັນໂດດ ຢູ່ດ້ວຍຄວາມຍິນດີ ດ້ວຍຄວາມບໍ່ຫວາດຫວັ່ນ ດ້ວຍຄວາມຢູ່ເປັນສຸຂ ດ້ວຍການກ້າວລົງສູ່ນິພພານ ປຽບເໝືອນບັນລັງກ໌ຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີ ອັນລາດດ້ວຍຜ້າໂກເຊົາວ໌ຂົນຍາວ ລາດດ້ວຍຂົນແກະສີຂາວ ມີໝອນຂ້າງແດງທັງສອງຂ້າງ ສັນນັ້ນ.

ອະນຸຣຸທທະ! ໃນກາລໃດແລ ເຈົ້ານຶກເຖິງມະຫາປຸຣິສະວິຕົກ ໗ ປະການີ້ ແລະເປັນຜູ້ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເຊິ່ງຊານທັງ ໔ ອັນມີໃນຈິຕອັນຍິ່ງ ອັນເປັນເຄື່ອງຢູ່ເປັນສຸຂໃນປັຈຈຸບັນ ໃນກາລນັ້ນ **ນ້ຳມູຕເນົ່າ** ຈັກປາກົຕແກ່ເຈົ້າຜູ້ສັນໂດດ ຢູ່ດ້ວຍຄວາມຍິນດີ ດ້ວຍຄວາມບໍ່ຫວາດຫວັ່ນ ດ້ວຍຄວາມຢູ່ເປັນສຸຂ ດ້ວຍການກ້າວລົງສູ່ນິພພານ ປຽບເໝືອນເພສັຊຕ່າງໆຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ

ນ້ຳເຜີ້ງ ນ້ຳອ້ອຍ ຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີສັນນັ້ນ.

ອະນຸຣຸທທະ! ຖ້າຢ່າງນັ້ນ ເຈົ້າຈົ່ງຈຳພັນສາທີ່ວິຫາຣປາຈີນະວັງສະທາຍະວັນ ແຄວ້ນເຈຕີຍະນີ້ແຫລະຕໍ່ໄປອີກ.

ທ່ານພຣະອະນຸຣຸທທະທູລຮັບພຣະຜູ້ມີພຣະພາຄແລ້ວ ລຳດັບນັ້ນ ພຣະຜູ້ມີພຣະພາຄໄດ້ຕຣັສສອນທ່ານພຣະອະນຸຣຸທທະດ້ວຍພຣະໂອວາທນີ້ແລ້ວ ສະເດັຈຈາກວິຫາຣປາຈີນະວັງສະທາຍະວັນ ແຄວ້ນເຈຕີຍະນະຄອຣ ໄປປາກົຕທີ່ປ່າເພສະກະລາມິຄະທາຍະວັນ ເຂຕເມືອງສຸງສຸມາຣະຄີຣະ ແຄວ້ນພັຄຄະ ປຽບເໝືອນບຸຣຸສຜູ້ມີກຳລັງຢຽດແຂນທີ່ຄູ້ຫລືຄູ້ແຂນທີ່ຢຽດສັນນັ້ນ. ພຣະຜູ້ມີພຣະພາຄປະທັບນັ່ງເທິງອາສະນະທີ່ຈັດໄວ້ຖວາຍແລ້ວ ຄັນແລ້ວຕຣັສຮຽກພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ເຮົາຈັກສະແດງມະຫາປຸຣິສະວິຕົກ ๘ ປະການ ແກ່ພວກເຈົ້າທັງຫລາຍ ພວກເຈົ້າທັງຫລາຍຈົ່ງຟັງ ໆລໆ

ພິກຂຸທັງຫລາຍ! ກໍມະຫາປຸຣິສະວິຕົກ ๘ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ທັມນີ້ເປັນຂອງບຸຄຄົລຜູ້ມີຄວາມປາຖນານ້ອຍ ບໍ່ແມ່ນຂອງບຸຄຄົລຜູ້ມີຄວາມປາຖນາມາກ,

ທັມນີ້ເປັນຂອງບຸຄຄົລຜູ້ສັນໂດດ ບໍ່ແມ່ນຂອງບຸຄຄົລຜູ້ບໍ່ສັນໂດດ,

ທັມນີ້ເປັນຂອງບຸຄຄົລຜູ້ສງັດ ບໍ່ແມ່ນຂອງບຸຄຄົລຜູ້ຍິນດີໃນການຄຸກຄີດ້ວຍໝູ່ຄະນະ,

ທັມນີ້ເປັນຂອງບຸຄຄົລຜູ້ປຣາຣົພຄວາມພຽນ ບໍ່ແມ່ນຂອງບຸຄຄົລຜູ້ກຽດຄ້ານ,

ທັມນີ້ເປັນຂອງບຸຄຄົລຜູ້ມີສະຕິຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີສະຕິຫລົງລືມ,

ທັມນີ້ເປັນຂອງບຸຄຄົລຜູ້ມີຈິຕຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີຈິຕບໍ່ຕັ້ງໝັ້ນ,

ທັມນີ້ເປັນຂອງບຸຄຄົລຜູ້ມີປັນຍາ ບໍ່ແມ່ນຂອງບຸຄຄົລຜູ້ມີປັນຍາຊາມ.

ທັມນີ້ເປັນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ບໍ່ເນີນຊ້າ ຜູ້ຍິນດີໃນທັມທີ່ບໍ່ເນີນຊ້າ ບໍ່ແມ່ນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ເປັນເຫຕໃຫ້ເນີນຊ້າ ຜູ້ຍິນດີໃນທັມທີ່ເປັນເຫຕໃຫ້ເນີນຊ້າ.

ພິກຂຸທັງຫລາຍ! ກໍຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີຄວາມປາຖນານ້ອຍ ບໍ່ແມ່ນຂອງບຸຄຄົລຜູ້ມີຄວາມປາຖນາມາກ, ເຮົາອາສັຍອັນໃດກ່າວແລ້ວ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເປັນຜູ້ມີຄວາມປາຖນານ້ອຍ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ມີຄວາມປາຖນານ້ອຍ.

ເປັນຜູ້ສັນໂດດ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ສັນໂດດ.

ເປັນຜູ້ສງັດ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ສງັດ.

ເປັນຜູ້ປຣາຣົພຄວາມພຽນ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ປຣາຣົພຄວາມພຽນ.

ເປັນຜູ້ມີສະຕິຕັ້ງໝັ້ນ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ມີສະຕິຕັ້ງໝັ້ນ.

ເປັນຜູ້ມີຈິຕຕັ້ງໝັ້ນ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ມີຈິຕຕັ້ງໝັ້ນ.

ເປັນຜູ້ມີປັນຍາ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ມີປັນຍາ.

ເປັນຜູ້ຊອບໃຈໃນທັມທີ່ບໍ່ເນີນຊ້າ ຍ່ອມບໍ່ປາຖນາວ່າ ຂໍຊົນທັງຫລາຍຈົ່ງຮູ້ເຮົາວ່າ ເປັນຜູ້ຊອບໃຈໃນທັມທີ່ບໍ່ເນີນຊ້າ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີຄວາມປາຖນານ້ອຍ ບໍ່ແມ່ນຂອງບຸຄຄົລຜູ້ມີຄວາມປາຖນາມາກ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ສັນໂດດ ບໍ່ແມ່ນຂອງບຸຄຄົລຜູ້ບໍ່ສັນໂດດ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ເປັນຜູ້ສັນໂດດດ້ວຍຈີວອຣຕາມມີຕາມໄດ້, ເປັນຜູ້ສັນໂດດດ້ວຍບິນທະບາຕຕາມມີຕາມໄດ້, ເປັນຜູ້ສັນໂດດດ້ວຍເສນາສະນະ

ຕາມມີຕາມໄດ້, ເປັນຜູ້ສັນໂດດດ້ວຍຄິລານະປັຈຈັຍເພສັຊບໍຣິຂາຣຕາມມີຕາມໄດ້. ພິກຂຸທັງຫລາຍ ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ສັນໂດດ ບໍ່ແມ່ນຂອງບຸຄຄົລຜູ້ບໍ່ສັນໂດດ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ສງັດ ບໍ່ແມ່ນຂອງບຸຄຄົລຜູ້ຊອບໃຈການຄຸກຄີດ້ວຍໝູ່ຄະນະ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ພວກພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ພຣະຣາຊາ ມະຫາອະມາຕຍ໌ຂອງພຣະຣາຊາ ເດຍຣະຖີຍ໌ ແລະສາວົກຂອງເດຍຣະຖີຍ໌ ເຂົ້າໄປຫາພິກຂຸນັ້ນ ພິກຂຸມີຈິຕນ້ອມໄປ ໂນ້ມໄປ ໂອນໄປໃນວິເວກ ຕັ້ງຢູ່ໃນວິເວກ ຍິນດີໃນເນກຂັມມະ ຍ່ອມກ່າວກະຖາອັນປະຕິສັງຍຸຕດ້ວຍຖ້ອຍຄຳຕາມສົມຄວນໃນສະມາຄົມນັ້ນໂດຍແທ້. ພິກຂຸທັງຫລາຍ ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ສງັດ ບໍ່ແມ່ນຂອງບຸຄຄົລຜູ້ຊອບໃຈການຄຸກຄີດ້ວຍໝູ່ຄະນະ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ປຣາຣົພຄວາມພຽນ ບໍ່ແມ່ນຂອງບຸຄຄົລຜູ້ກຽດຄ້ານ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ເປັນຜູ້ປຣາຣົພຄວາມພຽນເພື່ອລະອະກຸສົລທັມທັງຫລາຍ ເພື່ອ

ຄວາມເຖິງພ້ອມແຫ່ງກຸສົລທັມທັງຫລາຍ ເປັນຜູ້ມີກຳລັງ ມີຄວາມບາກບັ່ນໝັ້ນຄົງ ບໍ່ປະຖິ້ມທຸຣະໃນກຸສົລທັມທັງຫລາຍ. ພິກຂຸທັງຫລາຍ ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ປຣາຣົພຄວາມພຽນ ບໍ່ແມ່ນຂອງບຸຄຄົລຜູ້ກຽດຄ້ານ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີສະຕິຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີສະຕິຫລົງລືມ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ເປັນຜູ້ມີສະຕິ ປະກອບດ້ວຍສະຕິເປັນເຄື່ອງຮັກສາຕົນຢ່າງຍິ່ງ ຣະນຶກເຖິງສິ່ງທີ່ກະທຳຄຳທີ່ເວົ້າແມ່ນແຕ່ນານໄດ້. ພິກຂຸທັງຫລາຍ ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີສະຕິຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີສະຕິຫລົງລືມ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີຈິຕຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີຈິຕບໍ່ຕັ້ງໝັ້ນ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່;

ເພາະວິຕົກວິຈາຣສງົບຣະງັບໄປ ຍ່ອມບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິຢູ່;

ເພາະປີຕິສິ້ນໄປ ເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະສະເຫວີຍສຸຂດ້ວຍກາຍ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາມີສະຕິຢູ່ເປັນສຸຂ.

ເພາະລະສຸຂແລະທຸກຂ໌ເສຍໄດ້ ແລະເພາະຄວາມດັບຫາຍໄປແຫ່ງໂສມະນັສແລະໂທມະນັສໃນກາລກ່ອນ ຍ່ອມບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີຈິຕຕັ້ງໝັ້ນ ບໍ່ແມ່ນຂອງບຸຄຄົລຜູ້ມີຈິຕບໍ່ຕັ້ງໝັ້ນ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ມີປັນຍາ ບໍ່ແມ່ນຂອງບຸຄຄົລຜູ້ມີປັນຍາຊາມ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ພິກຂຸໃນທັມວິນັຍນີ້ ເປັນຜູ້ມີ

ປັນຍາ ປະກອບດ້ວຍປັນຍາເຄື່ອງກຳນົດຮູ້ຄວາມເກີດແລະຄວາມດັບອັນເປັນອະຣິຍະ ເປັນເຄື່ອງຊຳແຮກກິເລສໃຫ້ເຖິງຄວາມສິ້ນທຸກຂ໌ໂດຍຊອບ. ພິກຂຸທັງຫລາຍ ຂໍ້ທີ່ເຮົາກ່າວວ່າທັມນີ້ເປັນຂອງບຸຄຄົລຜູ້ມີປັນຍາ ບໍ່ແມ່ນຂອງບຸຄຄົລຜູ້ມີປັນຍາຊາມ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ບໍ່ເນີນຊ້າ ຜູ້ຍິນດີໃນທັມທີ່ບໍ່ເນີນຊ້າ ບໍ່ແມ່ນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ເປັນເຫຕໃຫ້ເນີນຊ້າ ຜູ້ຍິນດີໃນທັມທີ່ເປັນເຫຕໃຫ້ເນີນຊ້າ ເຮົາອາສັຍອັນໃດກ່າວແລ້ວ? ພິກຂຸທັງຫລາຍ ຈິຕຂອງພິກຂຸໃນທັມວິນັຍນີ້ ຍ່ອມແລ່ນໄປເຫລື້ອມໃສ ຕັ້ງໝັ້ນຢູ່ໃນຄວາມດັບກິເລສເຄື່ອງເນີນຊ້າ ຍ່ອມຫລຸດພົ້ນ. ພິກຂຸທັງຫລາຍ! ຂໍ້ທີ່ເຮົາກ່າວວ່າ ທັມນີ້ເປັນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ບໍ່ເນີນຊ້າ ຜູ້ຍິນດີໃນທັມທີ່ບໍ່ເນີນຊ້າ ບໍ່ແມ່ນຂອງບຸຄຄົລຜູ້ຊອບໃຈໃນທັມທີ່ເປັນເຫຕໃຫ້ເນີນຊ້າ ຜູ້ຍິນດີໃນທັມທີ່ເປັນເຫຕໃຫ້ເນີນຊ້າ ດັ່ງນີ້, ເຮົາອາສັຍຂໍ້ນີ້ກ່າວແລ້ວ.

ຄັ້ງນັ້ນແລ ທ່ານພຣະອະນຸຣຸທທະຢູ່ຈຳພັນສາທີ່ວິຫາຣປາຈີນະວັງສະທາຍະວັນ ແຄວ້ນເຈຕີຍະນະຄອຣນັ້ນແລ ຕໍ່ໄປອີກ. ຄັ້ງນັ້ນ ທ່ານພຣະອະນຸຣຸທທະຫລີກອອກຈາກໝູ່ຢູ່ຜູ້ດຽວ ບໍ່ປະ

ມາທ ມີຄວາມພຽນ ມີໃຈເດັດດ່ຽວ ບໍ່ນານກໍກະທຳໃຫ້ແຈ້ງເຊິ່ງທີ່ສຸດແຫ່ງພຣົມມະຈັນຍ໌ອັນຍອດຢ້ຽມ ທີ່ກຸລະບຸຕທັງຫລາຍອອກບວຊເປັນບັນພະຊິຕໂດຍຊອບມີຄວາມຕ້ອງການ ດ້ວຍປັນຍາອັນຍິ່ງເອງ ໃນປັຈຈຸບັນເຂົ້າເຖິງຢູ່ ຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳ ໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ ກໍທ່ານພຣະອະນຸຣຸທທະໄດ້ເປັນພຣະອະຣະຫັນຕ໌ອົງຄ໌ໜຶ່ງໃນຈຳນວນພຣະອະຣະຫັນຕ໌ທັງຫລາຍ. ລຳດັບນັ້ນ ທ່ານພຣະອະນຸຣຸທທະບັນລຸອະຣະຫັນຕ໌ແລ້ວ ໄດ້ກ່າວຄາຖານີ້ໃນເວລານັ້ນວ່າ:

ພຣະສາສດາຜູ້ເປັນຢ້ຽມໃນໂລກ ຊົງຊາບຄວາມປະຣິວິຕົກຂອງເຮົາແລ້ວ ໄດ້ເຂົ້າມາຫາເຮົາດ້ວຍລິທທ໌ທາງພຣະກາຍອັນສຳເຣັຈດ້ວຍພຣະທັຍ ພຣະອົງຄ໌ໄດ້ຊົງສະແດງທັມອັນຍິ່ງກວ່າຄວາມດຳຣິຂອງເຮົາເທົ່າທີ່ດຳຣິໄວ້ ພຣະພຸທທະເຈົ້າຜູ້ຍິນດີແລ້ວໃນທັມທີ່ບໍ່ເນີນຊ້າ ໄດ້ຊົງສະແດງທັມທີ່ບໍ່ເນີນຊ້າ ເຮົາໄດ້ຮູ້ທົ່ວເຖິງທັມຂອງພຣະອົງຄ໌ແລ້ວ ຍິນດີໃນສາສນາຢູ່ ເຮົາໄດ້ບັນລຸວິຊຊາ ໓ ໂດຍລຳດັບ ຄຳສອນຂອງພຣະພຸທທະເຈົ້າເຮົາກະທຳແລ້ວ.

*ອັງຄຸຕຕະຣະນິກາຍ ໔ມ/໑໗໙/໑໘໐*





**The celestial high and luxurious bed, the divine high and luxurious bed, and the noble high and luxurious bed.**

Venāgapurasutta AN 3.63
https://suttacentral.net/an3.63
Translated by Bhikkhu Bodhi

# ທີ່ນັ່ງທີ່ນອນອັນສູງໃຫຍ່ ໑໘ ຊະນິດ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈຈາຣິກໄປໃນໂກສົລ ຊົນບົທພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ສະເດັຈເຖິງພຣາມມະນະ ຄາມແຫ່ງຊາວໂກສົລຊື່ ເວນາຄະປຸຣະ ພຣາມນ໌ແລະຄະຫະ ບໍດີຊາວເວນາຄະປຸຣະໄດ້ສະດັບຂ່າວວ່າ ພຣະສະມະນະ ໂຄຕະມະສາກະຍະບຸຕຊົງຜະນວຊຈາກສາກະຍະສະກຸລແລ້ວ ສະເດັຈມາເຖິງເວນາຄະປຸຣະໂດຍລຳດັບ ກໍກິຕຕິສັທອັນງາມ (ກັລຍາໂນ ກິຕຕິສັທໂທ) ຂອງທ່ານພຣະໂຄດົມພຣະອົງຄ໌ນັ້ນ ແລ ຂະຈອຣໄປແລ້ວຢ່າງນີ້ວ່າ ເພາະເຫຕຢ່າງນີ້ໆ ພຣະຜູ້ ມີພຣະພາຄພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌, ຕຣັສຮູ້ເອງ

ໂດຍຊອບ, ເຖິງພ້ອມດ້ວຍວິຊຊາແລະຈະຣະນະ, ສະເດັຈໄປດີແລ້ວ, ຊົງຮູ້ແຈ້ງໂລກ, ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີຜູ້ອື່ນຍິ່ງກວ່າ, ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ, ເປັນຜູ້ເບີກບານແລ້ວ, ເປັນຜູ້ຈຳແນກທັມ. ພຣະອົງຄ໌ຊົງກະທຳໂລກນີ້ ພ້ອມທັງເທວະໂລກ ມາຣະໂລກ ພຣົມມະໂລກ ໃຫ້ແຈ້ງຊັດດ້ວຍພຣະປັນຍາອັນຍິ່ງຂອງພຣະອົງຄ໌ເອງ ແລ້ວຊົງສອນໝູ່ສັຕພ້ອມທັງສະມະນະພຣາມນ໌ ເທວະດາແລະມະນຸສໃຫ້ຮູ້ຕາມ. ພຣະອົງຄ໌ຊົງສະແດງທັມງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ຊົງປະກາສພຣົມມະຈັນຍ໌ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະ ບໍຣິສຸທ ບໍຣິບູນສິ້ນເຊີງ ກໍການໄດ້ເຫັນພຣະອະຣະຫັນຕ໌ທັງຫລາຍເຫັນປານນີ້ເປັນຄວາມດີແລ.

ຄັ້ງນັ້ນແລ ພຣາມນ໌ແລະຄະຫະບໍດີຊາວເວນາຄະປຸຣະໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ບາງພວກອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ບາງພວກໄດ້ປຣາສັຍກັບພຣະຜູ້ມີພຣະພາຄ ພໍຜ່ານການປຣາສັຍພໍໃຫ້ ຣະນຶກເຖິງກັນໄປແລ້ວ ກໍນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ບາງພວກປະນົມມືໄຫວ້ໄປທາງພຣະຜູ້ມີພຣະພາຄແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ບາງພວກປະກາສຊື່ແລະໂຄຕແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ບາງພວກນັ່ງນິ້ງຢູ່ໃນທີ່ຄວນສ່ວນ

ຂ້າງໜຶ່ງ ຄັນແລ້ວ ພຣາມນ໌ວັຈສະໂຄຕຊາວເວນາຄະປຸຣະ ໄດ້ກາຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ໜ້າອັສສະຈັນຍ໌
ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ບໍ່ເຄີຍມີມາແລ້ວ ອິນຊີຂອງທ່ານພຣະໂຄດົມຜ່ອງໃສຢ່າງຍິ່ງ ພຣະສະວີວັນຂອງທ່ານພຣະໂຄດົມບໍຣິສຸທຜຸດຜ່ອງ ເໝືອນກັບຜົລພຸທທາສຸກທີ່ມີໃນສະຣະທະສມັຍອັນເປັນຂອງບໍຣິສຸທຜຸດຜ່ອງ ສັນນັ້ນ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ອິນຊີຂອງທ່ານພຣະໂຄດົມຜ່ອງໃສ ພຣະສະວີວັນຂອງທ່ານພຣະໂຄດົມບໍຣິສຸທຜຸດຜ່ອງ ເໝືອນກັບໝາກຕານສຸກທີ່ຫລຸດຈາກຂົ້ວອັນເປັນຂອງບໍຣິສຸທຜຸດຜ່ອງ ສັນນັ້ນ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ອິນຊີຂອງທ່ານພຣະໂຄດົມຜ່ອງໃສ ພຣະສະວີວັນຂອງທ່ານພຣະໂຄດົມບໍຣິສຸທຜຸດຜ່ອງ ເໝືອນກັບແທ່ງຄຳຊົມພູນຸຊທີ່ບຸຕນາຍຊ່າງຄຳຜູ້ຂະຫຍັນຫລອມດີແລ້ວ ອັນນາຍຊ່າງຄຳຜູ້ສລາດເຈຍຣະໄນດີແລ້ວວາງໄວ້ເທິງຜ້າກັມພົລເຫລືອງ ສ່ອງແສງປະກາຍແວວວາວ ສັນນັ້ນ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ທີ່ນັ່ງທີ່ນອນອັນສູງໃຫຍ່ເຫັນປານນີ້ຄື ຕຽງມີເທົ້າເກີນປະມານ ຕຽງມີເທົ້າເຮັດເປັນຮູບສັດຮ້າຍ ຜ້າໂກເຊົາວ໌ຂົນຍາວ ເຄື່ອງລາດທີ່ເຮັດດ້ວຍຂົນແກະວິຈິດດ້ວຍລວດລາຍ ເຄື່ອງລາດທີ່ເຮັດດ້ວຍຂົນແກະສີຂາວ ເຄື່ອງລາດທີ່ມີສັນຖານເປັນຊໍ່ດອກໄມ້ ເຄື່ອງລາດທີ່ຍັດນຸ່ນ ເຄື່ອງລາດຂົນແກະອັນວິຈິດດ້ວຍຮູບສັດຮ້າຍ ມີສີຫະແລະເສືອເປັນຕົ້ນ ເຄື່ອງລາດຂົນແກະມີຂົນຕັ້ງ ເຄື່ອງລາດມີຂົນແກະຂ້າງດຽວ ເຄື່ອງລາດຄຳແລະເງິນແກມໄໝ ເຄື່ອງລາດໄໝກົບຄຳແລະເງິນ ເຄື່ອງລາດຂົນແກະບັນຈຸນາງຟ້ອນ ໑໖ ຄົນຢືນລຳໄດ້ ເຄື່ອງລາດຫລັງຊ້າງ ເຄື່ອງລາດຫລັງມ້າ ເຄື່ອງລາດໃນຣົຖ ເຄື່ອງລາດທີ່ເຮັດດ້ວຍໜັງສັດຊື່ອະຊີນະອັນມີຂົນອ່ອນນຸ່ມ ເຄື່ອງລາດຢ່າງດີເຮັດດ້ວຍໜັງເຫັນ ເຄື່ອງລາດມີແພດານ ເຄື່ອງລາດມີໝອນຂ້າງ ທ່ານພຣະໂຄດົມໄດ້ທີ່ນັ່ງທີ່ນອນເຫັນປານນີ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກແນ່ນອນ.

ພຣະຜູ້ມີພຣະພາຄຕຣັສຕອບວ່າ:

ພຣາມນ໌! ທີ່ນັ່ງທີ່ນອນເຫລົ່ານັ້ນຄື ຕຽງມີເທົ້າເກີນປະມານ ຕຽງມີເທົ້າເຮັດເປັນຮູບສັດຮ້າຍ ຜ້າໂກເຊົາວ໌ຂົນຍາວ ເຄື່ອງລາດທີ່ເຮັດດ້ວຍຂົນແກະວິຈິດດ້ວຍລວດລາຍ ເຄື່ອງລາດທີ່

ເຮັດດ້ວຍຂົນແກະສີຂາວ ເຄື່ອງລາດທີ່ມີສັນຖານເປັນຊໍ່ດອກໄມ້ ເຄື່ອງລາດທີ່ຍັດນຸ່ນ ເຄື່ອງລາດຂົນແກະອັນວິຈິດດ້ວຍຮູບສັດຮ້າຍ ມີສີຫະແລະເສືອເປັນຕົ້ນ ເຄື່ອງລາດຂົນແກະມີຂົນຕັ້ງ ເຄື່ອງລາດມີຂົນແກະຂ້າງດຽວ ເຄື່ອງລາດຄຳແລະເງິນແກມໄໝ ເຄື່ອງລາດໄໝກົບຄຳແລະເງິນ ເຄື່ອງລາດຂົນແກະບັນຈຸນາງຟ້ອນ ໑໖ ຄົນຢືນລຳໄດ້ ເຄື່ອງລາດຫລັງຊ້າງເຄື່ອງລາດຫລັງມ້າ ເຄື່ອງລາດໃນຣົຖ ເຄື່ອງລາດທີ່ເຮັດດ້ວຍໜັງສັດຊື່ອະຊິນະອັນມີຂົນອ່ອນນຸ່ມ ເຄື່ອງລາດຢ່າງດີເຮັດດ້ວຍໜັງເຫັນ ເຄື່ອງລາດມີແພດານ ເຄື່ອງລາດມີໝອນຂ້າງບັນພະຊິຕຫາໄດ້ຍາກ **ແລະທີ່ໄດ້ແລ້ວກໍບໍ່ຄວນໃຊ້ສອຍ**.[3]

ພຣາມນ໌! ທີ່ນັ່ງທີ່ນອນອັນສູງໃຫຍ່ ໑໘ ຊະນິດນີ້ ທຸກວັນນີ້ເຮົາໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ ທີ່ນັ່ງທີ່ນອນອັນສູງໃຫຍ່ ໑໘ ຊະນິດເປັນຢ່າງໃດ? ຄື:

**ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງທິພຍ໌** (ທິພພັງ ອຸຈຈາ-ສະຍະນະມະຫາສະຍະນັງ),

---

[3] (ທຸລລະພານິ ຕານິ ປັພພະຊິຕານັງ ລັທທານິ ຈະ ນະ ກັປປັນຕິ-- "Brahmin, those high and luxurious kinds of bedding are rarely obtained by those who have gone forth, **and if they are obtained, they are not allowed**.) __*Translated by Bhikkhu Bodhi/ https://suttacentral.net/an3.63*

**ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣົມ** (ພຣົມມັງ ອຸຈຈາ-ສະຍະນະມະຫາສະຍະນັງ),

**ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣະອະຣິຍະ** (ອະຣິຍັງ ອຸຈຈາສະຍະນະມະຫາສະຍະນັງ),

ພຣາມມ໌! ທີ່ນັ່ງທີ່ນອນອັນສູງໃຫຍ່ ໓ ຊະນິດນີ້ແລ ທຸກວັນນີ້ເຮົາໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ກໍທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງທິພຍ໌ ເຊິ່ງທຸກວັນນີ້ທ່ານພຣະໂຄດົມໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເປັນຢ່າງໃດ?

ພຣາມມ໌! ເຮົາອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງໃນໂລກນີ້ຢູ່ ເວລາເຊົ້າເຮົານຸ່ງແລ້ວ ຖືບາຕແລະຈີວອຣ ເຂົ້າໄປບິນທະບາຕໃນບ້ານຫລືນິຄົມນັ້ນ ເວລາຫລັງອາຫາຣ ກັບຈາກບິນທະບາຕແລ້ວ ເຂົ້າໄປໃນຊາຍປ່າ ກວາດຫຍ້າຫລືໃບໄມ້ເຊິ່ງມີຢູ່ໃນທີ່ນັ້ນເປັນກອງແລ້ວ ນັ່ງຄູ້ບັນລັງກ໌ ຕັ້ງກາຍຕົງ ດຳຣົງສະຕິໄວ້ສະເພາະໜ້າ ເຮົາສງັດຈາກກາມທັງຫລາຍ ສງັດຈາກອະກຸສົລທັມທັງຫລາຍ ບັນລຸປະຖົມຊານ ມີວິຕົກວິຈາຣ ມີປີຕິແລະສຸຂອັນເກີດແຕ່ວິເວກຢູ່.

ເພາະວິຕົກວິຈາຣສງົບຣະງັບໄປ ຍ່ອມບັນລຸທຸຕິຍະຊານ ມີຄວາມຜ່ອງໃສແຫ່ງຈິຕໃນພາຍໃນ ເປັນທັມອັນເອກຜຸດຂຶ້ນ ບໍ່ມີວິຕົກ ບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດແຕ່ສະມາທິຢູ່;

ເພາະປີຕິສິ້ນໄປ ເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະ ສະເຫວີຍສຸຂດ້ວຍກາຍ ຍ່ອມບັນລຸຕະຕິຍະຊານ ທີ່ພຣະອະຣິຍະເຈົ້າທັງຫລາຍສັນລະເສີນຜູ້ໄດ້ບັນລຸວ່າ ເປັນຜູ້ມີອຸເປກຂາ ມີສະຕິຢູ່ເປັນສຸຂ.

ເພາະລະສຸຂແລະທຸກຂ໌ເສຍໄດ້ ແລະເພາະຄວາມດັບຫາຍໄປແຫ່ງໂສມະນັສແລະໂທມະນັສໃນກາລກ່ອນ ຍ່ອມບັນລຸຈະຕຸຕຖະຊານ ອັນບໍ່ມີທຸກຂ໌ບໍ່ມີສຸຂ ມີແຕ່ອຸເປກຂາເປັນເຫຕໃຫ້ສະຕິບໍຣິສຸທຢູ່.

ພຣາມນ໌! ຖ້າເຮົາຜູ້ເປັນເຊັ່ນນັ້ນເດີນຈົງກົມຢູ່ ທີ່ເດີນຈົງກົມໃນສມັຍນັ້ນຂອງເຮົາ ຊື່ວ່າເປັນທິພຍ໌, ຖ້າເຮົາຜູ້ເປັນເຊັ່ນນັ້ນຢືນຢູ່ ທີ່ຢືນໃນສມັຍນັ້ນຂອງເຮົາ ຊື່ວ່າເປັນທິພຍ໌, ຖ້າເຮົາຜູ້ເປັນເຊັ່ນນັ້ນນັ່ງຢູ່ ທີ່ນັ່ງໃນສມັຍນັ້ນຂອງເຮົາ ຊື່ວ່າເປັນທິພຍ໌, ຖ້າເຮົາຜູ້ເປັນເຊັ່ນນັ້ນນອນຢູ່ ທີ່ນອນອັນສູງໃຫຍ່ໃນສມັຍນັ້ນຂອງເຮົາ ຊື່ວ່າເປັນທິພຍ໌. ພຣາມນ໌ ທີ່ນັ່ງທີ່ນອນອັນສູງໃຫຍ່

ອັນເປັນຂອງທິພຍ໌ນີ້ແລ ທຸກວັນນີ້ເຮົາໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ໜ້າອັສສະຈັນຍ໌ ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ບໍ່ເຄີຍມີມາແລ້ວ ເພາະໃຜໜໍຍົກເວັ້ນທ່ານພຣະໂຄດົມ ຈັກໄດ້ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງທິພຍ໌ເຫັນປານນີ້ ທີ່ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ ດັ່ງນີ້.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ກໍທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣົມ ເຊິ່ງທຸກວັນນີ້ທ່ານພຣະໂຄດົມໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເປັນຢ່າງໃດ?

ພຣາມນ໌! ເຮົາອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງໃນໂລກນີ້ຢູ່ ເວລາເຊົ້າເຮົານຸ່ງແລ້ວ ຖືບາຕແລະຈີວອຣ ເຂົ້າໄປບິນທະບາຕໃນບ້ານຫລືນິຄົມນັ້ນ ເວລາຫລັງອາຫາຣ ກັບຈາກບິນທະບາຕແລ້ວ ເຂົ້າໄປໃນຊາຍປ່າ ກວາດຫຍ້າຫລືໃບໄມ້ເຊິ່ງມີຢູ່ໃນທີ່ນັ້ນເປັນກອງແລ້ວ ນັ່ງຄູ້ບັນລັງກ໌ ຕັ້ງກາຍຕົງ ດຳຣົງສະຕິໄວ້ສະເພາະໜ້າ **ມີຈິຕປະກອບດ້ວຍເມຕຕາ** ແຜ່ໄປຕລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕລອດໂລກທັງ

ປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່.

**ມີຈິຕປະກອບດ້ວຍກະຣຸນາ** ແຜ່ໄປຕລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່.

**ມີຈິຕປະກອບດ້ວຍມຸທິຕາ** ແຜ່ໄປຕລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່.

**ມີຈິຕປະກອບດ້ວຍອຸເປກຂາ** ແຜ່ໄປຕລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່.

ພຣາມນ໌! ຖ້າເຮົາຜູ້ເປັນເຊັ່ນນັ້ນເດີນຈົງກົມຢູ່ ທີ່ເດີນຈົງກົມໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣົມ, ຖ້າເຮົາຜູ້ເປັນເຊັ່ນນັ້ນຢືນຢູ່ ທີ່ຢືນໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣົມ, ຖ້າເຮົາຜູ້ເປັນເຊັ່ນນັ້ນນັ່ງຢູ່ ທີ່ນັ່ງໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣົມ, ຖ້າເຮົາຜູ້ເປັນເຊັ່ນນັ້ນນອນຢູ່ ທີ່ນອນອັນສູງໃຫຍ່ໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣົມ. ພຣາມນ໌ ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣົມນີ້ແລ ທຸກວັນນີ້ເຮົາໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ໜ້າອັສສະຈັນຍ໌ ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ບໍ່ເຄີຍມີມາແລ້ວ ເພາະໃຜໜໍຍົກເວັ້ນທ່ານພຣະໂຄດົມ ຈັກໄດ້ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣົມເຫັນປານນີ້ ທີ່ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ ດັ່ງນີ້.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ກໍທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣະອະຣິຍະ ເຊິ່ງທຸກວັນນີ້ທ່ານພຣະໂຄດົມໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກເປັນຢ່າງໃດ?

ພຣາມນ໌! ເຮົາອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງໃນໂລກນີ້ຢູ່ ເວລາເຊົ້າເຮົານຸ່ງແລ້ວ ຖືບາຕແລະຈີວອຣ ເຂົ້າໄປບິນທະ

ບາຕໃນບ້ານຫລືນິຄົມນັ້ນ ເວລາຫລັງອາຫານ ກັບຈາກບິນທະບາຕແລ້ວ ເຂົ້າໄປໃນຊາຍປ່າ ກວາດຫຍ້າຫລືໃບໄມ້ເຊິ່ງມີຢູ່ໃນທີ່ນັ້ນເປັນກອງແລ້ວ ນັ່ງຄູ້ບັນລັງກ໌ ຕັ້ງກາຍຕົງ ດຳຣົງສະຕິໄວ້ສະເພາະໜ້າ ເຮົາຮູ້ຊັດຢ່າງນີ້ວ່າ ຣາຄະເຮົາລະໄດ້ແລ້ວ ຖອນຮາກຂຶ້ນແລ້ວ ກະທຳໃຫ້ເປັນເໝືອນຕານຍອດດ້ວນ ກະທຳໃຫ້ບໍ່ມີ ບໍ່ໃຫ້ເກີດຂຶ້ນອີກຕໍ່ໄປເປັນທັມມະດາ.

ໂທສະເຮົາລະໄດ້ແລ້ວ ຖອນຮາກຂຶ້ນແລ້ວ ກະທຳໃຫ້ເປັນເໝືອນຕານຍອດດ້ວນ ກະທຳໃຫ້ບໍ່ມີ ບໍ່ໃຫ້ເກີດຂຶ້ນອີກຕໍ່ໄປເປັນທັມມະດາ.

ໂມຫະເຮົາລະໄດ້ແລ້ວ ຖອນຮາກຂຶ້ນແລ້ວ ກະທຳໃຫ້ເປັນເໝືອນຕານຍອດດ້ວນ ກະທຳໃຫ້ບໍ່ມີ ບໍ່ໃຫ້ເກີດຂຶ້ນອີກຕໍ່ໄປເປັນທັມມະດາ.

ພຣາມມ໌! ຖ້າເຮົາຜູ້ເປັນເຊັ່ນນັ້ນເດີນຈົງກົມຢູ່ ທີ່ເດີນຈົງກົມໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣະອະຣິຍະ, ຖ້າເຮົາຜູ້ເປັນເຊັ່ນນັ້ນຢືນຢູ່ ທີ່ຢືນໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣະອະຣິຍະ, ຖ້າເຮົາຜູ້ເປັນເຊັ່ນນັ້ນນັ່ງຢູ່ ທີ່ນັ່ງໃນສມັຍນັ້ນຂອງເຮົາ ຊື່ວ່າເປັນຂອງພຣະອະຣິຍະ, ຖ້າເຮົາຜູ້ເປັນເຊັ່ນນັ້ນນອນຢູ່ ທີ່ນອນອັນສູງໃຫຍ່ໃນສມັຍນັ້ນຂອງເຮົາ ຊື່ວ່າເປັນ

ຂອງພຣະອະຣິຍະ. ພຣາມນ໌ ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣະອະຣິຍະນີ້ແລ ທຸກວັນນີ້ເຮົາໄດ້ຕາມຄວາມປາຖນາໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ໜ້າອັສສະຈັນຍ໌ ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ບໍ່ເຄີຍມີມາແລ້ວ ເພາະໃຜໜໍຍົກເວັ້ນທ່ານພຣະໂຄດົມ ຈັກໄດ້ທີ່ນັ່ງທີ່ນອນອັນສູງໃຫຍ່ອັນເປັນຂອງພຣະອະຣິຍະເຫັນປານນີ້ ທີ່ໄດ້ຕາມຄວາມປາຖນາ ໄດ້ໂດຍບໍ່ຍາກ ໂດຍບໍ່ລຳບາກ ດັ່ງນີ້.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ, ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ພຣະໂຄດົມຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນບຸຄຄົລຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູປໄດ້ ສັນນັ້ນ. ຂ້ານ້ອຍຂໍເຖິງທ່ານພຣະໂຄດົມ ພຣະທັມ ແລະພຣະພິກຂຸສົງຄ໌ວ່າ ເປັນສະຣະນະ ຂໍທ່ານພຣະໂຄດົມໂປດຊົງຈຳຂ້ານ້ອຍໄວ້ວ່າ ເປັນອຸປາສົກຜູ້ເຖິງສະຣະນະຕລອດຊີວິຕຕັ້ງແຕ່ວັນນີ້ເປັນຕົ້ນໄປ.

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໑໗໔/໕໐໑*



# ກິຈທີ່ຮີບດ່ວນຂອງພິກຂຸ

ພິກຂຸທັງຫລາຍ! ກິຈທີ່ຮີບດ່ວນຂອງຄະຫະບໍດີຊາວນາທີ່ຄວນກະທຳ ໓ ຢ່າງນີ້, ໓ ຢ່າງເປັນຢ່າງໃດ?

ພິກຂຸທັງຫລາຍ! ຄະຫະບໍດີຊາວນາໃນໂລກນີ້ ຕ້ອງຟ້າວເລັ່ງໄຖນາໃຫ້ດີ ຄາດນາໃຫ້ຮຽບຮ້ອຍ ຄັນແລ້ວຕ້ອງຟ້າວເພາະພືຊລົງໄປ ຄັນແລ້ວຟ້າວໄຂເອົານ້ຳເຂົ້າແດ່ ລະບາຍເອົານ້ຳອອກແດ່. ພິກຂຸທັງຫລາຍ ກິຈທີ່ຮີບດ່ວນຂອງຄະຫະບໍດີຊາວນາທີ່ຄວນກະທຳ ໓ ຢ່າງນີ້ແລ.

ພິກຂຸທັງຫລາຍ! ຄະຫະບໍດີຊາວນານັ້ນ ບໍ່ມີລິທທ໌ຫລືອານຸພາບບັນດາລວ່າ ເຂົ້າເປືອກຂອງເຮົາຈົ່ງເກີດໃນວັນນີ້, ມື້ອື່ນນີ້ຈົ່ງມານ, ມື້ຮືນີ້ຈົ່ງຫຸງໄດ້. ພິກຂຸທັງຫລາຍ ໂດຍແທ້ແລ້ວສມັຍທີ່ເຂົ້າເປືອກຂອງຄະຫະບໍດີຊາວນານັ້ນມີຄວາມເປັນໄປຕາມລະດູ ເກີດຂຶ້ນ ມານ ແລະຫຸງໄດ້ມີຢູ່ ສັນໃດ;

ພິກຂຸທັງຫລາຍ! ສັນນັ້ນເໝືອນກັນແລ ກິຈທີ່ຮີບດ່ວນຂອງພິກຂຸທີ່ຄວນກະທຳ ໓ ຢ່າງນີ້, ໓ ຢ່າງເປັນຢ່າງໃດ? ຄື:

**ການສະມາທານອະທິສີລະສິກຂາ,**

**ການສະມາທານອະທິຈິຕຕະສິກຂາ,**

**ການສະມາທານອະທິປັນຍາສິກຂາ,**

ພິກຂຸທັງຫລາຍ! ກິຈທີ່ຮີບດ່ວນຂອງພິກຂຸທີ່ຄວນກະທຳ ໓ ຢ່າງນີ້ແລ.

ພິກຂຸທັງຫລາຍ! ພິກຂຸນັ້ນ ບໍ່ມີລິທທ໌ຫລືອານຸພາບບັນດາລວ່າ ຈິຕຂອງເຮົາຈົ່ງຫລຸດພົ້ນຈາກອາສະວະທັງຫລາຍເພາະບໍ່ຖືໝັ້ນໃນວັນນີ້ແຫລະ ຫລືບໍ່ກໍມື້ອື່ນນີ້ ຫລືໃນມື້ຮືນີ້. ພິກຂຸທັງຫລາຍ ໂດຍແທ້ແລ້ວ ສມັຍທີ່ຈິຕຂອງພິກຂຸຜູ້ສຶກສາອະທິສີລະສິກຂາ ສຶກສາອະທິຈິຕຕະສິກຂາ ສຶກສາອະທິປັນຍາສິກຂາຢູ່ ຍ່ອມຫລຸດພົ້ນຈາກອາສະວະທັງຫລາຍເພາະບໍ່ຖືໝັ້ນມີຢູ່.

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ເຮົາຈັກມີຄວາມພໍໃຈຢ່າງແຮງກ້າໃນການສະມາທານອະທິສີລະສິກຂາ, ເຮົາຈັກມີຄວາມພໍໃຈຢ່າງແຮງກ້າໃນການສະມາທານອະທິຈິຕຕະສິກຂາ, ເຮົາຈັກມີຄວາມພໍໃຈຢ່າງແຮງກ້າໃນການສະມາທານອະທິປັນຍາສິກຂາ. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

---

*ອັງຄຸຕຕະຣະນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໒໒໙/໕໓໒*



“Here are these roots of trees, and here are these empty huts. Practice absorption, Ānanda! Don’t be negligent! Don’t regret it later! This is my instruction to you.”

Āneñjasappāyasutta MN 106
https://suttacentral.net/mn106




# “ຄວາມສັນໂດດ”

ໄດ້ແປ ແລະຮຽບຮຽງຈາກພຣະໄຕຣປິດົກ
ສະບັບຫລວງ ພາສາໄທ ແລະໄດ້ຜ່ານ
ການທຽບຄຽງກັບພຣະໄຕຣປິດົກຫລາຍສຳນັກເຊັ່ນ:
ພຣະໄຕຣປິດົກສະບັບມະຫາຈຸລາ,
ສະບັບພາສາບາລີ-ໄທ ແລະພຣະໄຕຣປິດົກ
ພາສາອັງກິດຈາກ Suttacentral.net
ພຣະສູດທີ່ເປັນພາສາອັງກິດຮຽບຮຽງຈາກ
Suttacentral.net

Compiled by V. Vongsengsy

ກັສສະປະ ພິກຂຸເປັນຜູ້ສັນໂດດເປັນຢ່າງໃດ? ກັສສະປະ ພິກຂຸໃນທັມວິນັຍນີ້ **ເປັນຜູ້ສັນໂດດດ້ວຍຈີວອຣເປັນເຄື່ອງບໍຣິຫາຣກາຍ ດ້ວຍບິນທະບາຕເປັນເຄື່ອງບໍຣິຫາຣທ້ອງ** ເຂົາຈະໄປທາງທິສໃດ ໆ ກໍຖືໄປໄດ້ເອງ. ກັສສະປະ ນົກມີປີກຈະບິນໄປທາງທິສໃດ ໆ ກໍມີແຕ່ປີກຂອງຕົນເປັນພາຣະບິນໄປ ສັນໃດ; ພິກຂຸກໍສັນນັ້ນແລ ເປັນຜູ້ສັນໂດດດ້ວຍຈີວອຣເປັນເຄື່ອງບໍຣິຫາຣກາຍ ດ້ວຍບິນທະບາຕເປັນເຄື່ອງບໍຣິຫາຣທ້ອງ ເຂົາຈະໄປທາງທິສໃດ ໆ ກໍຖືໄປໄດ້ເອງ. ກັສສະປະ ດ້ວຍປະກາຣດັ່ງທີ່ກ່າວມານີ້ແລ ພິກຂຸຊື່ວ່າ ເປັນຜູ້ສັນໂດດ.

ທີຄະນິກາຍ ສີລຂັນທະວັຄ ໗/໔໔໔/໔໙໐

ຈັດພິມເພື່ອແຈກເປັນທັມມະທານເທົ່ານັ້ນ
ສອບຖາມຂໍ້ມູລເພີ່ມເຕີມໄດ້ທີ່:
buddhavacana.word@gmail.com